ໜັງສື

ພື້ນຂຸນບູຣົມຣາຊາທິຣາດ

ສະບັບບູຮານແທ້

ຂອງ

ກົມວັນນະຄະດີ

ພິມເທື່ອທີ ໑ ຈຳນວນ ໓.໐໐໐ ສະບັບ

ທີ ໓໐ ມີນາ ໑໙໕໗

ຄຳນຳ

ທ່ານ ຜູ້ສົນໃຈໃນການອ່ານແລະໃນການຈື່ຈຳທີ່ນັບຖື ທັງຫຼາຍ ອັນ ໜັງສືພົ້ນ "ຂຸນບູຣົມຣາຊາທິຣາດ" ທີ່ກຳລັງ ຜາກົດຢູ່ສາຍຕາແລະໃນມືຂອງພວກທ່ານຢູ່ນີ້ ນັບວ່າ ເປັນ ວັນນະຄະດີທີ່ມີປໂຍດອັນສຳຄັນປະເພດນຶ່ງ ແກ່ຊາດລາວເຮົາບໍ່ ໜ້ອຍ ເພາະພົ້ນຂຸນບູຣົມນີ້ ເປັນເຣື່ອງທີ່ເວົ້າເຖິງຄວາມເປັນ ມາຂອງລາວແຕ່ຄັ້ງດຶກດຳບັນ ຂ້າພເຈົ້າຂໍຢັ້ງຢືນວ່າໃນປະ ຈຸບັນນີ້ ບໍ່ມີໜັງສືໃດ ໆ ທີ່ຈະໃຫ້ຄວາມແຈ່ມແຈ້ງເຖິງຄວາມ ເປັນມາຂອງຊາດເຮົາ ຍິ່ງໄປກວ່າພົ້ນຂຸນບູຣົມນີ້ຈັກສະບັບເລີຍ

ທາງຄນະກັມມະການວັນນະຄະດີ ໄດ້ເອົາໃຈໃສ່ຢູ່ ສເມີ ໃນອັນທີ່ຈະພິມພົ້ນຂຸນບູຣົມອອກເຜີຍແຜ່ ເພື່ອໃຫ້ ພີ່ນ້ອງຮ່ວມຊາດໄດ້ອ່ານ, ໄດ້ຟັງ ແລະໄດ້ສຶກສາຄົ້ນຄວ້າ ຕໍ່ ໆ ໄປ ຜົນທີ່ຈະໄດ້ຮັບກໍຄື ໄດ້ຮູ້ວ່າປະເທດ,ຊາດ ແລະເອກ ຣາດອະທິປະໄຕຂອງລາວແຕ່ກ່ອນ ໆ ນັ້ນ ໄດ້ເປັນມາຢ່າງໃດ ແລະມີພໍສໍ່າໃດ? ແລ້ວຈະໄດ້ພ້ອມໃຈກັນ ສ້າງສາປຸຣະບາປະ ເທດຊາດແລະຮັກສາ ເອກຣາດອະທິປະໄຕຂອງຕົນເອົາໄວ້ ໂດຍ ຈະບໍ່ໃຫ້ນ້ອຍໜ້າຕໍ່າຕາແກ່ຄົນຊາດໃດຊາດນຶ່ງ ໃນອະນາຄົດ

ດັ່ງນັ້ນ ຄນະກັມມະການຈຶ່ງ ໄດ້ມອບຕົ້ນສະບັບທີ່ຂຽນໃສ່ໃບລານອັນເກົ່າແກ່ ໃຫ້ມຫາຈູມ ຈິນດາພົດ ພນັກງານກອງວັນນະຄະດີເປັນຜູ້ຊ້ຳຣະກວດແກ້ ແລະເມື່ອເຫັນວ່າພໍໃຊ້ໄດ້ແລ້ວ ຈຶ່ງໄດ້ຈັດການພິມອອກເຜີຍແຜ່ ດັ່ງທີ່ພວກທ່ານໄດ້ຮັບຢູ່ເວລານີ້ ທ່ານທີ່ນັບຖືທັງຫຼາຍ ເຖິງວ່າໜັງສືນີ້ຈະມີປໂຍດຢ່າງຫຼວງຫຼາຍດັ່ງກ່າວນັ້ນ ກໍຕາມ ແຕ່ຄວາມຂາດບົກຕົກຫຼົ່ນຂອງໜັງສືນີ້ ກໍຍັງຄົງມີຢູ່ເປັນທັມມະດາ ໂດຍສະເພາະ ແມ່ນບັນຫາເຣື່ອງການກວດແກ້ນັ້ນເອງ ເນື່ອງຈາກຕົ້ນສະບັບໄດ້ຊຸດໂຊມໄປ ເກືອບວ່າຈະບໍ່ມີຫົວມີຂາເສັຽແລ້ວ

ຂ້າພເຈົ້າຈຶ່ງຂໍຮັບຮອງອີກເທື່ອນຶ່ງວ່າ ມັນ "ເຫຼືອສິໄສທີ່ຜູ້ຊຳຣະຈະເຮັດໃຫ້ຮຽບຮ້ອຍໃນເທື່ອນຶ່ງເທື່ອດຽວໄດ້" ແຕ່ກໍຫວັງວ່າ ຄົງໄດ້ຮັບອະໂຫສິກັມຈາກທ່ານຜູ້ຮູ້ທັງຫຼາຍເປັນພິເສດດ້ວຍ.

ປະທານຄນະກັມມະການວັນນະຄະດີ

ອຸທິນ ບຸນຍາວົງ

ພື້ນຂຸນບູຣົມຣາຊາທິຣາດ

ສະບັບບູຮານແທ້

ສີສຸມັງຄະເລດນ້ອມ ນິບບາດບາໂທ ຮອງຊູລີ ນິບ ນອບກັນໄຕແກ້ວ ມະຫາສວາງໄທ້ ປັດຖາພີພື້ນໂລກ ອິນທະຮາດແຜ້ວ ພບອງເປື້ອງຊ່ອຍປອງ ແດ່ທ້ອນ ຂໍໃຫ້ແປ ຖືກຖ້ອຍ ດ້ວຍບາດຄາຖາ ເຮົາຈັກແປງເປັນສານ ສັ່ງສອນ ທັງຄ້າຍ ຂໍໃຫ້ມີໄຊແພ້ ສັດຕູຂາມອ່ອນ ຮ້ອຍປະເທດດ້າວ ທູນນ້ອມສ່ວຍໄຮ ຂໍໃຫ້ເດໄຊແພ້ ລືຊາທັງໂລກ ໄດ້ລຸ່ມຟ້າ ຢ່າໄດ້ປຽບຫຽມ ແດ່ທ້ອນ ເປັນທີ່ເຂົາຂາບໄຫວ້ ມາສູ່ສົມພານ ຂາມເດໄຊ ຊ່າໄກກຽນກວ້າງ ຂໍໃຫ້ລືຊາເຫົ້າ ເຖິງບອດພາຍ ພິ້ນ ລວງກົນສຸດ ຂອບດິນແດນຟ້າ ອັນວ່າພາຍລຸ່ມໄດ້ ແສນ ໂບດເຂົາຂາມ ໃຫ້ເຂົາມາວັນທາ ມາກຫຼາຍເຫຼືອລົ້ນ ຂໍຢ່າ ມີໄພຍດ້ອງ ອົນຕາຍຕອງໂສກ ສັງທ້ອນ ຈົ່ງໄດ້ທິງແທ່ນ ແກ້ວ ສະຖຽນໝັ້ນໝື່ນປີ ແດ່ເນີ ຂໍໃຫ້ລຸໄຊກໄດ້ ໂດຍດັ່ງ

ປາຖບາ ແມ່ນວ່າໂພທິບານເຖິງ ຢ່າໄຄຄາແຄ້ວ ໃຫ້ໄດ້ນຳ
ສັດເຂົ້າ ນິຣະພານພົ້ນໂສກ ທັມມະເຫດໄວ້ ທັງຄ້າຍສັ່ງ
ສອນ ແດ່ທ້ອນ.

ບັດນີ້ມາຈັກເລົ້າພາກພົ້ນ ປາງກ່ອນຂຸນບູຣົມ
ກ່ອນແລ້ວ ຈາແຕ່ຂຸນບູຣົມ ລູກພົມພາຍຟ້າ ລົງມາສ້າງ
ຊູມພູໃນທວີບ ເຮົານີ້ ຕັ້ງແຕ່ກັບກໍ່ຕັ້ງ ປະຖົມເຖົາພ່ຳນານ
ອັນນີ້ໃນທັ່ນແທ້ ອາຈານສອນສັ່ງ ມາແລ້ວ ໃຜຜູ້ຍັງອ່ານແລ້ວ
ໃຫ້ຍໍໄວ້ທີ່ສູງ ແດ່ທ້ອນ ຕັ້ງຫາກວິເສດແທ້ ຄວນຄ່າອາຈີນ
ໄດ ເຈົ້າເອີຍ ເປັນຄຳສອນ- ສັ່ງມາເຮົາຮູ້ ອັນວ່າລາວກາວ
ເວົ້າ ແຖນຫຼວງຟ້າຄຶ່ນ ຍາມນັ້ນ ກໍຫາກເປັນພໍ່ເຈົ້າ ຈອມ
ຊ້ອຍຊື່ເຊງ ແທ້ແລ້ວ ຫາກແມ່ນສັກໂກໃຫ້ ເທໂວອົງບຶງ
ເປັນນຶ່ງເຄົ້າ ຈອມຊ້ອຍບອດສວັນ ພຸ້ນແລ້ວ ອັນວ່າແຖນ
ແຕ່ງນັ້ນຫາກແມ່ນພີສຸກລ້າ ບໍຣະເມສວນລົງເກີດ ຈຶ່ງແລ້ວ
(ເຈົ້າກໍມິນແກ່ກ້າ ຄຳຮູ້ມາກມີ ນັບແກ່ໃຕ້ລຸ່ມກວ້າງ ລືອາດ
ອົງດຽວ) ທຳວິດທີເປັນ- ຊູ່ເຊີງສອນໄວ້ ອັນວ່າແຖນກິນເຖົ້າ
ແຖນຊັ້ງແຖນເຖືອກ ກັບທັງຫູງທົ້ງເຈົ້າ ແຖນຟ້າຟາກສວັນ
ຫາກແມ່ນຈັດຕຸໂລກທ້າວ ທັງສີ່ອາຊາ ພຣະກໍທີ່ງໂລກາ ຊູ່

ວັນແວນຜ້ຽນ ອັນວ່າຄວາມຂຸນເຄົ້າ ບູຮານລາວເກົ່າ ຍາມນັ້ນ
ເຂົາກ່າວເອີ້ນ ເສີນເວົ້າວ່າແຖນ ອັນວ່າສິດທິແດກ້ຳ ເມືອງ
ນິງຊຸມພູເຮົານີ້ ບັງມີສອງນາງເປົາ ຜ່ແຫພແຫນເປົ້າ ເຂົາ
ຮຽກວ່ານາງປີສາ ເສື້ອເມືອງເປັນເຈົ້າ ຕົນນຶ່ງຫາກແມ່ນເທວດ
ແກ້ວ ນາງນາດທໍຣະນີ ນາງນັ້ນທົງປັດຖວິງ ແຜ່ນດິນເຮົາ
ໄວ້ ຄົນໃດອຸທິສານ້ຳ ບໍຫຼັ້ງໝາຍທານ ປະເຕວິກ ແຜ່ນດິນ
ພາຍໃຕ້ ນະເທສັກໄທ້ ທໍຣະນີນາງນາດ ຫຽນບ່ອນບໍໃສ່ເກົ້າ
ເອົາໄວ້ຊູ້ວັນ ຕົນນຶ່ງຮຽກວ່ານະເທສັກແກ້ວ ເມຄລາແມນນີງ
ຫຽນບ່ອນເຫຼິງທ່ອນຫ້າວ ທົງສ້າງສີບເມືອງ ມະນຸສແຫຼ່ງ
ຫຼ້າ ຫຼິງໂລກໂລກາ ຄົນໃດບັງກະທຳບຸນ ບາບນາງແມນ
ໄວ້ ນາງຈິງເມືອຖວາຍໄທ້ ຣາຊາຈັດຕຸໂລກ ເຈົ້າຈິງຂຽນຂີດ
ໄວ້ ໃນຫັ້ນບາບບຸນ ແທ້ແລ້ວ ຄົນໃດມໍຣະນາດມ້ຽນ ລິດຊີວ
ເມືອແມ່ນ ດັ່ງນັ້ນ (ພຼະກໍ) ທັນມາຖາມ ບາບບຸນຜາຍຜ້ຽນ
ຄັນວ່າທຳບຸນໄທ້ ເມືອສເວີຍພາສາດ ຄັນວ່າທຳບາບແທ້
ໃຫ້ລົງພົ້ນພ່ານານ ຫັ້ນແລ້ວ.

ບັດນີ້ ມາຈັກຈາແຕ່ພື້ນ ພັກກັບກໍ່ເປັນດິນ ກ່ອນ
ແລ້ວ ກໍຫາກເປັນສະຖານພຽງ ຮາບຍາວບັງກວ້າງ ບາມ

ນັ້ນສັບພະບູເຈົ້າ ໂຄດົມຕົນໂຜດ ເຮົານີ້ ພຣະຫາກບັງກໍ່ສ້າງ
ປາຣະມີເຈົ້າພ່ຳເພງ ເຈົ້າກໍໄດ້ເກີດກ້ຳ ເມືອງນິງມະຫາພົມ
ທີ່ພຸ້ນ ຊື່ວ່າສວັນຕາວົນ ບິງພົມພາຍຟ້າ ເຈົ້າຈິງລົງມາ
ປ້ຽມ ຈັກກະວານທຸກເທດ ເຮົານີ້ ອັນວ່າໜື້ນໂບດກວ້າງ ນີ
ພື້ນຮາບພຽງ ກັບທັງມະຫາພົມເຈົ້າ ທັງຫຼາຍຕົນປະເສີດ
(ເຈົ້າກໍລົງອືດແຕ້ນ ໝາຍຂັ້ນຂອບເມືອງ) ໂສຣະສາໄດ້ ສິບ
ຫົກເມືອງມະຫາເອກ (ເປັນນິງເກົ້າ ນະຄອນກວ້າງໂລກລື)
ຄ້ອນວ່າໝາຍເຂດແລ້ວ ສິບຫົກເທດນະຄອນຫຼວງ (ລວງ
ບາວໄກ ກ່າວບໍຣະບວນແລ້ວ) ເຈົ້າຈິງບາຍຫຽນແກ້ວ ເງິນ
ຄຳລົງປູກ ປາງນັ້ນ (ກໍຫາກລືທ່ອນໄຮ້ ໃນຫັ້ນດັ່ງກັນ) ບັງ
ເລົ້າປັນເຂດໄວ້ ແປດໝື່ນສີພັນເມືອງ ເຈົ້າກໍປັງເສລາ ແຮ່
ເງິນຄຳໄວ້ (ທັງເລົ້າ) ໝາຍດຽງໄວ້ ນະຄອນຄາມທຸກຖີ້)
ເຈົ້າຈິງຕົກແຕ່ງຕັ້ງ ພົມໃຫ້ປູ່ແທນ (ອັນວ່າ) ບົວຣະພາກ້ຳ
ບໍຣະເມສວນແທ່ນ ປູ່ມະໂນສິດທີໄທ້ ຮັກສາກ້ຳຝ່າຍເໜືອ
ປັດສີມາກ້ຳ ພຣະນາຣາຍແທນສືບ ເສລາສິດທີທ້າວ ແຜງ
ເຜົ້າຝ່າຍທັກຂິນ ອັນວ່າເສລາສິດທີທ້າວ ຈົບເພດທັງສາມ
ແຫ້ແລ້ວ (ພຣະກໍ) ສອນສິດເນີນ ແກ່ຄົນທັງຄ້າຍ ກໍຈິງຮຽກ

ວ່າຕັກກະເສລາລ້ຳ ນະຄອນຂວາງລືເພາ ຈົງດາຍ ໃຜຜູ້ຍັງ
ປາກຮູ້ ໄປຫັ້ນຫາກຈັກຖອງ ແທ້ແລ້ວ ສວນວ່າກະສັດຕາ
ເຈົ້າ ມະຫາພົມດີນປະເສີດ ພຣະກໍປູ່ເຄິ່ງດ້າວ ດັ່ນພະປານີ
ຫັ້ນແຜ່ນແດງ ຄັນວ່າສັບພະຍູເຈົ້າ ອົງໃດຈັກມາເກີດ ກໍດີ
ກໍຫາກໄປສູ່ຫັ້ນ ປະຈົບແຜ້ໝູ່ມານ ແທ້ແລ້ວ (ອັນວ່າ) ສີ
ມະຫາໄພດເຈົ້າ ກໍເລີຍເກີດທັນໃຈ ເຈົ້າຈິ່ງຕັດສັບພະຍູ ລວດ
ຖອງເຖິງຮູ້ ອັນວ່າພັທກັບເຮົາຮູ້ ສັບພະຍູມາເກີດ ປາງນັ້ນ
ປັນຈະໄຕທ່ຽງແທ້ ພຸທເຈົ້າຫ້າພະອົງ ແທ້ແລ້ວ ຍາມນັ້ນ
ມະຫາພົມເຈົ້າ ໄປປຸນຕົກແຕ່ງ ອັນວ່າເມືອງມີ່ງດ້າວ ໃຫ້ມີ
ຫ້າວປູ່ສເວີຍ ນັບແຕ່ພຣະກະສັດໄທ້ ທັງເມືອງສເວີຍຣາດ
ປາງນັ້ນ ສນຸກປູ່ສ້າງ ເມືອງບ້ານຮຸ່ງເຮືອງ ແທ້ແລ້ວ ພຣະກໍ
ເຂືອງແຕ່ງໃຫ້ ທັງອາຊຸທັນສິນ ຕັ້ງຫາກສໍອະບານເນົາ ປູ່ໃນ
ຄະດີແນ້ງ ເມື່ອນັ້ນຍັງມີພຣະພຸທເຈົ້າ ຕົນຊື່ກະກຸສົນ ລົງມາ
ຕັດສັບພະຍູ ໂຜດຜາຍ ປາງນັ້ນ ເຖິງເມື່ອອາຍຸເຈົ້າ ນີຣະ
ພານພົ້ນໂລກ ໄປແລ້ວ ພຣະກໍພາຍໂຜດໃຫ້ ຍັງໄວ້ສາສນາ
(ກໍຫາກ) ເຮືອງຮຸ່ງເຫົ້າ ເຖິງເຂດສັງຂານ (ອັນວ່າ) ຊົມພູ
ເຮົາ ພ່ຳເພງສົມສ້າງ ແຕ່ນັ້ນພຣະກະສັດໄທ້ ທັງຫຼາຍທົສ

ຣາດ ແຫນສິບສ້າງ ເມືອງບ້ານຮຸ່ງເຮືອງ ເມື່ອນັ້ນພຸທບາດ
ເຈົ້າ ຕົນຊື່ໂກບາຄົມ ພຣະກໍເລີຍລຽງລັດຕັດສັບພະຍູ ໂພດ
ຄົນຄາວນັ້ນ ອັນວ່າຊົມພູທ້າວ ນະຄອນສີສຸກມາກ ຈິ່ງແລ້ວ
ພຣະກໍພາຍໂພດພົ້ນ ໂດຍດ້ານດັ່ງຫຼັງ ແທ້ແລ້ວ ເຈົ້າຈິ່ງເຂົ້າ
ສູ່ຫ້ອງ ເຖິງບອດນີຣະພານ ເຫຼືອແຕ່ຄຳສອນພຣະ ສາສນາ
ບັງກັ້ງ ກໍທາກເຮືອງຮຸ່ງແທ້ ຫຽນດັ່ງທິວອະມານ ຄົນຈິ່ງ
ເຖິງພາຍລຸນ ມາກຫຼາຍເຫຼືອລົ້ນ ຕາບກໍ່ເທົ້າ ເຖິງສາສນາ
ໝົດ ກໍຈິ່ງອໍຣະທາຍໄປ ລວດເລີຍສູນເສົ້າ ອັນວ່າສັກໂກໄທ້
ເທໂວຕົນປະເສີດ ພຣະກໍຊ້ຳແຕ່ງໃຫ້ ເທວະທ້າວຈາກສວັນ
ເຈົ້າກໍອຸພິເສກໃຫ້ ເປັນບອດຊົມພູ ກໍເລົ່າລືຊາເຖິງ ຂອບດິນ
ແດນຟ້າ ນະຫາຄຸນລົ້ນ ເພນີເຮືອງຮຸ່ງ ທຸກແຫ່ງຫ້ອງ ນະ
ຄອນທ້າວທີ່ເຊົາ ເໝືອນດັ່ງໄດ້ກ່າວແລ້ວ ອັນແຕ່ພາຍຫຼັງ
ນັ້ນແລ້ວ ໃຜຜູ້ມີປັນຍາ ປັ່ງເຖິງຄົງຊື່ຮູ້ ແຕ່ນັ້ນພຣະກັສປະເຈົ້າ
ລົງໂພດປານະສັດ ກໍຈິ່ງກັດສັບພະຍູ ສ່ອງຫັນທັງຖ້າຍ ພຣະ
ຈິ່ງນຳສັດເຂົ້າ ນີຣະພານພົ້ນເຂດ ເໝືອນດັ່ງພຸທບາດເຈົ້າ
ອົງແລ້ວແຕ່ຫຼັງ ຫັ້ນແລ້ວ ເຈົ້າກໍແປງບອດຟ້າ ທົນແຫ່ງ
ນີຣະພານ ກໍເລົ້າເທ່ຽງອະຄາຄົງ ສາສນາບັງຕັ້ງ ຍາມໃດບັງ

ໄປໝົດສາສນາເຈົ້າ ພຸດໂທຄົນປະເສີດ ດັ່ງນັ້ນ ໂລກກໍບັງປູ່
ໜັ້ນ ເຖິງເຫົ້າສາສນາ ແທ້ແລ້ວ ຄັນວ່າໝົດເຂດຂ້ານ ອັນ
ປ່ອງຝູງສັດ ດັ່ງນັ້ນ ກໍຫາກເຈັຽຣະການລັບ ໂລກເພີຍທະລາຍ
ນ້າງ ແຕ່ນັ້ນເລີຍເລົ້າອຸລໂທຣ້ອນ ຊົນພູມະນຸສໂລກ ເຮົານີ້
ຝູງໝູ່ເພດບັກຮ້າຍ ເທື້ອລົ້ນອະເນກນອງ ເທື້ອແຜ່ນພື້ນ ຄົນ
ເລົ້າເລວຜີ ຜີກໍເລວຄົນຮົບ ຮາບກັນກວນຂ້າ ແຕ່ນັ້ນຊົນພູ
ເສົ້າ ສູນເສັຽໜອງໜົ້ນ ນີແກ່ບໍ່ອີສາດຮ້າຍ ເທື້ອລົ້ນແຜ່ນ
ດິນ ແທ້ແລ້ວ ອັນວ່າແມ່ບັກຮ້າຍ ຕົວຊື້ກາລະຂີນີ ກໍດີ ມັນ
ກໍເປົານະຄອນສີ- ສັດນາກເມືອງ ລາວທັ້ນ ກັບທັງອ້າຍສະ
ລຶກຄຶກເຖົ້າ ສະໂຕນເພດປີສາ ກໍມີ ເຂົາກໍມາປະຊຸມນຸມ ປູ່
ເມືອງລາວສັ້ງ ພອບເລົ້າພິດຖຽງຂ້າ ເລວກັນກວນບຽດ ເປັນ
ເຫດໃຫ້ ເມືອງບ້ານອຸ່ນມົວ ແທ້ແລ້ວ ອັນນີ້ ຊົ່ວ່າຜີສາງເສື້ອ
ເມືອງລາວກັບປະຖົບ ເຮົາແລ້ວ (ຝູງຮັກສາເຂດດ້າວ ລາວ
ແທ້ແກ່ປະຖົມ ເຈົ້າເອີຍ) ກັບທັງອ້າຍເຈັດໄທໄພນັ້ນ ມີຣິດທີ
ເຖິງຂນາດ ການທີ່ກົບເຂົ້າໄດ້ ລີແທ້ທໍ່ມັນ ນີ້ແລ້ວ ອັນວ່າປີ
ສາດເສື້ອ ທັງປູ່ສີພີ ກໍມີ ສ່ວນວ່ານາງພີໄສ ຫາກແຜ່ນເຜັງ
ມັນແລ້ວ ທັງເລົ້ານາງເງືອກເຝົ້າ ແຜງແທ່ນພູຊາງ (ອັນ

ວ່າ ນາງງູຫຼວງ ເດດເຄັນຄຸງຟ້າ ອາຣັກຂາເຜົ້າ ດິນລາວ ຕັ້ງແຕ່ກ່ອນ ບໍ່ໃຫ້ມີທຸກຮ້ອນ ໂຮນຂ້ອນເບື່ອງໃດ) ນາງເຫຼືອ ໄຫຼ່ປູ່ເຜົ້າ ດອຍສະອາດງູຫຼວງ ກໍມີ (ທັງອິດທິແຮງ ດັ່ງໄພ ກັບໃໝ້ ນັ້ນກໍເນົາໃນຫ້ອງ ດິນລາວຮັກສາເຂດ ພູມປະເທດ ຍ່ານນີ້ ມີແທ້ແຕ່ປະຖົມ) ອັນວ່າຜີສາດເສື້ອ ບັກໃຫຍ່ຜີສວາງ ເຂົາກໍເອົາກັນເປັນຜົວເມັຍ ດັ່ງຄົນເຮົາແທ້ ຕັ້ງວ່າບູສນຸກຫຼິ້ນ ຫຼາຍຫຼາກການຄຸນ ເລີຍເລົ້າມີບຸດຕີ ເກີດມາໃນທ້ອງ ຊື່ວ່າ ນາງປາກກວ້າງ ເກົ້າໃຫຍ່ຫູຣີ ກັບທັງນາງນັນທາ ປູກເປັນຜີ ເສື້ອ ອັນວ່າຜີສວາງເສື້ອ ທັງຫຼາຍຝູງເກີດ ມານີ້ ເຂົາກໍຮັກ ສາເມືອງລ້ານຊ້າງ ລາວເຖົ້າແຕ່ປະຖົມ ຫັ້ນແລ້ວ.

ແຕ່ນັ້ນຍັງມີມະຫາຣັດສີເຈົ້າ ສອງຕົນນ້ອງພີ່ ເຈົ້າກໍໝາຍເຂດໄວ້ ເມືອງບ້ານແຕ່ປະຖົມ ທັງເລົ້າໝາຍດຽງ ໄວ້ ຫຼັກຄຳກ້ານວັນອອກ ທາງລຸ່ມໄວ້ ຫຼັກຫັ້ນໃສ່ຫີນ ຂຸມ ເລີກໄດ້ ສິບທິກສອກສັງຂຍາ ແທ້ແລ້ວ ອັນວ່ານັດເຊຊຸມ ແກ່ນສະດຽນຝັ່ງໜັ້ນ ອັນນີ້ຫາກແມ່ນຫຼັກໝັ້ນຕັ້ງ ປະຖົມ ກ່ອນທົວທີ ວ່າດາຍ ໄວ້ໃຫ້ເປັນສີມາ ເຂດເມືອງເມື່ອໜ້າ ອັນນຶ່ງຊື່ວ່າຫຼັກຂັນດ້າຍ ເຕັງທີ່ຫົວເມືອງ ທັງເລົ້າຫຼັກເສລາ ເທ່ງເມືອງພາຍທ້າຍ ເຈົ້າກໍໝາຍດຽງໄວ້ ໃນນະຄອນເມືອງ

ໃຫ່ຍ ຈິ່ມປາກນ້ຳ ນະທີທັ້ນແຫ່ງເມືອງ ຖັດນັ້ນເຈົ້າຈິ່ງເອົາ ຫຼັກແກ້ວ ເງິນຄຳຫຼາຍສິ່ງ ຝັງທີ່ກົກຮາກໄມ້ ທອງຫຼ້າງ ດອກບານ ເໜືອນດັ່ງປະອິກະຊາດໄມ້ ເປັນນິ່ງເມືອງອິນ ທີ່ ພຸ້ນ ອັນວ່າບຸບຜາຜາຍ ຊູ່ຍາມຫອມເຮົ້າ ອັນວ່າລວງສູງ ຮ້ອຍ- ສິບເຈັດວາເປັນເຂດ ລວງໃຫ່ຍໄດ້ ສິບເຈັດອຸ້ມຈອດກັນ ຖັດນັ້ນເຈົ້າຈິ່ງບາຍເອົາກ້ອນ ເສລາມາໃໝ່ ຊື່ວ່າກ້ອນກ່າຍ ຟ້າ ໝາຍໄວ້ບ່ອນໂຮງ ແຕ່ນັ້ນມະຫາຣັດສີເຈົ້າ ທັງສອງ ສະເດັດດ່ວນ ໄປສູ່ນ້ຳ ອະນົມແກ້ວໂສດສິງ ເຈົ້າຈິ່ງຜາຍ ໂຜດລ້າງ ທົດເຜົາເສັ່ງສີ (ທົດບັງຫຼັກເສລາ ຊູ່ອັນດັງສ້ຽງ ຂັດສີກ້ຽງ ເປັນເງົາງາມມື້ນ) ເພື່ອໃຫ້ວິເສດໄວ້ ພາຍໜ້າ ຮຸ່ງເຮືອງ ແລ້ວເລົ້າໄປເອົານ້ຳ ສະໃຫ່ຍອະນົມມາ ມາໄວ້ໃນ ຄູຫາ ລວດເປັນສະພັງນ້ຳ ເຈົ້າຈິ່ງອະທິຖານໄວ້ ເຈັ່ງຣະການ ກັບປະຖົບ ຊື່ວ່າຖ້ຳທ່ຽງນ້ຳ ຣັດສີເຈົ້າສືບມາ ທັ້ນແລ້ວ ແລ້ວ ເລົ້າພັວແຕ່ງຕັ້ງ ເປັນເອກະສັດຕາ ໃນຊ່ຽງດົງຊຽງທອງສີສັດ ບາກ ເມືອງຊວາຫັ້ນ ກໍຈິ່ງກົດເອົາໄວ້ ລັກຂບາຫາໃສ່ ອັດ ຖະມາດເຄົ້າໄວ້ ອາສີໜ້າແມ່ນສິ່ງ ຄັນວ່າບໍ່ຣະບອບແລ້ວ ລື ລາລຸກພາກ ພຼະຈິ່ງໄປນັ່ງແທ້ ໃນທັ້ນປ່າຄາມ ກໍຈິ່ງເອັ້ນ

ຮຽກຫ້າວ ຫັນໝູ່ນາຄາ ມາຊຸມນຸມ ຊູ່ຕົວຕັງຖ້ວນ ເມື່ອນັ້ນ ພຍານາກເຈົ້າ ຕົວຢູ່ພູຂອງ ກໍມາ ກັບທັງສິບເຊືອງຫຼວງ ປາກອູນມາພ້ອມ ແກ້ງຫຼວງນ້ຳ ເຊືອງເບົານາກໃຫ່ຍ ກໍມາ (ເຈົ້າກໍມາພ່ຳພ້ອມ ໂຮມຫັ້ນຊູ່ຕົວ) ກັບທັງມະຫາ ນາກເຈົ້າ ພູສູງຊ້າງບັ້ງ ກໍມາ ທັງເລົາຕົວຢູ່ແກ້ງ ນ້ຳໃຫ່ຍງູຫຼວງ ກໍມາ ຕົວຢູ່ຜາຮັງແມວ ແນບນຳມາພ້ອມ ອັນວ່າຈຸ່ມກຸ່ມພຸ້ນ ນາກໃຫ່ຍຜາທະນະ ກໍມາ ນາຄາເບົາຜາ ເສືອ ພ່ຳນວນມາເຕົ້າ ກັບທັງຜາດ່ຽວພຸ້ນ ນາກໃຫ່ຍຫອນ ຄຳ ກໍມາ ຕົວຢູ່ດອນຄວາຍພູນ ແນບນຳມາໃຫວ້ ແມ່ນວ່າ ຄົກຖອນເຮື້ອ[1] ສອງຕົວນາກໃຫ່ຍ ກໍມາ ຂາກໍຢູ່ບໍ່ໄດ້ ມາໃຫວ້ ນາດຣັດສີ ຫັ້ນແລ້ວ ຕົວນຶ່ງເກັດຫຼາກເຫຼື້ອມ ເບົາຢູ່ຜາຕັດ ກໍຈິງທັງບໍຣິວານ ແວດຣະວັງມາພ້ອມ ຝູງໝູ່ນາຄາເຈົ້າ ສິບ ລິບວັງຣື ກໍມາ (ທັງນາຄານາຄີ ພ່ຳນວນມາເຕົ້າ) ຫິນເໜືອ ເຝົ້າ ກຸງສີສັດນາກ ຕົວຢູ່ຜາເສືອທາງຝາກພຸ້ນ ແຜງໄວ້ຊູ ບານ ຄັນນະນາອ່ານໄດ້ ສິບສີນາຄາ ເຂົາກໍນິຣະມິດເປັນຣາ ຊາ ຊູ່ຕົວມາໃຫວ້ ມະຫາຣັດສີເຈົ້າ ຫາພົງຄະນານາກ ມາ

---

(໑) ຄົກຖອນເຮ້ຍ ຄວາມຈິງແມ່ນ = ຄົກຖອນເຮືອ.

ຊຸມບຸນທີ່ຫີບກ່າຍຟ້າ ກົກໄມ້ດອກທອງ ຫັ້ນແລ້ວ ເມື່ອນັ້ນ
ມະຫາຣັດສີເຈົ້າ ທົງຫັນສອນສັ່ງ ບາກກໍນົບນອບນົ໊ວ ຟັງ
ເຈົ້າກ່າວສອນ ຫັ້ນແລ້ວ ຟັງເປີນາຄາເຈົ້າ ທັງຫຼາຍບາກໃຫຍ່
ຟັງເປີ ອັນວ່າໃນສະຖານທີ່ນີ້ ສູເຈົ້າຈົ່ງຈຳ ແດ່ທ້ອນ ຍັງມີ
ພຣະກະສັດຜູ້ ສົມພານມີມາກ ມາສືບສ້າງ ເມືອງບ້ານບໍ່ສົງ
ແທ້ແລ້ວ ອັນວ່າພາສາດຕັ້ງ ເດັ່ງທີ່ເຮົາໝາຍ ຫັ້ນແລ້ວ ສູ
ຈົ່ງເອົາກັນມາ ຜໍ່ຄອຍເຫັນໜ້າ ແມ່ນວ່າສາຄະໂຣນ້ຳ ນະທີ
ທານນ້ອຍໃຫຍ່ ກໍດີ ມີທັງທຸກທີ່ໄມ້ ດົງດ້າວປ່າດອຍ ຢ່າໃຫ້
ຈິບຸຫາຍສ້ຽງ ພາກັນແຫນຜໍ່ ພາຍເທີ້ນ ໂລກຈັກເຮືອງຮຸ່ງ
ຍ້ອນ ສູເຈົ້າຜໍ່ເຫັນ ຫັ້ນແລ້ວ ອັນວ່າຊຽງທອງນີ້ ເປັນສະ
ຖານອັນວິເສດ ຈົ່ງດາຍ ສູຈົ່ງພ້ອມ ນາປ້ຽມຊູ່ຄົນ ແດ່ເນີ
ຂວບເມື່ອສີ່ເດືອນໃຫ້ ນາດູທີ່ນີ້ງ ເຮົາກໍແປງສາກກ້ອນ ດາ
ໃຫ້ແກ່ນັນ ນາຄະຝູງປູ່ຫ້ວຍ ໃຫ້ໂດຍຄວາມເຮົາສັ່ງ ໃຫ້ມາ
ເຊົາທີ່ກ້ອນຕາກຜ້າ ຂວັນຟ້ານໍ່າລົງ ຫັ້ນທ້ອນ ອັນວ່ານາກ
ຝູງປູ່ນ້ຳ ຊົລທີຂອງໃຫຍ່ ໃຫ້ມາເຊົາທີ່ພາດ່ຽວຫັ້ນ ແຫນ
ປ້ຽມຜໍ່ຄອຍ ຫັ້ນທ້ອນ ອັນນີ້ພຣະຣັດສີສັ່ງໄວ້ ຝູງນາກນາໂຄ
ແທ້ແລ້ວ ເປັນຄວາມຈິງ ສັ່ງສອນເອົາໄວ້ ເພື່ອໃຫ້ຄອຍປ້ຽມ

ຊຽງທອງບັດເອດ) ຂໍແກ່ອິນທະຣາດຜູ້ ຜບາກວ້າງຊ່ອຍແປງ ແດ່ທ້ອນ (ດ້ອມວ່າບໍຣະບວນແລ້ວ ພຣະອັດສີສອນບາກ ພຣະ ກໍພາກທີ່ນັ້ນ ຜັນຂຶ້ນຮອດອິນ ທຸກທີ່ຖ້ວນ ຖວາຍແທ່ງຄະດີ ກອນ ວອນອິນຕາ ຊູ່ລອງລົມຕ້ານ ພຣະຈິ່ງໃຫ້ເທວະບຸດເຈົ້າ ດີນມີບຸນມາກ ໄປກໍ່ສ້າງ ເມືອງບ້ານໃຫ້ຮຸ່ງເຮືອງ ຫັ້ນທ້ອນ ທັງເລົ່າໃຫ້ແຕ່ງຕັ້ງ ຄອງໂລກກະທຳບຸນນັ້ນເນີ ມີທານສິນ ຊູ່ວັນແວນແນ້ງ ຈິ່ງໃຫ້ໃຈແຜ່ກວ້າງ ຜາຍໂພດປານະສັດ ກໍ ຈິ່ງຢູ່ສະບາຍບານ ໄພ່ໄທທັງຄ້າຍ ເພື່ອໃຫ້ສັບພະຍູເຈົ້າ ລົງ ໄປຜາຍໂພດ ຈິ່ງເຫັນ ແມ່ນວ່າພາຍໜ້າພຸ້ນ ເຮົາກໍໄດ້ເພິ່ງບຸນ ເຈົ້າເອີຍ ເມື່ອນັ້ນເທວະອິນຕາເຈົ້າ ສາທຸການຮັບພາກ ນົບ ນອບນິ້ວ ທູນໄຫວ້ວ່າດີ ຄັນວ່າຈາຣະຈາແລ້ວ ສະເດັດໄປ ພ້ອມພ່ຳ ຈິ່ງແລ້ວ ກໍຈິ່ງຮອດທີ່ຖ້ຳ ຫີນແກ້ວຢູ່ກະເສີນ ຫັ້ນ ແລ້ວ ພຣະກໍພາວະນານ້ອມ ເມດຕາທັມຜາຍເພື່ອ ບຸນຈິ່ງຍູ້ ເມືອໜ້າຮຸ່ງເຮືອງ ແທ້ແລ້ວ ເມື່ອນັ້ນພຣະບາດເຈົ້າ ດີນຊື່ອິນຕາ (ພຣະກໍເນົາໃນສວັນ ຮ່ຳຄະນິງມະໂນແຈ້ງ) ວິສຸກັມມະເທວະ ບຸດເຈົ້າ ດີນບຸນອິງປະເສີດ ກັບທັງຈະຕຸໂລກທ້າວ ຈັກກະ ວານພ້ອມພ່ຳມວນ (ເຈົ້າກໍຄິດຮອດແທ້ ຄຳແຫ່ງພຣະອິສີ

ຈຶ່ງໃຈຈັກ ໃຄ່ສນອງມະໂນໄທ້ ກັບທັງຣາຊາເຈົ້າ ແຖນຫຼວງ
ຟ້າຄຶ່ນ ພຣະຈຶ່ງເລົ່າພາກພື້ນ ຣັດສີເຈົ້າບອກເຕືອນ ຟັງເຍີ
ເທເວດເຈົ້າ ຝູງໝູ່ແຖນຫຼວງ ຟັງເຍີ (ຢໍໃຫ້ທັງປວງຟັງ ຊູ່
ຄົນຈຳແຈ້ງ ເຮົາຈັກຂໍສະແດງຂໍ້ ຄຳຄວນເປັນປໂຍດ ຍົກຂຶ້ນ
ອ້າງ ເອົາເວົ້າເທສນາ ກ່ອນແລ້ວ) ອັນວ່າມະຫາຣັດສີເຈົ້າ
ຊິ້ບອກເຮົາມາ ຄວນທີ່ກອງຕາດູ ຊູ່ຄົນແວນຖ້ວນ ຕົນໃດມີ
ບຸນນ້ອຍ ລົງໄປເປັນໃຫ່ຍ ສັນນັ້ນ ບໍ່ອາດພອງຜ່ານພື້ນ ຊົມພູ
ໃຫ້ຮຸ່ງເຮືອງ ແທ້ແລ້ວ ອັນວ່າເງິນຄຳແກ້ວ ເຈັດປະການມີ
ມາກ ນະບຸດໄວ້ຖແລ່ງຫຼ້າ ເຫຼືອລົ້ນອະເນກນອງ ຕົນໃດບຸນ
ມາກລົ້ນ ແສນຊາດນຳມາ ດັ່ງນັ້ນ ກໍ່ຈຶ່ງທົງຊົມພູ ຢູ່ດີເຖິງ
ເຖົ້າ ເມື່ອນັ້ນແຖນຈຶ່ງເສັງສ່ຽງຮູ້ ບຸນແຫ່ງຝູງແຖນ ກັບທັງ
ນຶງຊາຍສາວ ຊູ່ຄົນແວນຜ້ຽນ ແລ້ວຈຶ່ງໃຫ້ລູກເຈົ້າ ແຖນ
ຫຼວງຟ້າຄຶ່ນ ເຈົ້ານັ້ນບຸນມາກລົ້ນ ລືເທົ້າທົວແດນ ແທ້ແລ້ວ
ວ່າໃຫ້ໄປຜ່ານພື້ນ ເປັນແກ່ຊົມພູ ແທ້ດາຍ ຊື່ວ່າຂຸນບູຣົມ
ລູກອິນດາຫ້າວ ກໍ່ຈຶ່ງແລະລ່ຳຢ້ຽມ ນຸນມາກນາງແມນ ເພື່ອ
ໃຫ້ເປັນເທວີ ຢູ່ເຝືອແຜງຫ້າວ ກໍ່ຈຶ່ງໄດ້ນາງແກ້ວ ຍົມມະພາ
ລານາງນາດ ເປັນລູກແຖນແຕ່ງເຈົ້າ ບຸນກວ້າງຍອດສວັນ

ແທ້ແລ້ວ ກັບທັງອິກແຄງນ້ອຍ ບຸດຕີແຖນຊັ່ງ ເຈົ້າກໍຮັກຍິ່ງ ພ້ຽງ ນາງແກ້ວເກິ່ງຕາ ແທ້ແລ້ວ ອັນວ່າອໍຣະທວຍເນື້ອ ນາງ ນາດທັງສອງ ກໍຫາກສົມສິງາມ ເກິ່ງກັນປານແຕ້ມ ຜັດແຕ່ ດາວະດິງຟ້າ ທຽມສອງກໍຫາຍາກ ເຣວແລ້ວ ຄວນແກ່ລູກ ພຣະເຈົ້າ ໄປສ້າງສືບເມືອງ ຊອບແລ້ວ ເມື່ອນັ້ນພຣະບາດເຈົ້າ ຟ້າຄື່ນແຖນຫຼວງ ພຣະກໍພາທີໄຂ ສັ່ງສອນສາມເຈົ້າ ຟັງເປີ ບຸດຣາດແກ້ວ ທັງສາມນາມໜໍ່ ກູເອີຍ ພໍ່ຈັກໃຫ້ສູໄປຜ່ານ ພື້ນ ຊົມພູພຸ້ນທ່ຽງຈິງ ພໍ່ແລ້ວ ອັນວ່າຍົມມະພາລາແກ້ວ ບຸດຕີແຖນແຕ່ງ ຈິ່ງໃຫ້ເປັນເອກເຜົ້າ ແຜງເຈົ້າຝ່າຍຂວາ ຊອບດາຍ ກໍຈິ່ງອຸພິເສກໃຫ້ ເປັນນິ່ງມະເຫສີ ພໍ່ເນີ ແມ່ນ ວ່າເຈົ້າຫາກມີແສນນາງ ກໍຢ່າໄລລືມນ້ອງ ເມື່ອນັ້ນຟ້າຄື່ນ ເຈົ້າ ພຣະຣາຊປິດາ ເຈົ້າຈິ່ງປົງຣາງວັນ ຊູ່ອັນປະສົງໃຫ້ ພ້ອມມອບໃຫ້ ຍັງເຄື່ອງກະສັດຕາ ໃຫ້ແກ່ຂຸນບູຣົມ ລູກຕົນ ຕົງຖ້ວນ ກັບທັງດາວແວງງ້າວ ປາງກ່ອນຣາງເຊົ້າ ກໍມີ (ອັນວ່າດວງພຣະໄຊສີ ຄ່າຄຸນຄຳລ້ານ ທົງມະຫິດທາແທ້ ທັງ ແດນຂາມອ່ອນ) ແຖນກໍຕົກແຕ່ງໃຫ້ ໄປພ້ອມຊູ່ອັນ ອັນວ່າ ສິງງາຊ້າງ ຝັກຫວາຍດວງຂນາດ ກັບທັງດາວເຄື່ອນກ້າ

ສາຍຟ້າແມບເມືອງ ມີທັງດາວເຫຼັກກ້ອນ ຄີນຂາວແຂງ ເຖືອນ ແຖບບໍ່ໄວ້ ປະສິງໃຫ້ລູກຕີນ ກັບທັງດວງຈັກແກ້ວ ງາຄຳສາມລູກ (ພຣະກົມວນມອບໃຫ້ ບາທ້າວຫໍ່ອິນ ເອົາໃຫ້ເຈົ້າ ໄປເຂືອນແຂງເມືອງ) ກັບທັງເພຣີກອງ ຄຶ້ນເລງຖຸງຟ້າ ມີທັງມະຫາໄຊຄ້ອງ ຣາງເຊັ້ງສຽງຄຶ້ນ ທັງວ່າສຽງມ່ວນຈ້າວ ປານຟ້າຜ່າພລຽງ ກໍ່ຈຶ່ງໄດ້ຊື່ວ່າສຽງຂວັນຟ້າ ກະດີງດາກເມືອງພົມ ຫັ້ນແລ້ວ ມີທັງປະຄືໄຊສີ ເບີກບິນໄປພ້ອມກັບທັງຄ້ອງ ໄປປ່າວພໍແສນ ທັງຫອບສັງ ມີບັນເມືອງກ້ອງທັງປີແກ້ວ ອັນຊື່ສວານໄລ ກໍ່ມີ (ສັພກາບບິບຕີ ຊູ່ແພວມີພ້ອມ) ມີທັງຂັນເງິນພ້ອມ ຂັນຄຳລຽບໄຂວ່ ກັບທັງເຄືອງໝາກລ້ວນ ມີພ້ອມພ່ຳມວນ ມາກແລ້ວ ອັນວ່າກຸມພັງໝໍ້ໄຫຫຼວງຫຼາຍຫຼາກ ກັບທັບພາຊະນະຖ້ວນ ມີພ້ອມເຄືອງຄຳແຫ້ແລ້ວ ມີທັງແກ້ວຫຼາກເຫຼື້ອມ ມະນີໄຊດໃສແສງ ເປັນຂອງຄຸນ- ຄ່າແພງພໍລ້ານ ມີທັງແພຫຼາກເຫຼື້ອມ ປົກຫົວຊ້າງໃຫ່ຽ ກໍ່ມີ ມີທັງປະຄືໄຊບາຍ ເບີກບິນເມືອໜ້າ ກັບທັງສາວສນົມນ້ອຍ ໂສມພາວພີເສດ ຫົກຮ້ອຍໄດ້ ນາງແກ້ວແກ່ນສວັນ ເມືອນັ້ນແຖບຈຶງເລືອກໝູ່ຊ້າງ ສານໃຫ່ຽມຸງຄຸນ

ມີທັງຫັດຖີຕີ- ປະເສີດງາມສານຊ້າງ ຕົວນຶ່ງຊື່ວ່າງາງອນ
ແກ້ວ ໄຊບະນຶງມະຫາຈັກ ຕົວນັ້ນມີວັນຂາວ ດັ່ງເງີນລຽງແລ້ວ
ມີທັງຄູບທັງເຫຼື້ອມ ຄືຄຳດູຄ່ຽມ ເຫມືອນດັ່ງວາດແຕ່ງແຕ້ມ
ງາມບ້ອບບິ່ງຂຽນ ແທ້ແລ້ວ ກັບທັງຈັກຂຸຕາຊ້າງ ມະຫາ
ໄຊຕົວປະເສີດ ຄືດັ່ງຄຳບິ່ງຜ້ຽງ ສເມີແກ້ວໜ່ວຍມະນີ ອັນ
ວ່າທັບຕາແຂ້ວ ງາມໂງ່ງເງີບເງືອດ ຂາວບິ່ງຜ້ຽງ ຜລິກ
ແກ້ວໜ່ວຍມະນີ ມັນຫາກແມ່ນລູກຊ້າງ ເອຣາວັນຕົວປະເສີດ
ຈິງແລ້ວ ກໍຫາກຄວນທີ່ທ້າວ ສະເດັດຂຶ້ນຂີ່ຫຼັງ ແທ້ດາຍ
ແລ້ວຈິ່ງເລືອກໝູ່ມ້າ ເຊື້ອຊາດພິນທີກ ຕົວໃດມີຣິດທີແຮງ
ເກີ່ງສາມສານຊ້າງ ແດນຈິ່ງອານັດທ້າວ ຂຸນສີທັນມະຊາດ
ບິນບອກໃຫ້ ແທນມ້າຢ່າໄລ ແທ້ເນີ ອັນນຶ່ງມະໂນສານໃຫ້
ໄປກ່ອນອອນພິນ ຂຸນນັ້ນມີມິນຄຸນ ຊວາດຄອງເກີ່ງຮູ້ ສອງ
ຂາພ້ອມ ຂຸນຄວນຂຸນອຸ່ນ ແດນກໍໃຫ້ຂີ່ມ້າ ແທນເຈົ້າຝ່າຍ
ຫຼັງ ແທ້ແລ້ວ ແຕ່ນັ້ນແດນກໍຈຳສອງເຖົ້າ ຂຸນໄບໄປກ່ອນ
ກັບທັງຍ່າງ່າມເຈົ້າ ຄືຫຼົ້ວແບກຂວັນ ເຖົ້າໄລ່ໃຫ້ແບກພ້າ
ທັງໝູ່ຈິກຈາວ ນັ້ນເນີ ອັນວ່າແມນບິນບິນ ແບກສຽມໄປພ້ອມ
ອັນວ່າເຂົາຝູງນີ້ ມີຣິດທີເກີ່ງຂນາດ ຈິ່ງແລ້ວ ເຂົາຈັກມາ

ຜາບແພ້ ພີຣ້າຍຜ່າຍພັງ ແທ້ແລ້ວ ແຖນກໍເຕີນປ່າວໃຫ້ ຝູງ
ໝູ່ຂຸນຄວນ[1] ເຈົ້າຈຶ່ງໄປທຳການ ຂີ່ຄວາຍໄປພ້ອມ ແລ້ວກໍ
ອານັດໃຫ້ ເຖົ້າປູ່ຣາງເຊີງ ນັນກໍມີໃຈຫານ ຂີ່ຄວາຍເຂົາ
ກວ້າງ ອັນວ່າສອງເຂືອເຖົ້າ ຖືພິນແພນນາກ ຈິງແລ້ວ ເຂົາ
ກໍແຫນແຫ່ເຈົ້າ ໄປພ້ອມຝ່າຍຫຼັງ ທັ້ນແລ້ວ ເມື່ອນັ້ນຂຸນບູ
ຣົມເຈົ້າ ຄຸນຫຼວງຕົນປະເສີດ ເຈົ້າກໍຂຶ້ນຂີ່ຊ້າງ ງາກົ່ງວນັ່ງ
ເຂັນ ແລ້ວຈຶ່ງຂັດດາບກ້າ ດວງຂນາດນຸງຄຸນ ດວງນັ້ນຊື່ວ່າ
ຕາວຝັກຄຳ ແມ່ວີດວງກ້າ ກັບທັງພາຍຖິງແກ້ວ ທັມມະ
ໂຮງລູກປະເສີດ ທຼິດູຍາບໆ ເຫຼື້ອມ ແສງແຈ້ງສິ່ງພຣະຈັນ
(ອັນວ່າເຄື່ອງທິບເຈົ້າ ຫຼາຍຫຼາກພັນປະການ ບໍຣີວານບຳ
ແນບທູນຖວາຍເຈົ້າ ເຈົ້າກໍເອົາມາພ້ອມ ນາງສນົມປາຣີຈາກ)
ກັບທັງເຄື່ອງອຸພິເສກທ້າວ ແຖນໃຫ້ແກ່ຕົນ ກັບທັງສອງ
ແຈ່ມເຈົ້າ ນາງນາດເທວີ ສອງສີເນົາ ນັ່ງທຽມຂວາຊ້າຍ
ຂຸນສານຂຶ້ນຂີ່ທ້າຍ ໄກວແກວ່ງປະຄືໄຊ ທັດຖືທີຣະແທ່ນ
ສຽງສະຖຽນຮ້ອງ ບັດນີ້ແຖນຈຶ່ງຕັ້ງແຕ່ງໃຫ້ ຊາວໂລກລືຊາ
ກ່ອນແລ້ວ ຍາມເມື່ອຂຸນບູຣົມບາ ພາກສວັນມາສ້າງ ຊື່ວ່າ

---

(໑) ຂນຄວນ ໜ້າຈະເປັນຂນດອນ

ປີກາບໃຈ້ ເປັນແມ່ວັນຫຼວງ ແທ້ແລ້ວ ກົງກັບວັນອາທິດ
ທ່ຽງຈິງຈໍາແຈ້ງ ໂລກຍິງຈໍາຈື່ໄວ້ ເວົ້າສືບສເມີນາ ວ່າດາຍ
ກໍຫາກເປັນຄໍາແຖນ ບອກມາປາງນັ້ນ ແຕ່ນັ້ນເຈົ້າຈິງຈໍາແຜນ
ຊີ້ ລົງມາແບບບອກ ທີຈັກມາກໍ່ສ້າງ ເມືອງບ້ານບ່ອນໃດ
ນັ້ນເດ ເມື່ອນັ້ນແຖນຈິງຊີ້ຍ່ອນໃຫ້ ຣາຊາຂຸນໃຫຍ່ ໃນທີ່ນາ
ທົ່ງນ້ອຍ ໃນຫັນຣາບພຽງ ຫັ້ນແລ້ວ ເຈົ້າຈິ່ງໄປຢູ່ສ້າງ ເປັນ
ຍອດຊົມພູ ຫັ້ນທ້ອນ ແມ່ນວ່າບຸນບາຫຼາຍ ຫາກຈັກຂວາງ
ເມືອໜ້າ ເຈົ້າຈັກມີລູກແກ້ວ ເຈັດຊາຍນາມໝັ່ນ ແທນສືບ
ສ້າງ ສາຍເຊື້ອຊາດວົງ ແທ້ແລ້ວ ອັນວ່າຣາຊບຸດເຈົ້າ ກຸມານ
ດົນພີ້ ບານັ້ນ ຈິ່ງໃຫ້ໄປຢູ່ສ້າງເມືອງລ້ານຊ້າງ ເປັນເຈົ້າແຜ່ນ
ດິນ ຫັ້ນທ້ອນ ຖັດນັ້ນແຖນຈິ່ງຊີ້ບອກໃຫ້ ເມືອງໃຫຍ່ຫົກເມືອງ
ຈິ່ງໃຫ້ບຸດຕາໄປ- ປູ່ສເວີຍພາຍພຸ້ນ ຄືວ່າເມືອງແກວກ້ຳ ບົວ
ຣະພາຕາເວັນອອກ ພາຍພຸ້ນ ສີອະໂຍທຍາເຂດຄ້າຍ ພາຍ
ໃຕ້ທີ່ເຊາງ ອັນວ່າເມືອງພວນພຸ້ນ ອຸໂທ[1]ນະຄອນຣາດ ກໍດີ ອັນ
ນຶ່ງຄໍາເກີດສ້າງ ເມືອງບ້ານແຕ່ປະຖົມ ແທ້ແລ້ວ ເມື່ອນັ້ນຈິ່ງ
ໃຫ້ຣາຊບຸດເຈົ້າ ທັງຫຼາຍວິນປະເສີດ ໄປຢູ່ສ້າງ ເມືອງທ້າວ

---

(໑) ອຸໂທ ຄືຈະແມ່ນອັດໄທ ແປວ່າເບື້ອງຕ່ຳ. ເບື້ອງລຸ່ມ

ທີເຊາ ແຫ້ເນີ ເມື່ອນັ້ນສັກໂກໄທ້ ແຖນຫຼວງຟ້າກື້ນ ພຣະຈິ່ງ
ແຕ່ງໃຫ້ທ້າວ ຂຸນຣູ້ອືກເກບ ອາທິດປາຍປາດເຫົ້າ ເຖິງຣອດ
ຫູໄຫ ປຸຣານະສີ ທີດຽວດີງຖ້ວນ ອັນວ່າອຸດທັງໄດ້ ຍາມດີ
ໄຊຍະໂຊກ ເມື່ອນັ້ນພຣະບາດເຈົ້າ ຕີຄ້ອງປ່າວພົນ ແຫ້
ແລ້ວ ເຈົ້າກໍສະເດັດຈາກຫ້ອງ ຫົນແຫ່ງເມືອງສວັນ ອັນວ່າ
ຫອຍສັງນັ້ນ ເປົ່າລີງມີຍັ້ງ ແຕ່ນັ້ນແຖນໄປພ້ອມ ແຖນຫຼວງ
ເຖົ້າໄລ່ ກໍມາ ມາແຫ່ໜ້າ ພົບລ້ານເພື່ອຫານ ກໍຫາກອະ
ເນກລົ້ນ ຝູງໝູ່ພຍາແຖນ ເຂົາກໍນອງພົນມາ ດັ່ງຊາຍໄຫຼ
ແລ້ງ ມາຣອດນາທີ່ງນ້ອຍ ຍາມແຖໃກ້ຊີຣຸ່ງ ແຖນກໍຕົກ
ແຕ່ງໄວ້ ອາສີຫັ້ນແຫ່ງສິງ ອັກຄະນະເຄາະເຂົ້າ ສະຖິດຢູ່ໃນ
ກັບ ກັບທັງລັກຂະນານອນ ປູ່ສີງສັນນັ້ນ ອັນນີ້ ຊື່ວ່າຊາດາ
ຫ້ອງ ເມືອງສີນະຄອນໂລກ ຈີງແລ້ວ ແຖນຫາກຕົກແຕ່ງໄວ້
ເມືອໜ້າໂລກລື ແຫ້ດາຍ ແຕ່ນັ້ນວິສຸກັມເຈົ້າ ພຍາຫຼວງແຖນ
ແຕ່ງ ພຣະກໍນິຣະມິດພາສາດໄວ້ ໂຣງພ້ອມຊູ່ອັນ ແຫ້ແລ້ວ
ເຈົ້າກໍນິຣະມິດໄວ້ ຫຼາຍແຫ່ງຫີນຫຼວງ (ເປັນແຖວຖັນ ແວດ
ອະວັງວຽງກວ້າງ ລຽນເປັນຕ້າຍ ນະຄອນຄານທຸກທີ່ ມີບໍ່ໄຮ້
ໃນຫັ້ນແຜ່ນວິນ) ທັງເລົ່າປະສິດທີໄມ້ ໃຫ້ເກີດເປັນໄຟ (ຍາມ

ເມື່ອຄົນເອົາສີ ເກີດມີໄຟໄດ້ ເພື່ອໃຫ້ຝູງຄົນໄດ້ ໄຟດັງໄດ້ຮຸ່ງ
ຫຸງຕົ້ມເຂົ້າ ເຜົາຊີ້ນຈີ່ປາ ຫັ້ນແລ້ວ) ແລ້ວກໍອະທິຖານບ້າ
ທັງໝູ່ຮູລົມ ກໍມີ ເພື່ອໃຫ້ຄົນທັງຫຼາຍ ຢູ່ສະບາຍເມື່ອໜ້າ
ກໍຈຶ່ງສອນສັ່ງໄວ້ ຝູງໝູ່ເທວະດາ ຝູງຢູ່ໃນຊົມພູ ຊູ່ຕົນຕົງ
ຖ້ວນ ຈົ່ງໃຫ້ຮັກສາແກ້ວ ຂຸນຫຼວງບູຣົມຣາດ (ຢ່າໃຫ້ອຸບາດ
ຕ້ອງ ໝອງໃຫ້ເບື່ອງໃດ ຈົ່ງໃຫ້ເຈົ້າຢູ່ໄດ້ ໝັ້ນທ່ຽງເທັຽ
ຣະດາ) ກັບທັງພົມແພນຫຼວງ ໄພ່ໄທທັງຄ້າຍ ອັນນຶ່ງຢ່າມີ
ໄພຍໄພຮ້າຍ ໂຣຄາບັງບຽດ ສັງເທົ້ນ ຄຳທີ່ເຮົາສັ່ງໄວ້ ສູເຈົ້າ
ຈື່ຈຳ ແທ້ດາຍ ຖັດນັ້ນເຈົ້າຈຶ່ງສອນສັ່ງໄວ້ ຄອງຣາຊທັມສິບ
ກັບທັງຄອງເສນາ ຊູ່ຄົນແວນຜ່ຽນ ຄັນວ່າບໍ່ຣະບວນແລ້ວ ລື
ລາລຸກພາກ ເຈົ້າກໍເມື່ອສູ່ຫ້ອງ ເມືອງຟ້າຟາກສວັນ ຫັ້ນແລ້ວ

ບັດນີ້ມາຈັກເລົ້າພາກຖ້ອຍ ເຖິງບາດແຖນຫຼວງ

ກ່ອນແລ້ວ ພຣະກໍຂວາ ໆ ສຽງ ຊື່ນຊົມດອມດັ້ງ ຍາມນັ້ນຂຸນ
ບູຣົມສ້າງ ສເວີຍເມືອງທີສຣາດ ສອງຂວບເຂົ້າ ເລີຍໄດ້ລູກ
ຊາຍ ຊະຊ່ອນໜ້າ ແບ້ນຍິງພຣະແຂໄຂ ໃສ່ຊື່ວ່າຈອມຂຸນລໍ
ຮູບງາມປານແຕ້ມ ໄດ້ກັບວອນນາງແກ້ວ ບົມມະພາລາຕົນ
ພີ່ ເຈົ້າກໍຮັກຍິ່ງພຽ້ງ ແພງໄວ້ເກີ່ງກາ ແຕ່ນັ້ນເທວີຊ້າຍ

ອິກແດງນາງນາດ ນາງກໍໄດ້ລູກນ້ອຍ ງາມບ້ອຍບົ່ງຂຽນ ອັນ
ວ່າປິດຕາພ້ອມ ມາດາພໍ່ແມ່ ໃສ່ຊື່ວ່ານາງລ້ານຊ້າງ ຜົວ
ພ້ຽງສິງຄຳ ແທ້ແລ້ວ ພັດເລົ່າໄດ້ລູກແກ້ວ ດີບຊື່ວ່າຈຸງສວາງ(1)
ກັບນາງບົນມະພາລາ ບອດນາງນິງເອື້ອຍ ຖັດນັ້ນສາວສວັນ
ແກ້ວ ອິກແດງມີລູກ ກໍຈິງໃສ່ຊື່ແກ້ວ ກຸມານນ້ອຍໄສພົງ
ຖັດນັ້ນງົວອີນນ້ອຍ ຈອມແພງອິງປະເສີດ ເກີດດອນນາງບົນ
ມະພາລາ ບອດສວັນສາວແກ້ວ ຖັດນັ້ນອິກແດງສ້ອຍ ກະ
ສັດຕີ ມີລູກ ກໍຈິງໃສ່ຊື່ນ້ອຍ ກຸມານຫຼ້າລູກຂຸບ(2) ແລ້ວເລົ່າ
ໄດ້ແຈ່ມເຈົ້າ ເຈັດແກ່ນພົງກະສັດ ກັບດອນນາງບົນມະພາ
ລາ ບອດເທືອເກົ້າ ອັນວ່າບຸດຕາແກ້ວ ກຸມານເໜົ້າໜໍ່
ເຈັດໜຸ່ມໜ້າ ຕະການພ້ຽງເກິ່ງກັນ ແທ້ແລ້ວ ກັບທັງຜົວ
ພາງໜ້າ ງາມລົ້ນອີນຂຽນ ວັນວຽນຄື ຄ່ອງຜົວພາງແກ້ວ
ອັນວ່າເພີງແພງນ້ອຍ ໂສມງາມລືອາດ ຄໍຄ່ຽມຄົ້ວ ຜົວອ້ວນ
ອ່ອນອວນ ຕັ້ງຫາກະອອບວອບໜ້າ ພຣະຈັນແພງໃສສ່ອງ ເປັນ
ທົຫຼົງລ່ຳປຸ້ມ ຄອບເຈົ້າບໍ່ອົມຕາ ພໍ່ກໍຄຶດໄຄ່ອ້າງ ເປັນອາດ

(໑) ຈຸງສວາງ ບາງສະບັບວ່າ ຈຸງສິງ

(໒) ລູກຂຸບ ບາງສະບັບວ່າ ລິກກິນ

ອາຊາ ແທ້ແລ້ວ ໂສມພາວງາມ ຮູບກະບວນຊາວຟ້າ ພຣະກໍ ຮັກຍິ່ງພຽງ ສເມີໜ່ວຍຕາຕົນ ກໍຫາກຍູສະບາຍສຸກ ຊື່ນຊົມ ດອມແກ້ວ ເຈົ້າກໍບໍ່ເດືອດຮ້ອນ ຈັກສິ່ງໂຣຄາ ອັນວ່າໂພຍໄພ ສັງ ກໍບໍ່ມີມາຕ້ອງ ນັບແຕ່ວາດອງສ້າງ ຊົມພູນະຄອນຣາດ ມານີ້ ເກົ້າຂອບເຂົ້າ ບໍ່ມີຮ້ອນຮ່ອນໃດ ແທ້ແລ້ວ ທໍ່ວ່າຍັງ ເຄືອງແທ້ ເສນາພົນໄພ່ ພຣະກໍໄຮ້ຫອດຂ້າ ຄົນໃຊ້ຊູ່ປະການ ແທ້ແລ້ວ ກັບທັງຊ້າງແລະມ້າ ຝູງໝູ່ເງິນຄຳ ແມ່ນວ່າເອົາ ແຕ່ເມືອງແຖນມາອັນໃດ ກໍຈິ່ງມີອັນນັ້ນ ເມື່ອນັ້ນພຣະບາດເຈົ້າ ທ້າວໃຫ່ຽຂຸນບູຣົມ ກັບທັງນາງເທວີ ຍາກແຄນເຄືອງແຄ້ນ ພຣະຈິ່ງຫັນຂຸນສາມເຖົ້າ ຂຸນໄຂມາຣົບ ກັບທັງຍ່າງ່າມເຈົ້າ ນາພ້ອມພໍ່ກັນ ສູ່ຈິ່ງເມືອທູນໄຫວ້ ແຖນຫຼວງຟ້າຄື່ນ ກູພຸ້ນ ກໍຈິ່ງເລົ່າພາກພື້ນ ຖວາຍເຈົ້າຊູ່ປະການ ແຕ່ເນີ ອັນວ່າເຂົາ ກາດກ່ຽວ ມາເກີດກາງໜອງ ອິນຕະການເປັນ ມືດມົວສຸມ ເສົ້າ ອັນວ່າມົວມືດຟ້າ ບໍ່ມີສວ່າງຈັກຍາມ ພຣະເອີຍ ແສງ ສູຣິໂຍນາ ບໍ່ໃສສູນເສົ້າ ອັນນຶ່ງສອງໜ່ວຍເຕົ້າ ຮຸ່ງໃຫ່ຽມານີ ນີ້ນໍ ເຄືອມັນເປັນຊອນລອນ ສອດໃບບັງໄວ້ ມັນກໍເລີຍຖົມໄມ້ ໄຮຫຼວງມົວມືດ ແມ່ນວ່າເງີຍເງີກໜ້າ ບໍ່ເຫັນຟ້າຜ່ອງໃສ

ແຫ້ແລ້ວ ຝູງຂ້າປູ່ບໍ່ໄດ້ ເມືອງລຸ່ມໜາະເປັນ ມາກແລ້ວ (ເພາະມັນເປັນຂິວນິວ ມືດມົວເມືອງໄດ້ ເປັນເພາະໃບເຂົາ ກ້ຽວ ມຸງເຫິງແດດບໍ່ສ່ອງ) ຂໍໃຫ້ເຫັນແກ່ຂ້ອຍ ປາງນີ້ໂພດ ຜາຍ ແດ່ທ້ອນ ສູຈິ່ງຫູບບາດໃຫ້ ໂດຍດັ່ງຄຳຮາ ນີ້ເນີ ສັນ ໃດມີຄວາມສຸກ ບໍ່ກວ່າສູສາມເຖົ້າ ແດ່ນັ້ນສາມຂຸນເຖົ້າ ລືລາ ໂດຍບາດ ເມືອຮອດຟ້າ ຫູບໄຫວ້ກ່າວກອນ ເລົ່າພາກພົ້ນ ຫູບບາດພຍາແຖນ ຖວາຍທັນຢຳ ຊູ່ອັນແວນຜ້ຽນ ເມື່ອນັ້ນ ຣາຊາເຈົ້າ ແຖນຫຼວງຟ້າຄື່ນ ພຣະກໍຊິມຊື່ນຕ້ານ ສາມເຖົ້າ ກ່າວກອນ ບັດນີ້ລູກພໍ່ໄປສືບສ້າງ ສເວີຍຣາດຊົມພູ ທີພຸ້ນ ບັງຄ່ອຍເຫັຽຣະຄາຄິງ ຊອບທັນລີເຈົ້າ ວ່າຈັກໄປພັນໄມ້ ໄຣ ຫຼວງລຳໃຫ່ຽ ເສັ້ຽນັ້ນ ເກງທໍ່ຂວານບໍ່ໝັ້ນ ຂວາງແພ້ລູກເຮົາ ບໍ່ຮູ້ ບັດນີ້ກູຈັກອານັດໃຫ້ ສູໄປຕິກແຕ່ງ ເພື່ອໃຫ້ລູກແກ່ນ ແກ້ວ ກູພຸ້ນຢູ່ ດີ ແດ່ເນີ ກັບທັງຍ່າງ່ວມເຈົ້າ ທັງປູ່ແຖນໃຍ ສູຈິ່ງໄປພັນເຄືອ ເຂົາກາດເສັ້ຽຕິງຖ້ວນ ກັບທັງມິນຈິບພ້ອມ ແຖນຫຼວງເຖົ້າໄລ່ ກໍດີ ເຂືອຈິ່ງໄປປ້ຳໄມ້ ໄຣສ້ຽງຢ່າໃຫ້ຫຼໍ ແຫ້ເນີ ແມ່ນວ່າແຖນຊີໃຫ້ ຖືຊີໄປທ່ຽວ ໃຫ້ໄປຊີໜາກເຕົ້າ ປຸງນັ້ນທ່ຽວພລັນ ທໍ່ເນີ ເມື່ອນັ້ນສພັ່ງພ້ອມ ຝູງໝູ່ງິວຄວາຍ

ຄົນຍິງຊາຍ ອອກມາໃນຫັ້ນ ມີທັງລວາສູນແບ້ ໝູໝາເປັດ
ໄກ່ ກໍມີ ມີທັງຊ້າງແລະມ້າ ແມວພ້ອມຫ່ານຫິງ ກັບທັງ
ຕານແລະພ້າວ ລີສຽດປາປູນ ບໍຣະບວນຄົນ ເຄື່ອງສັນຂົນ
ຄ້ຽວ ມີທັງສີໄຄພ້ອມ ຂີງແຄງຊີບົວ ກັບທັງກ້ວຍແລະອ້ອຍ
ພູພ້ອມອອກມາ ຫັ້ນແລ້ວ ແມ່ນວ່າແຖນລີວໃຫ້ ໄປລືວເປັນ
ຣູ ບັງລາພູ ໜ່ວຍປາຍເປັນນ້ອງ ແຕ່ນັ້ນເດັຽຣະດາດລົ໊ນ
ຝູງໝູ່ຍິງຊາຍ ມີທັງງົວຄວາຍຫຼາຍ ລັ້ງລິງປານນ້ຳ ກັບ
ທັງຫັດຖີຊ້າງ ພັງພາຍໄຫຼອອກ ມາແລ້ວ ໃນໝາກນ້ຳ ປຸງ
ຫັ້ນໜ່ວຍປາຍ ອັນວ່າຣັຕນັງແກ້ວ ເງິນຄຳຜ້າຜ່ອນ ກໍດີ ກໍ
ຈັກໄຫຼອອກລົ໊ນ ມາຫັ້ນຊູ່ອັນ ແທ້ແລ້ວ ສ່ວນວ່າແຖນເຖືອກ
ໃຫ້ ໄປເປີດປະຕູຄຳ ອັນວ່າເງິນເຫຼົ້ກ ກໍວຊືນມີຫັ້ນ ສັພສັນ
ພ້ອມ ບໍ່ມີຈອນຈິບບາກ ຄຳທີ່ກູສັ່ງໃຫ້ ສູເຈົ້າຢ່າລືມ ແທ້ເນີ
ໃຫ້ສູຫູນຫັນຢຳ ດັ່ງຄວາມກູວ້ານ ແລ້ວໃຫ້ໄປຟັນໄມ້ ໄຣຫຼວງ
ຣິມໄຫ່ງ ເສັ່ງເນີ ຢ່າໄດ້ເອົາຈິ່ງໄວ້ ຟັນຖີ້ມຖຸ່ມເສັ່ງ ກັບທັງເຂົາ
ກາດກ້ຽວ ຣິມໄຫ່ງບັງບົນ ນັ້ນນາ ເຂືອຈິ່ງພາກັນຕັດ ຂາດ
ເສັ່ງຢ່າໄວ້ ຢ່າໃຫ້ຍັງເປັນໄມ້ ລຳເຄືອລືບຕໍ່ໄປນັ້ນ ແມ່ນວ່າຕໍ
ພ້ວ້ ກໍບາໄວ້ທີ່ໃບ ເຂືອຈິ່ງຕັດຂາດໃຫ້ ມຸດນອດຈຳດິບ ສົນ

ໃຫ້ຈຳປັດຖາພີ ຈຸ່ມລົງພາຍໃຕ້ ໃຫ້ມັນດັບເສັຽເຊື້ອ ເຄືອລຳ ອຸບາດ ອັນນັ້ນ ກັບໃຫ້ຜ່າໝາກນ້ຳ ປຸງຫັ້ນໜ່ວຍຫຼວງ (ສູຢ່າໄວ້ ຕັດອອກເປັນດອນ) ຟັນເປັນງິມ ຜ່າເສັຽຢ່າໄວ້ ຕັ້ງແຕ່ນີ້ສູຢ່າຫຼຽວມາຟ້າ ຫາກູຈັກເທື້ອ ແມ່ນວ່າຕູປູ່ພໍ້ ຊີເມືອ ປ້ຽມຜໍສູ ດອກບາ ຄັນວ່າສືສູມ້ຽນ ມໍຣະບາດຕາຍໄປ ເມື່ອໃດຈິ່ງໃຫ້ຄືເງິນຂັນ ຊູ່ຄົນຕົງຖ້ວນ ຍາມຈັກເກີດເຂົ້າເຫຼົ້າ ທຳສິ່ງສັນໃດ ກໍດີ ໃຫ້ວ່າມາກິນເຢີສູ ຊູ່ຄົນຢ່າຊ້າ ຄ້ອນວ່າແຖນສັ່ງແລ້ວ ບໍຣະບວນທຸກສິ່ງ ເຂົາຈິ່ງລົງຈາກຟ້າ ເມືອງໃຫ້ທີເຊງ ອັນວ່າແຖນໄຍພ້ອມ ແຖນຫຼວງເຖົ້າໄລ່ ກໍດີ ກັບຫັງຢ່າງ່າມເຈົ້າ ສາມເຖົ້າມຸດໄປ ເຂົາກໍມໍຣະບາດມ້ຽນ ລິດຊີວຕາຍໄປ ຖ້ວນແລ້ວ ກາຍເກີດເປັນຜີຫຼວງ ເສື້ອເມືອງດຽວນີ້ ຄົນຈິ່ງໄດ້ກ່າວເອີ້ນ ປາງພອກພະລິພີ ຮຽກວ່າມາກິນເຢີເຂົາ ຮີບມາຍາຊ້າ ຫຽບບ່ອມມາກິນເຂົ້າ ໂພຊະນັງເຂົາພອກ ຕາມແຕ່ຄົນມອບໃຫ້ ເຂົານັ້ນກໍຈິ່ງກິນ (ຄົນຈິ່ງໄດ້ເອື້ອງເຖົ້າ ເວົ້າສືບກັນມາ ທາງພາສາໄທລາວ ກ່າວມາຈາເວົ້າ) ຈິ່ງວ່າລຳດັບເຫົ້າ ພາຍລຸນເຮົາໃຫ່ງ ມາພີ້ ຍາມເມື່ອກິນເຂົ້ານ້ຳ ເຮົາເອີ້ນວ່າມາເຢີ ຫັ້ນແລ້ວ ເມື່ອນັ້ນພຣະບາດເຈົ້າ ຂຸນຣາຊບູຣົມ

ພຣະກໍຕອງຕາດູ ແຈກຄົນຝູງນັ້ນ ອັນວ່າຣູຊີໃຫ້ ແປງເປັນ
ສອງໝູ່ ໝູ່ນຶ່ງຊື່ວ່າເຊື້ອ ໄທເລັ້ມລູກລາວ ໝູ່ນຶ່ງຊື່ວ່າໄທວື
ໄວ້ ເປັນຖັນລຽນຢູ່ (ເຂົາກໍ) ຈື່ຈຳແຈ້ງ ເອົາໄວ້ຊູ່ຄົນ ແທ້ແລ້ວ
ໝູ່ອອກຣູສຶວນັ້ນ ໂສນງານດູອາດ ແປງເປັນ[1]ສາມສິ່ງໃຫ້
ລຽນໄວ້ຖືຖັນ ຊື່ວ່າ[2]ໄທເລີງໄວ້ ເປັນຖັນລຽນຢູ່ ເຂົາຈື່ແຈ້ງ ຈຳ
ໄວ້ບໍ່ລືມ ໄທລໍໃຫ້ ໄທຂວາງສາມສິ່ງ ຈິ່ງແລ້ວ (ເຈົ້າກໍ) ບົນ
ບອກໃຫ້ ໄທນັ້ນຊູ່ອັນ ຄັນວ່າແຈກແບ່ງແລ້ວ ປັນໝູ່ຝູງຄົນ
ຕາມອາການ ເກີດມາວັນເຄົ້າ ເຈົ້າກໍເອົາຕາມເຣື່ອງ ຣູຊີຣູສຶວ
ພໍເມື່ອແຈກແບ່ງແລ້ວ ລາວເຖົ້າຈິ່ງສອນ ໃຫ້ສືບສ້າງ ເຮັດ
ໄຮ່ນາກິນ ກໍຈິ່ງແບ່ງເປັນອາພອນ ແຜ່ນແຜພື້ນຜ້າ ແລ້ວເລົ່າ
ບອກໃຫ້ຮູ້ ຫຼາຍສິ່ງສັພການ ອາດຈັກຄິວຣະນາເຖິງ ແຫ່ງ
ຄຳບໍ່ມີແລ້ວ ກໍຈິ່ງປຸນແປງໃຫ້ ຍິງຊາຍສົມຄູ່ ກັນແລ້ວ ແລ້ວ
ກໍມີລູກເຕົ້າ ເຕັມບ້ານຢູ່ສະຖຽນ ທັງເລົ່າບອກໃຫ້ອຸປຖາກລ້ຽງ
ພໍ່ແມ່ລຸງຕາ ປຳແປງຝູງ ແມ່ນາຍລົວປ້າ ຈົບໃຫ້ເຈັຽຣະ
ກາບພົ້ນ ຕານາຍພໍ່ແມ່ ເລີຍເລົ່າລົດຊ້ອນມ້ຽນ ເມື່ອຟ້າຟາກ

---

(໑) ສາມສິ່ງໃຫ້ຄວນເປັນສາມໝູ່

(໒) ໄທເລີງບາງບ່ອນວ່າໄທກະເລີແຫ່ງຄຳ ບາງບ່ອນວ່າແຫ່ງທັນ.

ສະວັນ ທັງບອກໃຫ້ ເຂົາເລີກສະການເສັງ ທຳນຸງຄຸນ ສິງ
ບຸນຫາເຖົ້າ ພໍ່ແມ່ນໍອະບາດແລ້ວ ກິນທານທອດສິ້ງ ເກັບ
ດູກໄວ້ ທັງລ້າງສ່ວຍສີ ແລ້ວເລົ້າແປງສາລາ ກໍ່ກວມນຸງໄວ້
ໃຫ້ສູຫຽວສິ້ງເຂົ້າ ປ່າຂາດສັກວັນ ຄັນວ່າບໍ່ມີຄົນໄປ ໃຫ້ແຕ່ງ
ເຮືອແຮໄວ້ ແລ້ວຮຽກເອີ້ນ ພໍ່ແມ່ມາກິນ ຊື່ວ່າເປັນຜີເຮືອນ
ສືບມາດຽວນີ້ (ອັນວ່າ) ຮູສິ່ວໃຫ້ ຮຽກວ່າເປັນໄຫ ເຂົາກໍມີ
ຮູບງາມ ຊູ່ຄົນເລີງລ້ວນ ເຂົານັ້ນມີຜຍາພ້ອມ ອາຄົມແຄວນ
ນາກ ໃຫ້ແຕ່ງຕັ້ງ ເອົາໄວ້ຢ່າລືມ ອັນວ່າຮູຊີໃຫ້ ເອົາໄປເປັນ
ໄຜ່ ເພາດວ່າມີຮູບຮ້າຍ ດຳເຫຼື້ອມສິ່ງໜີ້ ຊື່ວ່າຂ້າກໍ່າຮ້າຍ
ເຂົາປູ່ດອຍສູງ ໃຫ້ເຂົາເອົາປີຕອງ ແປກກະບອງມາໃຫ້ ເມື່ອ
ນັ້ນຣາຊາເຈົ້າ ສອນພິນຝູງໃພ່ ເຈົ້າກໍຈຳຈື່ຖ້ອຍ ແຖນຟ້າ
ບອກມາ ແທ້ແລ້ວ ແຕ່ນັ້ນໄຫຂວາງໃຫ້ ຫາຂວາງເປັນໝູ່
ໄຫເລັ້ນໃຫ້ ຫາເລັ້ນຢ່າເປັນ ອັນວ່າໄຫເລີງໃຫ້ພ່ຳພ້ອມ ກັບ
ປູ່ເປັນມອບ ໃຫວີຫາໃຫວີ ໝູ່ກັນດາຖ້ວນ ຖັດນັ້ນໄຫລໍໃຫ້
ຫາລໍສິນສູ່ ສູຢ່າໄດ້ລ່າມ້າງ ຄຳເຖົ້າສັ່ງສອນ ຄັນວ່າກິນຊີ້ນ
ໃຫ້ສິ້ງຊີ້ນ ກ່ອນໃຫ່ງທັງຂາ ຄັນວ່າສູກິນປາ ໃຫ້ສິ້ງປາພໍ
ຮ້ອຍ ເວນວາງໃຫ້ ພະລີຜີແຖນຊື່ນ ແຖນຈິ່ງຄູນຂຶ້ນໃຫ້ ສູ

ເຈົ້ານັ່ງມີ ນີ້ຮ້ອງໃຫ້ ຄະລຳແກ່ຝູງຊາຍ ນີ້ຮວາຍໃຫ້ ຝູງຍິງ ຄະລຳນາກ ຈິງດາຍ ເດືອນຈຽງໃຫ້ ຄະລຳດີກິດກາບ ເດືອນ ຍີໃຫ້ ຄະລຳນີ້ເດົາຮວາຍ ພັກບາຍຟ້າ ຢ່າຄ່ອນຟືນຫຼິວ ຢ່າໄດ້ຖືຂວັບໄປ ຮ່ອນເຣຟັນໄມ້ ຢ່າໄດ້ຕັກໂຕ່ງນ້ຳ ຕຳສາກ ສຽງດັງ ຝູງນາງຍິງ ຢ່າຮ່ອນຮຳເອົາເຂົ້າ ໃຜຜູ້ທຳດີໄດ້ ເປັນ ດີເຖິງຂນາດ ຈິງແລ້ວ ພຍາດຫາຍທ່ຽງແທ້ ຄຳໄຂ້ກໍບໍ່ເຖິງ ຫັ້ນແລ້ວ ແມ່ນວ່າທຳການສ້າງ ນາສວນເຮັດ[1]ໄຮ່ ກໍດີ ນັບ ແຕ່ພືຊໝາກໄມ້ ເຫຼືອລົ້ນອະເນກນອງ ແທ້ແລ້ວ ແຕ່ນັ້ນ ຂຸນບູຣິນເຈົ້າ ກະສັດຕາຕິນປະເສີດ ພຣະກຳສເວີຍຣາດສ້າງ ເມືອງບ້ານຮຸ່ງເຮືອງ ເຈົ້າຈິງຕັ້ງ ເປັນອາດພຍາຈັກ ກໍຈິງ ສອນເສນາ ໃລ່ໄປເປັຍຖ້ານ ເພື່ອໃຫ້ອາສາເຈົ້າ ຣາຊາພູອະ ນາດ ຈິງແລ້ວ ບໍ່ໃຫ້ເຄືອງນາດພົ້ນ ຈອມເຈົ້າພຣະຍອດເມືອງ ວ່າດາຍ ຂຸນສີຫັມມະຣາດໃຫ້ ເປັນນິງແສນເມືອງ ຮັກສາພິນ ຄິນເສີກ ໄພ່ໄທທັງຄ້າຍ ອັນວ່າຂຸນແສນໃຫ້ ເປັນໝື່ນຫຼວງ ກາງ ໃຫ້ເພີ້ນຮັກສາຝູງ ແຂກຄິນມາເຝົ້າ ອັນວ່າຂຸນສານໃຫ້ ແຕ່ງຕັ້ງ ຖືໄພ່[2]ພາຍຂວາ ຂຸນພີ ຖືພິນແພນ ແທ່ແທນພາຍ

---

(໑) ນາສວນເຮັດໄຮ່ ເດີມວ່ານາສວນຝູງໃຫ່ຽ

(໒) ຖືໄພ່ພາຍຂວາ ເດີມວ່າຖືໄພ່ຂຽນຂວາ

ຊ້າຍ ຊຸບບານຜູ້ສລາດຮູ້ ຣາຊສານພີນຄ່ອງ ຮູ້ຮີດເບື້ອງ
ຄອງເຖົ້າແຕ່ປະຖົມ ໃຫ້ຢູ່ໃກ້ ຣຽງຣາດຣາຊາ ຢູ່[1]ໃນພະວັງຕັດ
ແຕ່ງຄວາມຄວນແທ້ ຊຸບອຸ່ນໃຫ້ແຕ່ງຕັ້ງ ຣາຊວັງຢູ່ພາຍຫຼັງ
ຕັດແຕ່ງຄອງຄຳພິດ ໃພ່ໄທຊຸບຂ້າ ເປັນຜູ້ພິຈານແຈ້ງ ຕວງ
ຕາຕັດແຕ່ງ ບໍ່ໃຫ້ຫຼົງລ່ານ້າງ ດູແນ້ງແນ່ນຄອງ ທຸກຄ່ຳ
ເຊົ້າ ເຝົ້າບາດບົວສີ ຄອງໃດດີ ແຕ່ງແປງຕາງເຈົ້າ ເມື່ອນັ້ນ
ພຼະຈິ່ງຄຶດຮ່ຳຮູ້ ເຖິງອ່ອນທັງເຈັດ ກໍ່ໄປມີສາວສນົມ ຢູ່ເປັນ
ເມັຽເຖົ້າ ເຈົ້າກໍມາລ່ຳປ່ຽມ ຝູງອອກຣູຊີ ກໍບໍ່ມີພໍສິນ ລູກຕົນ
ພໍສ້ຽວ ເທດວ່າພິວຄຳເຫຼື້ອມ ສເນີກາດຳກ່ຳ ທັງເລົ້າປາກ
ຕ່ຳຕັ້ງ (ປາກພ່ຳ) ເປັ້ນຕາປາກທົວ ແຕ່ນັ້ນເຂົາຈິ່ງມາເລືອກ
ເລັ້ນ ຮູສຶວລອງດູ ໂສນໄວມີພິວສາງ ເພດໄທງາມລ້ວນ ອັນ
ວ່າເຈັດນາງໄດ້ ສົມພຼະອົງນ້ອງພີ່ ກັນແລ້ວ (ຕັ້ງວ່າ) ງາມ
ສະລ້າຍ ສາວຟ້າເກີງກັນ (ກໍຫາກ) ອໍຣະທວຍເນື້ອ ຄືວກ່ອງ
ອົງສນິດ ເກສາຂຽວ ແຕ່ງນິນໃບຟ້າ ຍາມເມື່ອນາງເຊືອດ
ຊ້າຍ ຫຼຽວເຫຼືອກຄອງຄົນ ກໍຫ່ອນເປັນສາທານ ເພດສເລົາ
ສວັບຟ້າ ພິວພາງໜ້າ ງາມເຊີບເຊີງຮູບ (ຕັ້ງວ່າ) ງາມ

---

(໑) ຢູ່ໃນພະວັງຕັດ ຄວນເປັນຣາຊະວັງຕັດ

ສະແລ້ນ ສົມພ້ຽງເພດພຣະອິນ ແທ້ແລ້ວ ອັນວ່າຣອງ ໆ ແກ້ມ
ວັນຜິວໃສສ່ອງ ເປັນທີ່ຫຼິງລ່ຳໄດ້ ປາກແກ້ວໜ່ວຍດີ ຍາມ
ເມື່ອມາຣິແຍ້ມ ຫຸມຫົວຂາບປາກ (ເປັນທີ່ໃຈຫຼຸດຫຼົ້ນ ພໍ່
ລົ້ມທ່າວເຊ ແທ້ແລ້ວ ຄວນແກ່ເຈົ້າແກ່ນແກ້ວ ຊົມນາຄບາງ
ແພງ ຜູ້ນຶ່ງຊື່ວ່ານາງນາຄເອື້ອຍ ໂສມສີງສາວສວັນ ໃຫ້ຊຸນ
ລໍຊົມປະການ ກ່ອນສອງສົມແກ້ວ ຜູ້ນຶ່ງຊື່ວ່ານາງແອດນ້ອຍ
ສົມສິ່ງນາງແມນ ໃຫ້ແກ່ບຸດຕາຕົນ ບໍ່ເມືອງພະລານພຸ້ນ
ຜູ້ນຶ່ງຊື່ວ່າອຸຣິດສ້ອຍ ໂສມສະອາດເພິ່ງອິກ ໃຫ້ແກ່ເຈົ້າຈຸສວາງ
ສົມ ແຜນຊົມນາງແກ້ວ ອັນວ່ານາງອານ[1]ສ້ອຍ ໂສມງາມ
ສີສະອາດ ໃຫ້ແກ່ລູກພຣະເຈົ້າ ກຸມານນ້ອຍໄສພົງ (ສ່ວນວ່າ
ນາງໄອ່ໃຫ້ ເປັນນຶ່ງງົວອິນ) ທຽມນາຄານ ປູ່ເຜືອແຜງຝັ້ນ
ກໍຫາກພໍ່ກັນແລ້ວ ທັງສອງສເມີພາກກັນແລ້ວ ອັນວ່າແພງ
ມາດໃຫ້ ນາທ້າວລູກຂຸນ (ລົກກົນ) ຜູ້ນຶ່ງຊື່ວ່ານາງລຸນໃຫ້
ເປັນເມັຽເຈັດເຈື່ອງ[2] ຈິງແລ້ວ (ອັນວ່າສອງແຈ່ມເຈົ້າ ງາມ
ຍ້ອຍບິງຂຽນ) ຖັດນັ້ນຈິ່ງແຕ່ງຕັ້ງ ອາມາດມົນຕີ ໃຫ້ແກ່ເຈັດ

(໑ ນາງອານສ້ອຍ ນາງແຫ່ງວ່າຂວັນສ້ອຍ

(໒) ເຈັດເຈື່ອ ຄວາມຈິງແມ່ນ ເຈັດເຈືອງ

ກຸມານ ລູກພຣະອົງມີນ້ອຍ ຝູງໃດຈັກຄວນເປັນຂ້ອຍ ອາສາ
ຫັຖບ ໑ ອົງນັ້ນ ກໍຈຶງໃຫ້ເຂົ້າມານັ່ງໃກ້ ຕີນເຈົ້າປໍ່າລື ກັບ
ແລ້ວ ອັບວ່າຝູງແກ່ນກ້າ ຮ້ອຍພວດມິນດິນ ໃຫ້ຖືພົນອິນເສິກ
ປໍ່າລືພາບໜ້າ ຝູງໝູ່ເຊື້ອຄົນຮູ້ ຮຽນຮີດຄອງເມືອງ ໃຫ້ເຂົ້າ
ມາເອົາການ ແຕ່ງແປງຕາງເຈົ້າ ຝູງຈັກເປັນໄພ່ນ້ອຍ ແຫນ
ແຫ່ພູບານ ກໍດີ ປົດຕາປັນ ຊູ່ຄົນທັງຄ້າຍ ແຕ່ນັ້ນສະພັ່ງພ້ອມ
ນ້ອຍໜໍ່ທັງເຈັດ ເຂົາກໍເອງຊຸລີນົບ ພໍ່ວິນຫູບບາດ ພຣະກໍ
ຊົມຊື່ນຕ້ານ ຈາທ້າວຊູ່ຄົນ ນັດນີ້ເຮົາຈັກແປງເມືອງໃຫ້
ສູຂວາງເຮືອງຮຸ່ງ ປູກອ່ອນນ້ອຍ ສເວີຍສ້າງສືບເມືອງ ພໍ່ແລ້ວ
ເຮົາກໍໂດຍດັ່ງພຣະພໍ່ເຈົ້າ ຟ້າຄືນແຖນຫຼວງ ມີຄໍາສອນ ສັ່ງ
ເຮົາມາສ້າງ (ພຣະໃຫ້ມາສືບສ້າງ) ເມືອງລຸ່ມດີ ໆ ທ່າເປັນ
ຄຸນ ກໍ່ປຸນປອງເກື້ອ ເຮົາຈັກອຸພິເສກໃຫ້ ເປັນຍອດຊົມພູ
ແທ້ແລ້ວ ຝູງໝູ່ເສນາຟັງ ຊູ່ຄົນປະນົມນົ້ວ ເຈົ້າກໍເອົານໍ້າ
ແກ້ວ ມາໃສ່ໂດຄໍາ ກໍຈຶງເອົາກຸມານ ຊູ່ຄົນມາພ້ອມ ກັບລູກ
ສະໃພ້ ນາງນາດເຈັດສາວ ເອົາມາມອບ ຊູ່ນາງບໍາທ້າວ ແຕ່
ນັ້ນເຈົ້າຈຶງຫວຍເອົານໍ້າ ຄັນທີໂສງໂສດ ຫົກໃສ່ມີແຈ່ມເຈົ້າ
ບາທ້າວຊູ່ຄົນ ແລະມາ ເຈົ້າກໍໂອວາດໃຫ້ ນິທານພໍ່າພອຍ

ສອນ ເໝືອນດັ່ງອິນໂອຍພອນ ແກ່ຣັດສີປາງນັ້ນ ຟັງເປີບຸດ ຣາດແກ້ວ ນາມໜໍ່ທັງເຈັດ ພໍ່ເອີຍ ພໍ່ຈັກວາງເວນເມືອງ ແຈກປັນເປັນເຈົ້າ ຍາມເມື່ອພໍ່ຫາກສະເດັດມາສ້າງ ຊົມພູ ໃນທີບເຮົານີ້ ແຖນກໍສອນສັ່ງໄວ້ ຍາມນັ້ນບອກມາ ແທ້ແລ້ວ ພໍ່ຈັກໃຫ້ລູກແກ້ວ ໄປແຕ່ງບູແປງ ພໍ່ແລ້ວ (ໃຫ້ສູທັງເມືອງ ຫລວງ ນັ່ງປອງເປັນເຈົ້າ ນາມກະສັດເຊື້ອ ແຖນເທິງລົງສືບ) ໃຫ້ເຈົ້າເປັນເອກທ້າວ ທັງສ້າງສືບເມືອງ ພໍ່ທ້ອນ ຍາມໃດໄດ້ ເປັນພຍາສເວີຍຣາດ ເມືອງນັ້ນ ຢ່າໄດ້ອາເພດຮ້າຍ ໂກທາ ກົວໂກດເຄັນ ແທ້ຕາຍ (ອັນນຶ່ງຢ່ານຽດຂ້າ ແຂງຂືນຊາວເມືອງ ເຂົາຈັກຕຽນຂວັນຫົວ ຫຸ່ມຣໍໂຮມປ້ອຍ) ອັນນຶ່ງຢ່າໄດ້ທຳໃຈ ສັ້ນ ເອົາຍາວເບື້ອນໂພດ ດີດາຍ ເມືອງຈິ່ງກວ້າງ ນາໄດ້ສ່ວຍ ໄຮ ພໍ່ແລ້ວ ອັນນຶ່ງຢ່າໄດ້ຕີພູ້ຮູ້ ທິສຣາດຄອງທັມ ນັ້ນເນີ ໃຫ້ ມີຂັນຕີອົດ ໂທດເຂົາຂຸນຂ້າ ອັນນຶ່ງຢ່າໄດ້ອ້າງດາບກ້າ ຂ້າ[1] ທ່ານຈິບຫາຍ ນັ້ນເນີ ຢ່າໄດ້ຕາມໃຈຕົນ ຮ່ວກະທຳຄອງ ຮ້າຍ ໃຫ້ຄ່ອຍຄຶດດີແທ້ ຫາໂທດຄຸນໃນ ນັ້ນເນີ ເຮົາກໍຈິ່ງທຳ ກັນ ເມື່ອພິຈານແຈ້ງ ໃຫ້ຄ່ອຍຮັກໜຸ່ມເໜົ້າ ຝູງໝູ່ສາວ

---

(໑) ຂ້າທ່ານຈິບຫາຍ ບາງບ່ອນວ່າເຊົາທ່ານຈິບຫາຍ, ບາງບ່ອນວ່າ ສາທອນຈິບຫາຍ.

ສບິນ ຈິ່ງໃຫ້ໃຈໃນດີ ແກ່ເຂົາຝູງນັ້ນ ແມ່ນວ່າຝູງໄພ່ນ້ອຍ ລູກແຫ່ງຊາວເມືອງ ກໍດີ ຢ່າໄດ້ມີໃຈບຽນ ບຽດຍິງຄົນນ້ອຍ ນັ້ນເນີ ອັນວ່າແພວຍິງນີ້ ມີໃຈອັນອ່ອນ ຈິງແລ້ວ ເຂົາບ່ອມ ປ້ານ ກົວເຈົ້າແຜ່ນດິນ ແຫ້ດາຍ ອັນນີ້ປົດຕາເຈົ້າ ແຖນ ຫຼວງຟ້າຄືນ ສອນສັ່ງໄວ້ ຍາມນັ້ນເພື່ອຂວາງ ພໍ່ແລ້ວ ອັນ ວ່າປະຖົມມະກັບນີ້ ມີຍິງເກີດກ່ອນ ຈິງດາຍ ກໍຈິງແຜ່ອອກໄດ້ ຫຼາຍຕື້ຕົ້ນແຖນ ແຫ້ແລ້ວ ອັນວ່າມະຫາກະສັດເຈົ້າ ອົງໃດ ມັກບຽດ ຍິງນັ້ນ ອາວຸດຫອກງ້າວບໍ່ຫ່ອນກັ້ນ ເມືອງບ້ານ ໝິ່ນໝອງ ພໍ່ແລ້ວ (ຄຳນີ້ແຖນສັ່ງແຫ້ ດາວພໍ່ສະເດັດມາ ບຸດຕາເອີຍ ຊູ່ຄົນຈຳໄວ້ ຈິ່ງມີໃຈໃສເຫຼື້ອມ ຕາມຄຳກູສັ່ງ) ແຖນຫາກສັ່ງພໍ່ໄວ້ ສັນນັ້ນທ່ຽງຈິງ ແລນາ ຄັນວ່າໄປຢູ່ສ້າງ ສເວີຍຣາດເມືອງໃດ ກໍດີ ກໍໃຫ້ຈຳຄຳສອນ ພໍ່ເຕືອນເອົາໄວ້ ອັນວ່າຣາຊາເຈົ້າ ຂຸນບູຣົມມະຫາຣາດ ພຣະກໍເອົາເຄືອເຂົາ ກາດໃຫ້ ແປງດ້າມດາມແພນ ແປງເປັນສາມງ່າມໄວ້ ມີ ບອດຫາງກາງ ໃຫ້ແກ່ກຸມານຕົນ ຊູ່ຄົນຕົນສ້ຽງ ແລ້ວເລົ່າ ປັນເມືອງໃຫ້ ຣາຊບຸດສເວີຍຣາດ (ຕາມທີ່ພຣະບາດເຈົ້າ ເຫັນແລ້ວວ່າຄວນ) ອັນວ່າຈຸສວາງເຈົ້າ ກຸມານແມນຫຼໍ່ ພຣະ

ກໍເອົາເກີບແກ້ວ ວາງໃຫ້ແກ່ບາ ແທ້ແລ້ວ ອັນວ່າໜ້າໃສ່
ໜ້ອງ ຊື່ວ່າສອນແພນ ໃຫ້ແກ່ໄສນົງພຣະ ລູກຕົນອົງແກ້ວ
ອັນວ່າໜັກໜ່ອນໜ້າ ງົວອິນບຸດຣາດ ກູນັ້ນ ກໍຈຶ່ງເອົາປາຍ
ໄຊ ດາບຄຳນວນໃຫ້ ສ່ວນວ່າດາບເຄືອນກ້າ ອັນປະເສີດຝັກ
ຫລາຍ ໃຫ້ແກ່ກຸມານພຣະ ລູກຕົນອົງນ້ອງ ອັນວ່າຣາງກອນ
ງ້າວ ດວງດີເຄິງຂບາດ ກູນັ້ນ ໃຫ້ແກ່ເຈັດເຈືອງເຈົ້າ ກຸມານ
ນ້ອຍໜໍ່ເມືອງ ພໍ່ແລ້ວ ບັດນີ້ຍັງເລົ່າງາສານຊ້າງ ນຸງຄຸນ
ກ້ຽວກອດ ພຣະເມືອງນັ້ນ ຄັນມັນຕາຍຖອດໄວ້ ພຍາເຈົ້າແບ່ງ
ປັນ ແທ້ແລ້ວ ອັນວ່າທ່ອນນຶ່ງໃຫ້ ຟ້າຄືນແຖນຫລວງ ພໍ່ເມື
ພຣະກໍຕັດງາຂວາ ສີປຸນປັນໃຫ້ ອັນວ່າທ່ອນກົກໃຫ້ ຂຸນລໍ
ຕົນພີ່ ຈຸສວາງໃຫ້ ຕົນນ້ອງທ່ອນກາງ ອັນວ່າທ່ອນສາມໃຫ້
ບຸດຣາດງົວອິນ ປົດຕາບັນ ຊູ່ຄົນວາງໃຫ້ ເພື່ອໃຫ້ເປັນຂອງ
ຄ້ຳ ແຂງເມືອງຄຸນຂບາດ ອັນວ່າເຈັດເຈືອງເຈົ້າ ເອົາໃຫ້
ທ່ອນປາຍ ຫັ້ນແລ້ວ ອັນວ່າຣາຊບຸດເຈົ້າ ກະສັດຕາຍັກໃຫ່ຽ
ພຣະອົງນັ້ນ ກໍຫາກເປັນໜໍ່ເຊື້ອ ນານໃຫ້ແມ່ດຽວ ແທ້ແລ້ວ
ເປັນລູກເທວີແກ້ວ ນິມມະພາລາຕົນພີ່ ອັນວ່າຜິວຜ່ອງໜ້າ
ງາມນ້ອຍນຶ່ງຂຽນ ແທ້ແລ້ວ ບັດນີ້ຍັງແຕ່ລູກແກ່ນແກ້ວ ນາງ

ນາດອີກແຕງ ພໍ່ນີ້ ບັງມີສານກຸມານ ແມ່ຄຽງປານແຕ້ມ ກໍ
ຈິ່ງເອົາງາຊ້າງ ປັນເປັນສານທ່ອນ ກິກເລື່ອຍ[1]ແລ້ວ ປາຍ
ໃຫ້ບີ່ເນືອງ ກ່ອນທ້ອນ ອັນວ່າໄສພິງເຈົ້າ ເອົາທ່ອນທາງກາງ
ນັ້ນເນີ ລິກກິນເອົາ ທ່ອນປາຍປັນໃຫ້ ຖັດນັ້ນເຈົ້າຈິ່ງເອົາ
ໜ່ວຍແກ້ວ ອັນຂອດໂຮງຄຳ ດີແກ່ເນືອງ ໆ ໃສ ສ່ອງງາມ
ເງົາແກ້ວ ອັນວ່າໜ່ວຍປັດທຳມະຣາດເຫຼື້ອມ ໃຫ້ແກ່ຂຸນລໍ
ພໍ່ເນີ ໜ່ວຍນີ້ໄວຍະກາແຖນ ປູ່ປັນມາໃຫ້ ໜ່ວຍນຶ່ງຊື່ວ່າ
ປັດທັມມະຣາດເຫຼື້ອມ ແສງສິງດາວັນ ດັ່ງນັ້ນ ປັນໃຫ້
ກຸມານນາ ບີ່ເນືອງຍາລ້ານ ໜ່ວຍຊື່ວ່ານຸກດາເຫຼື້ອມ ພິວ
ເງີນລຽງຫຼໍ່ ໜ່ວຍນັ້ນພຍານາກໄດ້ ມາໃຫ້ສ່ວຍແຖນ ວ່າ
ດາຍ ໜ່ວຍນີ້ໃຫ້ແກ່ເຈົ້າ ນານໜໍ່ຈຸງສວາງ ຫາກແມ່ນ
ຂອງເພງພຣະ ພໍ່ວາງເວນໃຫ້ ໜ່ວຍນຶ່ງຊື່ວ່າເພຊຣາດ
ເຫຼື້ອມ ພິວຜ່ອງບີດບານ ໜ່ວຍນີ້ອີສູນແບງ ບໍ່ຄອບດູ
ໄດ້ ໃຫ້ແກ່ໄສພິງເຈົ້າ ມະຫານາມນ້ອຍໜໍ່ ພຣະພໍ່ໃຫ້ນາ
ທ້າວຊື່ນບານ ໜ່ວຍຊື່ວ່າມະຫານິນພ້ຽງ ພຣະແຂໄຂໃສ
ສ່ອງ ແຖນກໍຫວນລູບໄລ້ ປະນິມນີ້ວສິງມາ ແຫ້ແລ້ວ ໜ່ວຍ
ນີ້ໃຫ້ແກ່ງົວອິນທ້າວ ສິນງາມຜູ້ປະເສີດ ພໍໃຫ້ເປັນເຄື່ອງຄ້ຳ

---

(໑) ກິກເລືອຍແລ້ວ ຕາມສະບັບເດີມວ່າ ກິກເຫຼືອແລ້ວ

ຄຸນສ້າງສືບເມືອງ ແທ້ແລ້ວ ອັນວ່ານິພຣັດ[1]ແກ້ວ ວັນໃສ
ແສງສ່ອງ ແກ້ວອັນນີ້[2]ງາມໄສດໄວ້ ເວນໃຫ້ຊູຄົນ ໜ່ວຍນັ້ນຊື່
ວ່ານຸກຄຳແກ້ວ ແສງໃສສຸດທະບົງ ອັນນີ້ແກ້ວແຕ່ຟ້າ ດົນ
ເຈົ້າປູ່ແຖນ ແທ້ດາຍ ທັງຢຳໃຫ້ ສິນໄວເຈັດເຈືອງ ສຸດທີ່
ງາມເລີດລ້ຳ ຄວນທ້າວຂອດແຫວນ ແທ້ແລ້ວ ແລ້ວເລົ່າສຸບ
ໃສ່ນີ້ວ ເຈັດເຈືອງບາບຸນ ສິນໄວຫວຍ ໃສ່ນີ້ງາມຍ້ອຍ ບາ
ບຸນທ້າວ ວັນທາທູນບາດ ໄຫວ້ພໍ່ເຈົ້າ ຈອມຊ້ອຍທີ່ເຊງ
ພຣະກໍຮັກຮູບແກ້ວ ສຸດທະບົງອະວິໄສ ບຸນເຮືອງພຣະ ຊົ້ນ
ຊົມດອມເຈົ້າ ແຕ່ນັ້ນພຣະກໍປັນຂອງແລ້ວ ບໍຣະບວນທຸກສິ່ງ
ເຈົ້າຈິ່ງສອນລູກສະໃພ້ ນາງແກ້ວຊູຄົນ ຟັງເດີລູກສະໃພ້ ນາງ
ນາດທັງເຈັດ ພໍ່ເອີຍ ຢ່າໄດ້ທຳການໜັກ ໃສ່ດົນອັນຮ້າຍ
ເນີ້ພໍ່ ຄັນວ່າພຣະຫາກປູກແຕ່ງໃຫ້ ເປັນຣາດເທວີ ເມື່ອໃດ
ໃຫ້ຄ່ອຍມີໃຈຫວານ ຕໍ່ສາວສນົມນ້ອຍ ພຣະຫາກອາບັດໃຫ້
ເປັນອາຈານສອນສັ່ງ ເຂົານັ້ນ ເຈົ້າຈິ່ງສອນສັ່ງແທ້ ຄຳຮູ້ໃຫ້
ແກ່ເຂົາ ຢ່າໄດ້ລວນຄຳສອນ ພຣະບາດອີງເປັນເຈົ້າ ພໍ່ເນີ

---

(໑) ນິພຣັດແກ້ວ ສະບັບເດີມວ່າ ນັດພາກແກ້ວ, ນົບພາກແກ້ວ

(໒) ແກ້ວອັນນີ້ງາມໄສດໄວ້ ເດີມວ່າ ງາມໄສກໄວ້, ຫຼືວ່າງາມໃຊດໄວ້

ຍາມເມືອຕືນແຕ່ເຊົ້າ ລຸກກ່ອນພູມີ ເມື່ອໃດ ນາງຈິງບົວຣະ
ບັດຄອງ ແຕ່ງແປງປຸນໄວ້ ມີທັງໂພຊະນາເຂົ້າ ອາຫານປີ້ງ
ຈີ ກໍດີ ນາງຈິງຕົກແຕ່ງໄວ້ ພາເຂົ້າເຄືອງສເວີຍ ນັ້ນດາຍ
(ຢ່າໄດ້ຄາເຄີກຮ້າງ ຣາມເຈົ້າພ່າງເພົາ) ຍາມໃດພຣະສເວີຍ
ເຂົ້ານ້ຳ ແລ້ວຢ່າຖຸລາໄລ ເມືອໃດ ຄັນຫາກບໍ່ຣະບອນບາຍ ກໍ
ຈຶງກິນລຸນເຈົ້າ ເພາະວ່າບຸນເຮືອງໄທ້ ກະສັດຕິຍັກໃຫ່ງ ຈິງດາຍ
ນາງຢ່າໄດ້ໂອດອ້າງ ສະຫາວເທົ້າລືນຄອງ ພໍ່ເນີ ອັນວ່າຄໍາກື
ລ້ານ ໃຫ້ເອົາໄປຫານແຈກ ຢ່າໄດ້ອໍາຄີໄວ້ ຕົວເທົ້ບໍ່ດີ ພໍ່ແລ້ວ
ອັນວ່າຝູງນາງນ້ອຍ ໂຮງຫຼວງຫຼາຍໝື່ນ ກໍດີ ກໍທໍ່ຕັ້ງຕໍ່ເຈົ້າ
ບຸນກວ້າງແກ່ນສານ ພໍ່ແລ້ວ ອັນນຶ່ງຢ່າໄດ້ມີຄໍາເຂັ້ນ ໃຫ້ແປງ
ໃຈອັນຊື່ ພໍ່ດາວ ຮັກໃຫ້ລ້ວນ ຊູ່ຄົນເທົ້າກໍຈິງຫຸມ ພໍ່ແລ້ວ ອັນ
ນຶ່ງຢ່າໄດ້ຄ້ານ ຕໍ່ບູກທໍເໜ ນັ້ນເນີ ຈິງໃຫ້ມີໄມຕີ ໄພ່ໄທທັງ
ຄ້າຍ ອັນນຶ່ງຢ່າໄດ້ຟັງຄວາມເບື້ອງ ຝູງຄົນສັບສໍ່ ນັ້ນເນີ ໃຫ້
ເຈົ້າຖາມຖີ່ຖ້ວນ ເຖີງຮ້າຍແລດີ ແທ້ດາຍ ຄັນຫາກຮູ້ແຈບແຈ້ງ
ເຖີງທີ່ອັນກະທໍາດັ່ງນັ້ນ ຄວາມຜິດມີພຽງໃດ ໃຫ້ໄດ້ຕອງຕາ
ຖ້ວນ ຢ່າໄດ້ຫວນທໍາຮ້າຍ ແຮງແຖມຖົມໃສ່ ຄັນຫາກໂທດບໍ່
ຮ້າຍ ຄວນໃຫ້ສັ່ງສອນ ຊອບດາຍ ຢ່າໄດ້ແຜງ ໆ ດ້ານ ຈານາ

ເຊີ່ງຕ່າງ ພຣະບາດຂ້າ ເສັ່ງແຫ້ບໍ່ນານ ພໍ່ແລ້ວ ອັນນຶ່ງຂ້ອຍ
ຊ່ວງໃຊ້ ຮ້ອງບາດບົວຣະບັດ ກໍດີ ຈົ່ງໃຫ້ປານີເຂົາ ໂຜດ
ຜາຍຝູງໄຮ້ ເຂົານັ້ນທໍ່ຫາກອາສັບບ້ອນ ສົມພານທຸກສິ່ງ ຈົ່ງ
ແລ້ວ ອັນວ່າສິ້ນຜ້າເສື້ອເຂົາຫາກໄຮ້ ເອົາໃຫ້ທອດທານ ບຸນ
ກໍຫາກໄດ້ ເມື່ອໜ້າກໍຮຸ່ງເຮືອງ ພໍ່ແລ້ວ ອັນນຶ່ງຄຳຣະຫັດນັ້ນ
ໃນໂຮງພຍາໃຫ່ງ ກໍດີ ຢ່າໄດ້ເອົາອອກຕ້ານ ໄປເວົ້ານອກໂຮງ
ນັ້ນເດີ ອັນນຶ່ງຄວາມນອກຄຸ້ມ ຂ່ວງພຣະຣາຊວັງຫຼວງ ກໍດີ
ຢ່າໄດ້ເອົາມາໂຮງ ຮອດຫູພຣະອົງເຈົ້າ ອັນນຶ່ງສົມບັດເຈົ້າ
ຂອງແພງໃຫ້ຈຳຈື່ ໄວ້ເນີ ຄັນວ່າພຣະຫາກເຕືອນໃຫ້ໄດ້ ມາແຫ້
ຫ່ຽວພລັນ ແຫ້ຕາຍ ອັນນຶ່ງວາຈາຖ້ວນ ຄວນຕອງດູກ່ອນ
ບໍ່ຄວນຫູນກໍ່ເຈົ້າ ຢ່າຟ້າວກ່າວຖແລງ (ກາບນີ້) ຄວນໃຫ້
ແລ້ວ ໃນອາດຍາດິນ (ຊາດທີ້) ຄວາມຊາມໃຜ ບໍ່ຫ່ອນຫວນ
ຫູນເຈົ້າ ອັນນຶ່ງໃຫ້ເລືອກໄວ້ ຝູງໝູ່ມີພຍາ ນັ້ນເນີ ອັນວ່າ
ກັລຍານີ- ສິບາງໃຫ້ຈຳໄວ້ ອັນນຶ່ງໃຫ້ມີໃຈແຜ່ກວ້າງ ທົ່ງ
ສລາດທັນສິບ ພໍ່ເນີ ຈົ່ງໃຫ້ມີໃຈບຸນ ຄ່ຽນຄົມແຄວນຮູ້ ຄວນ
ທີ່ວິກແຕ່ງໄວ້ ຍັງແມ່ສາວສນົມ ບານຈັກທຳການໃດ ໃຫ້ອື້
ບິນເຂົາເຈົ້າ ອັນນຶ່ງຢ່າໄດ້ມີໃຈລ້ຽວ ໂລພາລັກໂລບ ເອົາເນີ

ໃຫ້ເຈົ້າເສັງສືເຖົ້າ ຝູງຮູ້ຈິງກະທຳ ບັ້ນເນີ ຄັນວ່າຝູງບາງເຖົ້າ
ມາລາວ່າຊອບ ຄວນແລ້ວ ຄັນວ່າໂທດຮ້າຍແທ້ ຄວນແລ້ວ
ຈິ່ງກະທຳ ແທ້ດາຍ ຢ່າໄດ້ບັກໂທດຮ້າຍ ພອຍຖູ່ຊາວໂທ ບັ້ນ
ເນີ ຢ່າໄດ້ຫາຄວາມເສີນ ໃສ່ກັບການຮ້າຍ ນິຄວນແທ້ ຫັ້ນ
ບຽມພິດຮີດ ຫຼອນວ່າໄພຍແລ່ນຕ້ອງ ເຖິງເຈົ້າຊົ້ວມອນ ບໍ່ຮູ້
ອັນນຶ່ງອິງຄະແກ້ວ ຝູງຣາຊເທວີ ກໍດີ ຢ່າໄດ້ຕິຕຽນເຂົາ ບໍ່ດີ
ເນືອໜ້າ ອັນນຶ່ງຢ່າໄດ້ທຳການຮ້າຍ ປານາຕິບາດ ແມ່ນວ່າ
ຈຳທ່ານຂ້າ ຝູງນີ້ບໍ່ຄວນ ອັນນຶ່ງສິນບັດເຈົ້າ ຣາຊາພູວະບາດ
ກໍດີ (ຫຼືທາກ) ຂອງຜູ້ອື່ນແທ້ ຢ່າໄດ້ລັກເອົາ ແທ້ດາຍ
ແມ່ນວ່າທິສຣາດລົ້ນ ຂອງຝາກມາຖວາຍ ກໍດີ ຢ່າມີໃຈໂລ
ພາ ໂລບອຳເອົາໄວ້ ອັນນຶ່ງຢ່າໄດ້ຄຶດຫຼີ້ນຊູ້ ຄິດຈາກຈອມຜົວ
ແທ້ເນີ ແມ່ນວ່າຝັ່ງກາງຄືນ ກໍຢ່າຍິນດີດ້ງ ອັນນຶ່ງຢ່າໄດ້ຄຶດ
ລ່າຍລ້ຽວ ຄິດຈາກຣາຊາ ຄວາມໃດນີ້ ກໍຈິ່ງຈານີ້ແທ້ ຢ່າ
ໄດ້ຈອງຫອງດ້ານ ຄຳສລັບງອນແງ່ ແມ່ນວ່າເຈົ້າບໍ່ລ້ຽວ ດັນ
ນ້ອຍບ່ອມວາຍ ແທ້ດາຍ ອັນນຶ່ງຢ່າໄດ້ກິນຢາເຫຼົ້າ ສຸຣາການ
ຖ່ອຍ ບັ້ນເນີ ເກງຈັກຕ້ອງໂທດຮ້າຍ ຕາຍຊ້າຊາກດາວ ບັ້ນ
ແລ້ວ ອັນນຶ່ງເຖິງເນື່ອຣະດູຟ້າ ດ້ງມາປີໃໝ່ຍາມໃດ ແລ້ວຈິ່ງ

ເດີນໄພ່ນ້ອຍ ກະທຳສ້າງໄຮ່ນາ ນັ້ນເນີ ອັນນຶ່ງເຖິງເມື່ອຍາມ ສນຸກຫຼີ້ນ ນະໂຫສົບຊົມຊື່ນ ກໍດີ ເຈົ້າຈິ່ງເດີນໄພ່ນ້ອຍ ເຂົາ ຫຼີ້ນຊື່ນຊົມ ພໍ່ເນີ ອັນນຶ່ງແມ່ນວ່າທຳບຸນສ້າງ ການສິນທານ ແຈກ ກໍດີ ກໍຈິ່ງເດີນໄພ່ນ້ອຍ ທານໃຫ້ຊູ່ຄົນ ແທ້ດາຍ (ໃຫ້ ພາເຂົາກໍ່ສ້າງ ສົມໂພດໂພທິຍານ) ກໍຈັກສະບາຍບານ ຮຸ່ງ ເຮືອງເມືອໜ້າ ໃຜູ້ບົວຣະບັດໄດ້ ຄອງທັມຝູງກ່າວ ມານີ້ ຈັກໄດ້ເມືອເກີດກ້ຳ ເມືອງຟ້າຟາກສວັນ ພຸ້ນແລ້ວ ຈັກສນຸກ ຍິ່ງພ້ຽງ ໃນໂລກທັງສາມ ຕລອດນິຣະພານພອງ ເຂດຍືນ ຍາວກວ້າງ ແຕ່ນັ້ນພຣະບາດເຈົ້າ ທີຣາຊເອັງໄບ ເຈົ້າຈິ່ງ ວາງມືເສັງ ຈາກໄຕຄຳຫັ້ນ ເມືອນັ້ນສະພູ່ພ້ອມ ຝູງໝູ່ເສນາ ເຂົາກໍມີໃຈຊົມ- ຊື່ນບານດອມເຈົ້າ ກໍຈິ່ງໃຫ້ອອນນ້ອຍ ຂຶ້ນສູ່ ຫໍໄສງ ແລ້ວຈິ່ງທວຍຄັນທີທົດ ລັ້ງລົງລິນແກ້ວ ເມືອນັ້ນ ທົມ ໆ ນ້ຳ ຄັນທີໄຫຼລັ້ງ ສະພັ້ງພ້ອມ ຝູງຮູ້ກ່າວພອນ ທໍ່ນ ພຣະບາດເຈົ້າ ທັງຣາຊມານດາ ບອກແກ່ຊຸນເສນຂຽນ ລານຄຳປົງໃຫ້ ອັນວ່າເບື້ອງຂອບທໍ້ ເອົາແຕ່ໜອງແສທີພຸ້ນ ໃຫ້ແກ່ໄສມພາວພຣະ ທີເມືອງບາວ້ານ ອັນວ່າຝູງຜ່ານພົ້ນ ບານທ່ຳຈຸງສວາງ ພໍ່ນັ້ນ ໃຫ້ໄປກິນເມືອງແກວຫຼວງ ໂບດ

ຍາວພາຍພຸ້ນ ອັນວ່າປ່ອຍລ່ອຍໜ້າ ນ້ອຍອ່ອນໄສພິງ ໃຫ້
ໄປກິນເມືອງຍວນຍາວ ປູ່ສເວີຍສິມສ້າງ ອັນວ່າງິວອິນນ້ອຍ
ພຣະຣາຊບຸດຕາ ພໍ່ນັ້ນ ໃຫ້ໄປກິນເມືອງສິດາ ໂຍດທິຍາພາຍ
ໃກ້ ອັນວ່າບົວຣະພາກ້ຳ ເມືອງພວນວັນອອກ ພາຍພຸ້ນ ໃຫ້
ແກ່ເຈັດເຈືອງເຈົ້າ ໄປສ້າງສືບເມືອງ ແຫ້ດາຍ. ອັນວ່າລິກກິມ
ແກ້ວ ກຸມານແມນຫຼໍ່ ກູນັ້ນ ໃຫ້ໄປຢູ່ຄຳເກີດພຸ້ນ ບາຫ້ວຢູ່
ກະເສີນ ແຫ້ແລ້ວ ອັນວ່າຣາຊາເຈົ້າ ຊຸບບູຣິມຕິນປະເສີດ
ພຣະກໍປູກລູກແກ້ວ ໄປສ້າງສືບເມືອງ ພຣະກໍທຳຕາມເຈົ້າ
ແຖນຫຼວງຟ້າຄືນ ໂດຍອາດໄຫ້ ບໍ່ມີໃຫ້ລ່າຄຳ ແຫ້ນາ ເມືອ
ນັ້ນພຣະບາດເຈົ້າ ຊ້ຳເລົ້າສອນເຂົາ (ຕາມຄວາມແຖນ ບອກ
ມາຈິງແຈ້ງ ພັນລະບາຖ້ວນ ແຖນເຫີງຫວນສັ່ງ) ເຂົາກໍກົ້ມ
ຂາບແລ້ວ ຫູນບົ້ວປູ່ສະລອນ ແຫ້ແລ້ວ ຟັງເປີກຸມານນ້ອຍ
ນານໜໍ່ຫັງເຈັດ ຟັງເປີ ແມ່ນວ່າເປັນຄົນໃນສິງສານ ກໍຢ່າ
ເປືອງຄຳລ້ຽວ ອັນວ່າເປັນຄົນນີ້ ໃຫ້ຈຳສິນຢ່າປນາດ ພໍ່ເປີ
ບຸນຈິງມາສັ່ງໃຫ້ ສິມເຈົ້າກໍຈິງງາມ ພໍ່ແລ້ວ ອັນວ່າຈຳສິນ
ໃຫ້ ບໍຣິສຸດຈເມີແວ່ນ ຈິງດາຍ ຜລະກໍຈິງກວ້າງ ຂວາງແຫ້
ເພື່ອສິນ ນັ້ນແລ້ວ ອັນວ່າສິນຫານນີ້ ນຳຕົນທຸກເມືອ ເຮົາໄດ້

ເມືອເກີດກ້ຳ ເມືອງຟ້າເພາະທານ ນັ້ນແລ້ວ ຟັງເນີເຈົ້າໜໍ່
ແກ້ວ ອັນເກີດກັບອົກ ພໍ່ເອີຍ ອັນວ່າຄອງຣາຊາ ຈື່ຈຳເອົາໄວ້
ອັນວ່າສົມບັດນີ້ ປຸນປັນເຈັດສ່ວນ ພໍ່ແລ້ວ ສ່ວນນຶ່ງໄວ້ ເບິ່ງ
ແກ້ວແຫ່ງຕົນ ນັ້ນທ້ອນ ເພື່ອໃຫ້ເປັນປໂຍດໄວ້ ກຸມຣາຊບູຣີ
ຫຼອນວ່າມີໄພຍໄພ ເກີດເປັນພາຍໜ້າ ອັນວ່າສ່ວນນຶ່ງໄວ້ ບໍ່
ຣະໂພກກັບຕົນ ນັ້ນເນີ ຢ່າໃຫ້ເປັນທາສາ ທ່ານຊີລືທັງຖ້າຍ
(ຄັນວ່າເຮົາຈົນແຕ້ນ ພາຍສິນສ້ອຍຕ່ຳ ສັນນັ້ນ ຢຽວວ່າທອຍ
ເທດຖ້າຍ ເຂົາທ້ຽງຮຸ່ມຮໍ ພໍ່ແລ້ວ ສ່ວນນຶ່ງໄວ້ແຈກໃຫ້ ນາງ
ນາດສາວສນົມ ໃຫ້ເຂົາມີຄຳສຸກ ເພິ່ງບຸນບາທ້າວ ກັບທັງ
ຝູງຂ້ອຍຂ້າ ໃຊ້ສ່ອງຕົນນີ້ ກໍດີ ພຣະຈິງຣາຊທານປັງ ແກ່
ເຂົາຕາມຖ້ວນ ສ່ວນນຶ່ງທານຫອດໃຫ້ ສັງໂຄຕົນປະເສີດ ຄັນ
ວ່າບໍ່ມີສັງຄະແທ້ ຄວນໃຫ້ແກ່ວັດສີ ຊອບແລ້ວ ແມ່ນວ່າ
ບໍ່ຣີສັດສີແທ້ ຝູງມີບຸນມາກ ກໍດີ ຄັນວ່າສິນຫ້າເປັນທີ່
ຈັ້ງ ຄວນເຈົ້າຫອດທານ ແທ້ດາຍ ອັນນຶ່ງຄວນແຈກໃຫ້ ອາ
ມາດເສນາ ແທ້ດາຍ ເຂົານັ້ນຝູງອາສາ ແກ່ຕົນຕາງເຈົ້າ ອັນ
ວ່າສ່ວນນຶ່ງໄວ້ ຕອບແຂກຫູຕາ ພໍ່ເນີ (ອັນນັ້ນນໍຣະຄາຄວນ
ຄ່ອຍປອງປຸນສ້າງ ທາງບາວເທົ້າ ຫຼຽວເຖິງຖາມຂ່າວ
ກັບດາຍ ເພື່ອໃຫ້ເປັນປໂຍດໄວ້ ເມືອໜ້າກໍຈິ່ງຄວນ ພໍ່ແລ້ວ

ເພື່ອໃຫ້ເປັນຣາຊບັນນາການແທ້ ຄຸນຄວນຄອງປະເສີດ ເຂົາ
ປູ່ແຖນຕ່າງບ້ານ ມາເຝົ້າແຫ່ງພຣະອົງ ແທ້ແລ້ວ ຄັນວ່າເຂົາ
ຖວາຍທ້າວ ຣາຊາພູວະນາດ ເມື່ອໃດ ເຈົ້າຄວນຄຸນເຄື່ອງໃຫ້
ສົມແທ້ແກ່ເຂົາ ແທ້ດາຍ ອັນວ່າສ່ວນນຶ່ງໄວ້ ວາງທອດຄົນຂໍ
ກໍດີ ຝູງຂັດສົນຂືນໃຈ ໃຫ້ເຂົາສຸກສະບາຍປ້ອນ ຫາກຈັກນໍາ
ຕົນຂວ້ານ ສິງສານສຸດຍອດ ເຣວແລ້ວ ກໍຫາກເປັນທີ່ແລ້ວ
ນິຣະພານພຸ້ນ ຟາກສວັນພຸ້ນແລ້ວ ຄັນວ່າເຈົ້າພໍ່ມ້ຽນ ມໍຣະ
ນາດຕາຍໄປ ເມື່ອໃດ ບຸດຕາເປັນ- ພໍ່ດຽວກັນແທ້ ຈົ່ງໃຫ້ມີໃຈ
ກວ້າງ ຜາຍແຜ່ຫາກັນ ນັ້ນເນີ (ແມ່ນວ່າທໍາການໃດ ຊ່ອຍ
ກັນກອບເກື້ອ ຍາມເມື່ອມີການຫຼ້ຽງ ນະໂບໃນທ້າວທ່ານ ໃດ
ນັ້ນ ໃຫ້ຄ່ອຍໄປແຕ່ງບ້ານ ເມືອງໃຫ້ຮຸ່ງເຮືອງ ພໍ່ເນີ ບັດນີ້ພໍ່
ຈັກອະທິຖານໄວ້ ເປັນຄອງເສງສ່ຽງ ໃຫ້ແກ່ລູກແກ່ນແກ້ວ ກຸ
ມານນ້ອຍຊູ່ຄົນ ແທ້ແລ້ວ ແມ່ນວ່າບຸນໃຜມີຫຼາຍແທ້ ສົມພານ
ເພງມາກ ກໍຫາກຍັງຈັກໄດ້ ເມືອງບ້ານທີ່ຂວາງ ແທ້ແລ້ວ
ຄັນວ່າບຸນໃຜນ້ອຍ ສົມພານໃຜບໍ່ແກ່ ດັ່ງນັ້ນ ຫາກຈັກໄດ້ປະ
ເທດນ້ອຍ ຕາມຖ້ານແຫ່ງບຸນ ນັ້ນແລ້ວ ພໍ່ກໍປຸນເມືອງໃຫ້ ກຸ
ມານນູແກ່ງຖ້ວນແລ້ວ ຕາມແຕ່ບຸນບານເຈົ້າ ໃຜນັ້ນຫາກຊີ້

ເປັນ ນັ້ນທ້ອນ ຈິ່ງໃຫ້ທິສຣາດແທ້ ຢ່າຂຶ້ນເທິງກັນ ນັ້ນເນີ (ເມືອງໃຜມັນ ແຕ່ງແປງປຸນສ້າງ) ອັນວ່າເມືອງໃຜໄວ້ ເມືອງມັນຢ່າໄດ້ລ່າ ແທ້ດາຍ ໃຫ້ເຮັດຕາມຮີດເກົ້າ ບູຮານຕັ້ງແຕ່ຫຼັງ ແທ້ເນີ ອັນນຶ່ງເມືອງພີ່ໃຫ້ ເປັນໃຫຍ່ສົມສັກ ຢ່າໄດ້ພາໂລຫຼາຍ ບາດເຮວເມືອງນ້ອງ ເວນຈັກເຖິງຕໍ່ໜ້າ ວິບາດຈິບຫາຍ ແທ້ດາຍ (ກັມຈັກມາທັນຖອງ ເມື້ອລຸນພາຍຊ້ອຍ ເທາດທີ່ຕິນເປັນອ້າງ ປຸນເປັນເໝືອນພໍ່) ເວນຈັກບຳສິ່ງໃຊ້ ຕາມເຈົ້າເມື້ອລຸນ ບໍ່ຮູ້ ຄັນວ່າເມືອງນ້ອງບັ້ງປູ່ສ້າງ ສເວີຍຣາດຄອງທັນ ໃຫ້ໝັ້ນມີຄຳແພງ ຂ່າວສານເຖິງອ້າຍ ອັນວ່າໄພ່ພີ່ດິກເມືອງນ້ອງ ຢ່າເອົາໃຫ້ສິ່ງຄືນ ກັນເນີ ໄພ່ນ້ອງດິກທິ້ງອ້າຍໃຫ້ຄືນໃຫ້ແກ່ກັນ ແທ້ດາຍ ແມ່ນວ່າຝູງໄພ່ນ້ອຍ ຂ້ອຍປູ່ເມືອງໃດ ກໍດີ ບໍ່ຄວນຂັບອາສາ ຕ່າງເມືອງມາອ້າງ ເມືອງໃຜອະໂສກ(1)ໂລກຮ້າຍ ໃຫ້ຊ່ອຍກັນປອງ ຊອບດາຍ ຢ່າໄດ້ໂລກັນເສັງໂອດ(2)ປຸນໄປຊ້ຳ ອັນນຶ່ງຢ່າໄດ້ໄປແຜ່ຖ້ອຍ ຄຳແພດພອນຜິດນັ້ນເນີ ຢ່າໄດ້ໝາຍເຫຄິວ ບາດຊິງເມືອງບ້ານ ແມ່ນວ່າຄຳ

---

(໑) ອະໂສກໂລກຮ້າຍ ຕົ້ນສະບັບວ່າ ໂຊກໂລກຮ້າຍ ຫຼື ໂສກໂລກຮ້າຍ

(໒) ໂອດປຸນໄປຊ້ຳ ຄວນເປັນ ໂສກປຸນໄປຊ້ຳ

ແປກເວົ້າ ໃຫ້ຄ່ອຍບັນເທົາ ແທ້ດາຍ ຢ່າໄດ້ຟັງຄວາມເຂົາ ໃພ່ເມືອງມາໄຫວ້ ອັນນຶ່ງຢ່າໄດ້ໄລພາພົ້ນ ເດັງເຂົາງຳເງືອດ ນັ້ນເນີ ຢ່າໄດ້ອ້າງດາບກ້າ ເຣວຂ້າຂິ້ນເທາງ ແທ້ດາຍ ລູກໃຫ້ ສືບລູກໄອ້ ເຖິງເຊັ້ນຫຼານເຫຼັນ ພຸ້ນເນີ ໃຫ້ເຂົາລຳດັບເຖິງ ຮອດກາຍເມື່ອໜ້າ ໃຫ້ປະກອບດ້ວຍ ຄອງຣາຊໄນຕີ ຈົ່ງໃຫ້ ເຫັນແກ່ຄຳເພງກັນ ຢ່າໄລລືມເຊື້ອ ດາບຕໍ່ເທົ້າ ເຖິງເຂດ ນະທາກັບ ຈົ່ງໃຫ້ການຄຳເຮົາ ພໍ່ສອນສັນນີ້ ອັນວ່າລູກແກ່ນ ແກ້ວ ເມື່ອເຊັ້ນຫຼານເຫຼັນ ກໍດີ ຫຼານຈົ່ງໃຫ້ສືບຫຼານ ຮອດ ປາຍພາຍຊ້ອຍ ຈົ່ງໃຫ້ຍືນຍາວໝັ້ນ ສເວີຍເມືອງບຸແດ່ງ ນັ້ນ ເນີ ຈົ່ງໃຫ້ຮ້ອຍເອັດເມືອງເປັນອອກທ້າວ ນາບ້ອມສ່ວຍໄຮ ເຈົ້າເນີ ດັ່ງວ່າໃຜຫາກພາໄລລົ້ນ ຕັນຫານັກມາກ ເມື່ອໃດ (ບາກໄດ້ຈຳທ່ານໃຫ້ ນາບ້ອມສ່ວຍດີນ ສັນນັ້ນ ບັງເລົ້າເພລາ ດ້ວຍ ໂວຫານແຂງຂິ້ນ ເອົານັ້ນ ກໍໃຫ້ກາຍຈາກເໜົ້າ ນໍຣະ ນ້ຽນນອດຈິມ ຫັ້ນທ້ອນ ດັ່ງບັງດັບກໍທຳຮ້າຍ ບໍພິບດີກທິ້ງ ເມື່ອໃດນັ້ນ ມັນຫາກສັບຕໍ່ຊ້າງ ຊຶບຂ້າຍາດເຣວ ທ່ານນັ້ນ ຈົ່ງໃຫ້ເຖິງທີ່ຮ້າຍ ວິນາດຈິບຫາຍຫັ້ນທ້ອນ ແມ່ນວ່າປີເດືອນ ມັນ ກໍຢ່າຍືນຍາວໝັ້ນ ດັ່ງວ່າມັນປູກໄມ້ ຢ່າໃຫ້ປົ່ງເປັນໃບ

ນັ້ນເນີ ແລ້ວໃຫ້ຄຳຕາຍເຖິງ ທ່ຽວຫັນຈິນໄກ້ ແມ່ນວ່າມັນ
ຫາກແຫງນໜ້າຂຶ້ນ ເມືອບິນໃຫ້ຟ້າຜ່າ ມັນເນີ ຄັນວ່າໄປປ່າ
ໃຫ້ ເສືອຄ້ຽວຄາບກິນ ນັ້ນເນີ ຄັນມັນຫຽວຫາງນ້ຳ ຊິລທີ່ຫຽວ
ທ່ອງ ກໍດີ ໃຫ້ເງືອກຂ້າ ມັນແທ້ທ່ຽງຈິງ ຫັ້ນທ້ອນ ອັນວ່າ
ບາບໜື່ນຊັ້ນ ເຖິງຊົ່ວສາຣະນອນ ນັ້ນເນີ ແມ່ນວ່າປີເດືອນມັນ
ປ່າຢືນຍາວກວ້າງ ແມ່ນວ່າມີຂອງຄ້າ ເຕັ້ນສະເພົາຂຶ້ນລ່ອງ
ກໍດີ ກໍໃຫ້ຕົກຕ່ຳຄ້ອຍ ເສັຽຊ້ຳຊົ່ວວາ ຄັນວ່າໃຜຜູ້ຍັງຂົ່ມດ້ວຍ
ລວງໂລບຕັບຫາ ກໍດີ ມັນຫາກກາຍຄຳສອນ ທີ່ພຣະອົງປັນ
ໃຫ້ ຕາບກໍ່ເທົ້າ ເຖິງເຊັ່ນຫຼາບເຫຼັນ ກໍດີ ສືບໄປເຖິງ ຮອດ
ຕາຍເມືອໜ້າ ອັນວ່າວິບາກຮ້າຍ ຄອງຖ່ອຍ (ໃຫ້ເຖິງ) ມັນ
ໃຫ້ມັນດັບຄົວເຮືອນ ລູກເມັຽມັນຊ້ຳ ອັນນຶ່ງໄພຍພຍາດຮ້າຍ
ບາດບໍ່ຢ່າທ້າງຝີ ກໍດີນັ້ນ ໃຫ້ມັນເປັນຫິດຝີ ທົ່ວຄີງທັງເນື້ອ
ອັນນຶ່ງໃຫ້ມັນເກີດຝີປະອາກພ້ອມ ທັງກາກຫິນຫວຍ ໃຫ້ມັນ
ເຕັມຕົນຕົວ ແຫ່ງມັນຈິງແທ້ ອັນນຶ່ງໄພຍໄພຮ້າຍ ສິບປະ
ການເຖິງຖືກ ມັນເນີ ໃຫ້ມັນເປັນທຸກໄຮ້ ຖືກະເບື້ອງຄວ່າຂໍ ນັ້ນ
ທ້ອນ ແມ່ນວ່າທຳສັງແທ້ ຢ່າເປັນຫັຽງຈັກສິ່ງ ໃຫ້ມັນດັບ
ຊົ່ວຊ້ຳ ເສັຽແທ້ທ່ຽງຈິງ ຫັ້ນທ້ອນ ແມ່ນວ່າມັນຕາຍໃຫ້ ຈົມ

ຈຸນອະເວຈີ (ໃຫ້ມັນລົງນອນພຸ່ມ ໜ່ວຍຫວງຣົນຮ້ອນ ພັທ
ກັບປັ໌ນການກາຍມາໃໝ່ ແມ່ນວ່າພຣະເຈົ້າເກີດມາກລັ໌ບ ຢ່າ
ໃຫ້ພໍ້ ພົບເຫັນ ແທ້ແລ້ວ ຟັງເອົາຫ້ອນ ພໍ່ບອກສອນສູ ຣາ
ຊາປົງຄຳສອນ ຊູ່ລວງເລີຍແລ້ວ ເມື່ອນັ້ນເຈັດແຈ່ມເຈົ້າ ແປະ
ໃສ່ຈອມຫົວ ເຂົາກໍຟັງຄຳສອນ ຈື່ຈຳເອົາໄວ້ ແຕ່ນັ້ນຂຸນບູຣົມ
ເຈົ້າ ລືກຽນກົງໂລກ ບັງປູ່ສ້າງ ເມືອງບ້ານບໍ່ນານ ພຣະກໍ
ນໍຣະບາດມ້ຽນ ລົດຊີ່ວເມືອພົນ ເສັ້ງແລ້ວ ພຣະກໍໄປຕາມກັນ
ແຫ່ງດິນພາຍຟ້າ ກັບທັງສອງສີເຈົ້າ ນາງນາດເທວີ (ພາ
ກັນນໍຣະບານຸດ ສູ່ສວັນເມືອງຟ້າ) ເມື່ອນັ້ນຣາຊບຸດເຈົ້າ ທັງ
ເຈັດອົງປະເສີດ ເລີຍເລົ່າເລີກຊາກມ້ຽນ ກະສັດເຈົ້າຊູ່ດິນ ແທ້
ແລ້ວ ບັດນີ້ພຣະກະສັດໃຫ້ ທັງສາມພໍ່ແມ່ ເລີຍເລົ່າຂຶ້ນ
ເມືອຟ້າທີ່ສະຖານ ແທ້ແລ້ວ ເທື່ອນີ້ເຮົາຈັກໃຫ້ປະຕິບານໄວ້
ໃນມະໂນອັນຊອບ ຈິງດາຍ ຍາມເມື່ອໄປປູ່ສ້າງ ເມືອງບ້ານ
ແຫ່ງເຮົາ ເຮົາກໍໂດຍດັ່ງພຣະບາດໃຫ້ ທານແກ່ຝູງເຮົາ ດັ່ງ
ນັ້ນ ແມ່ນວ່າເມືອງໃຜມີ ຄ່ອຍກະທຳພຽນສ້າງ ທໍ່ວ່າໃຫ້ປະ
ກອບດ້ວຍ ຄວາມຮັກໄມຕີ ນັ້ນເນີ ໃຫ້ມີບັນນາການມາ- ຂານ
ເຖິງກັບແທ້ (ໃຫ້ມັນ) ຕາມຄອງເຊື້ອ ປະເພນີຢ່າຂາດ ເຮົາ

ເອີຍ ໂດຍດັ່ງພຣະພໍ່ເຈົ້າ ສາບົດແກ່ເຮົາ ນັ້ນເນີ ຄັນວ່າໃຫ້ ປະຕິບານແລ້ວ ບໍຣະບວນທຸກສິ່ງ ພຣະພີ່ນ້ອງ ຈາຕ້ານຕໍ່ ກັນ ແທ້ແລ້ວ ແກ່ນັ້ນຂຸນລໍອ້າຍ ເມືອງຊວາເອົ້ນສັ່ງ ຝູງໝູ່ ນາງໜຸ່ມເໜົ້າ ນາມເຊື້ອຊູ່ຄົນ ຫັ້ນແລ້ວ ຄ່ອຍປູ່ດີເປີແຖວ ເຖືອນໄມ້ ບ້ານເກົ້າບຸຣົມ ກູເອີຍ ກູຈັກເຈັ່ຽຣະການເທີງ ຫ່າງ ໄກກັນແລ້ວ ກູກໍຫຼີງສິນສ້າງ ສົມພານພຽນປໂຍດ ພາຍພຸ້ນ ພີ່ຈັກໄປຜ່ານພົ້ນ ນະຄອນແກ້ວທີ່ຊວາ ກ່ອນແລ້ວ ເມື່ອນັ້ນ ເຈົ້າບີ່ລ້ານ ເອົ້ນສັ່ງເສນາ ທັງຊາວເມືອງ ທີ່ເຮົາແຮງເຕົ້າ ຢູ່ ດີເປີນາທົ່ງນ້ອຍ ແຖນຫຼວງລົງປູກ ກູເອີຍ ຣຽມຈັກເຈັ່ຽຣະ ຈາກເຈົ້າ ຈອມຊູ້ຍພາກໄປ ກ່ອນແລ້ວ ປູ່ດີເປີນັກສນົມແກ້ວ ສົມສິ່ງອິນຂຽນ ຣຽມເອີຍ (ເຮົາຈັກເຈັ່ຽຣະການໄກ ພາກພອນ ພາຍພີ້ ຈັກໄດ້ໜີໄປໜ້າ ລາອວນນ້ອງພີ່ ກ່ອນແລ້ວ) ຣຽມ ຈັກໄປຢູ່ສ້າງ ເມືອງກວ້າງທໍ້ຫຼວງ ພຸ້ນແລ້ວ ຖັດນັ້ນຈຸງສວາງ ເຈົ້າ ຈອມເມືອງຈັກຈາກ ໄປແລ້ວ ເຈົ້າກໍ) ເອົ້ນສັ່ງບ້ານ ທັງຂ້ອຍໄພ່ພົນ ຄ່ອຍປູ່ດີເປີເມືອງສົມສ້າງ ບູຣີໃຫ່ຍເຮືອງສົມ ຣຽມເອີຍ ຣຽມຈັກໄກບູຣີ ຖ່ຽວ(1) ສເວີຍເມືອງບ້ານ ກ່ອນແລ້ວ ຢ່າໄດ້ລືມໂສມທ້າວ ບາຄານໄປປ່ຽວ ແດ່ເນີ (2) ຍາມເມື່ອບຸບແກ່

(໑) ຖ່ຽວສເວີຍເມືອງບ້ານ ເດີມວ່າ ຈັກຈາກໄກບູຣີປູ່ສເວີຍເມືອງບ້ານ

(໒) ຍາມເມື່ອບຸບແກ່ກ້າຊີໄປແພ້ພານນານ ເດີມວ່າ ຍາມເມື່ອສົມພານ ນີ້ຊີສາວນານຝູງຮ້າຍ

ກ້າ ຊິໄປແພ້ພາບນານ ກ່ອນແລ້ວ ເມືອນັ້ນອົງອາດຂຶ້ນຂີ່ຊ້າງ ພັງງາແກ້ວໂກດ ເຂົາກໍແຫນແຫ່ເຈົ້າ ໄປພ້ອມຣົດນຳ ຖ້ວນ ໄສພົງເຈົ້າ ຈອມເມືອງຈັກຈາກໄປແລ້ວ ບາກໍເອີ້ນສັ່ງບ້າ-ປຸງເຕົ້າປູ່ດີ ແດ່ເນີ ເຈົ້າຈົ່ງປູ່ດີເປີຫ່ວຍໃຫ່ງນ້ຳ ປຸງຫລວງເຕົ້າ ໃຫ່ງ ກູເອີຍ ກູຈັກໄປປູ່ສ້າງ ເມືອງບ້ານທີ່ບວນ ພຸ້ນແລ້ວ (ມັນ ຫາກເປັນຖິ່ນກ້ຳ ຫີນແຫ່ງພາຍເໜືອ ໄກແດນເຮົາ ໂບດ ບາວບູເບັ້ນ) ໂດຍກອນກ້າ ຫົງສາຊຽງໃໝ່ ຈິງແລ ຫລອນວ່າ ບຸນມາກໄດ້ ສເວີຍສ້າງສືບເມືອງ ບໍ່ຮູ້ ຖ້ວນນັ້ນງົວອິນເຈົ້າ ເອີ້ນ ສັ່ງຊາວເມືອງ ກັບທັງເສນາຫານ ໄພ່ພົນຈອມເຈົ້າ ຄ່ອຍປູ່ ດີເປີອົງພຣະເຈົ້າ ຂຸນບູຣົມກົນປະເສີດ ກູເອີຍ (ຂ້ອຍກໍເປັນ ລູກເຈົ້າ ແຫນເຊື້ອສືບພຣະວົງ ແທ້ແລ້ວ ເທື່ອນີ້ບຸນແບ່ງໃຫ້ ໄດ້ພາກນະຄອນຫລວງ ແລເດ ລູກຈັກໜີໄປໄກ ເຜົ່າພົງພັນ ເຊື້ອ) ຈັກໄດ້ເມືອປູ່ສ້າງ ເມືອງໄກປະເທດອື່ນ ຈິງແລ້ວ ຂ້ອຍ ກໍເມືອປູ່ປັ້ງ ເມືອງກວ້າງໂບດທີກາ ກ່ອນແລ້ວ ຖ້ວນນັ້ນລົກກົມ ເຈົ້າ ຊຽງຄົມເຈັ້ງຣະຈາກໄປແລ້ວ ທ້າວກໍເອີ້ນສັ່ງເໜົ້າ ບານ ເຊື້ອຊູ່ຄົນ ປູ່ດີເປີຝູງຊາດເຊື້ອ ບານເຫບຊາວແດນ ຂ້ອຍເອີຍ ຂ້ອຍຈັກໄປປູ່ສ້າງ ຊຽງຄົມຄຳເກີດ ພາຍພຸ້ນ (ຈັກໄດ້ຣານ

ຮູບເຈົ້າ ຊາວຟ້າຫ່າງໄກ ແລນໍ ຖັດນັ້ນເຈັດເຈື້ອງເຈົ້າ ເອີ້ນ
ສັ່ງຊາວເມືອງ ທັງແບວບານ ເຜົ່າພົງພັນເຊື້ອ ປູ່ດີເປີເຈົ້າພີ່
ນ້ອງ ທັງຫຼາຍຝູງໄພ່ ຮຽນເອີຍ ຮຽນຈັກໄປລືບສ້າງ ເມືອງ
ບ້ານກ່າງສະຖານ ກ່ອນແລ້ວ ອັນວ່າເມືອງໄກພຸ້ນ ຊຽງຂວາງ
ເປັນທີ່ເພິ່ງ ຮຽນແລ້ວ ຈິ່ງໄດ້ເອີ້ນສັ່ງເຈົ້າ ສຽງຊ້ອຍຊູ່ຄົນ
ຫັ້ນແລ້ວ ເມື່ອນັ້ນຊາວເມືອງພ້ອມ ຖວາຍພອນສຽງສນັ່ນ
ອັນວ່າເຈັດແຈ່ມເຈົ້າ ຟັງແຈ້ງຊູ່ຄົນ ນັ້ນແລ້ວ ໄປດີເປີພຣະພີ່
ນ້ອງ ສິນສ່ອງທັງເຈັດ ຂ້ອຍເອີຍ ຂໍໃຫ້ໄຊໂຍແຂງ ຜານ
ນາງຂາມຢ້ານ ໃຫ້ໄດ້ໄປເປັນທ້າວ ຂຸນນາຍໃນໂລກ ເຮົານີ້
ຮ້ອຍເອັດປະເທດທ້າວ ນາບ້ອມສ່ວຍໄຣ ແດ່ທ້ອນ) (ຈິ່ງໃຫ້
ອຳນາດກ້າ ແດນໂລກເຂົາຂາມ) ໃຫ້ເປັນທີ່ລືຊາ ທົ່ວນະຄອນ
ທັງດ້າວ ການະຄູດັ້ງ ນຳມາສືບສ່ວຍ ທຸກປະເທດທ້າວ ທູນ
ນ້ອມປູ່ສະລອນ ນັ້ນເນີ ອັນວ່າໂສມພາວທ້າວ ຂຸນພົງຊ້າງໃຫຍ່
ກັບທັງນາງກິ່ງແກ້ວ ເມັຽນ້ອຍນີ້ງເມືອງ ພຣະນັ້ນ ບຸນກໍມີ
ມາກລົ້ນ ພົ້ນຂອບເຂົາຂາມ ຈິ່ງໃຫ້ເພງສົມພານ ເກີ່ງເງິນ
ພາຍຟ້າ ແຕ່ນັ້ນພອນກ່າວແລ້ວ ບໍຣະບວນສົມປໂຍດ ຖ້ວນ
ແລ້ວ ເຂົາກໍລາຈາກເຈົ້າ ເມືອຫ້ອງແຫ່ງເວີນ ຫັ້ນແລ້ວ ເມື່ອ

ນັ້ນພຣະຫຼິງໜ້າ ນ້ອຍອ່ອນທັງເຈັດເຮົາໜັ້ນ ພຣະກໍວອຍໆ ລຸກ ພາກກັນໄປໜ້າ ມີທັງເສນາຂ້າ ຕາມຕີນພຸອະບາດ ຊູ່ ຄີນຊູ່ທາກດຸ່ງດັ້ນ ເດີນຜ້າຍຕ່າງສະຖານ ແທ້ແລ້ວ ເລີຍເລົ້າ ຮອດດ່ານດ້າວ ເມືອງໃຫ່ຽຍູປຸນ ກໍຈິ່ງເປັນຣາຊາ ແຕ່ງເມືອງ ເປັນເຈົ້າ ອັນວ່າເຈັດແຈ່ມເຈົ້າ ໄປຮອດເມືອງໃດ ກໍດີ ກໍຫາກ ຖືເດືອນຈຽງ ສືບມາສັນນີ້ ອັນວ່າຂຸນລໍເຈົ້າ ໄປຮອດເມືອງຊວາ ກໍດີ ກໍຫາກຖືເດືອນຈຽງ ແຕ່ເດືອນເຖິງນັ້ນ ແຕ່ນັ້ນເຈົ້າຍີ່ລ້ານ ຮອດແທ່ງໜອງແສ ກໍດີ ກໍລວດຖືເດືອນຈຽງ ນີ້ເດີມອັນນັ້ນ ເມ່ນວ່າຈຸງສວາງເຈົ້າ ໄປຮອດເມືອງພະກັນ ກໍດີ ກໍລວດເຖິງ ເດືອນຈຽງ ເມື່ອພຣະອົງສະເດັດເຂົ້າ ອັນວ່າໄສພົງເຈົ້າ ໄປຮອດ ເມືອງບວນ ກໍດີ ກໍລວດເອົາເດືອນຈຽງ ຮອດເມືອງເດືອນນັ້ນ ເມ່ນວ່າງົວອິນໄປຮອດຫ້ອງ ໂບທິບາເມືອງໃຫ່ຽ ກໍດີ ພຣະກໍ ຖືເດືອນຈຽງ ດັ່ງດຽວກັນນັ້ນ ອັນວ່າເຈັດເຈືອງເຈົ້າ ໄປຮອດ ເມືອງພວນ ກໍດີ ກໍເລົ້າຖືເດືອນຈຽງ ເມື່ອພຣະອົງສະເດັດເຂົ້າ ອັນວ່າລິກກິນແກ້ວ ໄປຮອດຊຽງຄິນ (ຄຳເກີງ) ກໍດີ ລວດເລົ້າ ຖືເດືອນຈຽງ ຮອດເມືອງເດືອນນັ້ນ ພຣະວິງຈ່ຳກອນຕ້ານ ເດືອນຈຽງຖືຕ່າງ ກັນດາຍ ອັນນີ້ຄຳພຣະເຈົ້າແມ່ນຫຼ້າ ສອນ ໄວ້ສືບມາ ແທ້ບາ ແຕ່ນັ້ນພຣະມະຫາກະສັດເຈົ້າ ສອງພຣະ

ອົງຕົນປະເສີດ ພຣະສເວີຍຣາດສ້າງ ເມືອງກວ້າງຮຸ່ງເຮືອງ ອັນວ່າຂຸນລໍເຈົ້າ ກະສັດຕາວົນພີ້ ພຣະສເວີຍລ້ານຊ້າງ ບູ ສ້າງປູ່ກະເສີນ ແທ້ແລ້ວ ພຣະກໍຄຶດເຖິງນ້ອງ ເຈົ້າເຈືອງພົງ ກະສັດ ຕົນສເວີຍເມືອງພວນ ຜ່ານນະຄອນເປັນເຈົ້າ ເຫາດ ວ່າສເນຫານ້ອງ ພຣະອົງແພງຮັກຍິ່ງ ເຈົ້າກໍມັກໃຄ່ເຫັນໜ້າ ນ້ອງ ແພງລ້ານທີເຊັງ ແທ້ແລ້ວ ເມື່ອນັ້ນພຣະຈິ່ງໃຊ້ ຂຸນ ໃຫ່ງກາງຕົນ ໃຫ້ໄປອາຫນາເອົາ ເຈົ້າເຈືອງມາຫາເຮົາທ້ອນ ແຕ່ນັ້ນເຂົາກໍໂດຍຄຳເຈົ້າ ຈອມຫົວໃຊ້ຊ່ວງ ເຂົາກໍໄປຮອດເຈົ້າ ຈອມຊ້ອຍກ່າວກອນ ແທ້ແລ້ວ ເມື່ອນັ້ນມະຫາກະສັດເຈົ້າ ເມືອງພວນຕົນປະເສີດ ພຣະກໍສະເດັດຈາກຫ້ອງ ພົນລ້ານ ແຫ່ແຫນ ເລີຍເລົ້າໄປເຖິງເຈົ້າ ຂຸນລໍວົນພີ້ ຄັນວ່າໄປຮອດ ເມືອງລ້ານຊ້າງ ສະເດັດເຂົ້າບໍ່ນານ ເມື່ອນັ້ນຂຸນລໍເຈົ້າ ພາ ຕາວົນປະເສີດ ສະເດັດຈາກຫ້ອງ ມາຕ້ອນແຕ່ໄກ ແທ້ແລ້ວ ແລ້ວເລົ້າອວນພົນເຂົ້າ ເຖິງເມືອງນະຄອນຮາດ ເລີຍເລົ້າເຖິງ ທີ່ໃກ້ ໃນຫ້ອງເຖິງເມືອງ (ຄ້ອມຮອດທັ້ນ ທັນທີສົມຄວນ ໃຈ ກາງເມືອງ ບ່ອນມຸງຄຸນຄ້ຳ) ກໍຈິ່ງຈຳເຂົາສ້າງ ຫໍໄຊຫຼ້ງ ໃຫ່ງ ສອງກະສັດພີ່ນ້ອງ ເຊົາຫັ້ນຊື່ນຊົມ ແຕ່ນັ້ນອານາດ

ພ້ອມ ຝູງໝູ່ເສນາ ຊາວເມືອງມາ ເພີກບາສີເຈົ້າ ອັນວ່າ
ຊາວເມືອງກົ້ມ ທູນຂູລີບົບບາດ ສອງແຈ່ມເຈົ້າ ສະຖິດໄກ້ນັ່ງ
ຮຽງ ກໍຈຶ່ງຈາຖືກຖ້ອຍ ທີສາປະໂມກອາຈານ ສອງພຣະອົງ
ຄື- ຖູ່ພິມພາຍຟ້າ ເມື່ອນັ້ນຂຸນລໍເຈົ້າ ເມືອງຊວາຈາກ່າວ
ເຮົານີ້ເປັນພີ່ນ້ອງ ພົງເຊື້ອພໍ່ດຽວ ແທ້ແລ້ວ ບັດນີ້ເຮົາໄດ້ນັ່ງ
ບ້ານ ສ້າງປູ່ສເວີຍເມືອງ ນີ້ແລ້ວ ເມືອງຖູດລັດ- ລ່ຽງກັນດູໄກ້
ເຮົາຄວນປະກອບດ້ວຍ ໄມຕີປ່າຂາດ ເຮົາເອີຍ ໂດຍດັ່ງພຣະ
ເຈົ້າ ສາບິດນ້ຳແກ່ເຮົາ ນັ້ນທ້ອນ ອັນນຶ່ງເຮົາຄວນກົດໝາຍໄວ້
ແດນເມືອງຕິດກໍ່ ກັນນັ້ນ ໃຫ້ມັນເປັນເຂດໄວ້ ຢ່າໃຫ້ລ່າຄອງ
ຊອບແລ້ວ ແຕ່ນັ້ນຂຸນລໍພ້ອມ ຣາຊາເຈັດເຈື່ອງ ສອງພຣະ
ອົງເຈົ້າ ດອງດາກູເຂດ ອັນວ່າເມືອງພວນແລະລ້ານຊ້າງ
ໝາຍໄວ້ເຂດແດນ ເພື່ອໃຫ້ຕັ້ງປູ່ໝັ້ນ ເຖິງເຂດມະຫາກັບ
ສອງກະສັດປັນ ເຂດເມືອງສັນນີ້ ເຈົ້າກໍບໍ່ໃຫ້ລ່າມ້າງ ບັງເຂດ
ບຸຣີຣົມ ດັ່ງນັ້ນ ເພື່ອໃຫ້ເປັນຫລັກສືບ ເຊັ່ນບານແຫນເຊື້ອ
ອັນວ່າເຊັ່ນລູກໄວ້ ເມືອຮອດຫລານເຫລັນ ພຸ້ນແລ້ວ ລຳດັບ
ຫລ້ອນ ລ່ວງກາຍເມືອໜ້າ ອັນວ່າສອງກະສັດເຈົ້າ ຫລິງດູຈິ່ງ
ແຕ່ງ ພຣະກໍໃຫ້ຂຸນຫລວງທັງແປດນັ້ນ ໄປໝາຍໄວ້ເຂດ ເມືອງ

ລ້ານຊ້າງ ພວນໄວ້ເຂດແດນ ຕັ້ງແຕ່ນ້ຳຄານຂຶ້ນ ເຖິງພູເຂົາຫຼບ ພາຍພຸ້ນ ກໍຫາກຕັ້ງທີ່ນັ້ນ ຫຼັກໄວ້ເຂດເມືອງ ແທ້ແລ້ວ ແລ້ວເລົ່າຕັດໄຕ່ຂຶ້ນ ເຖິງພູເຂົາຫຼບ[1] ຂຸນທັງແປດຈຶ່ງຍັ້ງ ເຊົາຫັ້ນແຈກກັນ ສີ່ຂຸນໄປທາງໃຕ້ ໝາຍເຂດບູຣີເມືອງ ສີ່ຂຸນໄປທາງເໜືອ ຈຶຈຳໝາຍໄວ້ ຝູງໝູ່ໄປທາງໃຕ້ ຕັດໃສ່ພູຫວນທີ່ພຸ້ນ ຕັ້ງແຕ່ພູຫວນຕັດ ເລ່ງລິງໄປໃຕ້ ທັງແກວໃຕ້ ກັບແກ່ວຄອງລັດ ເລີຍເລົ້າລັດໃສ່ພູບາງບອນ ລວດກາຍໄປໜ້າກໍຈຶ່ງຮອດກ້າໃຕ້ ລິງລຸ່ມພູສູງ ເຂົາກໍໄປກະເທກະທຶງ ຄະວຶງວອນພາຍໃຕ້ ແກ່ນັ້ນໄປບ້ານດ້ວງ ລັດໃສ່ເມືອງກາຍ ເມືອງຊອງເຖິງບາງປາແຄ ກໍລ່ວງກາຍທັງລ້ານ ຖຶບນ້ອຍເທົ້າ ເຖິງເຂດບາຄີນ ລັດໃສ່ເມືອງພູຄັງ[2] ຮອດນ້ຳປູນພາຍພຸ້ນ ຕັ້ງແຕ່ລັດໃສ່ຊະເນ້ຍ ລິງໄປເຖິງງີ້ມຫຼວງນະທີນ້ຳ ແຕ່ນັ້ນເຂົ້າຫ້ວຍນ້ຳ- ງີ້ມຫຼວງວັງໃຫ່ງ ລັດໃສ່ພູທິງໄປ- ໄຕ່ນ້ຳນິວຂຶ້ນແຕ່ນັ້ນໄປເຖິງສະກາ ບ້ານທີນຄອນ ວັງແວດຊຽງຂ້ອຍຊຽງຄອນ ເທົ້າເຖິງໃຕ້ປາກຊວາ ລັດແຕ່ນັ້ນ ໄປຮອດແດນຊີບ[3]

---

(໑) ພູເຂົາຫຼບ [illegible]າງສະບັບວ່າ ພູເຂົາຫຼກ

(໒) ເມືອງພູຄັງ ບາງສະ[illegible] ວ່າ ເມືອງພ[illegible]

(໓) ໄປຮອດແດນຊີບ ບາງບ່ອນວ່າ ແດນຊຸບ ບາງບ່ອນວ່າ ແດນຂະເກົ່ມ

ໄປເຖິງສາຍພວນລາວ ຮອດຊຽງດອນພຸ້ນ ຕັດໃສ່ປ່ອງແກ້ວ ໃຕ້ ເຖິງພະນອມບ້ານກວາງ[1] ລັດແຕ່ນັ້ນ ເຖິງນ້ຳຊີດິງ ແຕ່ ຊີດິງເມືອເໜືອນັ້ນ ຕາມກະແສນ້ຳໃຫຍ່ ຮອດທີ່ຫີນໜ່ວຍຄີນ ກ່າວຮ້ອງ ໜອນເທົ່າເບ່ງນອນ ຫັ້ນແລ້ວ ແຕ່ນັ້ນໄປຈຸເທົ້າ ແດນເມືອງຄຳເກີດ ທີ່ພຸ້ນ ທີ່ນີ້ເປັນເຂດຫ້ອງ ຫີນໃຕ້ແຫ່ງ ເມືອງ ແທ້ແລ້ວ ຕັ້ງແຕ່ຫີນໜອນເທົ້າ ທ່າເພັງລັດໃສ່ ຮອດ ບອດນ້ຳ ຊຸມພູພຸ້ນພ່ຳໄກ ເມືອນັ້ນໄປເຖິງສາຍບອງນ້ຳ ປາງ ຫຼວງຫ້ວຍໃຫຍ່ ລັດໃສ່ພູນິວເບ່ງຂຶ້ນ ເມືອພູຊຽງດັ້ນດຸ່ງໄປ ນຳແຕ່ນັ້ນເບ່ງຂຶ້ນ ເບັດໃສ່ພູໄຊ ທີ່ນັ້ນໄປເຖິງພູ- ແສດດອຍ ດິງກວ້າງ ໄປຮອດພາດັບເທົ່າ ເຖິງຊຸນຫ້ວຍເລິກ ລັດລ່ອງ ນ້ຳ ເຖິງຫ້ວຍກາດຄາວ ເລີຍເລົ້າຂ້າມນ້ຳໂມ້ ຕັດໃສ່ພາ ຫຼວງ ຊຸນກໍໄປນຳນິວ ເບ່ງລີງພຽງບ້ານ ລ່ອງນ້ຳໂມ້ ເທົ້າ ຮອດສິບສວາງ ລັດໃສ່ນິວພູຫຼວງ ຜ່ແດນດິນກວ້າງ ແຕ່ນັ້ນ ໄປເຖິງແຄວັນ ເປວຫຼວງພູໃຫຍ່ ພາຍພຸ້ນ ແລ້ວຈິ່ງຕັ້ງໄຕ່ ຂຶ້ນ ດອຍນັ້ນໜ່ວຍຫຼວງ ຫັ້ນແລ້ວ ກໍຈິ່ງນຳນິວຂຶ້ນ ເຖິງ ແດນດອຍໃຫຍ່ ເລີຍເລົ້າລັດເບ່ງຂຶ້ນ ເຖິງເທົ້າປາກກວານ ແຕ່

---

(໑) ເຖິງພະນອມບ້ານເດດ ບາງບ່ອນວ່າ ບ້ານກວາງ

ນັ້ນເປັນເຂດຫ້ອງ ກົງຣາຊບູຣີ ແທ້ແລ້ວ ມັນຫາກມີຫີນກ້ຳ
ບົວຣະພາດາວັນອອກ ພາຍພຸ້ນ ກໍຫາກແມ່ນແດນເມືອງພວນ
ທີ່ພຣະອົງສເວີຍສ້າງ ອັນວ່າສີ່ຂຸນຂຶ້ນ ທາງເໜືອໝາຍເຂດ
ເມືອງນັ້ນ. ຕັ້ງແຕ່ພູເຂົາຫຼູບຫັ້ນ ໝາຍຂຶ້ນຝ່າຍເໜືອ ກໍ
ລວດເອົາແມ່ນ້ຳ ຄານຫຼວງເປັນເຂດ ຈິງແລ້ວ ຕາບຕໍ່ເທົ້າ
ເຖິງຫ້ວຍປາກກາວ ນຳແຕ່ນັ້ນ ເທົ້າຮອດສິບສາຍ ລັດໃສ່ສັນ
ບົວພູ ເນ່ງໄປພາຍໜ້າ ເມື່ອນັ້ນໄ·ເຖິງເທົ້າ ບົວພູຕົ້ນມ່ວງ
ທີ່ນັ້ນມີມ່ວງໄມ້ ລຳຕົ້ນໃຫຍ່ສູງ ແທ້ແລ້ວ ຕັ້ງແຕ່ກົກມ່ວງຂຶ້ນ
ເມືອເຖິງຮອດງ່າ ຊຸມນັ້ນ ສັງຂຍາວ່າໄວ້ ປະມານແທ້ຫ້າວາ
ຫັ້ນແລ້ວ ອັນວ່າລວງໃຫຍ່ໄດ້- ສີ່ອຸ້ມ (໑ ແທກເປັນວາ) ງ່າ
ຂອງມັນສອງອັນ ກໍເລົ້າເປັນສອງຊັ້ນ ງ່ານຶ່ງເປັນມ່ວງປ້ານ
ຣົດຣ່ວງຫອມຫວານ ຄືດັ່ງເທພາພຣະ ປູກແປງໝາຍໄວ້
ງ່ານຶ່ງດູລະການພ້ຽງ ຜາລາເຫຼືອງຫຼາກ ຫາກແມ່ນໝາກ
ມ່ວງເຂັ້ມ ຄຳແທ້ກ່ຽງຈິງ ແທ້ແລ້ວ ຄັນວ່າລັດຈາກນັ້ນ
ຫຼາຍລັ້ນອະຣັນຍາ ເຖິງທີ່ເມືອງຄຳຜົງ ຜ່ານພະນັງໄປໜ້າ
ແຕ່ນັ້ນໄປຮອດງ້ານ ບ່ມາວດພະລານພຽງ ຊຸນກໍເຣວຣັບເຖິງ
ເຖື່ອນໄພດົງກວ້າງ ເຂົາກໍລັດຫ້ວຍສຽບ ໄປໃສ່ເມືອງສັນ

ແລ້ວເລົ້າເຖິງສິບຊິວ ລ່ວງລົງນຳຫ້ວຍ ກໍຈິ່ງໄປເຖິງຫ້ວຍ ນາຫຼວງບ້ານຖິ່ນ ແຕ່ນັ້ນລົງຮອດຫ້ວຍ ເຫັນນ້ຳລ່ອງໄປ (ກໍຈິ່ງໄປເຖິງນ້ຳ) ເມືອງນອງນະທີໃຫຍ່ ພາຍພຸ້ນ ຊຸນກໍຊີ້ຮ່າງ ໃຫ້ ໝາຍໄວ້ເຂດດິນ ຫັ້ນແລ້ວ ຕາບຕໍ່ເທົ້າ ແດນເຂດເມືອງ ພະກັບ ຊຸນກໍກົດເມືອງໝາຍ ເຂດດິນພາຍພຸ້ນ ທີ່ນັ້ນເປັນ ເຂດຫ້ອງ ນະຄອນຣາດເມືອງພວນ ແທ້ດາຍ ອັນວ່າພາຍ ຫົນເໜືອ ທີ່ພະກັບເປັນເຈົ້າ ແຕ່ນັ້ນຂຸນຫານທ້າວ ກັບ ຕ່າວຄືນມາ ແທ້ແລ້ວ ແລ້ວກໍຖວາຍຄຳຄອນ ເຂດເມືອງທູນ ເຈົ້າ ເມື່ອນັ້ນຊຸນລໍພ້ອມ ກະສັດຕາເຈັດເຈືອງ ເຈົ້າກໍຈາຖືກ ຖ້ອຍ ຄະດີແມ້ງຕໍ່ກັນ ຫັ້ນແລ້ວ ອັນວ່າຂົງເຂດເມືອງລ້ານ ຊ້າງ ຊວາພວນພົມເຂດ ໃຫ້ຈີ່ແຈ້ງ ຈຳໄວ້ຊູ່ທາງຫັ້ນທ້ອນ ຈິ່ງໃຫ້ເປັນເຂດໝັ້ນ ເທົ້າຊົ່ວມະຫາກັບ ພຸ້ນແລ້ວ ໃຜຢ່າໃລ ພາຍຸງນ ລອບຊິງເມືອງບ້ານ ກັນເນີ ອັນວ່າເຊັ່ນລູກໄວ້ ເທົ້າ ເຊັ່ນຫຼານເຫຼັນ ກາຍຈາກຫຼານເຫຼັນໄປ ຮອດຫຼອນເປັນເຊື້ອ ດັ່ງວ່າສາຄະໂຣນ້ຳ ສມຸດຫຼວງເຂີນຂາດ ຍາມໃດ ແມ່ນວ່າ ຟ້າເບ່ນມ້າງ ດິນເປື້ນໂລກະທຣາຍ (ອັນບົງ) ດັ່ງວ່າສເມນລົ້ມ ອໍວະກາຍທັງໂລກ ເມື່ອໃດ ໃຜເກີດກັບໃໝ່ພຸ້ນ ຍາມນັ້ນກໍຈິ່ງ

ຫາຍ ຫັ້ນທ້ອນ ຍາມໃດກັບໄປ່ມ້າງ ຍັງປູ່ເຫັງອະຄາ ດັ່ງນັ້ນ
ໃຜຍັງເຫັງອະຄາຄົງ ໃຫ້ສືບເມືອງ- ເປັນເຈົ້າ (ໃຜກໍ) ຢ່າໄດ້
ມ້າງ ໃຫ້ລ່າຄຳກະສັດ ນັ້ນເນີ ໃຫ້ຄ່ອຍບົາຣະບັດເອົາ ດັ່ງຄຳ
ປະຖົມເຖົ້າ ໃຜຍັງພາໂລລົ້ນ ໄປຊູຊີງບາດເອົານັ້ນ ເຂົາຫາກ
ໃຫ້ລ່າມ້າງ ຄຳເວົ້າແຫ່ງຮາ ດັ່ງນັ້ນ ບັດນີ້ເຮົາມາປ້ອຍຄ່າໄວ້
ເຫົ້າຊົວສາຣະນອນ ນັ້ນທ້ອນ ຈົ່ງໃຫ້ເປັນດັ່ງປາເມົາເບື່ອ ເດີດ
ຊະແຄງຫາງພົ້ນ ອັນນຶ່ງໃຫ້ມັນດັບມອດມ້ຽນ ສ້ວນສິງດວງປີ
ນັ້ນເນີ ອັນວ່າອິນດາຍມັນ ເກີດແຖມມີນ້ອ ແມ່ນວ່າມັນ
ແຫງນໜ້າ ເມືອບົນໃຫ້ຟ້າຜ່າ ມັນເນີ ຄັນວ່າໄປປ່າໃຫ້ ເສືອ
ຖ້ຽວຄາບກິນ ຫັ້ນທ້ອນ ຄັນວ່າໄປທາງນ້ຳ ໃຫ້ເງືອກທໍ່ເຮືອ
ກິນ ມັນເນີ ອັນວ່າຄຳວາຍເຖິງ ຊູອັນຢ່ານ້ອຍ ດັ້ງແຕ່ເຊັ່ນລູກ
ພີ້ ໃຫ້ເມືອເຊັ່ນຫຼານເຫຼັນ ທີ່ພຸ້ນ ເຖິງຫຼານຫຼອນ ຮອດກາຍ
ເມືອໜ້າ ໃຜຢ່າໂລພາພົ້ນ ຈຳທ່ານເສັ້ງສົນ ນັ້ນເນີ (ເຫັນ
ແກ່ຄຸນພາຍໂດ ບຽດເຂົາຫັງນຫັ້ງ ເບງສະຫາວກ້າ ແຂງ
ກາຍເກີນຮີດ) ຢ່າໄດ້ອ້າງດາບກ້າ ຟັນຂ້າຂົມກັນ ນັ້ນເນີ
ແມ່ນໃຜ່ນ້ອຍດົກເມືອງໃຜໃຫ້ ປານີນຳສົ່ງ ຄັນຊ້າງມາຕົກທົ່ງ
ແຫ້ ໃຫ້ຄືນໃຫ້ແກ່ກັນ ແຫ້ດາຍ ອັນນຶ່ງເມືອງໃຜໄວ້ ເມືອງ

ມັນບັ້ນຢ່າຫຼ່າ ເສັ່ງເນີ ເພື່ອພີ່ນ້ອງ (ຫາກໄດ້) ລັ້ງນ້ຳ ສາບົດ ໃຫ້ແກ່ກັນ ແລນາ ຈຳໄວ້ເປັນທີ່ໝັ້ນແທ້ ເຖິງເຂດມະຫາກັບ ນັ້ນເນີ ເພື່ອໃຫ້ເປັນສີນາ ແກ່ພົງພັນເຊື້ອ ຄັນວ່າໃຜບໍ່ຟັງຄຳ ຕ້ານ ສອງເພື່ອຫາກກ່າວ ມານີ້ ແມ່ນວ່າສັບພັນບູເກີດມາ ມາກແທ້ ກໍຢ່າໃຫ້ເກີດເຫັນ ຫັ້ນຫ້ອນ ອັນວ່າສອງກະສັດເຈົ້າ ສາບົດຄຳແລ້ວຢ່າ ພຣະເລົ່າຕ້ານ ຄຳແລ້ວຢ່າເມືອ ແທ້ແລ້ວ ເມື່ອນັ້ນເຈັດເຈືອງເຈົ້າ ເລີຍລາຕ້ານສັ່ງ ຂ້ອຍຂໍລາພີ່ເຈົ້າ ຂຸນອ້າຍຕ່າວເມືອ ກ່ອນແລ້ວ (ແມ່ນວ່າທຸກສ່ຳເຊື້ອ ຊຸມເຜົ່າ ພົງສາ ກໍດີ) ທັງຊາວເມືອງ ໃຫ້ຢູ່ຍືນຍາວໝັ້ນ ແຕ່ນັ້ນ ຍາມດີໄດ້ ລີລາສະເດັດດ່ວນ ໄປແລ້ວ (ພຣະກໍ) ເດີນປ່າໄມ້ ຫຼາຍມື້ພ່ຳນານ ແທ້ແລ້ວ ເຈົ້າກໍສຸກຢູ່ສ້າງ ເມືອງໃຫ່ຽຊຽງ ຂວາງ (ເລີຍເລົ່າ) ມີຫຼານເຫຼັນ ສືບພຣະວົງປາງຊ້ອຍ ເຈົ້າເອີຍ ໆ

ບັນນີ້ຈັກກ່າວເຖິງເຈົ້າ ສຸວັນນະບາລັງ ກ່ອນແລ້ວ ອັນວ່າຂຸນນາຍທິດ ໃຫ້ເປັນພຣະແທ່ນຄຳ ຍາມນັ້ນ ສັງກາດ ໄດ້ຮອດຮ້ອຍ ເຖິງສີ່ສິບສອງ (໔໒) ປີ ນີ້ແລ້ວ ພຣະຈິ່ງນາ ຕົນໃຫ້ ເປັນເຂດເມືອງພວນ ພຸ້ນດາຍ ໃຫ້ແກ່ພຣະຄຳກອງ

ແຕ່ປາງຍາມນັ້ນ ຕັ້ງແຕ່ບ້ານພົກເສືອກ ເມືອຮ່ອງເມືອງຄະ
ນັງ ທີ່ພຸ້ນ ນັບແຕ່ດອນຈາວເຖິງ ປາກຣະນັງພາຍໃຕ້ ວາ
ແຂນຂວ້ານ ໄປເຖິງພຣະບາງ[1] ຄົບ ດອນກວານລາດພຸ້ນ ໄມ້
ໃຫ່ຽບອບໄຣ ຕັ້ງແຕ່ປາກກັບເຫົ້າ ໄປເຖິງພວກຣິກ ພາຍພຸ້ນ
ກັບຫັງຂິງເຂດບ້ານ- ເກີດເຫົ້າປາກຫວາຍ ພຸ້ນເລ້ວ ນັບແຕ່
ກໍຄຳເຫົ້າ ປາງຊືງປາກເມກ ຂຸນກໍລັດແຕ່ຫັ້ນ ໄປໃຕ້ປາກຊັບ
ແທ້ແລ້ວ ຕັ້ງແຕ່ປາກຂາມເຫົ້າ ໄປຮອດຊຽງສາ ທີ່ພຸ້ນ ລັດ
ແຕ່ຊຽງສາໄປ ເຂດດິນເມືອງພຸ້ນ ຝູງໝູ່ນີ້ ເຈົ້າຣາດຊຽງ
ຂວາງ ຈິ່ງໃຫ້ຖືເອົາເປັນ ເຂດເມືອງພວນແທ້ (ອັນນີ້ບາລັງ
ທ້າວ ຕິນອາດຣາຊາ) ໃຫ້ແກ່ພຣະຄຳກອງ ແຕ່ປາງຍາມ
ນັ້ນ ອັນວ່າແດນແຕ່ນັ້ນ ຫຼາຍເຊັ່ນທິງແທນ ແທ້ແລ້ວ ມີກະ
ສັດຣາຊາ ສືບແທນຫຼາຍເຈົ້າ ແຕ່ນັ້ນມາຮອດເຫົ້າ ສັງກາດ
ຫົກຕົວ ນີ້ແລ້ວ (ມີຣາຊາ ໃໝ່ທິງແທນຂຶ້ນ ຊື່ພຣະໄຊຍະ
ເຊດຖາທ້າວ ດຳຣົງທິສຣາດ ໄດ້ສືບສ້າງ ປີນັ້ນບັ້ງແທນ ກໍ
ຈິ່ງຊ້ານອບໃຫ້ ເປັນເຂດເມືອງພວນ ແທ້ແລ້ວ ພຣະບໍ່ໃຫ້
ເສັຽປະເພນີ ແກ່ພີ່ງສາເຊື້ອ ຕາມແຕ່ພຣະກະສັດເຈົ້າ ເປັນ

(໑) ພຼະບາງຄົບ ບາງສະບັບວ່າ ບ້ານຄົກ

ເກບແຕ່ກ່ອນ ມານັ້ນ ບໍ່ມີໃຫ້ລ່ານ້າງ ຄອງນັ້ນທ່ຽງຈິງ ແທ້ ແລ້ວ (ພຣະກໍການໃດ່ແທ້ ຄອງແຕ່ປາງປະຖົມ ຕາມແຕ່ຄໍາ ແຖນຫຼວງ ສັ່ງຈິງຈໍາແຈ້ງ ຫຼັກແດນນັ້ນ ຖືກັນເປັນເຂດ) ອັນວ່າເມືອງສຸບຫ້ວຍ ຊະຄາວນີ້ແມ່ນພວນ ແທ້ແລ້ວ ຫາກ ແມ່ນອາຣັດຖາຫ້ອງ ເມືອງພວນປະຖົມເກົ່າ ພຸ້ນແລ້ວ ບໍ່ ແມ່ນດິນລ້ານຊ້າງ ຂິງເຂດເມືອງລາວ ຫາກແມ່ນດິນ- ເມືອງ ພວນແຕ່ໃດມາແທ້ ບັດນີ້ຈັກກ່າວເຖິງຫ້ອງ ແດນເມືອງຂິງ ເຂດ ກ່ອນແລ້ວ ອັນວ່າພຍາຄໍາເກີດໄດ້ ເວນໃຫ້ເຂດແດນ ບານນຶ່ງອາຊາຫ້າວ ສເວີຍເມືອງຄໍາເກີດ ປາງນັ້ນ ຕັ້ງບໍ່ທິສ ຣາດແທ້ ທໍາຮ້າຍໃສ່ຕົວ ເຈົ້າກໍທໍາຜິດນ້ອງພຣະເຈົ້າ ຕົນຊື່ ເຈັດເຈືອງ ນັ້ນແລ້ວ ພ້ອມທັງຂຸນຄໍາເກີດເມືອງ ຊູ່ຄືນເຂົາ ເຈົ້າ ເຂົາກໍເລີຍເປັນໜີ້ ອັບປີໂຫດໃຫ່ງ ມາກແລ້ວ ທັງພວກ ພ້ອມ ພິນລ້ານຝ່າຍນະຄອນ ນ້ອງພຣະເຈົ້າ ທານໂທດກະ ຣຸນາ ໂຣມເງິນຄໍາ ມາກມີຫຼາຍໄດ້ ອັນເປັນໜີ້ ຕາມຄອງ ຕົວໃສ່ ໂທດໃຫ່ງແທ້ ຫຼາຍລ້ານຖືກດົນ ແທ້ແລ້ວ ນັບແຕ່ ເປັນເງິນໄດ້ ຫົກແສນປາຍເຈັດໝື່ນ ຈິງແລ້ວ ຫົກພັນປາຍ ຫ້າຮ້ອຍ ເງິນແທ້ຖືກດົນ ຜູ້ນຶ່ງອັນເປັນຄໍານັ້ນ ແສນປາຍ

ຫ້າໝື່ນ ເຈັດແສນປາຍເກົ້າຮ້ອຍແປດບາດເຟື້ອງ ຄຳແຫ້ໃຫ້ແຫນ ແຫ້ແລ້ວ ເມື່ອນັ້ນຄຳເກີດທ້າວ ຕົກຂມ່າເລີຍກົວ ທັງຂຸນເມືອງ ໄພ່ໄທຍິນໜ້ອນ ເພື່ອບໍ່ມີອັນໃຊ້ ເງິນຄຳຝູງກ່າວນານີ້ ຂຸນເມືອງທັງໄພ່ນ້ອຍ ມາພ້ອມພ່ຳພຍາ ແຫ້ແລ້ວ ຍາມເມື່ອສັງກາດໄດ້ ຊາວຫ້າ (໒໕) ຕົວປາຍ ກັບອີກປີກາມົດແມ່ນໃນປີນັ້ນ ກໍຈິງມາມອບໃຫ້ ດິນເມືອງຄຳເກີດ ຈິງແລ້ວກັບທັງຝູງໄພ່ນ້ອຍ ອັນຢູ່ໃນດິນ ກໍດີ ຖວາຍແກ່ນ້ອງພຣະເຈົ້າ ສເວີຍຣາດເມືອງພວນ ທີ່ພຸ້ນ ເພື່ອໃຫ້ຕາງເງິນຄຳ ໜີ້ສິບຝູງນັ້ນ ຕັ້ງແຕ່ນີ້ຮອດເທົ້າ ໄມ້ມ່ວງລຳສູງ ທີ່ພຸ້ນ (ແດນດິນສຸດ ໂຍດຍາວໄກກວ້າງ ທັງມວນສ້ຽງ ບໍ່ຖວາຍນ້ອງພຣະຣາດ) ເມືອງມ່ວງສອງບໍ່ເວັ້ນ ເວນໃຫ້ມອບຖວາຍ ແຫ້ແລ້ວຕັ້ງແຕ່ເມືອງພິງເທົ້າ ເມືອງໃຫ່ງໜອງແສ ທີ່ພຸ້ນ ເມືອງບາງເມືອງລາກກວ້າງ ໄປເທົ້າຈ່ອຍຈວນ ທັງຝູງບ້ານ ເຊີຍແຊຍາງເດີນ ພາຍພຸ້ນ ຝູງໝູ່ນັ້ນ ຖວາຍໃຫ້ທີ່ເຊງ ແຫ້ແລ້ວກັບທັງຊຽງຊາງ[1]ບ້ານ ທັງທີ່ຊຽງກົບ ກາຍໄປສິບນວນຫຼວງຜ່ານໄປມີແຫ້ ເຖິງປາກຫ້ວຍ ຊີ້ວ່າສິບນອງ ເມືອຈອດແດນ

---

(໑) ຊຽງຊາງບ້ານ ບາງສະບັບວາ ຊຽງຂວາງບ້ານ

ເມືອງພຸ້ນ ພື້ງຄະບານິກໃຫ່ງ ແຄນງ່ອນພຸ້ນ (ພາຍຫນ້າຊົ່ວ ໄກ) ຕັ້ງແຕ່ແດນງ່ອນເຫົ້າ ໄປເຖິງພູໜອກອອກ ໄປຮອດ ດອຍແມ່ລູກແລ້ວ ສອຍຂຶ້ນຝ່າຍເໜືອ ແຫ້ດາຍ ແມ້ງບຶ່ງໄປ ເຖິງຮຸກໂຂຕົ້ນ ອຳພາໄມ້ມ່ວງ ທີ່ນັ້ນ ກໍຈິ່ງເອົາມ່ວງໄມ້ ໝາຍ ໄວ້ເຂດດິນ ຫັ້ນແລ້ວ ພູກັມພູວານເຫົ້າ ເຖິງພູຈ້ຳໄກ່ ໄປຮອດ ສຸດຍອດນ້ຳ ບວງພຸ້ນຍອດດອຍ ບັງເລົ້າເມືອຮອດຍອດນ້ຳໄມ້ ແມ່ນເຂດເມືອງພວນ ແຫ້ແລ້ວ ພຍາຄຳເກີດມາ ມອບຖວາຍ ແຫບໜີ້ ຝູງນີ້ຫາກແມ່ນອາຣັຖຫ້ອງ ເມືອງພວນກັບປະຖິບ ຈິງດາຍ ພຣະບໍ່ໃຫ້ລ່ານ້າງ ເສັງແຫ້ເມື່ອລຸນ ແຫ້ດາຍ ຕາບ ຕໍ່ເຫົ້າ ເຖິງເຂດມະຫາກັບ ເຫດວ່າຄອງເມືອງນີ້ ມອບດິນ ແດນໃຊ້ ຟັງເປີນັກປາດເຈົ້າ ຝູງໝູ່ເສນາ ກໍດີ ທັງມຸນຕີ ໝື່ນແສນຂຸນພ້ອມ ກັບກັງຂ້ອຍໄພ່ນ້ອຍ ຝູງໝູ່ຊາວເມືອງ ກໍດີ (ອັນນີ້) ເປັນເຂດແດນ ແຫ່ງເມືອງພວນແຫ້ ຄວນທີ່ ເຮົາເຈົ້າຂ້ອຍ ຈຳເອົາຈິດຈື່ ຈຳຈື່ແຈ້ງ ເອົາໄວ້ຊູ່ຄືນ ແຫ້ເນີ (ອັນນຶ່ງ) ໃຜຜູ້ບິວຣະບັດເຈົ້າ ຈອມຫົວພູວະບາດ ກໍດີ ກໍໃຫ້

(໖) ພູກັສພວານ ບາງບ່ອນເປັນ ພກັມພູລາດ

ຕັ້ງຊື່ແຈ້ງ ຈຳໄວ້ຊູ່ຄົນ ແທ້ດາຍ ບັດນີ້ຈັກໄດ້ເອງຊູລື້ນົວ ວັນ
ທາບູນເກດ ໄຫວ້ພຣະເຈົ້າ ອົງແກ້ວສວ່າງກະສັນ ກ່ອນແລ້ວ
ຕັ້ງວ່າພິເສດສ້ອຍ ທັມມະເທດມະຫາກັບ ແທ້ແລ້ວ ຂໍໃຫ້
ພຣະເທສນາສອນ ສັ່ງທັມທັງຄ້າຍ ກັບທັງເທວະດາດ້າວ
ອິນພົມເທວະໂລກ ກໍດີ ຂໍໃຫ້ມາຊ່ອຍຊັ້ນ ພຍາກວ້າງຊ່ອຍ
ປອງ ແດ່ທ້ອນ ຂໍໃຫ້ໄດ້ສືບສ້າງ ບືນບິງບາວໂກ ແດ່ເນີ ໃນ
ເມືອງຄົນ ໂລກລືບໍ່ບ້ອງ ບັດນີ້ເອົາຈັກເອົາໃນສ້ອຍ ຄອງທັມ
ນາກ່າວ ຕາງໃຫ້ເປັນແວ່ນໄວ້ ສານແກ້ວຊອບທັມ ແທ້ດາຍ
ເມື່ອນັ້ນພຣະບາດເຈົ້າ ຕົນຊື່ຄຳກອງ ພຣະກໍຊົງຄອງທັມ ທົສ
ຣາດດີຈິງແທ້ ພຣະຈິ່ງຕັ້ງ ຄອງອາດບາຈັກ ຈິງແລ້ວ ກໍຈິ່ງ
ເອົາເຂົາມາ ຊູ່ຄົນໝົດຖ້ວນ ພຣະກໍບອກໃຫ້ຮູ້ ເຂົາໝູ່ເສນາ
ມີຄຳສອນ ໄພ່ໄທທັງຄ້າຍ ໃຫ້ສູມາຟັງແຈ້ງ ຝູງໝູ່ຂຸນຫຼວງ
ກູເອີຍ (ທັງມວນມາ ຊູ່ຄົນຝູງເຖົ້າ ເອົາທັມຕັ້ງ ເປັນຄອງ
ຄຳສັ່ງ) ເຮົາຈັກສອນສັ່ງໄວ້ ຂຸນເຖົ້າຢ່າລືມ ແດ່ເນີ ແຕ່ນັ້ນ
ເຂົາຈິ່ງຟັງຈິງແຈ້ງ ຄອງເມືອງຕັ້ງແຕ່ງ ພູຣະບາດເຈົ້າ ສອນ
ສັ່ງຊູ່ລາວ ປີເມື່ອພຣະແຕ່ງຕັ້ງ ທັມມະເທດພົມເມືອງ ວັນ
ນັ້ນ ຕາມກົງເກນ ກ່າວມານີ້ໄວ້ ເຊີນຈຳແຈ້ງ ໃຈຈິງຈົດຈື່)

ປີເກົ່າຍີ່ນັ້ນ ຍາມນັ້ນທ່ຽງຈິງ ພຣະບາດສ້າງ ສເວີຍຣາດນະ
ຄອນຂວາງ ທີ່ນັ້ນບຸນເຮືອງນີ້ ບົດໃນນະຄອນກວ້າງ ພຣະກໍ
ໂອກາດຕັ້ງ ມີອາດຍາສອນ ຝູງເສນາ ໝູ່ມຸນຕີພ້ອມ ຟັງ
ເນີໂຍທາແກ້ວ ພິງພັນເຊື້ອຊາດ ກູເອີຍ ຝູງໝູ່ບ່າແຫ່ເຈົ້າ
ຄວນໃຫ້ຈື່ຈຳ ແທ້ແລ້ວ ຍາມເມື່ອພຣະບາດເຈົ້າ ບົວຣະບາດ
ໄປມາ ເມື່ອໃດ ຢ່າໃຫ້ມີສັດຕູ ບຸດພຣະອົງຈອມເຈົ້າ ອັນນຶ່ງ
ໃຫ້ສແວງກ້ຳ ສັດຕູພາຍລຸ່ມ ດີນີ (ໃຫ້ມັນຮູ້ແຈບແຈ້ງ ດູ
ຮ້າຍຊູ່ປະກາບ) ເນ່ນວ່າອານາດຜູ້ ຕາງຣາດເສນາ ກໍດີ
ແສນພຍາຂຸນ ໝື່ນມຸນຕີພ້ອມ ສັບເພສ້ຽງ ເສນາໃນນອກ
ໃຫ້ຈື່ແຈ້ງ ຈຳໄວ້ຊູ່ຄືນ ແທ້ດາຍ ຄຸນພຣະມີມາກລົ້ນ ລືອາດ
ສັງຂຍາ ໄດ້ນັ້ນ ເຫດວ່າຂຸນບູຣົມມາ ແຕ່ງແປງເປັນເຈົ້າ ມັນ
ຫາກບໍ່ຣະບວນແລ້ວ ຂຸນບູຣົມກ້ຽງອ່ອຍຫ່ອຍ ສຳເຣັດຣຽບ
ຮ້ອຍ ຊິບໍ່ໄວ້ທີ່ຄວນ ກ່ອນແລ້ວ ໆ

ບັ້ນກົດໝາຍທັມມະສາດຂຸນບູຣົມ

ຟັງເປີນັກປາດເຈົ້າ ຂຸນເທີ້ນແສນພຍາ ຟັງທ້ອນທັງເສນາ ໝູ່ຂຸນກວານພ້ອມ ຕັ້ງວ່າບູຣານແທ້ ປາຍມາສອນສັ່ງເຮົາແລ້ວ ເປັນທີ່ເອົາໃສ່ເກົ້າ ສອນໄວ້ຊູ່ຄົນ ແທ້ແລ້ວໃຫ້ເກີດມີຮັກລ້ຳ ສັດຕູກ້ຳລຸ່ມ ບັ້ນເນີ (ກາລ່ານັ້ງ ໃຈເຈົ້າຈົ່ງຣະວັງ ຈັດແຈ່ງຕັ້ງ ໝາຍແຕ່ງບູແປງ ເປັນດັ່ງຂົນໃນໜັງ ໝູ່ລວາຄບາເນື້ອ (ສັດຕູໃຫ້ ຈງມໃຈຣະວັງນາກ) ໄນ້ດອກຄ້າງ ຫາງເຈົ້າໄຕ່ໄປ ເມື່ອໃດ ໃຫ້ແຜ້ວຊ້ຳ ລົງທ່ານະທີພຽງ ໃຫ້ຮັກສາສັດຕູພາຍ- ປູ່ເທິງປູງນີ້ ບັດນີ້ພຣະກໍສອນຂຸນໃຫ້ ຮັກສາຂັບໝາກ ອັນວ່າບໍ່ຍິນຕັ້ງ ດີແລ້ວລ່ຳດູ ຫຼອນວ່າມີຄົນຮ້າຍ ປາປັ່ງໃຈປາບ (ຊຸກເຊື້ອງໝາກເທັ້ງໄວ້ ໃນຊ້ວາໝາກຄຳ ບໍ່ຮູ້ ໃຫ້ລ່ຳພຽນ ທຸກສິ່ງຂັນສລາ) ຄັນວ່າຍາມຣາຕີ ໃຫ້ມີທຽນໄຕ້ ບັດນີ້ພຣະກໍສອນພວກຂຸນ ປູງແຕ່ງພາເຫວີຍ ຄວນທີ່ຫຼີ່ງແລດູ ໃຫ້ດີຕົງແຈ້ງ ຫຼອນວ່າມົດແມງນ້ອຍ ທັງໜອນຕົກຄຶກ ສັບນັ້ນ ທັງເລົ້າມົດງ່ານນ້ອຍ ແມງໄມ້ຊູ່ອັນ ຫຼອນວ່າຂີ້ເຫຍື້ອຮ້າຍ ງ້ອງແງ່ງຄ່າຕົກປົນ ບໍ່ຮູ້ ຄວນ

ທີ່ຈິງໃຈຈິດ ລ່ຳດູດິງຜ້ຽນ ເຖິງເມື່ອບໍ່ມາຕັ້ງ ໃບ[1]ສະຖານອັນ
ຊອບ ດີນັ້ນ ກໍຫາກເປັນຣີດຂ້ອຍ ຂຸນຊັ້ນແຕ່ງຄິວ ແທ້ແລ້ວ
ບັດນີ້ພຣະບາດເຈົ້າ ປົງອາດຍາສອນ ຝູງໝູ່ນາຍຮັກສາອີງ
ໃຫ້ຈື່ຄອງຝູງນີ້ ຢ່າໄດ້ລາໃຈແທ້ ໂດຍຄອງໃຫ້ຈຳຈື່ ເຮົາເອີຍ
ໃຫ້ຕື່ນເຊົ້າ ພລັນແທ້ທ່ຽວໄປ ຄັນວ່າດີກແຕ່ງແລ້ວ ອັນໃສ່
ດິງດີ ແລ້ວຈຶ່ງນຳມາທຳ ໃສ່ກະແຈຈຳໄວ້ ຍາມເມື່ອນາຍເອົາ
ນ້ຳ ອຸທກັງລ້າງສ່ວຍ ກໍດີ ຄວນທີ່ວາງເທິງຕຽງ ທີ່ຄວນ
ແຮງຕັ້ງ ອັນນຶ່ງຄວນຟ້າວເຜົ້າ ຣາຊາພູວະບາດ ຢ່າໄດ້ໃຫ້
ຈອມເຈົ້າທ່ຽວທັນ ນັ້ນເນີ ບັດນີ້ພຣະກໍສອນສັ່ງໃຫ້ ໄທໃນຂຸນ
ດ່ານ (ຜູ້ຮັກສາດ່ານດ້າວ ປະຕູເຂົ້າເຂດເມືອງ ຢ່າປມາດແທ້
ຄອງຣາຊການໂດ ທັນນຽມນີ້ ຢ່າລວນລືມເວັ້ນ) ໃຫ້ມີຈິດດີ
ລ້ຳ ນຳຄອງອັນຊື່ (ໃຈຊື່ແທ້ ຮັກສາໄວ້ເຂດແດນ) ຍາມເມື່ອ
ການມີແທ້ ພາຍໃນດີກແຕ່ງ ກໍດີ ຢ່າໄດ້ເຂົ້າ ໃນແທ້ປ່ຽວ
ດຽວ ແທ້ດາຍ ຄວນໃຫ້ມີໄປພ້ອມ ພໍສອງສາມສີ່ ນັ້ນເນີ ຢ່າ
ມີໃຈໂກດກ້າ ຂິນແທ້ບໍ່ດີ ແທ້ແລ້ວ ຍາມເມື່ອພຣະບາດເຈົ້າ
ບົວຣະບາດທາງໃດ ກໍດີ ຈົ່ງໃຫ້ມີຕາແລ ລ່ຳດູດິງຜ້ຽນ ອັນ

---

(໑) ໃບສະຖານ ສະບັບເດີມວ່າ ໃບເດງອັນຊອບ

ບຶ່ງຈຶ່ງໃຫ້ໝັ້ນເຝົ້າເຈົ້າ ຣາຊາພູວະບາດ (ຢ່າໄດ້ປມາດແທ້ ທູນເຈົ້າຊູ່ວັນ ຊອບດາຍ) ອັນນີ້ຕັ້ງຫາກເປັນຄອງແທ້ ໄທຂຸນ ໃຫ້ຈຳຈື່ ເອົາທ້ອນ ໃຫ້ຈື່ແຈ້ງ ຄອງນີ້ຊູ່ອັນ ແທ້ດາຍ ບັດນີ້ ພຣະກໍສອນແຫ່ງບ້ານ ຝູງໝູ່ກວານເກືຍ ຝູງຮັກສາບິວບາງ ໃຫ້ຈ່ຳນຳດີແທ້ ຢ່າທຳນິສຈານແທ້ ຕັ້ງຢູ່ຄອງທັມຊອບດາຍ (ຄັນວ່າກາຍຄອງທັມ ບາບະໜາແສນຊັ້ນ ອັນວ່າກັມອັນນີ້ ໃຫ້ມີໃຈເວັ້ນຫຼື ກ ດີເນີ) ຢ່າໃຫ້ໄທດແລ່ນຕ້ອງ ເມືອໜ້າເກີດ ມາ ແທ້ດາຍ ແມ່ນວ່າໄປທາງຫ້ອງ ຫົນແຫ່ງໄປທານ ກໍດີ ຝູງໝູ່ຄົນອາສາ ແບບນຳປ່າຊ້າ ມັນຫາກເປັນຄອງແທ້ ຝູງ ໝູ່ກວານເກືຍ ນັ້ນແລ້ວ ອັນວ່າຄົນຮັກ ໃຫ້ຈື່ຈຳຄອງນີ້ ອັນ ນຶ່ງນັກສນົມນາດນ້ອຍ ຝູງໝູ່ບິວບາງ ກໍດີ ຄັນຈັກເມືອຫາ ບ້ານ ເຖິງເຮືອນພໍ່ແມ່ ດັ່ງນັ້ນ (ເພື່ອວ່າເມືອທ່ຽວຢື້ ປານໃທ ພໍ່ແມ່ຕົນ ຫຼືວ່າຝູງພີ່ນ້ອງ ເຈັບປ່ວຍປາງເປັນ ໂຣຄາແຖນ ຖືກຄືງຣົນຮ້ອນ) ຄວນບອກໃຫ້ ເທິວຜູ້ແກ່ ບົນບອກແຈ້ງ ຄວນແລ້ວຈຶ່ງເມືອ ແທ້ດາຍ ຄັນວ່າບໍ່ດັ່ງນັ້ນ ຢ່າເລົ້າເລີຍເມືອ ຜີວ່າບັງກາຍຄອງ ໂທດມີຈຳໄວ້ ອັນນີ້ເປັນຄອງຖ້ວນ ສາວ ສນົມຈຳຈື່ ເອົາທ້ອນ ໃຜຢ່າໄດ້ລ່ວງພົ້ນ ຄອງແທ້ສັ່ງສອນ

ແທ້ດາຍ ບັດນີ້ພຣະກໍສອນຂຸນຄຸ້ມ ປະຕູທວານທັງສີ (ຮີດ ຫາກຕັ້ງ ຄອງໄວ້ແຕ່ປະຖົມ ໃຫ້ລ່ຳປ່ຽນ ແປວປ່ອງປະຕູ ຫຼຽວ) ຄັນຫາກເຫັນບົວບາງ ອອກໄປດຽວແທ້ ຄວນໃຫ້ໄພ ຄວາມຖ້ອງ ຖາມດູຕິງຖີ່ ຄັນຫາກດູຍາກແທ້ ຢ່າໃຫ້ອອກ ໄປ ແທ້ເນີ ອັນນຶ່ງຖາມຂຸນເຖົ້າ ຄົນເຂົາເຂົ້າອອກ ນັ້ນເນີ ຊ້ຳ ໃຫ້ຫຼີງລ່ຳຖ້ອຍ ດີຮ້າຍຊູ່ອັນ ແທ້ດາຍ ອັນນຶ່ງໃຫ້ລ່ຳລຽນຊູ່ມື້ ຄືນສາມເທືອເລີງ ໆ ອັນນີ້ຄອງຂຸນຄຸ້ມ ໂດຍຄະນຶງຈຳຈື່ ເອົາ ເນີ ຢ່າໃຫ້ເປັນໂທດຕ້ອງ ພາຍໜ້າບໍ່ດີ ແທ້ດາຍ ບັດນີ້ ພຣະກໍສອນສັ່ງຂ້າຊ່ວງໃຊ້ ຫັຖບາດຄົນໃນ ກ່ອນແລ້ວ ຈຶ່ງ ໃຫ້ມີຄວາມພຽນ ຢ່າໃຫ້ມີຄວາມຄ້ານ ອັນນຶ່ງໃຫ້ຄ່ອຍພຽນ ຮັກສາເຈົ້າ ຈອມຫົວພູວະບາດ ໃຫ້ລື່ນລົ້ນ ດີແທ້ກວ່າຄົນ ແທ້ເນີ ຈິ່ງໃຫ້ຢຳແປງເຈົ້າ ໂດຍຄອງອັນຊື່ ຢ່າໄດ້ໄປແທບ ໃກ້ ສນິມນີ້ບໍ່ຄວນ ແທ້ດາຍ ອັນນຶ່ງປຸນດູນ້ຳ ສົງສວ່າຍດີນມີ ທັງສີຝັນ ໃຫ້ດີແປງໄວ້ ອັນນຶ່ງຄັນວ່າເປັນຂຸນກວ້ານ ກວານ ຣາຊວັງຫຼວງ ກໍດີ ໃຫ້ມີຄຳຫູບພຣະ ກໍຈຶ່ງເປັນອັນເຖົ້າ ບໍ່ ດັ່ງນັ້ນ ຢ່າເລົ່າເລີຍເອົາ ແທ້ດາຍ ມັນຈັກເປັນໂທສາ ໂທດ ຖອງເຖິງແທ້ ອັນນຶ່ງຂອງຫາກຕົກເມືອງເບື້ອງ ອານາເຂດ .

ສັງໂຄ ກໍດີ ຢ່າໄດ້ລອງບາຍເອົາ ບາບເວນຍັງຕ້ອງ ຄວນທີ
ມີຄວາມໄຫວ້ ສັງໂຄເຈົ້າເຂດ ຈິງດາຍ ເພິ່ນຫາກອະນຸບາດ
ແລ້ວ ວາງໃຫ້ກໍຈິງເອົາ ຊອບແລ້ວ·ບັດນີ້ພຣະບາດເຈົ້າ ສອນ
ສັ່ງນາງຍິງ ກ່ອນແລ້ວ ຢ່າໄດ້ກາຍຄຳສອນ ບາບເວນເມືອ
ໜ້າ ອັນນຶ່ງຢ່າໄດ້ເອົາກັນຫຼີ້ນ ເກີນຍິງສາວບ່າວ ຢ່າໄດ້ຄຶດ
ໂລບລ້ຽວ ລວງຊູ້ຈາກຜົວ ແທ້ດາຍ ອັນນຶ່ງຢ່າຍົວະເບົ້າ ຜົວ
ເມັຽຫ່າງໄກກັນ ນັ້ນເນີ (ເກງທໍ່) ອາຊາພຣະ ຂ້າດາຍນໍຣະ
ນັ້ນ ອັນນຶ່ງຍິງໃດຈັກເຂົ້າເວົ້າ ສນົມບາດບົວບາງ ກໍດີ ໃຫ້
ມີຄວາມຖອງເຖິງ ຄອບເຄີຍພາຍໜ້າ ຢ່າທໍ່ສອງຄົນເວົ້າ ຈາ
ກັນຊຸບຊິມ ນັ້ນເນີ ຄັນວ່າຫາກກະທຳດັ່ງນັ້ນ ເມືອໜ້າບໍ່ດີ
ແທ້ວາຍ ອັນນຶ່ງຢ່າໄດ້ທຳສະຫາຍດ້ວຍ ສນົມນາງພູວະບາດ
ນັ້ນເນີ ຢ້ານທໍ່ພາຍໜ້າໂທດແລ່ນດ້ອງ ນຳໃຫ້ຄຶກຄົນ ແທ້
ດາຍ ອັນນຶ່ງຢ່າໄປຢືມເອົາຜ້າ ສນົມນາງນານຸ່ງທຣົງນັ້ນ ຕັ້ງ
ຫາກຜິດຮີດແທ້ ຄອງນັ້ນບໍ່ດີ ແທ້ແລ້ວ ອັນນຶ່ງຢ່າໄດ້ຢືມໜັງ
ສືໄວ້ ພໍປີບໍ່ມີຊອບ ຄອງດາຍ ຫຼອນວ່າຍັງສລັງແທ້ ເສັ້ຽນັ້ນ
ບໍ່ດີ ອັນນຶ່ງເພີ່ນມາຢືມຂອງແທ້ ຜົວໂດຊ້ຳບໍ່ຢູ່ ເຮືອນນັ້ນ ຄຳ
ສັນນັ້ນຜົວບໍ່ແຈ້ງ ເອົາໃຫ້ກໍບໍ່ຄວນ ແທ້ແລ້ວ ອັນນຶ່ງຜົວມີ

ທາງໄປແທ້ ດົນນານມາຮອດ ກໍດີ ມີຜູ້ຮູ້ບຳແທ້ ເອົາໃຫ້ກໍ ຈິ່ງຄວນ ແທ້ດາຍ ອັນນຶ່ງເພິ່ນມາຊື້ ຂອງໃດມີຄ່າ ກໍດີ ຄັນ ວ່າຜົວບໍ່ແຈ້ງ ບຳແທ້ຢ່າຂາຍ ແທ້ດາຍ ຖ້າວ່າຍັງຂາຍແທ້ ພາຍລຸນເປັນໂທດ ຈິ່ງແລ້ວ ຄວນໃຫ້ປັ້ງ ຍັງຖ້າແຫ່ງຜົວ ກ່ອນແລ້ວ ອັນນຶ່ງຄັນຈັກໄປຫຼີ້ນແທ້ ຫົນແຫ່ງເຮືອນໃຜ ກໍດີ ຍັງມີໃສໃບຄວາມ ກ່າວຈາໃນຫ້ອງ ຜົວບໍ່ວາງຄວາມໃຫ້ ພອບໄປຍັງດ່ວນ ດັ່ງນັ້ນ ບາດວ່າຄືນສູ່ຫ້ອງ ເຫງຮ້າຍໂທດມີ ແທ້ແລ້ວ ອັນນຶ່ງໄດ້ວ່າມີຜົວແລ້ວ ກໍຢ່າປຽວຊາຍອື່ນ ນັ້ນເນີ ຢ່າໄດ້ກວນຫຼີ້ນແທ້ ເຊີງຊູ້ມ່າຍກັບ ນັ້ນດາຍ ອັນນຶ່ງຢ່າກິນ ເຫຼົ້າ ຫຼິ້ງເພດໃນຫາ ເລີຍເລົ້າມາຍາມີ ເກີດເປັນເຊີງຊູ້ ທຳ ເບື່ອງນັ້ນມີນານແທ້ ຈັກດາຍບ້ອນຄົນດາບ ຊີວິດສັ້ນ ເດີງ ແທ້ທ່ຽງຈິງ ແທ້ແລ້ວ (ແມ່ນວ່າທຳໃດໃຫ້ ຢ່າລ່ວງລື້ນຄອງ ປະເພນີຍິງ ລ່ຳແບງບໍ່ໄວ້ ໄປໃສໃຫ້ ຜົວຕົນຖາມຖີ້) ຜົວ ອະນຸຍາດໃຫ້ແລ້ວ ສັນນັ້ນຈິ່ງກະທຳ ຫັ້ນທ້ອນ ອັນນຶ່ງໃຜ ຫາກມີຜົວແລ້ວ ໃຫ້ຢູ່ໃນຄອງ ນັ້ນເນີ ຈິ່ງໃຫ້ບົວອະບັດດີ ແຫ່ງ ຜົວຕົນແທ້ ອັນນຶ່ງຢ່າໄດ້ທຳເສັຽໃຫ້ ສັກສີຜົວອ່ອນລົງເນີ ໃຫ້ ຄ່ອຍພຽນພ່ຳນ້ອງ ບໍ່ຂຶ້ນກໍຈິ່ງຄວນ ແທ້ແລ້ວ ອັນນຶ່ງຢ່າໄດ

ໄປຫຼົ້ນລ້ອນ ຝູງໝູ່ໄທເຮືອນ ນັ້ນເນີ ແມ່ນວ່າລູກຫຼານເຂົາ
ກໍບໍ່ມີປ່າຢ້ານ ອັນນຶ່ງຄັນໄປທາງໃດແທ້ ໃຫ້ຖາມຜົວດູກ່ອນ
ຜົວຫາກອະນຸຍາດໃຫ້ ໄປແທ້ກໍຈິ່ງໄປ ແທ້ເນີ ຄັນວ່າການ
ດ່ວນແທ້ ໃຫ້ມີບ່າວນຳໄປ ຊອບດາຍ ກໍຈິ່ງສົມນາງພຍາ
ເພິ່ນລືຊາແທ້ ອັນນີ້ພຣະບາດເຈົ້າ ສອນສັ່ງນາງສບິນ ແທ້
ແລ້ວ ທັງຫາສີຫາສາ ໝູ່ນາງຝູງໃຊ້ ຢ່າໄດ້ທຳຄອງຮ້າຍ
ມີສາຈານເຊິງຖ່ອຍ ນັ້ນເນີ ໃຫ້ເອົາໃຈຫຼີກເວັ້ນ ເມືອໜ້າກໍຈິ່ງ
ດີ ແທ້ດາຍ ອັນນຶ່ງຈິ່ງໃຫ້ບິວຣະບັດເຈົ້າ ພູມີເທວະຣາດ ຈິ່ງ
ເນີ ເຣັດໃຫ້ມັນຊອບແທ້ ຄອງເຈົ້າສັ່ງສອນ ຫັ້ນທ້ອນ ຫາກ
ຈັກມີບຸນຄ້ຳ ສຸກເນື້ອພາຍລຸນ ບຸນຈິ່ງມາຊູຊັກ ໃຫ້ຮຸ່ງເຮືອງ
ເມືອໜ້າ ເປັນດັ່ງສີດາແກ້ວ ກັລຍາເມັຽມິ່ງ ພຍາບັ້ນນັ້ນ ນາງ
ກໍບິວຣະບັດຊອບແທ້ ບຸນຄ້ຳຮຸ່ງເຮືອງ ແທ້ແລ້ວ ອັນນີ້ພຣະ
ຫາກຕັ້ງ ຣີດໄວ້ສອນບາດບິວນາງ ທັງຝູງຍິງ ຊູ່ຄົນໃຫ້ຈຳໄວ້

ບັດນີ້ພຣະຈັກສອນຄົນຜູ້ ຫງວທາງທຸກຂມອດ ກ່ອນ
ແລ້ວ ແມ່ນວ່າເຫັນຝູງຍິງ ກໍປ່າເມືອບດາຈຸ້ຍ ຄັນວ່າເຫັນ
ສບິນເນື້ອ ຫງວທາງບິວຣະບາດໄປນັ້ນ ໃຫ້ເອົາຄົນຫຼີກເວັ້ນ
ໜີແທ້ຊົ່ວວາ ນັ້ນເນີ ຜີວ່າຍັງຈວນໃກ້ ດີເສັ້ງສິບບາດ ຄອນ

ແລ້ວ ຄັນວ່າໜິດໂຫດແລ້ວ ວາງໄວ້ຢ່າເສັ້ງ ແທ້ດາຍ ອັນນຶ່ງ ຜູ້ຂີ່ຊ້າງ ໄປທີ່ທາງຫລວງ ກໍດີ ຄັນວ່າທັບສບິນບາງ ກໍຫຼີກ ໄກເອົາເວັ້ນ ບໍ່ດັ່ງນັ້ນ ຕີເສັ້ງສາມສິບສາມບາດ ຄັນວ່າໜິດ ໂຫດແລ້ວ ວາງໄວ້ຢ່າເສັ້ງ ອັນນຶ່ງຜູ້ໄປ່ຮູ້ຮີດບ້ານ ທັງແຫ່ງ ຄອງເມືອງ ດັ່ງນັ້ນ ຂຶ້ນມາກາບຣາຊາ ພຣະບອດເມືອງເປັນ ເຈົ້າ ໃຫ້ເອົາແສ້ ສາມງ່າມາຕີ ນັ້ນເນີ (ເອົາແຕ່ພຽງພໍສົມ ບາບມັນຄືນໃບ້ ທັນດະກັມໃຫ້ ມັນເສັ້ງເຂັດຫລາບ) ສາມສິບ ສາມບາດແທ້ ວາງໄວ້ຢ່າເສັ້ງ ຫັ້ນທ້ອນ ຜີວ່າຕາມກະກູນແທ້ ສິນມາເງິນຫ້າບາດ ເຜົ້າພ່ຳພ້ອມ ເຖິງແທ້ຮອດພັນ ຫັ້ນ ແລ້ວ ຜີວ່າຂີ້ກາຍເຈົ້າ ນ້ອຍໜຸ່ມນິວບາງ ນີປຳແປງ ຝ່າຍ ໃນສບິນໜ້າ ກາຍຂຸນຜູ້ ເສນາຝູງໃຫຍ່ ກໍດີ ໃຫ້ຕີຫ້າບາດ ແສ້ ສິນແທ້ໂຫດນັ້ນ ຫັ້ນແລ້ວ ຄັນວ່າສິນມານັ້ນ ນີເງິນຫ້າ ບາດ ຄວນແລ້ວ ຕາມແຕ່ຄອງກ່າວໄວ້ ນີແທ້ທ່ຽງຈິງ ຫັ້ນ ແລ້ວ (ອັນນຶ່ງ) ຜູ້ໄດໄດ້ຂີ່ມ້າ ກາຍແຫ່ງສັງໂຄ ກໍດີ ໃຫ້ ເອົາຕີນລົງໜີ ຫຼີກໄກກອຍເວັ້ນ ຄັນວ່າຫາກບໍ່ເວັ້ນ ດີນຂີ່ ກາຍໄປ ດັ່ງນັ້ນ ຄວນຕີສິບ- ບາດເດີນຄອງແທ້ ຜີແມ່ນເສນາ ທ້າວ ເພັ້ຍແສນເສນດ ກໍດີ ຄວນຍາດຣົ້ ເອົາແທ້ຊອບຄອງ

ຜີວ່າບັງປາກໄດ້ ໃຫ້ມີຂອງມາໄດ່ ເອົາເນີ ໃຫ້ນັບເຖິງຮອດ
ຮ້ອຍ ເງິນແທ້ກໍຈິ່ງວາງ ໃຫ້ຫ້ອນ ຫາກມີທາງຄິດຄ້ຽວ ໃຫ້
ຂຶ້ນໜີ ນັ້ນເນີ ຢ່າໄດ້ພາຕີນໄປ ໂຫດມີມາຕ້ອງ ໃພຢ່າໄດ້ຂີ
ຊ້າງ ກາຍພຣະບາດເອ້ງໃບ ນັ້ນເນີ ທັງສັງໂຄ ກໍດັ່ງດຽວ
ພອບເວັ້ນ ເຖິງທີ່ທາງຮອມແທ້ ໃຫ້ບໍ່ມີນິບບອບ ໄປຫ້ອນ
ບໍ່ດັ່ງນັ້ນເອົາຂ້ຽນເສັ້ຽສາມຮ້ອຍ ຊອບຄອງ ແທ້ແລ້ວ ບັດນີ້
ນາຈັກບອກທີ່ນັ້ງໃຫ້ ຝູງໝູ່ເສນາ ກ່ອນແລ້ວ ທັງໃບທາ
ໝື່ນແສນນວນພ້ອມ ແມ່ນວ່າຝູງເຜົ່າເຊື້ອ ຈອມຫົວພູວະບາດ
ກໍດີ ໃຫ້ຖືຕາມປະຄືເມືອງ ຢ່າລອບກາຍຖ້ານ ອັນນຶ່ງຣາຊ
ກະກູນເຊື້ອ ກະສັດຕາຕິນໃຫ່ຽ ກໍດີ ໃຫ້ພາກັນນັ້ງເບື້ອງ ຖັນ
ໜ້າກໍຈິ່ງຄວນ ແທ້ແລ້ວ ອັນນຶ່ງນາງໜຸ່ມເສນາແທ້ ນາງ
ແສນຂຸນໝື່ນ ກໍດີ ຢ່າໄດ້ໄປນັ້ງໃກ້ ສນິມເໜົ້າບໍ່ຄວນ ແທ້
ດາຍ ຝູງໃດບັງບໍ່ໃດຍຄຳແທ້ ຕາມຄອງຈັກມີໂທດ ຈິງແລ້ວ
ໃຫ້ຈື່ແຈ້ງ ຄອງນີ້ຊູ່ອັນ ແທ້ເນີ ບັດນີ້ຈັກກ່າວມຸນຕີເຝົ້າ ຣາ
ຊາພູວະບາດ ກ່ອນແລ້ວ ໃພຢ່າໄດ້ຫ່າວຕ້ານ ຫຼາຍຖ້ອຍລື້ນ
ຄຳ ນັ້ນເນີ ອັນວ່າຄອງກ່າວໄວ້ ເປັນເຂດພິມເມືອງ ແທ້ດາຍ
ຄັນຈັກໄປທາງໃດ ກໍຢ່າກາຍຄອງຕັ້ງ ແມ່ນວ່າຂີ່ຊ້າງມ້າ ໄປ

ທ່ຽວທາງໃດ ກໍດີ (ຄວນຖືຕາມ ແຜ່ນດິນເມືອງບ້ານ ຢ່າຖ
ຖ້ວນ ລືມຄອງຄວນປມາດ) ຍາມຈັກເຂົ້າສູ່ບ້ານ ເມືອງໃດ
ແທ້ໃຫ້ລົງ ນັ້ນເນີ ຢ່າກາຍແທ ຫຼັກຄຳພຣະບາດ ເຮົາເອີຍ
(ຈົ່ງໃຫ້ຕັ້ງຂບາດໄວ້ ຖືໝັ້ນຢ່າລາ ແທ້ເນີ) ອັນນຶ່ງແຂກຕ່າງ
ທ້າວ ເມືອງອື່ນໄປມາ ກໍດີ ເມື່ອຈັກເຖິງຫຼັກຄຳ ໃຫ້ລົງເສັຽ
ນັ້ນ ຫາກບໍ່ໂດຍຄອງແທ້ ດົນໄປຈັກມີໂທດ ຈິ່ງດາຍ ເກງ
ຈັກຜິດບາດເຈົ້າ ບຸນກວ້າງທີ່ເຊາ ແທ້ແລ້ວ ອັນນຶ່ງໃຫ້ອົດຕັ້ງ
ອັນດີພຽງມາກ ຄິດຊູ່ຊັ້ນ ຕາງເຈົ້າແຕ່ງແປງ ນັ້ນເນີ ອັນໃດ
ພຣະບາດເຈົ້າ ມີໃຈຈົງມາກ ກໍດີ ໃຫ້ຣີບໄດ້ ໂດຍແທ້ທ່ຽວ
ພລັນ ອັນນຶ່ງຢ່າບຽດເບື້ອງ ຝູງໝູ່ຊາວເມືອງ ນັ້ນເນີ ໃຫ້
ຄ່ອຍເອົາໃຈຂວາງ ແຕ່ງແປງເມືອງບ້ານ ຢ່າໄດ້ໂລພາພົ້ນ
ຫຼາຍຄວາມມັກໂລບ ບໍ່ດີດາຍ ໃຫ້ຄ່ອຍຄິດຊູ່ຊັ້ນ ຄະນຶງໄວ້ຈື່
ຈຳ ຫັ້ນທ້ອນ ອັນນຶ່ງເສນາຂ້າ ກິນເມືອງດົກແຕ່ງແປງນັ້ນ
ຄວນທີ່ຖາມຮີດແທ້ ຄອງຕັ້ງແຕ່ຫຼັງ ນັ້ນດາຍ ຢ່າໃຫ້ກາຍ
ຄອງແທ້ ພາໂລມັກມາກ ນັ້ນເນີ ຢ້ານວ່າໂທດແລ່ນຕ້ອງ ເຖິງ
ເນື້ອຖືກຕົວ ແລນາ ອັນນຶ່ງໃຫ້ແຕ່ງຕັ້ງ ຕາມແຜ່ງບູຮານ ຢ່າ
ໄດ້ເຫັນແກ່ເງິນຄຳເຂົາ ໂລບພາງເອົາແທ້ ອັນນຶ່ງຢ່າໄດ້ຂົ່ມ

ໄພ່ນ້ອຍ ຝູງໝູ່ໄທເມືອງ ນັ້ນເນີ ຍາມເມືອການເມືອງນີ້ ໃຫ້
ແຕ່ງເຂົາຝູງນັ້ນ ອັນນຶ່ງຢ່າໄດ້ກ່າວຕ້ານ ຄຳປອກໃສໃບ ນັ້ນ
ດາຍ ມັນຈັກເປັນໂທສາ ໂທດຄາມເມືອໜ້າ ອັນນຶ່ງຢ່າໄດ້
ໂກທາເຂັ້ນ ສວາບຄວາມເລວດ່າ ກັນເນີ ໃຫ້ຄ່ອຍຕ້ານກ່າວ
ເວົ້າ ຈາແຈ້ງຊອບຄອງ ແທ້ດາຍ ອັນນຶ່ງໃຫ້ຫຼິງດູການໜັກ
ແທ້ ການເບົາທຸກແຫ່ງ ໃຫ້ແຕ່ງໃສພານແທ້ ບູຮານຕັ້ງແຕ່
ຫຼັງ ນັ້ນເນີ ອັນນຶ່ງໃຫ້ເບິ່ງຄົນທຸກໄຮ້ ຄົນມັ່ງມູນຫຼາຍ ຝູງ
ໝູ່ຮາມແລງງາຍ ບໍ່ພໍເຮືອນປ້າວ ຝູງໃດຍັງຂມອດຮ້າຍ ໃຫ້
ຣິນເພິງດູຖີ ຫັ້ນທ້ອນ ໃຫ້ພິຈານແຈບແຈ້ງ ຕາມຖ້ານຈິງ
ຄວນ ແທ້ດາຍ ອັນນຶ່ງຢ່ານອນພົ້ນ ກາງຄືນຫຼັບຕື່ນ ເລິງເນີ
ໃຫ້ສອນຕົນໄຈ້ໆ ໃຈແຈ້ງແວ່ນແຍງ ແທ້ເນີ ອັນນຶ່ງຊ້ຳໃຫ້
ສອນຕາໄວ້ ໄປມາຫຼິງລ່ຳ ກໍດີ ມີທັງຫູພ່ຳພ້ອມ ຟັງແຈ້ງ
ຊູຄອງ ແທ້ເນີ ອັນທີ່ເປັນຄຸນແທ້ ຄອນໄປແວນທ່ຽວ ດີດາຍ
ອັນບໍ່ເປັນປໂຍດແທ້ ປ່າຍ້າຍຍ່າງໄປ ອັນນຶ່ງສອນມືໄວ້ ຢ່າ
ເອົາຂອງທ່ານ ແມ່ນວ່າເມັງທ່ານນັ້ນ ຢ່າເອື້ອອ່າວບາຍ ແດ່
ດາຍ ອັນນຶ່ງໃຫ້ຄ່ອຍຢຳແຢງເຖົ້າ ລຸງຕາຝູງແກ່ ບຸນຈິງຄ້ຳ
ເຖິງເຖົ້າຊວນອບ ແທ້ແລ້ວ ອັນນຶ່ງຈິ່ງໃຫ້ໂຄຣົບແກ້ວ ທັງ

ສາມເປັນທີ່ເພິ່ງ ບຸນຈັກມາຊ່ອຍຄ້ຳ ຄາວໜ້າຫາກຈັກຂວາງ ແທ້ດາຍ ອັນນຶ່ງຢ່າໄດ້ລືມຄຸນແກ້ວ ມາດາພໍ່ແມ່ ນັ້ນເນີ ມັນຈັກເປັນໂທດຮ້າຍ ພາຍໜ້າຊົວຊືວັງ ແທ້ດາຍ ອັນນຶ່ງຢ່າໄດ້ພາໂລລົບ ນິສຈານເມັງທ່ານ ມັນຈັກເປັນບາບຮ້າຍ ລົງໃໝ້ແຜ່ນແດງ ແທ້ແລ້ວ ອັນນຶ່ງໃຫ້ແຕ່ງໜັ້ນ ຂນັງລາດປະຕູເມືອງ ດີເນີ ຄັນຫາກມີທາງຫຼາຍ ທັບເດງຕັ້ງໄວ້ ຢ່າໃຫ້ໃຈໂຣຮ້າຍ ເສິກເສືອບັງບຽດ ເມືອງເນີ ຄວນທີ່ຄິດກົງເກື້ອ ກັນໄວ້ກວ່າດີ ແທ້ດາຍ ກໍຈິ່ງໄດ້ຊື່ວ່າເສນາແກ້ວ ຮັກສາເມືອງຕາງຣາດ ບ່າວໄພ່ບູທ່າງສ້າງ ເມືອງບ້ານໃຫ້ຮຸ່ງເຮືອງ ເຈົ້າເອີຍ ອັນນຶ່ງໃຫ້ໝັ້ນເຝົ້າ ພູວະນາດຈອມຫົວ ນັ້ນເນີ ຢ່າໃຫ້ພູມີພຣະ ກ່າວຫານຳຮ້ອງ ເຫດວ່າໃຈກະສັດນີ້ ຄວນເກງກົວຂນາດ ບາດພຣະອົງໂກດຮ້າຍ ຂວັນເຈົ້າບໍ່ຢູ່ດີງ ຫັ້ນແລ້ວ.

ບັດນີ້ມາຈັກໄດ້ກ່າວຕ້ານ ຕາມຮີດຄອງຜິດ ກ່ອນແລ້ວ ຄົນໃດມີຜິດແທ້ ໃຫ້ພິຈານຕຶງຖີ່ ດູທ້ອນ ຢ່າໄດ້ມີບ່ຽງລ້ຽວ ຊຸງຊ້າຢ່າລົງ ນັ້ນເນີ ຄວນທີ່ຕັດໃສ່ແທ້ ຕາມຮີດພົນຄອງ ຫັ້ນທ້ອນ (ຢ່າໃຫ້ກາຍຄອງເມືອງ) ບໍ່ດີຈິງແທ້ ໃຜຜູ້ມາກ່າວຕ້ານ ນິນົນຍົກກ່ອນ ກໍດີ ຢ່າໄດ້ຟັງທາງດຽວ ໃຫ້

ຟັງສອງເບື້ອງ ໃຫ້ຜູ້ມັນຜິດນັ້ນ ຕາມຄອງມີໂທດ ຜູ້ແພ້ນັ້ນ ຄວນໄດ້ຊອບດີ ຫັ້ນຫ້ອນ ຢ່າເບັ່ງຖ້ອຍ ເຫັນທີໄພຄາ ແທ້ດາຍ ໃຫ້ຄ່ອຍຕອງຕາຕົກ ດັ່ງບອບຊາເປ້ງ ຄວາມໄປ່ພິຈານແຈ້ງ ຢ່າລອນຟ້າວພູກ ຕີເນີ ຄັນວ່າໂທດຫາກມີແລ່ນ້ອຍ ຢ່າຂ້າບັ່ນເສັງ ແທ້ດາຍ ຫາກວ່າຜິດເຖິງເງິນເຫັ່ງ ເມືອເຫິງຫ້າບາດ ກໍດີ ໃຫ້ຜ່ອນບ້າງ ຕັດແທ້ແຕ່ເບົາ ຫັ້ນຫ້ອນ ຄັນວ່າມີຄ່າຮ້ອຍ ໃຫ້ຮອນມາເຖິງບາດ ນີວ່າຮອດບາດແທ້ ໃຫ້ຫຼຸດໄວ້ເຖິງດຽວ ອັນນີ້ເປັນຮີດເບື້ອງ ປະຖົມພາກພື້ນເມືອງ ແທ້ແລ້ວ ປູງໝູ່ໄທກວານເມືອງ ຈິ່ງຄ່ອຍພິຈານແຈ້ງ ຕັດໃຫ້ແລ້ວ ຕາມຄະດີພາຍນອກ ນັ້ນເນີ ຢ່າໄດ້ຂິ້ນໄພ່ນ້ອຍ ຊາວບ້ານບໍ່ຄວນ ແທ້ດາຍ ຄັນວ່າໜີ້ຫາກມາກກວ່າຮ້ອຍ ຄວນຮອດເສນາ ກໍດີ ຈິ່ງໃຫ້ພິຈານຕັດ ຂາບຖວາຍທູນເຈົ້າ ອັນນຶ່ງເສນາຜູ້ ພິຈານຕັດແຕ່ງ ຄວາມນັ້ນ ໃຫ້ຕັ້ງທ່ຽງຂບາດແທ້ ໂດຍດ້ານດັ່ງຄອງ ຄືວ່າໃຫ້ຫຼີບເວັ້ນ ຫ້າປະການຄອງບາບ ນັ້ນເນີ ສັນຫາເປັນເສັ້ນເຄົ້າ ຈຳໄວ້ຢ່າຫຼົງ (ອັນວ່າສັນຫາເຫັນແກ່ເຊື້ອ ຊາດເຜົ່າວົງສາ ເຫັນແກ່ບານສະກຸນໂຕ ສ່ຽວສະຫາຍເກີແກ້ວ ກໍເລົ້າມີໃຈລ້ຽວ ເຫັນໂຕລື່ນເພິ່ນ) ເລີຍ

ເລົ່າຕັດບ່ຽງຖ້ອຍ ເຕັງພຸ້ນບໍ່ສເນີ (ອັນນຶ່ງເຫັນແກ່ຄວາມຄຽດແຄ້ນ ບັງບຽດຊັງກັນ ເລີຍເລົ່າເອົາຄວາມຜິດ ໃສ່ເຂົາຄວາມຮ້າຍ ຄຶດໃຄ່ໝາຍປັກປ້ຳ ທຳເວນບາບໃສ່ ຕັດໂທດໃຫ້ ສັນນັ້ນບໍ່ຄວນ ແທ້ແລ້ວ ອັນນຶ່ງໂລພານັ້ນ ມີໃຈມັກມາກ ເຣວແລ້ວ ເຫັນແກ່ສິນທ່ານຈ້າງ ເລີຍຊ້ຳບ່ຽງຄວາມ ອັນນຶ່ງພຍາຄະຕິນັ້ນ ເຫັນແກ່ຄວາມກົວ ຢ້ານແຕ່ຜິດອາດຍາ ບິດສູງຫົວໜ້າ ຕົກແຕ່ງຄວາມດີເຂົ້າ ຫານາຍໄດ້ປຽບ ປຽບຢ່ຳຝູງຜູ້ນ້ອຍ ໃຫ້ເສັຽຕ້ອຍຕ່ຳລົງ ຝູງນີ້ຄອງບາບແທ້ ໄປສູ່ອະເວຈີແທ້ວາຍ ໃຫ້ຄ່ອຍບັນເທົາ ຈັດຫຼີກໄກກອຍເວັ້ນ ຕັ້ງໃຫ້ໃສພາບແທ້ ຕາມແຜ່ງຄອງເມືອງ ແທ້ເນີ ມັນຍ່ອມດີໃຈຫຼາຍໄພ່ໄທຍໍຍ້ອງ ບັດນີ້ຈັກກ່າວຕ້ານ ຝູງຂຸນໃຈບາບ ກ່ອນເນີເຂົາຫາກໂລພາໃໝ ໄພ່ໄທຊາວບ້ານ ເຮັດໃຫ້ຝູງຊາວບ້ານຣິນຮ່ອນໄປມາ ເພາະມັນເຫຼືອແຮງເຂົາ ລວດເລີຍມາຮ້ອງຈົ້ງໃຫ້ເສນາພ້ອມ ພິຈານຕັ້ງຖີ ນັ້ນເນີ ຜິຫາກແມ່ນຄວາມໄພ່ນ້ອຍ ຊາວບ້ານໂທດມີ ນັ້ນແລ້ວ ຈົ້ງໃຫ້ເອົາແທ້ ຂືນເຂົາດັ່ງເກົ່າ ນັ້ນເນີ ກໍຈົ່ງຈັກຊອບຕັ້ງ ຄອງແທ້ສັ່ງສອນ ເຈົ້າເອີຍຜິບໍ່ຂືນໃຫ້ແທ້ ຜິດຮີດຄອງເມືອງ ແທ້ວາຍ ຄວນເສນາ ໃສ່

ຂັນໃໝຊ້າ ອັນນຶ່ງໃພຜູ້ຍັງໄປ່ຮູ້ ຍັງຣີດຄອງເມືອງ ກໍດີ ຄວນ ຖືກຂັນສິນນາ ຂາບຖວາຍເຖິງເຈົ້າ ຄັນວ່າຂຸນຫາກຍັງຊອບ ແທ້ ດອມຄອງອັນແມ່ນ ດັ່ງນັ້ນ ໃພຫາກມາກ່າວຮ້ອງ ຄວາມ ຖ້ອຍສ່ວນຂຸນ ຄັນວ່າໃພ່ຫາກແພ້ ດັດໃສ່ຂັນໃໝຊອບແລ້ວ ມັນຫາກເປັນຄວາມມັນ ຖືກຂັນແປງແລ້ວ ຜິວ່າໃພ່ບໍ່ຮູ້ ຄວນ ຖືກເສນາ ຊອບແລ້ວ ຄວນທີ່ນຳເມືອຖວາຍ ຂາບທູນເຖິງເຈົ້າ ຄັນວ່າໃພ່ບໍ່ມີຜິດແທ້ ຂຸນຄຸມມັດຜູກ ເອົານັ້ນ ໃຫ້ໃໝຂຸນ ສອງຮ້ອຍ ຄອງຕັ້ງແຕ່ຫຼັງ ແທ້ແລ້ວ ກັບທັງຂັນແປງນັ້ນ ເປັນເງິນຫ້າບາດ ຜິວ່າດັດດັ່ງນີ້ ສເມີແທ້ຊອບຄອງ ແທ້ແລ້ວ

ບັດນີ້ຈັກກ່າວຕັ້ງ ເຖິງແຫ່ງມີສຈານ ກ່ອນແລ້ວ ກໍ ຫາກຕາມຄອງເມືອງ ແຕ່ຫຼັງເດີມເຄົ້າ ອັນວ່າເມັຽຫຼັບຊູ້ ຜົວ ບໍ່ມີເຫັນ ດັ່ງນັ້ນ ຍັງເລົ້າມີຄືນມາ ຊ່ອຍປອງເອົາໄດ້ ອັນວ່າ ຂອງສິນສ້າງ ປັນເປັນສາມສ່ວນ ຄວນແລ້ວ ອັນວ່າສອງສ່ວນ ນັ້ນ ຄວນໄດ້ແກ່ຜົວຊອບແລ້ວ ສ່ວນນຶ່ງໃຫ້ ຜູ້ຊ່ອຍກຸມເອົາ ຕາມຄອງເມືອງ ກ່າວມາສັ້ນນີ້ ຄັນວ່າຜົວຫາກເສັຽຄ່າແລ້ວ ມາສູ່ເຮືອນຕົນ ກໍດີ ຄວນທີ່ຂາບເອົາເສັຽ ຄ່ານັ້ນມາໄວ້ ຜິວ່າ ຜົວບໍ່ເສັຽຄ່າຂາດແທ້ ໃຫ້ຄືນແກ່ລູງຕາ ແລ້ວມີຂັນສິນມາ

ແກ່ຜົວເງິນຮ້ອຍ ອັນນຶ່ງລຸງຕາໄດ້ ແປງປູກເປັນເຮືອນ ກໍດີ ຢ່າໄດ້ເອົາສິນບົດ ສິ່ງຄືນວາງໃຫ້ ນັ້ນເນີ ອັນນຶ່ງເມັຽຫຼີ້ນຊູ້ ມີໃຈສາໂຫດ ກໍດີ ມັນຫາກຄຶດຄິດລ້ຽວ ໝາຍຂ້າແຫ່ງຜົວ ດັ່ງນັ້ນ ມັນກໍປຸນປອງຂ້າ ຜົວເສັຽມໍຣະນາດ ເລີຍປະສິງໃສ່ ງ້ວນ ປາຮ້າຍໃຫ້ແກ່ຜົວ ແຫ້ຕາຍ ອັນນຶ່ງຄຶດໂລບລ້ຽວ ລັກ ລອບຂອງຜົວ ມັນກໍເອົາໄປທອມ ຝ່າຍຊ້າຍຜູ້ເປັນຊູ້ ຄວນໃຫ້ ພິຈານແຫ້ ຕອງກາຕັດຄີ ດູທ້ອນ ແມ່ນວ່າເສັຽຄ່າແລ້ວ ຜົວ ຂ້າກໍຫາກຄວນ ແຫ້ຕາຍ ອັນນຶ່ງເມັຽຫາກມີຊູ້ແລ້ວ ທັງໄດ້ ໃສ່ສິນໃໝ ດັ່ງນັ້ນ ທັງເລົ້າເອົາເມັຽຄືນ ເສບສິນສັນນັ້ນ ຈິ່ງ ໃຫ້ມີຂອງພ້ອມ ເງິນພັນໄປໄຖ່ ເອົາເນີ ຄວນໃຫ້ຜົວມີເງິນ ຮອດຮ້ອຍ ທູນເຈົ້າພຣະບອດເມືອງ ແຫ້ແລ້ວ ຄັນວ່າຄາຣະ ວະເຈົ້າ ຈອມຫົວພູວະນາດ ດັ່ງນັ້ນ ພຣະຫາກອະນຸຍາດແລ້ວ ວາງໃຫ້ກໍຈິ່ງເອົາ ຊອບແລ້ວ ອັນນຶ່ງເມັຽມີຊູ້ແລ້ວ ຄຶດບາກ ໃນໃຈ ພອບເລົ້າເລວກັນຕາຍ ຄອບສານສິນງ້ວນ ອັນວ່າຂອງ ຜູ້ຊູ້ ມີທັງໜ້ອຍນາກ ກໍດີ ຫາກມີຄອງກ່າວໄວ້ ເອົາໃຫ້ໃສ່ ສິນໃໝ ຫັ້ນແລ້ວ ອັນນຶ່ງເມັຽຫຼີ້ນຊູ້ ຜົວເລົ້າຍັງເຫັນ ດັ່ງນັ້ນ ຄວນຂ້າຕາຍທັງສອງ ພ່າກັນລາງແລ້ວ ມີວ່າທຽບເອົາໄດ້

ຊາວເມືອງຈັກເປັນໂທດ ຈິງແລ້ວ (ເຂົາບັ້ນມີໂທດແທ້ ຊາວ
ບ້ານປນາດຄອງ ບັ້ນແລ້ວ) ຄວນຄາດໃຫ້ ໂທດໃຫ່ງເຕັມແຮງ
ເຫດວ່າເສັງພິມເມືອງ ລ່ວງກາຍຄອງເຖົ້າ ພີວ່າເຂົາວອນແທ້
ຂໍຍອມຍັງໂທດ ດັ່ງນັ້ນ ເງິນຫ້າບາດໃຫ້ ໃໝທ້ອນເຊີງນັ້ນ
ອັນນຶ່ງຊູ້ຫາກໄປຊູ່ຂ້າ ຜົວຕາຍນໍຣະບາດ ສັນນັ້ນ ໃຫ້ຂ້າຊູ້
ເມັຽນັ້ນພໍ່ສອງ ແທ້ເນີ ອັນວ່າຂອງຊູ້ນັ້ນ ຄວນມອບລຸງຕາ
ເປັນຂັນໃໝ ຂາບຖວາຍເຖິງເຈົ້າ.

ບັດນີ້ຈັກກ່າວຫ້ອງ [1] ຊະຣາການເຖົ້າແກ່ ກ່ອນແລ້ວ
ດັ່ງທີ່ຂັນໃໝນັ້ນ ປຸດລິງເຖິງຖ່ອງ ເປັນຫ້າຮ້ອຍ ສັນນັ້ນກໍຈິງ
ຄວນ ຊອບດາຍ ສຳລັບຂັນແປງນັ້ນ ຖອງລິງເຖິງຖ່ອງ ຂັນ
ໃໝເປັນສອງຮ້ອຍຫ້າບາດແທ້ ຄອງດັ່ງແຕ່ຫຼັງ ຂັນສິນມາ
ນັ້ນ ຜ່າຖ່ອງຂັນແປງ ກໍຫາກຕາມຄອງເມືອງ ກ່າວມາສັນນີ້
ແມ່ນວ່າເສນາທ້າວ ທັງເມືອງບັດໃຫ່ງ ກໍດີ ຂັນແປດຮ້ອຍ
ມີແທ້ຄ່າຄຳ ອັນວ່າຂັນໃໝນັ້ນ ປຸດລິງຖ້ານຕ່ຳ ຄືວ່າເປັນສີ່
ຮ້ອຍ ສັນນັ້ນຊອບຄອງ ແທ້ແລ້ວ ສ່ວນວ່າຂັນແປງນັ້ນ ຜ່າ
ຖ່ອງຂັນໃໝ ອັນວ່າຂັນສິນມາ ຜ່າຫອງຂັນແປງນັ້ນ ແມ່ນ

---

(໑) ຊະຣາການເຖົ້າແກ່ ຕາມຕົ້ນສະບັບວ່າ ສາລາຊະກະກຸນການເຖົ້າແກ່

ວ່າເສນາທ້າວ ທຸກພາຍຂຸນໃຫ່ຍ ກໍດີ ໃຫ້ໃສ່ຫົກຮ້ອຍແທ້ ຂັນນັ້ນຄ່າຄໍ ອັນວ່າຂັນໃໝນັ້ນ ໃຫ້ປຸດລົງຜ່າຖ່ອງ ໃຫ້ວ່າ ເປັນສາມຮ້ອຍ ຈົງແທ້ຊູ່ຄົນ ຫັ້ນແລ້ວ ຄັນວ່າຂຸນກວານໃຫ້ ປຸດລົງຖ້ານຕ່ຳ ນັ້ນເນີ ໃຫ້ເປັນຂັນຫ້າຮ້ອຍ ມີແທ້ຄ່າຄໍ ເຈົ້າ ເອີຍ ຕັ້ງແຕ່ນັ້ນ ຕາມແທ່ງກະກຸນນັ້ນເນີ ຕາມລຳດັບໃຜມັນ ຜ່າລົງເປັນຖ້ານ ຟັງເປີເສນາທ້າວ ແສນພຍາຂຸນໃຫ່ຍ ຟັງ ທ້ອນ ໃຫ້ຈື່ແຈ້ງ ຈຳໄວ້ຢ່າລືມ ແທ້ດາຍ ຕາມແຕ່ໂທດໜັກ ແທ້ ປານກາງຖ້ານຕ່ຳ ກໍດີ ຕັດໃຫ້ໂສພາບແທ້ ຢ່າໄດ້ບ່ຽງ ຄອງ ແທ້ເນີ ອັນວ່າຄອງຝູງນີ້ ອິນແຕ່ງແປງມາ ແທ້ດາຍ ຢ່າທຳມິສຈານ ຈາກຜົວເມັ່ຽແທ້ ອັນນຶ່ງຝູງໝ້າຍຮ້າງ ຝູງ ບ່າວນົງຮາມ ກໍດີ ເຂົາຫາກປຸນປອງເອົາ ຍາກຊາກໍເລີຍໄດ້ ຄັນວ່າຍັງໄດ້ແລ້ວ ຂອງເກົ່າຄືນມາ ດັ່ງນັ້ນ ຄວນທີ່ໃໝມັນຊ້ຳ ເປັນເງິນຫ້າບາດ ຄວນແລ້ວ ຜີເຈົ້າກວານໄປຈອບແທ້ ຄືດ ຄຽດໂກທາ ດັ່ງນັ້ນ ເລີຍຂ້າເສັຽ ວ່າລືລາງແລ້ວ ອັນນຶ່ງໃຜໄດ້ ໄປລັກເຂົ້າ ໃນນາຂອງທ່ານ ສັນນັ້ນ ເຈົ້າຂອງເຫັນຂ້າຖິ້ມ ລາງແລ້ວໂທດບໍ່ມີ ຜີວ່າບາຫາກບໍ່ທັນຂາຍແທ້ ໃຫ້ຕັດໃສ່ ສິນໃໝ ນັ້ນທ້ອນ ແມ່ນວ່າຂອງຝູງນັ້ນ ຈຳໃຊ້ຊອບຄອງ ແທ້

ແລ້ວ ຄັນຫາກຍັງເລົ່າໄດ້ ຂອງເກົ່າຄືນມາ ດັ່ງນັ້ນ ຈິ່ງໃຫ້ ໃສ່ໂທດຊ້ຳ ພໍຫ້າບາດເງິນ ທັ້ນທ້ອນ ໃພຜູ້ຍັງລັກເຂົ້າ ໃນ ເບັ້ງຂອງທ່ານ ກໍດີ ຄັນວ່າເຈົ້າຂອງເຫັນ ຂ້າຕາຍລາງແລ້ວ ຄັນຫາກບໍ່ຂ້າແທ້ ຈຳໃສ່ສິນໃໝ ນັ້ນເນີ ໃຫ້ມັນຫາມາແທນ ທໍ່ກັບຄວນແທ້ ຜິວ່າຍັງເລົ່າໄດ້ ຂອງເກົ່າຄືນມາ ດັ່ງນັ້ນ ຄວນ ທີ່ດັດຂັບໃໝ ທໍ່ມູນອັນເຄົ້າ ຄັນວ່າຝູງໃດໄດ້ລັກເຄື່ອງແທ້ ທັງ ລາງວ້າວດາບ ກໍດີ ຄວນໃຫ້ໃຊ້ຮອດຫ້າເຖິງແທ້ ສັນນັ້ນຊອບ ຄອງ ແທ້ແລ້ວ ຜິວ່າຍັງເລົ່າໄດ້ ຂອງເກົ່າຄືນມາ ດັ່ງນັ້ນ ໃຫ້ ໃສ່ຂັບສິນມາ ທໍ່ຂອງຝູງນັ້ນ ຜິວ່າເປັນຊຸບແທ້ ຂັບຄ່າຄໍດັດ ໃສ່ ໃຫ້ຄ່ອຍຖອນຍັດຊ້ຳ ເສັ້ງແທ້ຖອດຄືນ ແທ້ເນີ ໃພຮັກສາ ເຄື່ອງເຈົ້າ ພອຍເລົ່າເລີຍເສັ້ງ ດັ່ງນັ້ນ ແມ່ນວ່າຄືນໃດເຫັນ ກໍ ໃຫ້ເອົາຖວາຍເຈົ້າ ໃພຜູ້ຍັງເລົ່າໄດ້ ລັກຄາວດກັບໄຖ ທັງແອກ ກໍດີ ໃຫ້ມັນໃຊ້ຫ້າທໍ່ແທ້ ສັນນັ້ນຊອບຄອງ ເຈົ້າເອີຍ ຜິວ່າ ຍັງເລົ່າໄດ້ ຂອງເກົ່າຄືນມາ ດັ່ງນັ້ນ ໃຫ້ໃສ່ຂັບສິນມາ ທໍ່ຂອງ ຝູງນັ້ນ ອັນນຶ່ງຂອງຫາກໄດ້ພິຈາຣະນານັ້ນ ປຸນເປັນສາມສ່ວນ ສ່ວນນຶ່ງນັ້ນ ຖວາຍເຈົ້າຣາຊເຮງ ຊອບແລ້ວ ສ່ວນນຶ່ງໄວ້ແກ່ ເຈົ້າ ວັດຖຸເກົ່າຕາມຄອງ ນັ້ນເນີ ສ່ວນນຶ່ງໄວ້ຂຸນກວານ ຊອບ

ຄອງຄວນແທ້ ອັນນຶ່ງຜູ້ໃດປາກກ່າວຕ້ານ ບັກທ່ານເປັນໂຈນ
ດັ່ງນັ້ນ ບາດວ່າພາຍລຸນມາ ລວດບໍ່ເປັນໂຈນແທ້ ຄວາມບໍ່
ມີສັກຂີແທ້ ບັກຕູ່ເປັນໂຈນ ດັ່ງນັ້ນ ຄວນທີ່ກັດໂທດໃຫ້ ມັນ
ນັ້ນຖ່ອງຂັບ ຫັ້ນທ້ອນ ອັນນຶ່ງໃຜຜູ້ມີໃຈລ້ຽວ ລັກເອົາເມັຽທ່ານ
ຫີນັ້ນ ຄວນທີ່ກັດແຕ່ງໃຫ້ ມັນໃຊ້ຄ່າຄົນ ຄັນວ່າບັງເລົາໄດ້
ເມັຽເກົ່າຄືນມາ ດັ່ງນັ້ນ ຄວນທີ່ໃຫ້ມັນໃຊ້ ເຄິ່ງແທ້ສີຂັບ ຫັ້ນ
ແລ້ວ ອັນວ່າຄອງໃໝນັ້ນ ຂັບຄາຄໍຕັດໃສ່ ກໍຈິ່ງຄວນຊອບແທ້
ຄອງຕັ້ງແຕ່ງມາ ແທ້ດາຍ ຝູງໃດນຳມາໄດ້ ຄືນຫາຜົວເກົ່າ
ມັນນັ້ນ ອັນວ່າຖ່ອງຄ່ານັ້ນ ຄວນໃຫ້ແກ່ມັນ ຊອບແລ້ວ ຄັນ
ວ່າບໍ່ໄດ້ຜູ້ລັກນັ້ນ ໄດ້ແຕ່ຄົນດຽວ ບິງນັ້ນ ຄຸນມັນມີ ຖ່ອງຄ່າ
ຫົວນຳໃຫ້ ຄັນວ່າເອົາໂຈນໄດ້ ປຸນເປັນສາມສ່ວນ ສ່ວນນຶ່ງ
ໃຫ້ຜູ້ໄດ້ ມານັ້ນຕອບຄຸນ ອັນນຶ່ງໃຜເປັນໃຈໂຮຮ້າຍ ລັກເອົາ
ຂອງທ່ານ ຫີນັ້ນ ໃຫ້ປ່າວຮ້ອງ ນຳສົ້ນໄຕ່ຮອຍ ຄັນວ່າຮອດ
ເຂດບ້ານ ເຖົ້າແກ່ຝູງໃດ ກໍດີ ກໍຈິ່ງຈຳເຂົານຳ ໄຕ່ຮອຍເມືອ
ໜ້າ ຄັນວ່າຮອດບ້ານໜ້າ ຈຳໄຕ່ເດີນໄປ ນັ້ນຜີ ເຖິງແດນ
ຝູງ ໄພ່ໄທຫັງຂ້າ ເຂົາເລົ່ານຳໄປພົ້ນເຂດບ້ານ ຮອດທີ່ແດນ
ໃດ ກໍດີ ເຂົາຈິ່ງວາງມອບໃຫ້ ຮອຍນັ້ນແກ່ໄທ ດັ່ງນັ້ນ ໄທ

ຈຶ່ງນຳໄດເຂົ້າ ໝົດທີ່ຮອຍໂຈນ (ໝົດຫົນທາງ ທີ່ຊິນຳໄປໄດ້
ແລ້ວຈຶ່ງກົດຈຳໄວ້ ເປັນການຄັກແນ່) ຂຽນຂີດໄວ້ ເປັນແທ້
ສັກຂີ ອັນນຶ່ງຄັນຍັງສົງກາດ້ວຍ ຮອຍຕີນປຸນແປກ ກັນນັ້ນ
ຈຶ່ງໃຫ້ພ້ອມ ກັນແທ້ແທກຮອຍ ທັ້ນທ້ອນ ກໍຫາກກົດເອົາ
ແລ້ວ ນຳສເນີເສນາ ເມື່ອໃດ ຈຶ່ງໃຫ້ພັດຕັ້ງເຄົ້າ ຮອຍນັ້ນ
ແທກດູ ນັ້ນເນີ ແມ່ນວ່າມັນຫາກກາຍດົງດ້າວ ຂີຣີຂົງເຂດ
ໃດນັ້ນ ກໍຈຶ່ງຫາຍເສັ້ງແທ້ ຄວາມສົງກາໝົດໂຫດ ກໍຫາກ
ໝົດໂຫດແລ້ວ ຊາວບ້ານສວ່າງກະຫາຍ ເຈົ້າເອີຍ ອັນນຶ່ງຄົນ
ໄຫຼນ້ຳ ແຂວນຄໍໄມ້ຫັບ ກໍດີ ແມ່ນວ່າໃຜຈອບພໍ້ ເອົາໄດ້ບໍ່
ຕາຍ ດັ່ງນັ້ນ ອັນວ່າຄ່າຫົວນັ້ນ ປຸນເປັນຜ່າຄ່ອງ ຄ່ອງນຶ່ງຄຸ້ມ
ບຸນຄຸນ ແກ່ມັນເອົາໃຫ້ ອັນນຶ່ງຄົນໃດໄດ້ ກົນສານງ້ວນເພື່ອ
ມີຜູ້ມາຈອບພໍ້ ເອົາໄວ້ບໍ່ວາຍ ດັ່ງນັ້ນ ໃຫ້ຕອບຕັ່ງ ຄຸນຄ່າ
ພຽງສົມ ເໝືອນດັ່ງຄຸນມະນາຄຸນ ແກ່ຄົນໄຫຼນ້ຳ ຄົນໃດໄດ້
ເປັນໜີ້ ໜີໄປປະເທດຕ່າງ ກໍດີ ມີຜູ້ໄປຈອບພໍ້ ເອົາໄດ້ຕ່າວ
ຄືນ ອັນວ່າຄ່າຫົວນັ້ນ ປຸນແປງສອງສ່ວນ ສ່ວນນຶ່ງໃຫ້ຜູ້ໄດ້
ມານັ້ນຕອບຄຸນ ຊອບແລ້ວ.

ບັດນີ້ຈັກກ່າວເຖິງຂ້ອຍ ເມັຽນາງນ້ອຍໜຸ່ມ ກ່ອນ

ແລ້ວ ເຂົາເລົ້ານີ້ຄວາມຊັງ ລວດໜີເຮືອນປ້າວ ເຂົາກໍໄປເພິ່ງ
ເສນາທ້າວ ເມືອງໃດຂ້ອນໄພ່ ກໍດີ ໃນທີ່ໄກແລໃກ້ ເມືອງ
ທ້າວທີ່ເຊງ ຊອບທີ່ມີຄຳແທ້ ຄອບເມື່ອວັນລຸນ ເມື່ອໃດ ປ່າ
ໃຫ້ກາຍຫຼາຍວັນ ໄປຄວນຄອງແທ້ ຄັນວ່າຮອດມື້ເຊົ້າ ກອງ
ງາຍເຖິງທ່ຽງ ກໍດີ ຢ່າໃຫ້ກາຍມື້ຄ່ຳແທ້ ຄວນໃຫ້ຄອບຄວາມ
ຄັນວ່າບ້ານໄກກັນແທ້ ພໍປະມານມື້ນຶ່ງ ກໍດີ ຫຼືຫາກໄກກວ່າ
ນັ້ນ ຫຼາຍມື້ຖ່ອງເຖິງ ຄວນທ່ຽວແທ້ ໄປຄອບອັນດຽວ ກັບ
ໃຫ້ນຳສິບໃໜ ນອບຖວາຍພຣະເມືອງເຈົ້າ ອັນວ່າໂຮງພຍາ
ນັ້ນ ໃຫ້ມີເງິນເບັ້ງນຶ່ງ ແທ້ດາຍ ກັບທັງຊາວໜ່ວຍເບັ້ງ ບໍ່ຂຶ້ນ
ຂາບຖວາຍ ອັນວ່າສິບໜ່ວຍເບັ້ງ ບໍ່ນອບເຮືອນແສນ ຝູງນັ້
ເປັນສິບໃໜ ຊອບຄອງຄວນແທ້ ຈິ່ງໃຫ້ມີຂອງພ້ອມ ທັງ
ເງິນພໍບາດ ນັ້ນເນີ ສິບໜ່ວຍເບັ້ງ ນຳໃຫ້ຊອບຄອງ ແທ້ແລ້ວ
ອັນນຶ່ງຫ້າໜ່ວຍເບັ້ງ ເຮືອນໝູ່ເສນາ ເຮືອນຂຸນກະວານ ດັ່ງ
ດຽວກັບນັ້ນ ເຫດທີ່ທຳຜິດແທ້ ໜີໄປມີຄອບໃພນັ້ນ ກໍຈິ່ງດີກ
ແຕ່ງໃຫ້ ມີພ້ອມເຄື່ອງແຂງ ແທ້ແລ້ວ ຈິ່ງໃຫ້ມີຂວັນຜ້າ ທັງ
ເງິນຫົກຊີກ ນັ້ນເນີ ກັບທັງຫ້າໜ່ວຍເບັ້ງ ນຳໃຫ້ຄວບຄວາມ
ແທ້ດາຍ ຄັນແມ່ນເຮືອນບົດຖ້ວນ ສູນວັງທັງສີ ກໍດີ ຈິ່ງໃຫ້

ມີເຫຼັກພ້ອມ ທັງເງິນຫ້າຊີກ ກັບທັງຫ້າໜ່ວຍເບັ້ງ ນຳໃຫ້ຊອບຄອງ ແຫ້ແລ້ວ ຄັນແມ່ນເຮືອນເສນາຖ້ານ ຂຸນພັນຍິດໃຫ່ງ ກໍດີ ໃຫ້ມີເຫຼັກພ່ຳພ້ອມ ສີສ້ຽນຊີກເງິນ ກັບທັງສີໜ່ວຍເບັ້ງ ນຳໃຫ້ຢ່າກາຍ ແຫ້ດາຍ ຜິວ່າເຮືອນຂຸນແກ້ວ ມີເງິນສາມຊີກ ກັບທັງຊາວໜ່ວຍເບັ້ງ ນຳໃຫ້ຊອບຄອງ ແຫ້ແລ້ວ ຄັນແມ່ນຊາວກວານຄ້າ ກວານເພັ້ງພາຍນອກ ໃຫ້ມີເຫຼັກພ່ຳພ້ອມ ສອງສ້ຽນຊີກເງິນ ນັ້ນແລ້ວ ອີກກັບສອງໜ່ວຍເບັ້ງ ນຳຄອບຄອງຄວນ ດາມພິມເມືອງ ເລົາມີສັບນັ້ນຄັນວ່າເຮືອນໄພ່ນ້ອຍ ຝູງໝູ່ຊາວເມືອງ ກໍດີ ໃຫ້ມີເຫຼັ້ກພ່ຳພ້ອມ ທັງເງິນພ໌ຊີກ ນັ້ນເນີ ກັບທັງໜ່ວຍນຶ່ງເບັ້ງ ນຳໃຫ້ກໍຈຶ່ງຄວນ ແຫ້ແລ້ວ ຜິວ່າຄືນນຳໃຫ້ແລ້ວ ເຄື່ອງຂິ້ນແຂງເຮືອນດັ່ງນັ້ນ ພາຍລຸນເລີຍ ໂກດກຸມຄືໄວ້ ຄວນຮອດເສນາໄຫວ້ໃຫ້ເມືອທູນພູວະນາດ ຫາກຈັກນຳຖອດໃຫ້ ເອົາໄດ້ທ່ຽວຄືນນັ້ນແລ້ວ ຜິວ່າບໍ່ແຂງເຮືອນແຫ້ ກາຍຄອງຈັກມີໂທດ ເທດອ່າດູງ່າຍພົ້ນ ງານແຫ້ລ່ວງຄອງ ແຫ້ແລ້ວ ຜິວ່າຄາວໄກແຫ້ສອງວັນໃຫ້ມາຄອບ ຄັນວ່າຍັງໃກ້ແຫ້ ວັນນັ້ນຢ່າກາຍ ແຫ້ເນີຄັນວ່າຫາກບໍ່ມາຄອບແຫ້ ມີໂທດເຖິງຄອງ ແຫ້ແລ້ວ ຜິວ່າ

ເຈົ້າເຮືອນບໍ່ຂ່າວໃຫ້ ຄົນເພິ່ນມາຫາ ດັ່ງນັ້ນ ຄັນວ່າເຈົ້າເຂົາ ເຫັນ ກໍໃຫ້ເອົາຄວນແທ້ ຜີວ່າເຈົ້າເຮືອນຍັງກ່າວຕ້ານ ຈານໍ່ ຂືນຄວາມ ດັ່ງນັ້ນ ຄວນໃຫ້ຕັດຂັບໃໝ ໃສ່ນັບເຖິງຮ້ອຍ ຜີວ່າ ຍັງຢູ່ຫັ້ນ ເຖິງຂວບປາຍປີ ດັ່ງນັ້ນ ລາງຄົນເລີຍຕາຍເສັຽ ຈຸ່ມ ຈົມໄປນັ້ນ ຄວນທີ່ຕັດແຕ່ງໃຫ້ ນັບໃຊ້ຄ່າຄົນ ຊອບແລ້ວ ຄົນ ໃດເຫັນຫາສເຂົ້າ ຄົນເພິ່ນລັກໜີ ໄປຫົບໃດ ຢູ່ໄກລືໃກ້ ນັບ ເຫັນແລ້ວ ຄືນມາເວົ້າຕໍ່ ດັ່ງນັ້ນ ເງິນນຶ່ງບາດແທ້ ຄວນໃຫ້ແກ່ ນັບ ຊອບແລ້ວ ຜີບໍ່ຄອບເຈົ້າໜີ້ ຄອບສີເສນາ ນັ້ນດາຍ ຄຸນ ເຂົາມີຮ້ອຍບາດເພື້ອງ ນຳໃຫ້ຢ່າຫຼໍ ແທ້ເນີ ອັນນຶ່ງຄົນໃດໂກ ຫາຮ້າຍ ຄຽດດ່າຕີເມັຽ ດັ່ງນັ້ນ ໂທດບໍ່ສົມພໍດີ ຂ້າພັນກະທຳ ຮ້າຍ ເມັຽລວດປົບປ່ວງຂື້ນ ເຖິງໂຮງພູວະບາດ ດັ່ງນັ້ນ ຄວນ ທີ່ໃຫ້ໄຖ່ແທ້ ດ່ອງຄ່າຫົວຄົນ ນັ້ນແລ້ວ ກັບທັງແຂງເຮືອນແທ້ ບໍຣະບວນທຸກສິ່ງ ນັ້ນເນີ ຄອງຫາກຕັ້ງແຕ່ງໄວ້ ສັບນີ້ແຕ່ຫຼັງ ແທ້ແລ້ວ ຜີວ່າເລືອດບໍ່ອອກແທ້ ລວດແລ່ນເຖິງໂຮງ ດັ່ງນັ້ນ ໃຫ້ມີຂັນສົມມາ ຂາບຖວາຍພໍຮ້ອຍ ຄັນຫາກມັນຕີແທ້ ຍັງ ບໍ່ພໍເລືອດອອກ ສັບນັ້ນ ໃຫ້ແຕ່ແຂງຄ່າປ້າວ ເຮືອນນັ້ນຊອບ ຄອງ ອັນນຶ່ງເມັຽຫາກທຳຜິດແທ້ ຕີພໍເລືອດອອກ ກໍດີ ແລະ

ໄດ້ແລ່ນຂຶ້ນປ້າວ ເຮືອນແຫ່ງຝູງໃດ ກໍດີ ກໍບໍ່ມີໂທສາ ນາກ ຄວາມສັງແທ້ ຄວນທີ່ແຂງເຮືອນໃຫ້ ສິນຄອງແລ້ວຢ່າ ຢ່າ ໄດ້ລອນລ່ວງແທ້ ຄອງເຖົ້າບໍ່ຄວນ ແທ້ແລ້ວ ອັນນຶ່ງຜິວຫາກ ກິນເຫຼົ້າບ້າ ດີເມັງໜີຜ່າຍ ໄປນັ້ນ ແມ່ນວ່າເມືອເພິ່ງຫ້ອງ ເຮືອນປ້າວແຫ່ງໃຜ ດັ່ງນັ້ນ ອັນວ່າຄອງກ່າວໄວ້ ມີແຕ່ແຂງ ເຮືອນ ເຈົ້າເອີຍ ຢ່າໄດ້ລອນກາຍຄອງ ຣີດມີປະຖົມຕັ້ງ ອັນນຶ່ງ ຄັນວ່າສອງທີ່ແລ້ວ ແມ່ນເຮືອນແສນໝື່ນ ກໍດີ ຂັບສິນມາ ໃສ່ເງິນຫົກເບັ້ຽ ແຂງເຮືອນນັ້ນ ເໝືອນດັ່ງພາຍຫຼັງ ຕາມ ຄອງມີ ທີ່ຈານາແລ້ວ ອັນວ່າເລືອດບາດຄ້ອນ ຣ້ອຍນຶ່ງສິນ ມາ ແທ້ແລ້ວ ເປັນຄອງຄວນ ຣີດມີມາໄວ້ ຜິວ່າເຮືອນເສນາ ແທ້ ໃຫ້ສິນຣ້ອຍນຶ່ງ ອັນວ່າເລືອດບາດຄ້ອນ ສາມເບັ້ຽແມ່ນ ຄອງ ແທ້ແລ້ວ ອັນນຶ່ງຖ້າແມ່ນເຮືອນຂຸນພັນນັ້ນ ໃຫ້ສິນມາ ຫົກບາດ ອັນວ່າເລືອດບາດຄ້ອນ ປາເຟື້ອງຊອບຄອງ ແທ້ ແລ້ວ ຜິວ່າເຮືອນຂຸນກວ້ານ ໃຫ້ສິນມາຫ້າບາດ ອັນວ່າເລືອດ ບາດຄ້ອນ ຫ້າເບັ້ຽຊອບຄວນ ເຈົ້າເອີຍ ຄັນວ່າໃຫ້ຊອບແທ້ ສິນ ມາສາມບາດ ຈິງບໍ່ໜັກພຸ້ນພີ້ ສິນດ້ານຊັ່ງບອບ ນັ້ນນາ ອັນ ນຶ່ງພໍແຕ່ຕີເລັກນ້ອຍ ບໍ່ມີພໍເລືອດອອກ ສັນນັ້ນ ໃຫ້ແຕ່ແຂງ

ເຮືອນເຂົາ ຊອບຄອງຄວນແລ້ວ ຄັນວ່າເຮືອນຂຸນບານນັ້ນ ສົມນາຫ້າບາດ ອັນວ່າເລືອດບາດຄ້ອນ ເງິນເບັ້ຽຊອບຄອງ ຫັ້ນແລ້ວ ຄັນວ່າເຮືອນຈ່າບ້ານ ມີເງິນເບັ້ຽນຶ່ງ ຄ່າບາດຄ້ອນ ເຖິງແທ້ບາດດຽວ ຜິວ່າເຮືອນໄພ່ນ້ອຍ ໃຫ້ສົມນາພໍບາດ ນັ້ນເນີ ອັນວ່າເລືອດບາດຄ້ອນ ເງິນເຟື້ອງຈິ່ງຄວນ ເຈົ້າເອີຍ ອັນວ່າເງິນກ່າວນີ້ ຢ່າສິງກາວ່າອັນຕ່າງ ສັງຫ້ອນ ຫາກແມ່ນເບັ້ຽຊີກສ້ຽວ ເງິນຮ້ອຍນ້ຳສາມ ຫັ້ນແລ້ວ.

ບັດນີ້ຈັກກ່າວຫ້ອງ ຈາຄວາຍແມບສຶກ ກ່ອນແລ້ວ ຄັນວ່າເຫື້ອນຶ່ງນັ້ນໃຫ້ມັນມີໄກ່ພ້ອມ ທັງເງິນບາດນຶ່ງ ໃຫ້ເຈົ້າເຮືອນລ້າ ໆ ບໍມີໄດ້ສູ່ຂວັນ ດອກບາ ຄັນວ່າສອງທີນັ້ນ ໃຫ້ມີໝູພ້ອມທັງເງິນເບັ້ຽນຶ່ງ ອັນວ່າຄອງແຂງເຮືອນ ໃຫ້ສູ່ຂວັນກັບແທ້ ແມ່ນວ່າເຈົ້າເຮືອນໄດ້ເຮັດຮົ້ວ ທັງແກວດໝານໝາແລ້ວນັ້ນ ບັງເລົ້າຊູຊີດິນ ເຂົາບອບຈິບໄດ້ ມັນຕັ້ງທຳເອນໃຫ້ເຫັນກັບອຸບາດ ໃຫ້ຫາໂຕມາປຸ່ງໄວ້ ໂຕນັ້ນຢ່າກະທຳ ແທ້ດາຍ ຄັນວ່າໄດ້ມາແລ້ວ ກໍຈົ່ງຂ້າພະລີເມືອງຂວັນສູ່ ນັ້ນເນີ ອັນວ່າເຟືອງເທິງຂຶ້ນແກ່ເຈົ້າ ຄວາຍແທ້ແມ່ນຄອງ ເຟືອງລຸ່ມໃຫ້ ຜູ້ທີ່ກະທຳຂວັນ ກໍຈົ່ງກິນຕຳຣາ ຖືກຄອງຄວນແທ້

ອັນນຶ່ງຄວາຍຊຸບປ້າວ ເຮືອນຊານຫັກເປ່ໄປນັ້ນ ທີ່ນຶ່ງນັ້ນ ໜູເຫຼົ່າສູ່ຂວັນ ຊອບແລ້ວ ຄັນຫາກຍັງບໍ່ແລ້ວ ຊຸບຕື່ນເພແຖມ ຄວນທີ່ຈັບໂຕມັນ ຂ້າເສັຽປ່າໄວ້ ຜິວ່າຍັງຖືກແທ້ ໃຫ້ນຳຄອງໄທຣີດ ຈຶ່ງຜີ ອັນນີ້ຄອງກ່າວໄວ້ ປະຖົມເຖົ້າແຕ່ລາງ ແທ້ດາຍ ອັນນຶ່ງຊຸບເລົ້າເຂົ້າ ຫຼືວ່າຄັນໄດ ກໍດີ ທີ່ນຶ່ງຫຼືສອງທີ່ ທໍ່ໃດ ຄໍາແລ້ວ ແນວຄວາຍຮ້າຍ ຈັ່ງໂຮອຸບາດ ທຳເຫດໃຫ້ ຮົນຮ້ອນແກ່ຄົນ ຄວນໃຫ້ຣີຮໍ່າຖ້ວນ ຕອງໄຕ່ຕາມຄະດີ ຄວນສູ່ຂວັນ ເຫຼົ່າໜູເງິນເບັ້ງ ຄັນວ່າສາມທີ່ແທ້ ຟັນຕິວກັບປະຖິ້ມຈຶ່ງເທື້ນ ປ່າໄດ້ລັ້ງງ ຂວາງເຈົ້າຈຸ່ມຕິວ ແທ້ແລ້ວ ເຫດວ່າຜີຂວາງເຂົ້າ ສູນມັນຫາບ່ອນ ມັນຈຶ່ງຢູ່ບໍ່ໄດ້ ເລວມ້າງມຸ່ນເຮືອນ ຫັ້ນແລ້ວ.

ບັດນີ້ຈັກກ່າວຫ້ອງ ຫົນແຫ່ງກະທຳນາ ກ່ອນແລ້ວ ຜິວ່າເໜືອງນາຣິດ ຮອດກັບຫຼາຍເຈົ້າ ອັນວ່າໂຕກວນບ້ານ ເດີນເຂົ້າຮ້ອງປ່າວ ດັ່ງນັ້ນ ມັນກໍຄ້ານ ປຸນສ້າງຊອບແປງ ຄວນທີ່ອານັດໃຫ້ ສຽງຂີໃຫ້ແຈບ ທາງພຸ້ນພີ້ ສອງເບື້ອງ ສາກສີ ແທ້ດາຍ ປ່າໃຫ້ນ້ຳ ໄຫຼຜ່ານນາມັນ ເຫດວ່າມັນຫາກຄ້ານ ໃຈຖ່ອຍພາໂລ ເອົາແຕ່ຜົນຮວາຍຮຳ ກໍຈຶ່ງສົນຄວນ

ຄ້ານ ເມື່ອໃດມັນໃຈລ້ຽວ ໂລພາລັກລອບ ເອົານັ້ນ ອັນວ່າເງິນ ຫ້າເພັ້ງ ໃຫ້ຊ້າຊອບຄອງ ແທ້ແລ້ວ ຜິວ່າມັນຫາກຍັງຊ່ອຍ ແທ້ ປຸນແປງດີກແດ່ງ ຝ່າຍນັ້ນ ກໍຈຶ່ງແຈກແບ່ງໃຫ້ ສົມແທ້ ແກ່ມັນ ເຈົ້າເອີຍ ຄັນວ່າມັນຫາກມັກມາກແທ້ ຫາກເລົາຕັດ ເອົາ ດັ່ງນັ້ນ ຄວນທີ່ໃຫ້ມັນເສັຽ ຫ້າບາດເງິນຄວນແທ້ ຄັນ ວ່າມັນຊ່ອຍແທ້ ເຈົ້າຝ່າຍບໍ່ກູບາ ເມື່ອໃຫ້ເສບາຕັດ ຂັບໃຫ້ ໃສ່ມັນພໍຮ້ອຍ ຜູ້ນຶ່ງໝັ້ນລຽບນ້ຳ ໄດ້ທີ່ເໜືອງຝ່າຍ ດັ່ງນັ້ນ ຜູ້ນຶ່ງບໍ່ໄປນຳທັງຫຼາຍ ລັກເອົາຝາຍນ້ຳ ເພິ່ນບອກສອງທີແລ້ວ ສາມທີມັນບໍ່ຢ່າ ມັນຍັງດົນລັກແທ້ ຄວນໃຫ້ຫ້າບາດ ຄັນ ວ່າຜູ້ລັກນັ້ນ ໃຈກ້າບໍ່ເສັຽ ດັ່ງນັ້ນ ຜິວ່າຕາມຄອງເມືອງ ຂ້າ ຕາຍນໍຣະມ້ຽນ ອັນວ່າຝູງພີ່ນ້ອງ ຢ່າເອັນອ່າວຫາມັນ ສັງ ຫ້ອນ ຄັນວ່າໂຈນຫາກຂ້າ ເຈົ້າຝ່າຍຕາຍນໍຣະນຶງ ເສັຽນັ້ນ ຄວນທີ່ຂ້າ ໂຈນຮ້າຍພ່ຳກັນ ຫັ້ນແລ້ວ ອັນນຶ່ງຝ່າຍພຍາເຈົ້າ ເສນາແສນໝື່ນ ກໍດີ ເດັກນ້ອຍເຂົາບໍ່ຮູ້ ໄປມ້າງເປ່ເສັຽ ດັ່ງ ນັ້ນ ໃຫ້ບອກແກ່ພີ່ນ້ອງ ພໍ່ແມ່ລຸງຕາ ເຂົາເນີ ເຂົາຫາກໄປ ແປງດີ ຢ່າວ່າສັງເສັຽຫ້ອນ ຜິວ່າຜູ້ໃຫ່ຽນັ້ນ ໄປເທເພົາຈູດ ເສັຽນັ້ນ ຄວນທີ່ຈຳແປງແທນ ໃສ່ຂັບໃຫ້ຊ້ວ ກໍຫາກເຫຼືອ

ກຳລັງແທ້ ແປງຝາຍບໍ່ຮອດ ດັ່ງນັ້ນ ໃຫ້ກິດດູຂອງພີ່ນ້ອງ ກິນນັ້ນຊູ່ອັນ ຫັ້ນທ້ອນ ຂອງທັງມວນນັ້ນ ປຸນເປັນຜ່າຄ່ອງ ຕັດໃຫ້ໃຊ້ ເຖິງຫ້າຊູ່ອັນ ຊອບແລ້ວ ຄັນວ່າເຖິງຣະດູແລ້ງ ວາງນາເສັ່ງເປົ່າ ເລີຍເລົ່າເປັນຣິກເຣື້ອ ນ້ຳຂາດເຂີນບົກ ກໍຈິ່ງ ສັງຂຍາດູ ເຂົ້າໃນນານັ້ນ ຄວນທີ່ວັດໃຫ້ໃຊ້ ດັ່ງສັ່ງຢ່າໃຫ້ຫຼໍ ແທ້ດາຍ ແມ່ນວ່າເດັກນ້ອຍແທ້ ເຂົາຈູດເຜົາເສັ່ງ ກໍດີ ຄວນ ໃຫ້ເຂົາໃຊ້ເຂົ້າ ສັນນັ້ນດັ່ງຫຼັງ ນັ້ນເນີ ຄັນວ່າຮອດຂວບແທ້ ປີໜ້າມາເຖິງ ເມື່ອໃດ ກໍໃຫ້ແປງຝາຍແທນ ດັ່ງພາຍຫຼັງນັ້ນ ພິວ່າຜູ້ນ້ອຍແທ້ ເຂົາບໍ່ແປງເປັນ ກໍດີ ໃຫ້ເຂົາບໍຂັນແປງ ພ່ຳ ສົມນາພ້ອມ ຄັນວ່າໄດ້ເປ່ງນ້ຳ ໃນນາຂອງທ່ານ ກໍດີ ທັງ ເລົ່າພັນຮາງລົບ ບ່ອນຄັນນານ້ອຍ ຈິ່ງໃຫ້ພີຈານດູ ດັ່ງຫຼັງ ສັນນັ້ນ ຄວນທີ່ໃຫ້ໃຊ້ແທ້ ທໍ່ຄ່າເໜືອງນາ ຊອບແລ້ວ ອັນນຶ່ງ ໃຜຜູ້ໂມຫາຮ້າຍ ຮັກສາໄຟບໍ່ຖ້ວນຖີ່ ເລີຍເລົ່າລວດໄໝ້ບ້ານ ເມືອງທ້າວທີ່ສະຖານ ດັ່ງນັ້ນ ຄວນຕັດໃສ່ຫ້າຮ້ອຍ ຕາມໂທດ ສິນໃໝ ເຈົ້າເອີຍ ກໍຈິ່ງສົມໂທໃສ່ ໂທດມັນອັນຮ້າຍ ຄັນວ່າ ເມືອງໜຶ່ງແທ້ ແສນເມືອງຖ້ວນຕ່ຳ ກໍດີ ຄວນທີ່ຕັດໂທດໃຫ້ ສາມຮ້ອຍຊອບຄວນ ແທ້ແລ້ວ ແມ່ນວ່າເມືອງຂຸນບ້ານ ຄາເມ

ພາຍນອກ ກໍດີ ໃຫ້ໃໝຮ້ອຍຫ້າບາດແທ້ ເງິນນັ້ນຊອບຄອງ
ຫັ້ນແລ້ວ ຜີວ່າບ້ານໄພ່ນ້ອຍ ຝູງໝູ່ຊາວນາ ກໍດີ ກໍຫາກມີ
ຂັບໃໝ ແຕ່ເງິນຫົກເບັ້ງ ຄັນວ່າບ້ານຂ້າແທ້ ຂັບໃໝຮ້ອຍບຶ່ງ
ຢ່າໄດ້ເຮັດບາບແທ້ ຕາມຖ້ວນຕ່ຳສູງ ຫັ້ນທ້ອນ ຄັນວ່າໄພຢືມ
ຂອງທ່ານແທ້ ໃຫ້ຄືນທ່ານຢ່ານານ ມັນຫາກຍັງອຳເອົາ ໂທດ
ມີພາຍໜ້າ ຄັນວ່ານານຄືນແທ້ ເຈົ້າຂອງຖາມໃຈດ ເອົານັ້ນ
ເລີຍເລົ່າເວົ້າ ຄືນແທ້ແຕ່ນານ ຄວາມບໍ່ແລ້ວ ເລີຍຮອດຂຸນ
ເມືອງ ດັ່ງນັ້ນ ກໍຈຶ່ງເຫັນຂອງເຂົາ ເມື່ອລຸນພາຍຊ້ອຍ ຄວນ
ທີ່ຕັດສິນໃຫ້ ຄືນຢືມໃຊ້ຄ່າ ໃຊ້ທໍ່ແລ້ວ ຂອງນັ້ນຄ່ານີ ຊອບ
ແລ້ວ ກໍຈຶ່ງແມ່ນຮີດແທ້ ຄອງແຕ່ປາງປະຖົມ ໃຫ້ມີຂັນສິນ
ມາ ຫ້າບາດເງິນຂາວລ້ວນ ອັນວ່າຂັນອັນນັ້ນ ໃຫ້ມີທຽນສີ່ຄູ່
ມີເຂົ້າຕອກທັງດອກໄມ້ ຖວາຍໄຫວ້ປໍ່າລີ ໃຜຜູ້ມີໃຈລ້ຽວ ລອງ
ເອົາຂອງໝູ່ ດັ່ງນັ້ນ ຈັກໄດ້ໄປຢູ່ພື້ນ ໃນໜ້ຳໝື່ນປີ ບໍ່ຢ່າແລ້ວ
ຄັນວ່າໃຜປະສິງໜັງສືນັ້ນ ໃຫ້ຫາແນວມາກ່າຍ ເອົາເບີ ຂັບ
ວ່າຂຽນຂີດແລ້ວ ຄືນເຈົ້າທ່ຽວພລັບ ນັ້ນດາຍ ອັນນຶ່ງຄັນໃຜ
ຮູ້ ມິນຢຳປາແຝດ ກໍດີ ຄັນວ່າສັກຂີ ມີຮູ້ແຈ້ງ ສັນນັ້ນຢ່າເອົາ
ເຈົ້າເອີຍ ຜູ້ໃດຜິດທ່ານແລ້ວ ເລີຍເລົ່າຖຽງຄວາມ ດັ່ງນັ້ນ

ພາຍລຸນເປັນໂທສາ ໂທດດອງເຖິງແທ້ ຄວນທີ່ຕັດຂັນໃໝຊ້ຳ ຂັນແປງໃສ່ຕື່ມ ໃຫ້ມີເງິນຮ້ອຍເບັ້ຽ ແຖມຊ້ຳຊອບຄອງ ຜິວ່າ ຄົນທຸກແທ້ ບໍ່ມີສັງເສັຽໂທດ ມັນນັ້ນ ຄວນຖືກປາຣະຊິກຊ້ຳ ຕົວຕົ້ນຊອບຄອງ ແທ້ແລ້ວ ຄົນໃດພາລາລົ້ນ ສວານຄວາມ ຂອງທ່ານ ມັນນັ້ນມີໂທດແທ້ ເຖິງຖ້ານທີ່ໃໝ ຫ້າບາດແທ້ ຕັດໃສ່ສິນຄວນ ອາດຍາຈັກ ກ່າວມາສັບນີ້ ອັນນຶ່ງໃຜໄດ້ບັກ ໂທດຮ້າຍ ໃສ່ທ່ານຄວາມໃດ ກໍດີ ພາຍລຸນເຂົາ ຕໍ່ຄວາມ ເລີຍແພ້ ຄວນທີ່ຕັດໂທດແທ້ ໃສ່ຖ່ອງຂັນບັກ ເຈົ້າເອີຍ ຕາມ ອັນໜັກອັນເບົາ ຖ່ອງຂັນບັກນັ້ນ.

ບັດນີ້ຈັກກ່າວເບື້ອງ ຝູງໝູ່ກະທຳການ ກ່ອນເບື ຕາມອັນເປັນ ທີ່ຄວນຄຳເວົ້າ ເຊີນຈຳແຈ້ງ ຕາມຄອງອັນ ກ່າວ ມານີ້ ພໍ່ວຽກຫາກບອກລູກວຽກແລ້ວ ເຂົາບໍ່ຟັງຄວາມ ດັ່ງນັ້ນ ເຂົາບໍ່ຟັງຄວາມນາຍ ຜູ້ເປັນຫົວໜ້າ ເລີຍເລົ່າຈາ ເຊີງຫຼິ້ນ ໄປມາທາງປມາດ ທັງເລົ່າມາກ່າວຕ້ານ ຖຽງຊ້ຳ ດ່ານຳ ລູກວຽກກໍຫາກຖືກໂທດແທ້ ຕັດໃສ່ຂັນແປງ ຕາມ ຄອງເມືອງ ຄ່າມີຫົກເບັ້ຽ ຄັນວ່າເຂົາຫາກເຮັດວຽກແລ້ວ ພໍ່ ວຽກດ່າທັງຕີ ດັ່ງນັ້ນ ຄວນໃຫ້ຕັດຂັນແປງ ໃສ່ເງິນຫົກເບັ້ຽ

ຄັນວ່າຊູ່ຄົນຊູ່ຫາກຮ້າຍ ດ່າຕອບຖຽງກັນ ດັ່ງນັ້ນ ກໍຫາກເປັນ
ໂທສາ ຊູ່ທາງສອງກ້ຳ ອັນນຶ່ງໃຜຫາກໂກທາຮ້າຍ ຈັ່ງໂຮມາ
ດ່າ ທ່ານນັ້ນ ຢູ່ບໍ່ຢູ່ຫາກໄດ້ ຫາຮ້າຍດ່າເຂົາ ມີໂທດແທ້
ຕາມຮີດຄອງຄົນ ຄວນທີ່ຕັດຂັນແປງ ໃສ່ມັນຫົກເບັ້ຍ ແມ່ນ
ວ່າຜູ້ບຶງແທ້ ຂັນແປງຫົກບາດ ຄວນແລ້ວ ກໍຈຶ່ງວ່າຖືກແທ້
ຄອງຕັ້ງແຕ່ງມາ ແລຊານ ອັນນຶ່ງໃຜ່ຂ້ອຍແທ້ ຄົນພອຍທຸກ
ຍາກ ກໍດີ ອັນວ່າຂັນແປງນັ້ນ ຮອດເງິນຫົກເຟື້ອງ ອັນນຶ່ງ
ໃຜມາເຮັດວຽກເຈົ້າ ຮອດທີ່ຫົນທາງ ແລ້ວນັ້ນ ຂ່າວວ່າລູກ
ເມັຽມັນພາຍຫຼັງ ປ່ວຍເປັນທາງບ້ານ ຄວນແຈ້ງໃຫ້ກວານ
ບ້ານ ຫາຄົນໄປປ່ຽນ ເອົາເນີ້ ຢ່າໃຫ້ຮານວຽກເຈົ້າ ການນັ້ນ
ໄປຄວນ ຜີລູກເມັຽບໍ່ປ່ວຍໄຂ້ ຖ້ານວຽກເລີຍໜີ ດັ່ງນັ້ນ ໃຫ້
ມັນມີຂອງບູນ ຜູ້ໄປຕາງນັ້ນ ອັນນຶ່ງຂຸນບໍ່ບອກວຽກໃຫ້ ຮານ
ວຽກການເມືອງ ຄວນໃຫ້ຂຸນແທນສອງ ທໍ່ການອັນໃຊ້ ອັນ
ນຶ່ງໃຜ່ຫາກມີວຽກແລ້ວ ມີຜູ້ມາຈັດ ດັ່ງນັ້ນ ຢ່າກຸມເອົາເຂົາ
ເຮັກ ວຽກເຮືອນຕົວແທ້ ອັນນຶ່ງໃຜ່ຫາກລາໜີແລ້ວ ຢ່າເລົາ
ໂກທາ ຂຸນຫາກບາຍທັນດັງ ທຸບຕີເອົາແທ້ ຈິ່ງໃຫ້ຂຸນຜູ້ນັ້ນ
ປຸນແປງຂວັນໃຜ່ ນັ້ນເນີ ຕາມຮີດຕັ້ງ ຄອງໄວ້ແຕ່ຫຼັງ ແທ້ດາຍ

ບັດນີ້ຈັກກ່າວເບື້ອງ ກູ້ເຂົ້າທ່ານກິນ ກ່ອນເບີ ມັນ ຫາກມີຄອງຄົນ ຣີດເດີມດາລັ້ງ ເພິ່ນຫາກຖືເອົາແທ້ ຕາມເກນກາດກ່າວ ຖືຕາມກາດຖືກແທ້ ແພງບັ້ນກ່າວມາ ເຈົ້າເອີຍ ໃຜຜູ້ໄດ້ກູ້ເຂົ້າ ມາກິນນີ້ຖືກ ແລະຫາບບັ້ນ ໃຫ້ແທນທໍ່ສາມບຸງ ຢ່າໄດ້ແທນເຫຼືອຫຼາດ ໃພດພິນເມືອງບ້ານ ອັນນຶ່ງຜູ້ໃດໄດ້ກູ້ເຂົ້າ ມາກິນຍາມຍາກແພງບັ້ນ ໃຫ້ກ່າວຕ້ານ ຖາມແທ້ຖືດູ ຫັ້ນທ້ອນເ ຈົ້າຂອງເຂົາຫາກເວົ້າ ຣອດຂວບມາແທນ ບຸງນຶ່ງແທນສອງບຸງ ກໍຫາກຄວນ ຈິງແທ້ ຫາກບໍ່ມີເຂົ້າແທ້ແທນເຂົາກາຍຂວບ ດັ່ງບັ້ນ ເຈົ້າຂອງເຂົາໃຫ້ໄຊ້ ແທນແທ້ກໍບໍ່ມີ ຄັນວ່າມີແທນແທ້ ສັງຂຍາດູຄ່າ ມັນບັ້ນ ລືນຄ່າຫົວຜູ້ກູ້ຄວນຂຶ້ນຂາບຫຸບ ຄັນວ່າພຣະບາດເຈົ້າ ມີອາດສັບໃດ ກໍດີຄວນທີ່ໂດຍດອນອົງ ພຣະບອດເມືອງເປັນເຈົ້າ ພຣະຫາກເປັນຄົນຮູ້ ຄະດີຄອງຕັ້ງແຕ່ງ ມາແລ້ວ ຫາຜູ້ລ້ຳກວ່າເຈົ້າ ບຸນກວ້າງໄປມີ ແທ້ແລ້ວ ອັນນຶ່ງໃຜຈັກໄປແລກກູ້ ເງິນຄຳຂອງເພິ່ນ ກໍດີຄວນໃຫ້ກວານຮູ້ແຈ້ງ ເຈົ້າຂອງໃຫ້ກໍຈິ່ງຄວນ ແທ້ແລ້ວ ຜິວ່າກູ້ສາມຮ້ອຍ ເປັນສິບໄຊ້ຊວງ ເຖິງສີ່ຮ້ອຍ ເປັນຂອບຄ່າເງິນ ຫັ້ນແລ້ວ ຍາມເມື່ອຈາກກັນບັ້ນ ມີສັກ[1]ຂີແຈ້ງແຈບ ເຖິງ

(໑) ສັບວ່າ ສັກຂີ ບາງບ່ອນວ່າ ສັກສີ ສາກສີ ຫຼື ສາກຂີ

ເນື້ອໃຊ້ ແທນແລ້ວຢ່າກາຍ ແທ້ດາຍ ອັນນຶ່ງຂ້ອຍພຣະບາດ
ເຈົ້າ ພູວະນາດຈອມຫົວ ກໍດີ ບານເນື້ອໄພຍໄພເຖິງ ຖືກ
ຕົບເຄືອງແຄ້ນ ຫາກຍັງໄດ້ແລກກູ້ ຂອງທ່ານຄົນໃດ ກໍດີ
ແມ່ນວ່າເຈົ້າຂອງນັ້ນ ຂາບທູນເຖິງເຈົ້າ ພຣະຫາກອະນຸຍາດ
ໃຫ້ ກູນາຍາຍໂຜດ ເນື້ອໃດ ເອົາໃຫ້ແທ້ ສັນນັ້ນຊອບຄອງ
ເຈົ້າເອີຍ ອັນນຶ່ງເຂົາຫາກໄດ້ເປັນຂ້ອຍ ຣາຊາພູວະນາດ ດັ່ງ
ນັ້ນ ເຈົ້າຂອງຫາກໃຫ້ແທ້ ສັນນັ້ນບໍ່ຄວນ ແທ້ແລ້ວ ອັນວ່າ
ພາຍລຸນພຸ້ນ ຈັກດາເປັນໂທດ ຈິງແລ້ວ ຄອງເນື້ອງນີ້ ກ່າວ
ມາສັ່ງນີ້ ຄັນວ່າແມ່ນຂ້ອຍແທ້ ຂັບໃໝຫ້າບາດ ຜິວ່າເຖິງ
ພັນແທ້ ຂັບໃໝຂຶ້ນຕື່ມ ເປັນຫ້າຮ້ອຍ ສັນນັ້ນຈິ່ງຄວນ ເຈົ້າ
ເອີຍ ອັນນຶ່ງຊ້າງກິນເຂົ້າ ໃນໄຮ່ນາສວນ ກໍດີ ໃຫ້ນາຍຊ້າງ
ທັງນາຍເຖົ້າແກ່ ໄປພໍ່າພ້ອມ ສອງເບື້ອງລໍ່າດູ ຈິ່ງໃຫ້ແທກ
ຜຽກອ້ອມ ໃນທີ່ມັນກິນ ເໝີດນາກນ້ອຍ ທໍ່ໃດແທ້ເບິ່ງດູ
ໃຫ້ແທກອ້ອມ ເຖິງທີ່ອັນຍັງ ນັ້ນເນີ ມັນຈັກໄດ້ແທ້ ທໍ່ໃດນັ້ນ
ເບິ່ງດູ ຫັ້ນທ້ອນ ໃຫ້ຮີບນຳເນື້ອເຖິງ ບອກນາຍຄວນຊ້າງ
ຄັນຫາກເຈັບໄຂ້ແທ້ ພຍາດເກີດໃນຕົວ ດັ່ງນັ້ນ ຄວນໃຫ້ນາຍ
ຊ້າງຫາພີ່ນ້ອງ ຊາວບ້ານຊ່ອຍເອົາ ຫັ້ນທ້ອນ ຫາກບໍ່ໄປເອົາ

ແທ້ ພາງານດິນຢູ່ ດັ່ງນັ້ນ ຊ້າງຫາກກິນເຂົ້າໝົດມາກນ້ອຍ ທີ່ໃດແທ້ໃຫ້ແທນ ຊອບດາຍ ອັນນຶ່ງຖ້າເຈົ້ານາໃຈຮ້າຍ ກຸມ ແທງຊ້າງທ່ານ ສັນນັ້ນ ຄັນຊ້າງເຈັບປ່ວຍແທ້ ຈຳໃຊ້ຊອບ ຄອງ ແທ້ແລ້ວ ອັນນຶ່ງຊ້າງຫາກຍ້ອຍແທ້ ເຫຼືອທີກຳລັງ ນາຍ ນາຍຊ້າງຜຽນເທິງນານ ກໍຈຶ່ງເອົາມັນໄດ້ ຄັນຫາກຍັງ ເສັຽເຂົ້າ ໃນນາໜ້ອຍມາກ ທີ່ໃດນັ້ນ ໃຫ້ພາກັນດູຖ້ວນ ປັນ ເປັນສາມສ່ວນ ນັ້ນເນີ ອັນວ່າສອງສ່ວນໃຫ້ ນາຍຊ້າງທິດ ແດນ ສ່ວນນຶ່ງໄວ້ ກັບໄຮ່ນາສວນ ຫັ້ນແລ້ວ ກໍຈຶ່ງຕາມຄອງ ທັມ ຊອບດີດູແຍ້ງ ອັນນຶ່ງລິວກິນເຂົ້າ ໃນນາໄຮ່ທ່ານ ກໍດີ ໃຫ້ໄປຫານາຍຄວນ ບອກຫາແທນຖ້ອຍ ຍາມມັນມີຮອງແທ້ ໃຫ້ພິຈານຖ້ວນຖີ ນັ້ນເນີ ແມ່ນວ່າເສັຽມາກນ້ອຍ ທີ່ໃດແທ້ໃຫ້ ແທນ ຊອບແລ້ວ ເຈົ້ານາບໍ່ຄວນຕ້ານ ເວົ້າວ່າຕັດເອົາ ຢ່າໄດ້ ມີຄວາມໝາຍ ກ່າວຈາຕັດໃຫ້ ຄວນຫາເຖົ້າແກ່ພ້ອມ ພິ ຈານຕັດແຕ່ງ ໝົດມາກນ້ອຍ ທີ່ໃດແທ້ໃຫ້ແທນ ນັ້ນແລ້ວ ອັນນຶ່ງເຖິງເນື້ອກາຣະດູແທ້ ຮັກສາລິວຢ່າໃຫ້ປ່ອຍ ໄປນັ້ນ ອັນ ນຶ່ງບ້ານດຽວແທ້ ງົວຄວາຍຂອງເພື່ອນ ກໍດີ ເຂົາກໍກິນເຂົ້າ ນ້ຳ ໃນຫັ້ນດິນສວນ ຍາມຄ່ຳແທ້ ເປັນການອັນຫ່າງ ເສັຽນັ້ນ

ຄັນວ່າວັນໜ້າເຊົ້າ ຄວນໃຫ້ຄອບຄວານ ແທ້ດາຍ ຜິວ່າຕ່າງ
ບ້ານແທ້ ໄກຊົ່ວຄາວງາຍ ກໍດີ ຢ່າໃຫ້ກາຍສາມວັນ ຮີບເມືອ
ໜາຍຖ້ອຍ ອັນນຶ່ງຄາວໄກແທ້ ກາຍເຂດງົວຄວາຍ ກໍດີ ຢ່າ
ໃຫ້ກາຍເຈັດວັນ ຮີບເມືອຈາຕ້ານ ຫາກບໍ່ເມືອບອກແທ້ ເປັນ
ຄອງມີຄ່ອງ ເສັງແລ້ວ ຄວາຍຫາກຜິດເພິ່ນແທ້ ເມືອໜ້າໂທດ
ນີ້ ແທ້ແລ້ວ ເພິ່ນຫາກມາບອກແລ້ວ ຕາມຄອງອັນຊອບ
ຄວາຍຫາກດຶງເຊືອກນັ້ນ ໄປແທ້ຢ່າວ່າສັງ ນັ້ນເນີ ອັນນຶ່ງຄວາຍ
ກິນເຂົ້າ ໃນນາຂຽວອ່ອນ ກໍດີ ຄວນໃຫ້ຖິມຮອບເສັງ ປູກແປງ
ແຫນໄວ້ ເຖິງເມື່ອເຂົ້າແກ່ແລ້ວ ຄວາຍເລົາມາກິນ ດັ່ງນັ້ນ
ຄວາຍຫາກມາກິນຍາມ ເຂົ້າເຫຼືອງຮວງໂຕ້ນ ຄວນທີ່ພິຈານ
ແຈ້ງ ຈິງໃຈດູຖີ່ ເຂົ້າຫາກໝິດມາກນ້ອຍ ທີ່ໃດນັ້ນລ່ຳດູ
ຄວນໃຫ້ໃຊ້ ດິງສ້ຽງຢ່າຫຼໍ ແທ້ເນີ ເຈົ້ານາຫາກຕັດເອົາແລ້ວ
ພໍໃຈມີຊອບຄອງນັ້ນ ເຈົ້າຄວາຍຫາກກ່າວຕ້ານ ເອົາໃຫ້ກໍບໍ່
ຄວນ ແທ້ດາຍ ຄວນໃຫ້ເຖົ້າແກ່ພ້ອມ ພິຈານຕັດແຕ່ງ ເອົາ
ເນີ ຄວນທີ່ໄປເບິ່ງເຂົ້າ ນານັ້ນກ່ອນດູ ຫັ້ນທ້ອນ ຄັນຫາກບັງ
ຫຼາຍແທ້ ຄວນກະທຳແທກຍຽກ ດູນັ້ນ ໄປແວດອ້ອມ ດູແທ້
ບ່ອນກິນ ເຖິງເມື່ອຍາມເອົາແທ້ ຕາດູໃຫ້ແມ່ນ ນັ້ນເນີ ເຂົ້າ

ຫາກເສັງມາກນ້ອຍ ທີ່ໃດແຫ້ໃຫ້ແທນ ຊອບແລ້ວ ເຂົ້າທີ ຄວາຍກິນນັ້ນ ຍັງເຫຼືອນ້ອຍມາກ ທີ່ໃດນັ້ນ ຄວນເອົາໄວ້ໃຫ້ ເຈົ້າ- ເຂົ້ານັ້ນຈຶ່ງຄວນ ແຫ້ດາຍ ອັນນຶ່ງຄວາຍຫາກເກືອກນາ ແຫ້ ຍາມເມື່ອກາງຄືນ ດັ່ງນັ້ນ ຄວນເອົາເຫຼົ້າເຫຼັກເບັ້ງ ດາ ໃຫ້ສິງດຽວ ຍາມເມື່ອເພິ່ນໄດ້ຖ້ອຍ ຖາມເອົາໂຕໄກ່ ດັ່ງນັ້ນ ຜີເພິ່ນເອົາໄກ່ແລ້ວ ເຫຼັກເບັ້ງກໍ່ຢ່າເອົາ ອັນນຶ່ງຄວາຍກິນເຂົ້າ ທັງນອນເກືອກນວກ ເກືອກນວກຍັງບໍ່ແລ້ວ ເລີຍຂີ້ໃສ່ນຳ ກໍດີ ໃຫ້ກະທຳແປງນາ ໄກ່ແດງທັງເຫຼົ້າ ຜີວ່າຄວາຍເກືອກນາ ກາງເວັນແຫ້ ໃຫ້ມີເງິນສອງຊີກ ກັບທັງເຫຼົ້າໄກ່ພ້ອມ ມີແຫ້ ຈຶ່ງຄວນ ເຈົ້າເອີຍ ຜີວ່າຄວາຍຫາກຊີນກອງເຂົ້າ ພິຈາຣະນາ ໃຫ້ດີ ດູກ່ອນ ດີດໃຫ້ຊອບຊູ່ເບື້ອງ ຄອງຕັ້ງແຕ່ຫຼັງ ນັ້ນເນີ ຖ້າຄວາຍຊີນກອງເຂົ້າ ຫັກຖ່າວເຊລິງ ດັ່ງນັ້ນ ໃຫ້ມີສອງຊີກ ເບັ້ງ ເຫຼົ້າໄກ່ມາແປງ ເຂົ້າໃຫ້ຝູງເຖົ້າ ພິຈານຕັ້ງແຕ່ງ ເສັງ ມາກໜ້ອຍ ທີ່ໃດນັ້ນໃຫ້ແທນ ຊອບແລ້ວ ອັນນຶ່ງໃຜຍັງໄດ້ລ້ຽງ ແນ້ ໝູໝາເປັດໄກ່ ກໍດີ ຍັງເລົ້າໄປຮອດກ້າ ກິນໄຮ່ນາສວນ ເພິ່ນນັ້ນ ຄວນທີໃຫ້ເຈົ້າກ້າ ໄລ່ສົ່ງເຖິງເຮືອນ ເຖິງສອງທີ ສາມທີ ບອກເຕືອນດັ່ງແຈ້ງ ຫາກບໍ່ຂັງເອົາແຫ້ ໄປກິນເຂົ້າ

ທ່ານ ສັນນັ້ນ ຄວນທີ່ເຖົ້າແກ່ພ້ອມ ໄປຢ້ຽມເບິ່ງດູ ຫັ້ນທ້ອນ ຄັນຫາກເສັ້ງເຂົ້າແຫ້ ໃນນາໜ້ອຍມາກ ທີ່ໃດນັ້ນ ຄວນໃຫ້ໄຊ້ ແຫນແຫ້ທີ່ເສັ້ງ ຫັ້ນທ້ອນ ຜີວ່ານາແຄມບ້ານ ໃຫ້ໂຮມແປງ ຮົ້ວແຄ່ ຄັນບໍ່ແປງຊ່ອຍແຫ້ ຂັງໄວ້ໃຫ້ດີ ຫາກບໍ່ຂັງດີໄວ້ ໄປ ກິນເຂົ້າທ່ານ ສັນນັ້ນ ທ່ານຫາກຂ້າ ຕາຍແຫ້ຢ່າຂແຍງ ທີ່ເນີ ບໍ່ດັ່ງນັ້ນເຖິງເມື່ອກາງປີແຫ້ ໃຫ້ພາກັນຮັກສາຊ່ອຍ ຊາມເມື່ອ ເອົາເຂົ້າແລ້ວ ຈຶ່ງວາງໄວ້ປ່ອຍໄປ ຫັ້ນທ້ອນ ອັນນຶ່ງນາທີ່ໄຮ້ ໄມ້ດອກປໍຫວາຍ ກໍດີ ຄວນທີ່ພາກັນຂຸດ ຮ່ອງວຽນລະວັງໄວ້ ຄັນເຈົ້າຂອງບໍ່ຊ່ອຍແຫ້ ປະໃຫ້ກິນເຂົ້າເພິ່ນ ດັ່ງນັ້ນ ເພິ່ນ ຫາກຂ້າ ຕາຍແຫ້ຢ່າວ່າສັງ ແຫ້ດາຍ ຜີວ່າສັດກິນເຂົ້າ ທີ ດຽວຢ່າຟັນມອດ ເສັ້ງເນີ ຢ່າໄດ້ຂ້າ ສັນນັ້ນບໍ່ຄວນ ເຈົ້າເອີຍ ຜີຫາກຍັງຖຽດແຫ້ ເຖິງທີ່ໂຫໄສ ເພາະວ່າເສັ້ງແນວແພງ ເຂົ້າກິນຂອງລ້ຽງ ດັ່ງນັ້ນ ຈຳເຈົ້າຂອງມັນໃຫ້ ຫາມາໄຊ້ທີ່ ຄວນແລ້ວ ຄັນຫາກເຮັດດັ່ງນີ້ ດີແຫ້ຊອບຄອງ ເຈົ້າເອີຍ ອັນ ນຶ່ງງົວຄວາຍຮ້າຍ ກາຍເກີນຕົວຖ່ອຍ ຄັນວ່າເຊືອກຂາດແລ້ວ ໄປແຫ້ທີ່ໃດ ບໍ່ຮູ້ ຄວນທີ່ນຳຫາແຫ້ ຢ່ານານເຮວຮີບ ລ້າທີ່ ແຫ້ ເຫັນແລ້ວບໍ່ໃຫ້ນາຍ ດັ່ງນັ້ນ ຄັນວ່າຫາກເອົາບໍ່ໄດ້ ໃຫ້

ບົນບອກຊາວນາ ນັ້ນເນີ ໃຫ້ຮັກສານາດີ ຊູ່ຄົນດັ່ງສັ່ງ ຍາມ
ໃດໄດ້ຄວາຍແລ້ວ ເດີນບອກຊາວນາ ກໍໃຫ້ພາຍຄຳຄວນ ວ່າ
ຄວາຍໂຕໄດ້ ອັນນຶ່ງງົວຄວາຍໄດ້ກິນເຂົ້າ ໃນນາທີ່ນຶ່ງ ກໍດີ
ຄັນບໍ່ໄດ້ບອກເຈົ້າ ຄວາຍແຫ້ບໍ່ຄວນ ແຫ້ແລ້ວ ຜີຫາກເຈົ້ານາ
ຂ້າ ຄວາຍຕາຍເປັນໂທດ ຄັນຫາກຍັງຂ້າແທ້ ຄວນແທນ
ສອງຕໍ່ ຜີຄວາຍເຈັບປ່ວຍແທ້ ດວນໃຫ້ປິ່ນປົວ ຊອບແລ້ວ
ຄັນວ່າຮານວຽກເຈົ້າ ຄາເຄີກການງານ ກໍດີ ຄວນໃຫ້ເອົາ
ຂອງມັນ ຜູ້ກະທຳນາສ້າງ ຜີວ່າປາດີແລ້ວ ໃຫ້ຄືນມາດັ່ງເກົ່າ
ນັ້ນເນີ ກໍຈຶ່ງຄວນຊອບແທ້ ຄອງວັ້ງແຕ່ງນາ ແທ້ແລ້ວ ຄັນ
ວ່າໝາຫາກມາຂົບແບ້ ຕາຍໄປນໍຣະບາດ ດັ່ງນັ້ນ ຄວນທີ່ຈຳ
ໃຫ້ໃຊ້ ສັນນັ້ນຊອບຄອງ ເຈົ້າເອີຍ ຜີຫາກບໍ່ມີແບ້ ຄວນໃຫ້
ເອົາໝາ ເຫດວ່າໂຕໃດຜິດ ກໍໃຫ້ເອົາໂຕນັ້ນ ອັນນຶ່ງແບ້ຫາກ
ຂຶ້ນ ເມືອທີ່ເຮືອນໃຜ ກໍດີ ຄວນທີ່ພິຈານດູ ຄ່ານັ້ນໂຕແບ້
ຂອງອັນນັ້ນ ປຸນເປັນສອງສ່ວນ ສ່ວນນຶ່ງໄວ້ເຈົ້າແບ້ ສັນນັ້ນ
ຊອບຄອງ ອັນນຶ່ງງົວຄວາຍສັດເຂົ້າບ້ານ ພາຍເພີນເລີຍຫຼົງ
ດັ່ງນັ້ນ ພອຍເລົ່າມີຄົນເຫັນ ລວດເອົາມາໄວ້ ຜີວ່າເຖິງນານ
ແທ້ ເຈົ້າຂອງນຳບໍ່ຮອດ ສັນນັ້ນ ພອຍເລົ່າລ້ຽງຜູກໄວ້ ຫຼາຍ

ນີ້ພ່ຳນານ ຄວນກ່າວໃຫ້ ເດີນຮອດຈຳຫຼັກ ຄວນທີ່ມີວາຈາ
ກ່າວໄປເຖີນແທ້ ພີເຈົ້າຂອງມາເຫັນແລ້ວ ຂໍຄືນດັ່ງເກົ່າ ໃຫ້
ມີໜາກຫົວເກືອຫໍ່ໄປອ່ອນນ້ອມ ນຳໃຫ້ຈິ່ງຄືນ ແທ້ເນີ ພີວ່າ
ໂຕເກົ່ານັ້ນ ມັນເລົ້າຄືນມາ ເຖິງສອງທີສາມທີ ຄ່າແຮງຄວນ
ໄດ້ ຄວນທີ່ຮັກເພີ່ນແທ້ ເຫຼືອຫຼາຍປ່າປນາດ ນັ້ນເນີ ເຫດ
ຄຸນທ່ານມີມາກລົ້ນ ຫຼາຍແທ້ຢ່າລືມ ນັ້ນດາຍ ພີວ່າສິບນີ້ລ້ຳ
ກາຍກວ່າເດືອນປາຍ ກໍດີ ກໍບໍ່ເຫັນຄືນໃຊ ຄວາມຖາມຫາ
ເຫດ ຄວນທີ່ສັນຍາໄວ້ ໃນເມືອງເຖິງຮາດ ຄວນຂານເກົ້າ
ຖວາຍເຈົ້າພຣະຍອດເມືອງ ແທ້ແລ້ວ ອັນນຶ່ງຄວາຍເສັ່ງແລ້ວ
ມີຄືນຮູ້ເມື່ອ ເຫັນນັ້ນ ຄວນຕອບຄຸນເພີ່ນແທ້ ເງິນເບັ້ຍກໍຈິ່ງ
ຄວນ ແທ້ແລ້ວ ພີວ່າເມ່ນງົວນັ້ນ ຄວນເປັນຕົວລະບາດ ຢ່າ
ໄດ້ໃຫ້ລືນແທ້ ກາຍນັ້ນໂທດຊີ້ມີ ເຈົ້າເອີຍ ພີບໍ່ຮູ້ຮີດແທ້ ໃຫ້
ຂືນກັບຄຳຊີ້ ນັ້ນເນີ ກໍຈິ່ງຖືກຮີດແທ້ ຄອງຕັ້ງແຕ່ຫຼັງ ພີວ່າ
ຂືນແທ້ ໃຫ້ກຸມເອົາດັ່ງເກົ່າ ອັນວ່າໄຖຄາດນັ້ນ ຄວນໃຫ້ແກ່
ມັນ ແທ້ແລ້ວ ອັນນຶ່ງນຳໂຈນແທ້ ມີສັກຂີເຫັນບ່ອນ ເຫັນ
ແຈນແຈ້ງ ຈິ່ງແທ້ບ່ອນໂຈນ ຄອງເມືອງມີ ຜ່າຖ່ອງໂຕເອົາ
ໃຫ້ ພີແມ່ນເມ່ໜັນແທ້ ເປັນໂຕຫ້າບາດ ພີວ່າແມ່ນຊ້າງ

ແທ້ ເງິນຮ້ອຍກໍຈິ່ງສິນ ພີປື້ນຂອງເພິ່ນແລ້ວ ແລ້ວເລົ່ານີ້ຂຶ້ນ ດັ່ງນັ້ນ ເຈົ້າຂອງມີສັກອີ ວ່າປື້ນຈິງແທ້ ຄວນບອກໃຫ້ ມັນ ເອົາມາສິ່ງ ຂຶ້ນສິ່ງເຈົ້າ ຂອງແທ້ແທ່ງເດີມ ມັນຫາກບໍ່ຈື່ ແຈ້ງ ຕັດໃສ່ຂັບໃໝ ເຫດວ່າມັນປື້ນມາ ເລົ່າລືມຫຼັງແທ້ ຄວນທີ່ຈຳມັນໃຊ້ ຫາມາສອງທໍ່ ຕັ້ງຫາກແມ່ນດັ່ງນີ້ ຄອງນັ້ນ ແຕ່ຫຼັງ ເຈົ້າເອີຍ ໆ

ບັດນີ້ຈັກກ່າວເຣື່ອງ ຫົນແທ່ງງົວຄວາຍ ກ່ອນແລ້ວ ມັນຫາກຊຸບກັນຕາຍ ແຕ່ດິນແກມຫຍ້າ ຄວນໃຫ້ພິຈານແຈ້ງ ໂຕເປັນເອົາຄ່າ ຜ່າເຄິ່ງໃຫ້ສອງເບື້ອງ ເກິ່ງສເມີ ແທ້ເນີ ພິ ຫາກຮູ້ວ່າຮ້າຍ ມັນບໍ່ຂາຍເສັຽ ດັ່ງນັ້ນ ພອຍເລົ່າຊຸບກັນຕາຍ ສອງສາມໂຕ ຢ່າຍອມໃຈໄວ້ ຄ່າທີ່ໂຕຕາຍນັ້ນ ມີປະມານ ໜ້ອຍມາກ ກໍດີ ຄວນທີ່ຈຳໃຫ້ໃຊ້ ຕິງສ້ຽງຢ່າຫຼໍ ແທ້ເນີ ພີວ່າຊຸບຄົບແທ້ ມໍຣະບາຕາຍນອດ ດັ່ງນັ້ນ ຈຳມັນແທນສອງ ຄົບ ແມ່ນຄອງເມືອງຕັ້ງ ຄັນວ່າເສັຽອົງຄະແທ້ ການເມືອງ ເລີຍຂາດ ດັ່ງນັ້ນ ຄວນໃຊ້ຜູ້ນຶ່ງແທ້ ໝູເທົ້າສູ່ຂວັນ ໄນຍະ ນຶ່ງນັ້ນ ຊຸບທີ່ດຽວມຸດນອດ ໄປນັ້ນ ຄວນໃຊ້ຜູ້ນຶ່ງໃຫ້ ສິນແທ້ ຊອບຄອງ ຄັນເສັຽອົງຄະແທ້ ເຈັບໃຫ່ງໃນໂຕ ກໍດີ ກໍໃຫ້ມາ

ເສັງ ຖ່ອງຄ່າຫົວມັນນັ້ນ ຜີຫາກເຈັບແຕ່ໜ້ອຍ ໃຫ້ມີເງິນ ຫ້າບາດ ເຫຼົ້າໄກ່ພ້ອມ ມາໄອ້ສູ່ຂວັນ ຊອບແລ້ວ ຜີວ່າຄວາຍ ຊົນມ້າ ຕາຍສາມໍຣະບາດ ດັ່ງນັ້ນ ໃຫ້ເຈົ້າຄວາຍຊອກມ້າ ມາ ໃຊ້ຊອບຄອງ ຜີວ່າບໍ່ໄດ້ມ້າ ມາແທນເປັນໂທດ ໃຫ້ເບິ່ງມ້າ ຣາຄານັ້ນທໍ່ໃດ ຮູ້ທີ່ແລ້ວ ຕັດໃສ່ພໍປະມານ ຕາມສົມຄວນ ທໍ່ໃດຄວນໃຊ້ ຜີຫາກບໍ່ຕາຍແທ້ ເຈັບປ່ວຍເປັນໜັກ ດັ່ງນັ້ນ ຄວນໃຫ້ຫາປາຢໍາ ປິນປົວດີໃຫ້ ອັນນຶ່ງໃຫ້ເອົາແປງຂວັນມ້າ ມີເງິນຫ້າບາດ ມ້າຫາກໃຊໃຊະແທ້ ໂຕເບັ້ງຈິງຄວນ ມ້າ ຫາກເຈັບແຕ່ໜ້ອຍ ມັນປິນປົວດີ ດັ່ງນັ້ນ ອັນວ່າເງິນປົວແປງ ຢ່າໃຫ້ມີຄວນແທ້ ອັນນຶ່ງມ້າຫາກກັດກັນແທ້ ພອຍຕາຍຕົວ ນຶ່ງ ຜ່າຖ່ອງຊົ້ນ ສອງເບື້ອງເກິງກັນ ອັນວ່າໂຕເປັນນັ້ນ ຖ່ອງ ຄ່າປັນກັນ ມັນຫາກຄວນຕາມຄອງ ກ່າວມາສັ້ນນີ້ ອັນນຶ່ງງົວ ຄວາຍນັ້ນ ຊົນກັນກາງໄຮ່ ໂຕນຶ່ງນໍຣະບາດມ້ຽນ ຕາຍແທ້ ຈຸ່ມຈິມ ຈິງໃຫ້ດູຖີແທ້ ບັງຄ່າທັງສອງ ປຸນສເນີກັນ ຊູ່ພາຍ ນໍາໃຫ້ ສິ່ງຂອງບັງມຸ່ນມ້າງ ໜ້ອຍມາກປານໃດ ໃຫ້ເຈົ້າ ຄວາຍໂຕບັງແທນ ທໍ່ຂອງຝູງນັ້ນ ຢ່າໄດ້ໃສ່ໂທດແທ້ ສັດສິງ ສັນໃດ ຂອງອັນມີໃນຫັ້ນ ຢ່າປັນກັນບໍແບ່ງ ໄວ້ແກ່ເຈົ້າ ນາ

ນັ້ນຊອບຄອງ ແທ້ແລ້ວ ອັນນຶ່ງສອງຄົນໄດ້ ຫຽວທາງມາຈອບ
ກັບນັ້ນ ຊູ່ຄົນຊູ່ຫາກໜັກຫາບແທ້ ຄວນເວັ້ນຫຼີກໄກ ຜິວ່າ
ທາງຄິດຮ້າຍ ໄດ້ຖືກຊູນກັນ ດັ່ງນັ້ນ ກໍບໍ່ເປັນຄອງຜິດ ດ່າເລວ
ກັນແທ້ ເຫດທີ່ທັງສອງຂ້າງ ໜັກໜາຖືຫາບ ໂທດບໍ່ມີດັ່ງ
ສອງຂ້າງດັ່ງກັນ ຜູ້ນຶ່ງໜັກໜາແທ້ ຜູ້ເບົາໃຫ້ຫຼີກ ນັ້ນເນີ
ຜິວ່າບໍ່ຫຼີກແທ້ ຊູນກັນເປັນໂທດ ຂອງຜູ້ໜັກແຕກຖິ້ມ ຈຳ
ໃຊ້ຢ່າຫຼໍ ແທ້ດາຍ ອັນນຶ່ງຜູ້ຂີ່ຊ້າງ ໃຫ້ຫຼີກຝູງກວຽນ ອັນ
ວ່າອັດສາຄວນ ຫຼີກຄອງທາງຊ້າງ ໃຫ້ຫຼີກຜູ້ ຖືຫາບອັນ
ໜັກ ທັງຂຸນກວານ ໃຫ້ຫຼີກທາງຫຽວເວັ້ນ ຜິວ່າບໍ່ຫຼີກແທ້
ບັງຄົນຊູນເພິ່ນ ສັນນັ້ນ ຂອງເພິ່ນເສັຽໃຫ້ໃຊ້ ສັນນັ້ນຊອບຄອງ
ຫັ້ນແລ້ວ ອັນນຶ່ງພຣະບາດໄທ້ ທີ່ຮາດເຮງໃບ ກໍດີ ປົງດວງ
ຄົນ ບອກການຫຽວໃຊ້ ເສນາພ້ອມ ທັງຫຼາຍແສນໝື່ນ ກໍດີ
ກໍຈຶ່ງໂດຍອາດໃຊ້ ໄປແທ້ທ່ຽວພລັບ ອັນວ່າຝູງຂີ່ມ້າ ຄວນ
ປ່າວເຕີນໄປ ໃຫ້ຝູງໄທເມືອງເທັນ ຫຼີກໄກກອຍເວັ້ນ ຝູງນີ້
ຄວນຄອງແທ້ ຖືເອົາຈຳຈື່ ຈິງແລ້ວ ຢ່າລ່ວງລ້ຳ ເລີຍທ້ອນ
ໂທດມີ ເຈົ້າເອີຍ ຜິວ່າໄພ່ຫາກບໍ່ຫຼີກເວັ້ນ ມ້າຢຽບຄົນຕາຍ
ກໍດີ ບໍ່ເປັນໂທສາສັງ ແກ່ມັນລາງແລ້ວ ຜິວ່າເດັກນ້ອຍ ໆ

ຫຼີ້ນປູ່ກາງທາງ ດັ່ງນັ້ນ ເຂົາຫາກພາສາເດັກ ບໍ່ຫ່ອນດຽງ ສາຣູ້ ລອບທີ່ພາກັນຫຼີ້ນ ກາງທາງຊື່ຊວ່າ ຜູ້ຂີ່ມ້າ ຄວນ ເວັ້ນຫຼີກໄກ ຊອບແລ້ວ ອັນນຶ່ງຜູ້ຫາບນ້ຳ ໄປທ່າຫຽວທາງ ກໍດີ ຄັນເຫັນອັດສານາ ຫຼີກໄກກົວເວັ້ນ ເພີ່ນຫາກເຕີ້ນປ່າວ ແລ້ວ ມີຫຼີກທາງເສັຽ ດັ່ງນັ້ນ ລອບທີ່ທຳເຊີງຫານ ຜ່ານຕັບ ຄອງມ້າ ມັດຈຸຣາດເຂົ້າ ສູນເສັຽຈ່າຄອບ ມ້າຢຽບຖົ້ມ ຕາຍ ແລ້ວຢ່າຂແບງ ແທ້ດາຍ ຜີວ່າບໍ່ປ່າວຮ້ອງ ນາຢຽບຄົນຕາຍ ດັ່ງນັ້ນ ກໍບ່ອມເປັນໂທໄສ ຄ່າມັນຈຳໄຊ້ ອັນນຶ່ງເປັນນາຍມ້າ ວາງໄປປະປ່ອຍ ເລີຍລ່ວງລ້ຳ ທຳມ້າທ່ານຕາຍ ກໍດີ ອັນນຶ່ງ ໄປໄລ່ມ້າ ຕຳຢຽບຄົນຕາຍ ກໍດີ ສອງປະການນີ້ ໂທດສເມີ ກັນແລ້ວ ຜີວ່າການກະບວນເບື້ອງ ຄອງເມືອງອັນກ່າວ ມານີ້ ໃຫ້ໃຊ້ຫ້າທີ່ແທ້ ສັນນັ້ນຊອບຄອງ ອັນນຶ່ງໝາຫາກຮ້າຍ ລີ້ ປູ່ກາງທາງ ດັ່ງນັ້ນ ເຫັນຄົນມາ ຄາບດຶງຂາໄວ້ ຄົນໄດ້ຂ້າ ໝາຕາຍນໍຣະບາດ ດັ່ງນັ້ນ ກໍຫາກເປັນໂທດແທ້ ສັນນັ້ນ ຫາກຄວນ ແທ້ແລ້ວ ອັນນຶ່ງຮູ້ວ່າໝາໂຕຮ້າຍ ເຈົ້າບໍ່ຮັກສາດີ (ບໍ່ມີການສັນຍາ ຢ່າງໃດໃຫ້ຄົນຮູ້) ໄປຂົບຄົນຕາຍນັ້ນ ໃຫ້ ມັນແທນຫ້າທີ່ ຂົບບໍ່ຕາຍເສັຽອົງຄະນັ້ນ ຈຳໃຊ້ຖ່ອຍຄ່າຫົວ

ໃຫ້ມັນມີທັງເຫຼົ້າ ທັງໝູໄປສູ່ຂວັນເນີ ກໍຈຶ່ງຖືກຊອບແທ້ ຄອງຕັ້ງແຕ່ງມາ ເຈົ້າເອີຍ ໆ

ບັດນີ້ຈັກກ່າວຫ້ອງ ຫິນແຫ່ງມຸນ[1]ເຮືອນ ກ່ອນແລ້ວ ຕາມຄອງເມືອງ ແຕ່ຫຼັງສັບນີ້ ຝູງໃດມີລູກເຕົ້າ ລ້ຽງໃຫຍ່ສູງ ມາ ດັ່ງນັ້ນ ມັນພອຍລືມຄຸນເສັຽ ບໍ່ຈົ່ງໃຈລ້ຽງ ມັນໄປເອົາການເຈົ້າ ຣາຊາພູວະບາດ ບັງແຕ່ຊາຍຜູ້ນ້ອງ ຄອງສ້າງສືບເຮືອນ ມຸນເຮືອນບັງມີແທ້ ພໍປະມານໜ້ອຍມາກ ທໍ່ໃດນັ້ນ ຄວນແບ່ງໃຫ້ ຂາເຈົ້າທໍ່ກັນ ຊອບແລ້ວ ອັນນຶ່ງໃຜຜູ້ຂໍລູກແກ້ວ ດອນທ່ານຜູ້ໄກ ກໍດີ ຂໍມາເປັນ ລູກຕິນແທນສ້າງ ພາຍລຸນນັ້ນ ພອຍໜີເສັຽຈາກ ດັ່ງນັ້ນ ຄວນໃຫ້ເອົາຄ່າລ້ຽງ ສາມຮ້ອຍແມ່ນຄອງ ຊອບແລ້ວ ອັນນຶ່ງເອົາລູກຂ້ອຍ ໃຫ້ພົ້ນຈາກເປັນໄທ ກໍດີ ພາຍລຸນໜີ ຂ້າຕາຍປ່າໄວ້ ຄັນວ່າບັງໄວ້ແທ້ ຊີວັງໃຫ້ຂາດ ເສັຽທ້ອນ ຄວນທີ່ໃຫ້ຂືນແທ້ ຖວາຍຣາດເຮງໃຍ ກໍຈຶ່ງຕາມຄອງເມືອງ ກ່າວມາສັບນີ້ ຈັກກ່າວຫ້ອງ ຫິນແຫ່ງຄອງເສິກ ກ່ອນແລ້ວ ເສນາທັງມຸນຕີ ຈິ່ງຄອງຄະດີໄວ້ ຜີວ່າຂ້າເສິກເບື້ອງ ຫິນແຫ່ງໃດມາ ກໍດີ ໄພຍໄພຈັກ- ເກີດມີ

---

(໑) ມຸນເຮືອນ ຄືຈະໄດ້ແກ່ມໍຣະດົກ

ສັນນີ້ ໃຫ້ຮີບໄປຫັນແທ້ ກຳລັງມາມາກ ນັ້ນເນີ ຄົນຢ່າຂ້າ ພລັບແທ້ຫ່ຽວເປືອງ ຄັນວ່າບ້ານຢູ່ໃກ້ ມາເປືອງພລັບຮີບ ກາຍບ້ານໜ້າ ມາແທ້ຫ່ຽວພລັບ ແທ້ເນີ ຝູງໝູ່ບ້ານໜ້າ ນັ້ນ ໂທດຖືກເຖິງຕົນ ແທ້ແລ້ວ ຜີວ່າຕາມຄອງເມືອງ ຂ້າ ຕາຍນໍຣະນ້ຽນ ຜີວ່າເສິກຫຼວງແທ້ ພລັບເປືອງໃຊ້ຄອບ ຢ່າ ໄດ້ຈຳ[1] ໜ້າໄມ້ ປືນໄຟເມືອຄອບ ບໍ່ດີດາຍ ຊື່ວ່າດູໝິ່ນແທ້ ກາບພຣະເຈົ້າຢູ່ຫົວ ແທ້ແລ້ວ ຄັນວ່າຝູງໃຊ້ນັ້ນ ມັນຫາກ ແປງເອົາ ກໍດີ ຄວນທີ່ເອົາມັນມາ ຂ້າຕາຍນໍຣະນ້ຽນ ຜີວ່າ ຍັງໄວ້ແທ້ ຂັບຄາຄໍຕັດໃສ່ ນັ້ນເນີ ຢ່າໄດ້ປມາດແທ້ ພາຍ ໜ້າຊິບໍ່ດີ ແທ້ດາຍ ອັນນຶ່ງຂຸນໃດໄດ້ ກິນເມືອງເຫັງໄພ່ ສັນ ນັ້ນ ໄພ່ຫາກຮ້ອງທຸກເຈົ້າ ຈອມຊ້ອຍພຣະບອດເມືອງ ດັ່ງນັ້ນ ຄັນວ່າສິດທີເດດໄທ້ ທົງຜ່ານໄດຄຳ ພຣະກໍປົງຄຳລົງ ໃຫ້ພື ຈານແຈ້ງ ຜີແມ່ນຄຳໄພ່ແທ້ ເດີມຄອງຕັດແຕ່ງ ສັນນັ້ນ ຂຸນ ນັ້ນຄວນໃຫ້ຂ້າ ເສັຽແທ້ຫ່ຽງຈິງ ແທ້ດາຍ ຄັນວ່າຂຸນຫາກ ສອນໄພ່ແທ້ ໄພ່ຫາກສອນຄວາມ ດັ່ງນັ້ນ ເຈົ້ານາຍສອນ ຄວາມດີ ພັດເລົ່າຊີ້ທາງຮ້າຍ ເປັນຄົນດື້ ເກເຮເຫຼືອແບບ

(໑) ປ່າໄດ້ຈຳໜ້າໄມ້ ສະບັບເດີມວ່າ ປ່າໄດ້ຂຽນໜ້າໄມ້

ຄວນທີ່ຂ້າ ເສັງແທ້ຊອບຄອງ ແທ້ແລ້ວ ອັນນຶ່ງຄົນຕ່າງບ້ານ
ໄປປອງຂ້າເພີ່ນຕາຍນັ້ນ ຣອດຂອບບ້ານ ແຄມຮົ້ວນອກເຮືອນ
ຄັນວ່າເຈົ້າບ້ານຮ້າຍ ພອຍຂ້າມັນຕາຍ ດັ່ງນັ້ນ ກໍບໍ່ເປັນໂທໂສ
ຂ້າຕາຍລາງແລ້ວ ຜີວ່າບໍ່ຕາຍແທ້ ພໍມັນເຈັບໃຫຍ່ ດັ່ງນັ້ນ
ຫາກຮ້ອຍແທ້ ໃຫ້ຊ້ຳໃສ່ມັນ ຫັ້ນທ້ອນ ຜີມັນໄດ້ຂ້າເຈົ້າບ້ານ
ມຸດມອດຕາຍໄປ ດັ່ງນັ້ນ ຄອງເມືອງວັດ ໃສ່ມັນແທນຫ້າ
ສ່ວນວ່າຂັບສົມມານັ້ນ ທໍ່ຄ່າຫົວຄົນ ທັງມອບຕົດ ໃສ່ມັນຕົງ
ສ້ຽງ ເຫດມັນເປັນຄົນຮ້າຍ ອັນທະພານຂ້າທ່ານ ມັນຂີ້ຮ້າຍ
ຜອກພົ້ນ ເຫຼືອລົ້ນລົ້ນຄອງ ອັນນຶ່ງໄທຮ່ວມບ້ານ ເຂົາຫາກ
ຊູບ[1] ບັນ ກໍດີ ເຂົາຫາກຊູບມາເຖິງ ຫຼ່ເຮືອນຈິງແທ້ ອັນວ່າ
ໄທເຮືອນຮູ້ ລົງມາຂ້າຊ່ອຍ ເສັ້ງນັ້ນ ມັນຫາກຕາຍນອກມ້ຽນ
ລາງແລ້ວຢ່າຂແບງ ແທ້ວາຍ ແມ່ນວ່າໃຈບໍ່ຂາດແທ້ ທ່ຽງ
ເລົ້າຄືນມາ ດັ່ງນັ້ນ ຄວນຕັດຂັບແປງເຮືອນ ໃສ່ມັນພໍຮ້ອຍ ຜີ
ວ່າມັນກຸມຂ້າ ເຈົ້າເຮືອນນໍລະນິງ ໄປນັ້ນ ຄວນໄຊ້ແທ້ ຄ່າ
ຄົນນັ້ນຊອບຄອງ ແທ້ດາຍ ອັນວ່າຂັບສົມມານັ້ນ ທໍ່ຄ່າຫົວຄົນ
ກໍຈິງຕົງຕາມຄອງ ແຕ່ຫຼັງມາແທ ຄັນວ່າຜູ້ເມືອຊູທ່ານນັ້ນ

---

(໑) ໄທຮ່ວມບ້ານເຂົາຫາກຊູບນັບ ຄືຈະແມ່ນຊູບກັບຫື ກມດີກັບ

ມີກຳລັງອັນມາກມາຍຫຼາຍນັ້ນ ສ່ວນວ່າຜູ້ ເຈົ້າເຮືອນນັ້ນບໍ່ມີ
ຄວນໃຫ້ບັນດິດຜູ້ ພິຈານດັງດີ ໃຫ້ເພີ່ນຫຼົງລ່ຳແຈ້ງ ພາຍ
ພຸ້ງນຊູ່ປະການ ນັ້ນທ້ອນ ພິວ່າມັນຣິບດ້ວຍ ຫອກດາບຫຼາວ
ແຫຼນ ດັ່ງນັ້ນ ຄວນທີ່ກຸມເອົາຕົວ ຂ້າເສັຽຢ່າໄວ້ ອັນນຶ່ງເຈົ້າ
ເຮືອນຍັງຕື່ນຫ້ວງ ໄປທີ່ທາງໃດ ກໍດີ ເພາະວ່າລືມສະຕິຫຼົງ
ເມື່ອໄຟລາມໃໝ້ ຜູ້ອື່ນເລີຍເລົ່າ ຂຶ້ນຍາດເອົາສິ່ງອາພອນ
ເລີຍລວດເອົາໜີເສັຽ ຍາດໄປໝົດໄດ້ ໃຜຜູ້ດຶງຍາດຮື້ ສວຍ
ເອົາຂອງທ່ານ ກໍດີ ໃຫ້ຜູກໄວ້ ສັບນັ້ນຂັງນດູ ທັ້ນທ້ອນ ພິ
ວ່າສິນພໍຂ້າ ພັນເສັຽຕາມໂທດ ກໍໃຫ້ໃສ່ໂທດແທ້ ຫຽນຕັ້ງ
ແກ່ຫຼັງ ນັ້ນເນີ ອັນນຶ່ງຄົນດີແທ້ ເອົາຂອງຮັກສາຊ່ອຍ ໄຟ
ນອກແລ້ວ ຄືນໃຫ້ຢ່ານານ ແທ້ດາຍ ອັນວ່າເຈົ້າຂອງນັ້ນ
ຄວນຢ່າລືມຄຸນ ແມ່ນວ່າກຳລັງໄຟ ກໍດັ້ງກັບເສິກນັ້ນ ອັນນຶ່ງ
ໂຈນມານຮ້າຍ ມາເກີດກາງຄືນ ກໍດີ ກໍບໍ່ມີຄົນໃດ ເມື່ອດຶງ
ພໍຮູ້ ເລີຍເລົ່ານັ້ງເອີ້ນຂຶ້ນ ກາງຄືນເດິກດື່ນ ຄົນຕື່ນຫ້ວງ ທັງ
ຖ້າຍຊູ່ທາງ ດັ່ງນັ້ນ ຄວນໃຫ້ມີແປກໄດ້ ໂຄນໄລ່ເອົາໂຈນ ນັ້ນ
ເນີ ຢ່າໄດ້ວາງມັນເສັຽ ໄລ່ຕາມເອົາແທ້ ຄັນວ່າໃຜບໍ່ມີລິງ
ຕ້ອນ ເອົາໂຈນຊິດຊ່ອຍ ເຂົານັ້ນ ມັນທາກໃຈຄຶດພ້ອມ ໂຈນ

ແຫ້ບໍ່ສິງ ແຫ້ແລ້ວ ທັງຫຼາຍຍັງໄລ່ຕ້ອນ ຕອນໄຕ່ຮອຍໂຈນ ດັ່ງນັ້ນ ມັນບໍ່ໄປນຳໂຈນ ໂຫດມີພາຍໜ້າ ຝູງໃດຮັກສາຄຸ້ມ ປະຕູຫວານທັງສີ່ ດັ່ງນັ້ນ ໃຫ້ລັດຖ້ອຍ ຖາມແຫ້ທີ່ຄວນ ຫັ້ນທ້ອນ ອັນນຶ່ງຝູງໃດໄປຄ່ຳນັ້ນ ໃຫ້ເຂົາໂຈມທວນແປກ ໄປເນີ ຢ່າໄດ້ໄປມືດແຫ້ ສັນນັ້ນບໍ່ຄວນ ແຫ້ແລ້ວ ຄັນວ່າໄປຮອດຖ້ວນ ປະຕູຫວານທັງສີ່ ເມືອໃດ ຄວນກ່າວຖ້ອຍ ຖາມແຫ້ຖີຄວາມ ເຈົ້າເອີຍ ມັນຫາກຍັງກ່າວກ້າ ຄຳໄຊດແຂງງານ ດັ່ງນັ້ນ ຄວນໃຫ້ນາຍປະຕູຫຼວງ ຜູກຈຳເອົາໄວ້ ຄັນມັນມີອາວຸດພ້ອມ ຫອກດາບຫຼາວແຫຼນ ດັ່ງນັ້ນ ຄວນທີ່ເຕີນທັງຫຼາຍ ຜູກເອົາ ຕິງໄດ ແລ້ວເລົ່າພິຈານໃຫ້ ຕອງດູບັງໂຫດ ມັນນັ້ນ ຫຼອນວ່າຍັງສລັງ ເມົາແຫ້ລ່ວງໄປ ບໍ່ຮູ້ ຜີວ່າໃຈໂຮນັ້ນ ບໍ່ມີສັງຈັກສິງ ສັນນັ້ນ ໃຫ້ພ່ຳພ້ອມ ກັບຂ້າມອດຈິນ ຫັ້ນທ້ອນ ແມ່ນວ່າບ້ານໄພ່ນ້ອຍ ຊຸບໝື່ນເສນາ ກໍດີ ຝູງຊາວເມືອງ ນອກໃນທັງຄ້າຍ ອັນນຶ່ງໃພຜູ້ຍັງເຊື່ອງໄວ້ ຝູງໝູ່ໃຈໂຮ ດັ່ງນັ້ນ ມັນກະທຳປາປັງ ບຸດບຸນກະສັດເຈົ້າ ມັນກໍບໍ່ປຳປ້ານ ຄອງເມືອງອັນກ່າວ ມານີ້ ໂຫດຫາກມີຖືກຕ້ອງ ໃໝຊ້ຳຖອດ[1]ບາ ແຫ້ແລ້ວ.

---

(໑) ຄຳວ່າຖອດບາ ແມ່ນຖອດຊັ້ນຍົດ

ບັດນີ້ພຣະບາດເຈົ້າ ສອນສັ່ງບິງຊາຍ ກ່ອນແລ້ວ ຄັນວ່າໄດ້ຍິນສຽງກອງຫຼວງ ລັ່ນໃນ[2]ນະວັງເຈົ້າ ແມ່ນວ່າຝູງໝູ່ໄປຄ່ວາເບື້ອງ ທິງແຫ່ງທາງໃດ ກໍດີ ໃຫ້ຮີບເຣວມາຫາ-ທີ່ເຮືອນຕິນແທ້ ຄັນຫາກໄປຄ່ວາເຮືອນພີ່ນ້ອງ ທິບແຫ່ງທາງໃດ ກໍດີ ນັບຫາກເຖິງຣາຕີ ຄ່ຳຈວນນອນຫັ້ນ ອັນນຶ່ງທາສີຂ້າ ບິວບາງໃຊ້ຊ່ວງ ກໍດີ ໄດຍິນກອງລັ່ນແລ້ວ ສຽງກ້ອງຢ່າໄປ ຄັນທີ່ເປັນໄປແທ້ ໃຫ້ເຖິງຍາມແຈ້ງຮຸ່ງ ກ່ອນເນີ ຄັນຫາກໄປຄ່ຳແທ້ ສັນນັ້ນບໍ່ຄວນ ເຈົ້າເອີຍ ອັນນຶ່ງອາມາດທ້າວຝູງໝູ່ເສນາ ກໍດີ ຄວນໃຫ້ມີໄມຕີ ແກ່ກັນສອງເບື້ອງ ຍາມຈັກໄປປາງແທ້ ໃຫ້ຖືໂຄມໄຕ້ແປກ ນັ້ນເນີ ຢ່າໄດ້ໄປມືດແທ້ ສັນນັ້ນບໍ່ຄວນ ແທ້ແລ້ວ ຄັນຍັງຕ່າງປະເທດແທ້ ໃຫ້ນາຍກວນຖາມຖື ດູທ້ອນ ຫາກຮູ້ຈັກທີ່ຢູ່ແທ້ ຄວນໃຫ້ອອກໄປ ຄັນບໍ່ຮູ້ທີ່ແທ້ ໃຫ້ນຳສິ່ງໜີຄືນ ສິ່ງໃຫ້ເຖິງເຄຫັງ ແຫ່ງເຂົາຝູງນັ້ນ.

ບັດນີ້ຈັກກ່າວຫ້ອງ ທິບແຫ່ງມະຫິງສາ ກ່ອນແລ້ວ ຄົນໃດຈັກກະທຳປາບາ ຂ້າຄວາຍກິນຊີ້ນ ກໍໃຫ້ເມືອເຖິງແທ້

---

(໑) ນະວັງເຈົ້າ ຄືໄດ້ແກ່ຣາຊວັງເຈົ້າ

ຈຳຫຼັກເກີບອາດ ຄັນບໍ່ກ່າວໃຫ້ຮູ້ແທ້ ຄວາຍນັ້ນຍາດເອົາ ຫັ້ນຫ້ອນ ອີກພັດເລົ້າຊ້ຳໃຫ້ ຕັດໃສ່ສິບໃໝ ຄວນໃຫ້ເອົາ ຄວາຍເຖິງ ຫ້າໂຕຈິງແທ້ ບັດນີ້ຈັກກ່າວຫ້ອງ ຫົນທີ່ຄວາມ ເມືອງ ກ່ອນແລ້ວ ອັນວ່າຫົນບົວຣະພາ ແຕ່ຊຽງລືພຸ້ນ ກ້ຳ ເບື້ອງບ້ານປີເຫົ້າ ເຖິງທີ່ນາບາງ ທີ່ພຸ້ນ ບັງເລົ້າລົງໄປເຖິງ ຮອດເມືອງບວນແທ້ ວັນຕົກນັ້ນ ຊຽງຫວາງເປັນເຂດ ທາງ ບືດກວ້າງ ເຖິງເຂດຄາວງາຍ ຫົນເໜືອນັ້ນ ຕັດຕອນເປັນ ເຂດ ມັນຫາກແມ່ນເຂດແທ້ ຈອມຊ້ອຍທີ່ເຊງ ແທ້ດາຍ ຜູ້ ໃດຈັກທຳຂ້າ ບັງຄວາຍໃນເຂດ ກໍດີ ຄວນໃຫ້ເອົາຂັບໃໝ ສິງພາຍຫຼັງນັ້ນ.

ບັດນີ້ຈັກກ່າວຫ້ອງ ຫົນແຫ່ງພານິໃຊ ກ່ອນແລ້ວ ໃຜຜູ້ເມືອງໄກແທ້ ປະສົງມາຊື້ຕໍ່ຄວາຍນັ້ນ ໃຫ້ເມືອສັນຍາແຈ້ງ ເຖິງຫຼັກເລີບລາດ[1] ເສັ່ງກ່ອນ ໃຫ້ຮູ້ແທ້ ຄວາຍນັ້ນກໍຈິງຂາຍ ຄວນແລ ຄັນເພີນຟ້າວຊື້ແທ້ ປ່າເລົ້າລອນຂາຍ ແທ້ດາຍ ຄົນໃດມາໂອນເອົາ ປ່າຫອນຂາຍໃຫ້ ຄັນຫາກບັງບໍ່ຄອນແທ້ ພອບເລົ້າກິນຂາຍ ດັ່ງນັ້ນ ໃຫ້ຣິບຣີ້ ເອົາແທ້ທີ່ຄວາຍ ຫັ້ນ

(໑) ຄຳວາຫຼັກເລີບລາກ ຫຼືຫຼັກເກີບລາດບໍ່ ເຂົ້າໃຈວ່າແມ່ນເຈົ້າໜ້າທີ່ ຜແນກພິມສັກ

ຫ້ອນ ໂທດໃສ່ຊ້ຳ ຕັດໃສ່ຂັບໃໝ ຄວນທີເອົາຄວາຍມັນ ຫ້າ
ໂດຈິງແທ້ ຄັນວ່າເມືອງເບັ້ນແທ້ ໃຫ້ຄອບຂຸບຕາງ ຫັ້ນຫ້ອນ
ຄັນຫາກບໍ່ຄອບແທ້ ໃໝຊ້ຳດັ້ງຫຼັງ ເຈົ້າເອີຍ ບັດນີ້ພຣະ
ບາດເຈົ້າ ປິງອາດບາສອນ ໃຜູ້ເອົາກາບຝູງ ຫຼໍ່ດີເງິນນັ້ນ
ຄັນໃຜປາກຫຼໍ່ແທ້ ໃຫ້ເມືອຫາຊ່າງຫຼໍ່ ນັ້ນເນີ ເພິ່ນຫາກໃຫ້
ຫຼໍ່ແທ້ ສັນນັ້ນຈິງຄວນ ຫັ້ນແລ້ວ ໃຜບໍ່ຟັງຄວາມແທ້ ເລີຍ
ໄປລັກຫຼໍ່ ດີນັ້ນ ເງິນມັນໃຫ້ບາດຣື້ ເອົາແທ້ສິ່ງດຽວ ຫັ້ນແລ້ວ
ມັນຫາກມີໂທດແທ້ ຕັດໃສ່ຂັບໃໝ ຕາມຄອງເມືອງ ໂທດມີ
ພໍຣ້ອຍ ໃຜູ້ເປງເງິນຄວ້າງ ທອງແດງຕົວະຈ່າຍ ຂາຍນັ້ນ
ຄວນຖືກຂັບຄາດໍ ແຫ່ງຄອງເມືອງຕັ້ງ ໃຜູ້ຕົວະລ່າຍແທ້ ເວົ້າ
ວ່າເງິນດີ ດັ່ງນັ້ນ ເຖິງເມືອພາຍລຸນເລີຍ ເລົ້າເປັນເງິນຄວ້າງ
ດັ່ງນັ້ນ ຄວນໃຫ້ມັນແທນໃຊ້ ຕາເປັນສອງທໍ່ ໃຫ້ແຕ່ງຂັນ
ສິນມາ ທໍ່ເງິນອັນນັ້ນ ຄັນວ່າຜູ້ໃດຊື້ ຕາມຄອງອັນຊອບ ດັ່ງ
ນັ້ນ ຢ່າໄດ້ຕິກ່າວຕ້ານ ລັງຂໍ້ບໍ່ຄວນ ຝູງໃດເອົາຂາດແທ້ ຢ່າ
ດ່າຖຽງກັນ ນັ້ນເນີ ຢ່າໄດ້ເອົາຂອງກັນ ໂທດມີພາຍໜ້າ ອັນ
ນຶ່ງພວກໄພ່ນ້ອຍ ຝູງໝູ່ຄົນທຸກ ກໍດີ ເອົາຈັກກູ້ ຂອງໝື່ນ
ແສນພັນ ດັ່ງນັ້ນ ອັນນຶ່ງໄພ່ຫາກກູ້ ຂອງກັນກວນແລກ ກໍດີ

ຄັນວ່າສັກຂີ ມີພ່ຳພ້ອມ ເອົາໃຫ້ກໍຈິ່ງຄວນ ແທ້ແລ້ວ ຖ້າວ່າ ເຖິງສາມຮ້ອຍ ຢ່າໄດ້ວ່າດຽວດາຍ ເຈົ້າເອີຍ ຄວນໃຫ້ມີໜັງສື ຂີດຂຽນໝາຍໝັ້ນ ເຖິງເມື່ອຍາມແທນແທ້ ມັນບໍ່ມີຂອງສິ່ງ ດັ່ງນັ້ນ ເຈົ້າຂອງເຂົ້າເຖິງເສນດແທ້ ຂໍເຂົ້າເພິ່ງຄອງ ໂດຍ ດັ່ງດ້ານ ຍາມເມື່ອມາເອົາ ດັ່ງນັ້ນ ທັງໃບລານ ສັກຂີມີພ້ອມ ອັນນຶ່ງຝູງຂ້ອຍນ້ອຍ ທັງໝູ່ຄົນຫຍິງ ກໍດີ ຂ້ອຍເສນາຂຸນຄ້າ ທັງກວານບ້ານໃຫຍ່ ຂ້ອຍຝູງນີ້ທຳຜິດແທ້ ເມື່ອໜ້າໂທດມີ ເຈົ້າເອີຍ ເຂົາຫາກຫາບໍ່ໄດ້ ກູ້ທ່ານມາເສັຽນັບແຕ່ຮ້ອຍ ທີ ຂຶ້ນເມື່ອເທິງ ຫັ້ນທ້ອນ ໃຫ້ຂາດກາງຫຼັງເສັຽ ຖືກການພາຍ ໜ້າ ຈິ່ງໃຫ້ຄາດສືບໄວ້ ອັນເສັຽກັບໂທດ ມັນນັ້ນ ຄວນນຳ ຮອດເສນດທ້າວ ບໍ່ຂຶ້ນຂາບທູນ ຜູ້ໃດບໍ່ຈື່ແຈ້ງ ຄອງກ່າວ ສອນມາ ດັ່ງນັ້ນ ກໍຫາກເປັນໂທໂສ ໂທດຖອງເຖິງແທ້ ອັນ ນຶ່ງຂຸນດ່ານພ້ອມ ຂຸນທໍຂ້ອຍໄພ່ ກໍດີ ຂ້ອຍພຣະຜູ້ແຜ່ນລ້ານ ບຸນກວ້າງຊູ່ຄົນ ແທ້ດາຍ ຄັນເຂົາທຳຜິດແທ້ ຄວນຕີແລຜູກ ຫັ້ນທ້ອນ ຄວນຂາບໄຫວ້ ທູນເຈົ້າພຣະຍອດເມືອງ ແທ້ດາຍ ຄັນວ່າພຣະຫາກປົງອາດແລ້ວ ກໍຈິ່ງໃສ່ໂດຍຕາມ ຜິວ່າທັບ ທູນອິງ ກໍຢ່າທຳສັນນັ້ນ ຜິວ່າເສນາທ້າວ ຂຸນກວານພາຍ

ບອກ ກໍດີ ຄວນຖືຂັບຄາຄໍ ຖອດເອົາໃໝຊ້ຳ ອັນນຶ່ງຫຼວງ
ແສນພ້ອມ ເສນາຂຸນໝື່ນ ກໍດີ ອັນວ່າຂ້ອຍຜູ້ນັ້ນ ຜິດແທ້ສິ່ງ
ໃດ ກໍດີ ຄວນໃຫ້ເຈົ້າເມືອງນັ້ນ ພິຈານຕຶ່ງຖີ່ ໂທດຫາກມີ
ນາກນ້ອຍ ປະມານແທ້ທໍ່ໃດ ໂທດຫາກມີນາກແທ້ ຄວນ
ຮອດເສນາ ກໍດີ ຄັນວ່າເຖິງເສນາ ໃຫ້ພິຈານແຈ້ງ ໃຫ້ຊອບ
ແທ້ ຄອງແຕ່ພາຍຫຼັງ ຫັ້ນທ້ອນ ອັນນຶ່ງຄົນຜິດເບື້ອງ ເມືອງ
ໃດເປັນໂທດ ກໍດີ ໃຫ້ເຈົ້າເມືອງກ່າວຕ້ານ ພິຈານແທ້ຊອບ
ຄອງ ແທ້ດາຍ ຄວນທີ່ຝູງຮັກສາໂຈນນັ້ນ ຖາມດູຕຶ່ງຖີ່ ຫັ້ນ
ທ້ອນ ໃຜຜູ້ມາເຫມ້າງ ໃຫ້ຕັດໃສ່ຂັບໃໝ ຕາມຄອງນີ້ ແມ່
ພິມເມືອງບ້ານ ຢ່າແຜກຖ້ອຍ ໜີຄອງຄວນຊອບ ເປັນຮ້ອຍ
ແທ້ ເງິນນັ້ນຊອບຄອງ ເຈົ້າເອີຍ ອັນນຶ່ງພາສາວຫ້ອງ ວິໄຊ
ບັນພູວະບາດ ຄວນໃຫ້ເຮັດຕ້ານອ້ອມ ວຽງລ້ອມໃຫ້ດີ ໃຜຜູ້
ນ້າງລຶກຣົ້ວ ເຂົ້ານັ້ງທັງນອນ ກໍດີ ຄວນໃຫ້ຕັດຂັບໃໝ ໃສ່
ມັນສາມຮ້ອຍ ຜິວ່າແມ່ນຂ້ອຍແທ້ ດີເສັ້ງສາມບາດ ຄວນແລ້ວ
ຄັນວ່າເໝີດໂທດແລ້ວ ວາງໄວ້ສັ່ງສອນ ຊອບແລ ອັນນຶ່ງທາງ
ທີ່ເຂົ້າແວ່ບ້ານ ທັບທີ່ເຮືອນໃຜ ກໍດີ ໃຫ້ມີຄຳສັນຍາ ກ່າວ
ຂຸນກວານບ້ານ ຜິວ່າເຂົ້າຜິດແທ້ ໃຫ້ພິຈານຕຶ່ງຖີ່ ດີເນີ ຄັນ

ຫາກສົມໂຫດແທ້ ຄອງດັ້ງກໍຈິ່ງໃໝ ແທ້ດາຍ ຄັນບໍ່ຄວນໃໝແທ້ ຄວນວາງເສັຽປ່າ ຄອງຫາກດັ້ງ ສັບນີ້ແຕ່ງມາ ແທ້ແລ້ວ ຜິບໍ່ສັນຍາແທ້ ບັງເກີດເປັນຄວາມ ດັ່ງນັ້ນ ຕາມພາສາ ດັ່ງລືລາງແລ້ວ ອັນນຶ່ງຝູງໃດໄດ້ ຂອງຕົກພົກເຮັ່ງ ສັບນັ້ນ ຄວນທີຜ່າດ່ອງໃຫ້ ເຈົ້າຂອງນັ້ນຊອບຄອງ ແທ້ແລ້ວ ອັນນຶ່ງໃຜຜູ້ໄປກິນເຫຼົ້າ ມົວເມົາຢູ່ເຮືອນເພິ່ນ ກໍດີ ໄປຄວ່າຜິດເພິ່ນແທ້ ເງິນເບັ້ຽແຕ່ງແປງ ຊອບແລ້ວ ອັນນຶ່ງໃຜຜູ້ໄດ້ຊ່າວບ້ານ ຮື້ປົດເປັນນາ ດັ່ງນັ້ນ ຢ່າໃຫ້ໃຜຊິງເອົາ ຫາກແມ່ນນາມັນແລ້ວ ຜິວ່າປາກປັນແທ້ ໃຫ້ສັບນາໄຮ່ອື່ນ ດີແລະຮ້າຍສເມີນັ້ນກໍຈຶ່ງແທນ ຫັ້ນທ້ອນ ຜິວ່າມັນຫາກເຮື້ອ ໄດ້ຂວບຫຼາຍປີ ກໍດີ ຄັນວ່າມີຜູ້ສັບເປັນນາ ແປ່ແປນໝົດຖ້ວນ ອັນວ່າຜູ້ອື່ນຊ້ຳ ລວດບນມາຊີງຍາດ ເອົານັ້ນ ກໍຫາກຜິດຄອງເມືອງ ບໍ່ຄວນວາງໃຫ້ ອັນນຶ່ງຄົນໄດ້ໄປລ່າວໄມ້ ຊ່າວປ່າເປັນນາ ດັ່ງນັ້ນຫັງຄັ້ງຍຽງ[1] ລວດເປັນນາແທ້ ກໍຫາກຄວນວາງໃຫ້ ມັນກິນໝົດຊົ່ວ ຊີວັງແລ້ວ ຄັນຫາກໝົດຊົ່ວແລ້ວ ເຫຼັນຫຼ້ອນສືບກິນ ຫັ້ນທ້ອນ ຜິວ່າປົດນາເຮື້ອ ສາມປີໝົດຄ່າ ມັນແລ້ວ ແຕ່ວ່າການຊ່າວນັ້ນ ຄວນໃຫ້ບອກເຕີນ ຊອບແລ້ວ.

---

(໑) ຄຳວ່າ ຄ້ງຍຽງ ແມ່ນໂຄກຍຽງ

ບັດນີ້ພຣະບາດເຈົ້າ ເດີນໝູ່ຫົວເມືອງ ກ່ອນແລ້ວ
ກັບທັງເສນາຫານ ໝູ່ຂຸນພົນ[1] ພ້ອມ ຄັນວ່າກິນເມືອງໃຫ້ ຈາ
ກັນຄອງຊອບ ນັ້ນເນີ ຢ່າຂາດບ້ານ ຜິດຂ້ອງແຫ່ງກັນ ແທ້
ດາຍ ອັນນຶ່ງຢ່າໄດ້ຂາດນ້ຳກ້າ ທັງທີເໜືອງຝາຍ ນັ້ນເນີ ຢ່າ
ໄດ້ຊີງແດນດິນ ທີພຣະອົງປັນໃຫ້ ອັນວ່າເໜືອງຝາຍໃຫ້ ແປງ
ດີຕິກແຕ່ງ ລ້ຽງໄພ່ໃຫ້ ເມືອງບ້ານຮຸ່ງເຮືອງ ຫັ້ນທ້ອນ ອັນ
ນຶ່ງໃຫ້ຊອບແທ້ ຕາມແພ່ງສິບປະການ ຢ່າໄດ້ໄລພາຫຼາຍ
ບຽດບຽນໃຈລ້ຽວ ອັນນຶ່ງທາງໃນບ້ານ ເມືອງໄພທຸກແຫ່ງ ຄັນ
ວ່າຫຽວຍາກຮ້າຍ ຖຽງໃຫ້ແປ່ແປນ ແດ່ເນີ ຜິວ່ານຳການຮ້ອນ
ຈຳໄປໃຊ້ຮີບ ດັ່ງນັ້ນ ຄັນວ່ານ້ຳຫາກລົ້ນ ດາຍແທ້ໃຫ້ແຫນ
ແທ້ດາຍ ຄັນຫາແຫນບໍ່ໄດ້ ໃຫ້ຕັດໃສ່ຂັນໃໝ ກໍຫາກຕາມ
ຄອງເມືອງ ໂທດມີສາມຮ້ອຍ ອັນນຶ່ງດິງດອນບັງພໍສ້າງ ແປງ
ເມືອງແມ່ນເຂດ ໃພນັ້ນ ກໍຢ່າໄດ້ລ່ວງລ້ຳ ເອົາແທ້ເຂດແດນ
ນັ້ນເນີ ອັນນຶ່ງເໜືອງຝາຍນ້ຳ ຮັກສາດີແວນຂນາດ ເຂດໃພ
ໄວ້ເຂດນັ້ນ ມັນຫັ້ນຢ່າຊີງ ໃພຜູ້ມັກມ້າງຮື້ ສັບຊ່ວາເປັນນາ
ດັ່ງນັ້ນ ເຫັນວ່າແດນໃພ ກໍຢ່າຫວງແຫນໄວ້ ຜິວ່າເຂົາຫາກ

---

(໑) ຂນພົນ ແມ່ນທະຫານຊັ້ນນາຍພັນຂຶ້ນໄປ

ສັບນາຫຼວງໄວ້ ກັບເມືອງແຄວນຊອບ ເຂດບ້ານໄວ້ແກ່ບ້ານ ສັບນັ້ນຊອບຄອງ ເຈົ້າເອີຍ ອັນນຶ່ງໃຫແລະຂ້າ ກະທຳໄຮ່ນາ ກິນ ດັ່ງນັ້ນ ອັນວ່າດິນໃຫໃຫ້ ຫາໃຫຕາມຮີດ ດິນຂ້າໄວ້ແກ່ຂ້າ ສັບນັ້ນຊອບຄວນ ແທ້ແລ້ວ ຝູງໃດໄດ້ ທຳກິນແດນເພິ່ນ ລຸນເລົ່າເວົ້າ ພາຍໜ້າວ່າບໍ່ດີ ດັ່ງນັ້ນ ຝູງນີ້ຕາມຄອງຕັ້ງ ອັນໃໝຕັດໃສ່ ທັ້ນທ້ອນ ເຮັດໃຫ້ມັນແມ່ນແທ້ ສາມຮ້ອຍປ່າ ກາຍ ທັ້ນທ້ອນ ອັນນຶ່ງພຣະຫາກໃຊ້ ໄປທີ່ທາງໃດ ກໍດີ ຝູງເສນາ ແຕ່ງໄປການໃຊ້ ປ່າກາຍຖ້ອຍ ຕາມກອນພູວະບາດ ຄັນວ່າໄດ້ຄ່ຽນແທ້ ໄປນັ້ນກໍຈຶ່ງໃດຍ ອັນນຶ່ງບໍ່ໄດ້ຫ້າງຄ່ຽນແທ້ ປ່າບອກຈຳໄປ ນັ້ນເນີ ຄັນວ່າຍັງກາຍຄອງ ໂຫດມີຈິງແທ້ ຜິວ່າຄົນໃຊ້ນັ້ນ ມີຄົນຖືຫາບ ນຳນັ້ນ ກໍບໍ່ຄວນຄ່ຽນແທ້ ຄອງຕັ້ງແຕ່ງມາ ແທ້ດາຍ ໃຜຜູ້ຫາກຮູ້ແລ້ວ ພອຍເລົ່າພາງານ ດັ່ງນັ້ນ ຜິດອັນໃດ ແມ່ນຄອງບໍ່ໄຫວ້ ອັນວ່າສົມນານັ້ນ ຄວນຍໍທັ່ງນຶ່ງ ໃຫ້ເອົາອັນຄ່ຽນນັ້ນ ນາຕັ້ງແຕ່ງຂັນ ທັ້ນທ້ອນ ຜິວ່າໄປຮູ້ແທ້ ຍັງຮີດຄອງເມືອງ ດັ່ງນັ້ນ ຄວນທີ່ຍໍຂັນໃໝ ທໍ່ຂັນອັນຫ້າ ສົມນານັ້ນ ປຸດລົງເປັນຖ່ອງ ປ່າໃຫ້ກາຍກວ່ານັ້ນເມືອໜ້າບໍ່ຄວນ ເຈົ້າເອີຍ ຜິວ່າໃຊ້ຮີບແທ້ ຂັດດາບພາບຖົງ

ລົງເຮືອນເຮວ- ຣີບໄປຢ່າຍັ້ງ ຄັນບໍ່ຮູ້ຮີບແທ້ ຍັງທີ່ທາງໄປ
ດັ່ງນັ້ນ ຄວນໃຫ້ໄທຄາເມ ສິ່ງໄປແດນນັ້ນ ອັນນຶ່ງທານຍັງພໍ
ຄ່ຽນແທ້ ຕາມຄອງອັນກ່າວ ມານີ້ ຜີວ່າຄ່ຽນບ້ານແທ້ ມີທັ້ນ
ທານດຽວ ແທ້ດາຍ ຜີວ່າເຖິງສອງເທົ່າ ເມື່ອເທິງຫຼາຍທານ
ດັ່ງນັ້ນ ຄອງກ່າວໄວ້ ຄວນໃຫ້ຄ່ຽນໄປ ແທ້ເນີ ຄັນວ່ານ້າໜັກ
ທານນັ້ນ ເປັນໝື່ນທິກພັນ ດັ່ງນັ້ນ ຢ່າໄດ້ທຳການໜັກ ລື່ນ
ຄອງອັນຕັ້ງ ຜີວ່າລູກຫຼານທ້າວ ເສນາແສນໝື່ນ ກໍດີ ເຂົາ
ຫາກໄປຄວ່າຊີ້ ຂາຍແທ້ວຽກຕົວ ຢ່າໄດ້ໃຫ້ຄ່ຽນແທ້ ຍັງທານ
ຂອງຕົວ ດັ່ງນັ້ນ ອັນວ່າຄອງເມືອງຕັດ ກ່າວມາສັນນີ້ ອັນນຶ່ງ
ຄົນໃດໄດ້ຮັບຈ້າງ ທານແຂກຄົນຂາຍ ກໍດີ ຍັງໄປເຖິງຄາວ
ເຊົາ ປ່ອງເປັນອັນຮ້າຍ ຄັນວ່າເປັນໜັກແທ້ ປຸນໄປບໍ່ຮອດ
ກໍດີ ຄວນຈ່າບ້ານ ຄະນີງແທ້ຊ່ອຍນັບ ແທ້ດາຍ ໃຫ້ເຈົ້າ
ທານໄປກ່ອນແລ້ວ ຄືນນຶ່ງດູຄາວ ຈິ່ງຄະນີງຄາວຫຼັງ ເບິ່ງດູ
ໃກໃກ້ ກໍຈິ່ງເອົາຂອງຈ້າງ ນຳຄົນຜູ້ປົວທານ ມານັ້ນ ມາຜ່າ
ໃຫ້ ທາຈ້າງຜູ້ໃໝ່ໄປ ຊອບແລ້ວ ເຫດບໍ່ແມ່ນວຽກນ້ອຍ ຝູງ
ໝູ່ຄາເມ ແທ້ແລ້ວ ອັນນຶ່ງເມືອງໄກກ້າ ສີມາພາຍນອກ ກໍດີ
ແຂກຕ່າງດ້າວ ມາແທ້ຮອດເຖິງ ນາຍປະຕູໃຫ້ໃດ່ຖ້ອຍ ຖາມ

ດູດິງຖີ້ ແລ້ວຈຶ່ງມາຄອບເຈົ້າ ເມືອງນັ້ນຊູ່ປະການ ເຈົ້າເມືອງ ຄວນທີ່ໃຊ້ ໄປທ່ຽວຖາມດູ ຄັນວ່າຄວນທີ່ກິດຕາເອົາ ຫານ ຄອບດິງແຈ້ງ ຍັງຄວນສົ່ງຫານແທ້ ກໍຈຶ່ງສົ່ງຄືນໄປ ຫັ້ນ ຫ້ອນ ກໍຈຶ່ງຕາມຄອງໄປ ດ່ວນໄປຢ່າຊ້າ ນາຍປະຕູເມືອງ ຕ້ານ ຈາດູດິງຖີ້ສັນນັ້ນ ເລີຍດ່ວນມາຮອດບ້ານ ເມືອງແທ້ທີ່ ໃດ ກໍດີ ເຂົາຫາກຫຼິງລ່ຳປ້ຽມ ຕອງດູດິງຖີ້ ດັ່ງນັ້ນ ກໍບໍ່ສົນ ຄວນແທ້ ມາຮອດເມືອງເຮົາ ແທ້ແລ້ວ ອັນນີ້ຕາມຄອງແທ້ ນາຍປະຕູເປັນໂທດ ເພື່ອວ່າມັນບໍ່ຫຼິງລ່ຳປ້ຽມ ເລີຍໃຫ້ຄວ່າ ມາ ແທ້ດາຍ ອັນນຶ່ງນາຍປະຕູໄດ້ ຕອງຕາດູຖີ້ ດັ່ງນັ້ນ ຫາກ ບໍ່ສົນຄວນແທ້ ແຂກຫາກຍັງດິນ ຄັນວ່າຮອດແຫ່ງຫ້ອງ ຫັນທີ່ທາງໃດ ກໍດີ ກໍບໍ່ພິຈານເລີຍ ຄວ່າກາຍມາແທ້ ເຈົ້າ ບ້ານນັ້ນ ເປັນໂທໂທສາ ດັ້ງຫາກມີຄອງເມືອງ ແຕ່ຫຼັງມາ ຕັ້ງ ອັນນຶ່ງຄັນວ່າຕ່າງເມືອງໃຊ້ ກີຍາມາຮອດ[1] ກໍດີ ເສິກ ວຽກແທ້ ເຮວຮີບພລັນ ແທ້ດາຍ ຜິວ່າແມ່ນເຈື້ອຈຸ້ມ ອາດ ຍາມາຮອດ ດັ່ງນັ້ນ ໃຫ້ຮີບຟ້າວ ນຳເຂົ້າທ່ຽວພລັນ ນັ້ນຫ້ອນ.

---

(໑) ກີຍາມາຮອດ ບາງບ່ອນວ່າຂີຍາ ບາງບ່ອນວ່າສີຍາ ແປວ່າວຽກ ເປັນທາງການ

ບັດນີ້ຈັກກ່າວຫ້ອງ ຣາຊທູດນາຍເມືອງ ກ່ອນແລ້ວ
ພຣະຫາກນຳຣາຊການເຖິງ ຕ່າງເມືອງໄປແທ້ ເພື່ອຈັກຈາ
ຣະຈາຕ້ານ ຄຳເມືອງກອຍກ່າວ ດັ່ງນັ້ນ ຈຳຈິດໃຫ້ຈື່ຂໍ້ ຄຳ
ເຈົ້າສັ່ງໄປ ນັ້ນເນີ ຜິວ່າບິວຣະເທດທ້າວ ໃຊ້ແທ່ງຄຳຫາພຣະ
ອົງ ດັ່ງນັ້ນ ອັນນຶ່ງໃຜຜູ້ເປັນນາຍຄັງ ຈ່າຍສິນບັດເຈົ້າ ເປັນ
ຜູ້ຊື້ເສື້ອຜ້າ ແຣລ້ວຊູ່ປະການ ແທ້ແລ້ວ ອັນນຶ່ງໃຜເປັນຜູ້ຊື້
ແກ້ວ ຝູງໝູ່ນຳງາ ກໍດີ ທັງຊ່າງເງິນຊ່າງຄຳ ພ່ອກຕີແປງ
ພ້ອມ ຢ່າໄດ້ມີໃຈລ້ຽວ ໂລພາລັກໂລບ ເອົາເນີ ຄັນວ່າຝູງໝູ່
ເຂົາຈ່າຍຊື້ ມີພ້ອມສັກຂີ ດັ່ງນັ້ນ ຮູ້ວ່າເຂົາລັກແທ້ ຕາມເມືອ
ພາຍລຸນ ດັ່ງນັ້ນ ກໍເລົ້າເປັນໂທໃສ ໂທດມີພໍຂ້າ ອັນວ່າສິນ
ມານັ້ນ ເປັນຂັນທີນຶ່ງ ທັງດອກຊ້ຳ ນາແທ້ແມ່ນຄອງ ແທ້
ແລ້ວ ອັນນຶ່ງເຈົ້າຫາກໃຊ້ຣະຫັດດັ້ນ ໄປທີທາງໃລ ກໍດີ ຢ່າ
ໄດ້ເອີນເຫີນສຽງ ກ່າວຈາຣະຫັດນັ້ນ ອັນນຶ່ງຄຳຄວນແຈ້ງ ຢ່າ
ບັງຊັບຊຶ້ມ ນັ້ນເນີ ຈົ່ງໃຫ້ຮູ້ແຈບແຈ້ງ ຄຳຮ້າຍແລດີ ເຈົ້າເອີຍ
ອັນນຶ່ງເຈົ້າຫາກຍັງເທີຍເຂົ້າ ໃພຊະນະຂອງຫວານ ກໍດີ
ຄັນວ່າມີຄວາມສັງ ກໍຢ່າທູນຖວາຍໄຫວ້ ອັນນຶ່ງພຣະຫາກຍັງ
ລົງຫຼົ້ນ ມະຫໍຣະສົບຕາມຣີດ ກໍດີ ກໍບໍ່ຄວນຄືດຖ້ອຍ ທູນ

ເຈົ້າພຣະບອດເມືອງ ແຫ້ດາຍ ເວັ້ນແຕ່ການເມືອງຮ້ອນ ເສິກ
ເສືອຫ້ວງຕື່ນ ດັ່ງນັ້ນ ກັບທັງຊ້າງປ່າເຂົ້າ ມາບ້ານເກີດໄຟ ກໍ
ດີ ກໍຈຶ່ງຄວນຫູນໄຫວ້ ຈອມຫົວພູວະບາດ ໃນກາລະດັ່ງເວົ້າ
ຈຳແຈ້ງຢ່າລືມ ແຫນີ້ ອັນນຶ່ງຄັນໄຕ່ເຕົ້າ ໄປທີ່ທາງໃດ ກໍດີ
ຄອງເມືອງນີ້ ຈື່ຈຶ່ງຈຳໄວ້ ເຊັ່ນວ່າຊາວພໍ່ຄ້າ ທຽວຄ້າຂາຍ
ຂອງ ເຂົາກໍໄປເຊົາຢັ້ງ ຄາວພອຍແວ່ຈອດ ທີ່ໃດນັ້ນ ໃກ້ເຂດ
ແຫ້ ໃຫ້ບ້ານປ່ອຍຄວາຍ ພອຍເລົ້າໄດ້ຕາກໄວ້ ຜ້າແຜ່ນອາ
ພອນ ກໍດີ ທັງຝູງຂອງ ຫາບຄອນວາງໄວ້ ຍັງມີງົວຄວາຍ
ຄ້າ ຊາວກວຽນທ້າວຕ່າງ ມານັ້ນ ຝູງໝູ່ບ້ານ ເຂົາປ້ອງປ່ອຍ
ຄວາຍ ອັນວ່າຜູ້ເຈົ້າຂອງໃຫ້ຮີບກູ້ ຂອງຕາກແຄມທາງ ນັ້ນເນີ
ໃຫ້ຮັກສາຂອງດີ ໄລ່ງົວຄວາຍເວັ້ນ ຜິວ່າຍັງເຫັນແລ້ວ ເຈົ້າຂອງ
ເລີຍບໍ່ໄລ່ ຄັນວ່າສັດໄດ້ກັດຄາບຄ້ຽວ ກິນແລ້ວຢ່າວ່າສັງ ຫັ້ນ
ທ້ອນ ຫາກຍັງມີວຽກແຫ້ ພອຍເລົ້ານອນຫຼັບ ດັ່ງນັ້ນ ກໍບໍ່
ເຫັນງົວຄວາຍ ທີ່ໃດບໍ່ມີຮູ້ ຄັນວ່າງົວຄວາຍຄ້ຽວ ກິນຂອງ
ແລ້ວຢ່າ ຄວນໃຫ້ແຫນທໍ່ນັ້ນ ຢ່າໄດ້ບາບໃໝ ແຫນີ້ ອັນນຶ່ງ
ຢ່າກ່າວຕ້ານ ເງິນອອກງັນຖີງ ນັ້ນເນີ ຢ່າໄດ້ມີຄຳງອນ ວ່າ
ສັງສັນນັ້ນ ອັນນຶ່ງຢ່າໄດ້ໃຫ້ຊາວຄ້າ ເອົາຂອງອອກຕາກ ໃກ້

ເຂດບ້ານ ແຄມຮົ້ວຜ່າງສວນ ອັນວ່າງົວຄວາຍແທ້ ເດີນມາ
ເຮວຮອດ ດັ່ງນັ້ນ ກັດຄາບຄ້ຽວ ທັງໄດ້ຢ່ຳເສັຽ ກໍດີ ຄວນທີ
ໃຫ້ໄດ່ຕ້ານ ແທນສິ່ງພາຍຫຼັງ ນັ້ນແລ ອັນນຶ່ງໃພຜູ້ຟັນແທງ
ຂ້າ ຄວາຍຕາຍນໍຣະບາດ ດັ່ງນັ້ນ ຄວນໃຫ້ໃຊ້ ສອງແທ້ທໍ່ໂຕ
ແທ້ດາຍ ອັນນຶ່ງພຣະມະຫາຣາຊເຈົ້າ ໃຫ້ແຕ່ງການໃດ ກໍດີ
ຄວນທີ່ຄະນຶງດູເຖິງ ເຫດການຫຼາຍໜ້ອຍ ຄັນວ່າອັນໜ້ອຍ
ແທ້ ຢ່າວ່າເປັນຫຼາຍ ນັ້ນເນີ ອັນຫາກຍັງແຄວນຫຼາຍ ຢ່າ
ກ່າວເປັນອັນໜ້ອຍ ອັນນຶ່ງແລ້ວກໍໃຫ້ວ່າແລ້ວ ສັດຈະທ່ຽງ
ຄວາມດຽວ ອັນບໍ່ແລ້ວໄປວ່າແລ້ວ ສັດຈະລ່າຍຍັງຄວາມ ດັ່ງ
ນັ້ນ ບາດວ່າພາຍລຸນເລີຍ ໂທດຖອງເຖິງແທ້ ອັນວ່າສິນນາ
ນັ້ນ ຄວນຕອງຕັດໃສ່ ຈິງແລ້ວ ເງິນທິກເບ້ຽທ່ຽງແທ້ ສັນນັ້ນ
ຈິ່ງແມ່ນຄອງ ຊອບແລ້ວ ອັນນຶ່ງເສເນດທ້າວ ຝູງແຕ່ງແປງ
ການ ກໍດີ ກໍໃຫ້ໂດຍຕາມຄອງ ອາດຍາຈິງແຈ້ງ ອັນນຶ່ງຝູງ
ຮັກສາສິນບັດເຈົ້າ ງົວຄວາຍພູອະນາດ ກໍດີ ຄວນໃຫ້ຫຼິງລ່ຳ
ປ້ຽມ ດູແທ້ທີ່ຄວນ ຜີວ່າມີລູກເຕົ້າ ເລີຍອອກຫຼາຍຕົວ ກໍດີ
ຍັງເລົ່າເປັນສັງເສັຽ ທໍ່ໃດເພິ່ງຮູ້ ໃຫ້ໄປເລົ່າແກ່ເຈົ້າ ທູນບາດ
ຣາຊາ ຜີວ່າມີຄຳໃດ ກໍຈິ່ງຈາດອນເຈົ້າ ຢ່າມີຄວາມຄິດຄ້ຽວ

ໃຫ້ມີໄດອັນຊື່ ຈິງດາຍ ເມື່ອໜ້າຈັກເຊື່ອແທ້ ຄູນໃຫ້ລື້ນຫຼັງ
ແທ້ດາຍ ອັນນຶ່ງພຣະບາດເຈົ້າ ປະສົງເບື້ອງປະການໃດ ກໍດີ
ໃຫ້ຄ່ອຍໂດຍພລັນເປືອງ ແຕ່ງແປງກະທຳແລ້ວ ນີບໍ່ເຕີມ
ຕາມເຈົ້າ ພຣະອົງໂກດໂກທາ ມາກແລ້ວ ເຖິງສອງທີສາມທີ
ຖອດບາໃໝຊ້ຳ ໃຜຜູ້ໂດຍອາດເຈົ້າ ຈອມເມືອງພຣະບາດ ສັນ
ນັ້ນ ພຣະກໍຄວນຕື່ມໃຫ້ ຄຸນແທ້ບິດຂວາງ ຊອບແລ້ວ ອັນ
ນຶ່ງລູກຫຼານທ້າວ ເສນາແສນໝື່ນ ກໍດີ ບັງຮູ້ຫຼັກຊອບແທ້
ຄວນຂຶ້ນຂາບຖວາຍ ແທ້ແລ້ວ ຂໍໃຫ້ພຣະບາດເຈົ້າ ທົງແຜ່ນ
ດອງດັດ ພຣະຈັກກູບາເຂົາ ສືບພົງສາເຊື້ອ ກໍຈັກມີສຸກຍ້ອນ
ສົມພານພຣະໂຜດ ໄດ້ແຕ່ງສ້າງ ການບ້ານຮ່ວມພຣະອົງ
ແທ້ແລ້ວ ຈິ່ງຊື່ວ່າໂຄຣິບນ້ອມ ບຳບາງພູມີ ພົລເມືອງດີ ສືບ
ປຸນໄປໜ້າ ເປັນຄອງເບື້ອງ ບຸຮານເຣື້ອງກ່າວ ມາແລ້ວ ເປັນ
ຜູ້ໂຄຣິບເຈົ້າ ບຳຢ້ານທີ່ເຊງ ແທ້ດາຍ ອັນນຶ່ງຢ່າໂລບລ້ຽວ
ໃໝໄພ່ຊາວເມືອງ ນັ້ນເນີ ໃຫ້ມີກູບາເຂົາ ສືບໄປສເນີແທ້
ແມ່ນວ່າການມີແທ້ ໜັກເບົາໃຫ້ເບິ່ງ ດູນັ້ນ ຢ່າໃຫ້ໜັກໂພດ
ພົ້ນ ເຄືອງຂ້ອງໄພ່ເມືອງ ນັ້ນດາຍ ອັນນຶ່ງເສນາທ້າວ ນີວ
ຣະບັດພູຣະບາດ ກໍດີ ເມື່ອຈັກຖວາຍບາດເຈົ້າ ຂອງນັ້ນເບື້ອງ

ໄດ ອັນວ່າຂອງໃນເຮືອນແຫ້ ເອົາຖວາຍກໍຈຶ່ງຊອບ ປ່າເອົາ
ຂອງໄພ່ນ້ອຍ ຖວາຍນັ້ນບໍ່ຄວນ ເຈົ້າເອີຍ ຄັນຈັກລ້ຽງໄພ່ນັ້ນ
ຂອງຕົວເອົາຈ່າຍ ຄວນແລ້ວ ປ່າເອົາຂອງໄພ່ນ້ອຍ ມາແຫ້
ໄປຄວນ ອັນນຶ່ງກິນນາໃຫ້ ດູເໜືອງທຸກທີ ຄັນເໜືອງຝາຍ
ຫາກຍາກແຫ້ ເປັນຫ້ວຍຕາດສູງ ດັ່ງນັ້ນ ຄວນທີປ່າວລູກ
ບ້ານ ໄປຊ່ອຍກັນແປງ ປ່າໃຫ້ໄພລະບາຍສຸກ ຊ່ອຍແປງດີ
ພ້ອມ ອັນນຶ່ງຄັນຫາກຫຽວຫາງແຫ້ ເລີຍຕາຍນໍ່ຣະບາດ ສັນ
ນັ້ນ ໃນທີບ້ານ ເຮືອນແຫ້ແຫ່ງໃພ ກໍດີ ປ່າໄດ້ເອົາຄາບຮ້າຍ
ຜີເນົ່າມາເມືອງ ນັ້ນເນີ ຄັນວ່າຕາຍຫາງໃດ ໃຫ້ເສັຽຫາງນັ້ນ
ອັນນຶ່ງຄົນຕາຍດ້ວຍ ປາປໍາງ້ວນເບື່ອ ສັນນັ້ນ ຍັງມີສັກຂີໃຫ້
ກົດເອົາຄໍາປາກ ບໍາຣອດເສເບດທ້າວ ຂອງນັ້ນປ່າເສັຽ ໃພຜູ້
ເອົາພິດຮ້າຍ ເຂົ້າທີມາເມືອງ ດັ່ງນັ້ນ ຄວນທີຕັດຂັບໃໜ ໃສ່
ມັນຜູ້ທໍານັ້ນ ຜີວ່າຍັງມາຈົບເມືອງແຫ້ ຈົບເຖິງເສເບດ ກໍດີ
ປ່າໄດ້ເອົາຄາບຮ້າຍ ມາແຫ້ບໍ່ດີ ນັ້ນດາຍ ອັນນຶ່ງຄວາມຫາກ
ພິຈານແລ້ວ ມີສັກຂີແກ່ກ່ອນ ແຕ່ເຊັ່ນພະຕົນລ່ວງແລ້ວ
ເຖິງເຈົ້າໃໝ່ສເວີຍ ກໍບໍ່ຄວນກ່າວຕ້ານ ຄວາມໃໝ່ມາຫູບ
ເຈົ້າເອີຍ ປ່າກະທໍາເປັນຄວາມ ໃສ່ເຂົາຝູງນັ້ນ ອັນນຶ່ງເໜືອງ

ຝ່າຍຄ້ານ ເພພັງເປັນຫາດ ເສັ້ຽນັ້ນ ຄັນຈັກຂຸດທີ່ນັ້ນ ໄປ ປ້ານຊ້ຳແມ່ນນາ ສັນນັ້ນ ຄວນໃຫ້ຫາເຈົ້ານາແຫ້ ມີຄວາມ ຄຳຄອບ ເຂົາກ່ອນ ຄັນເຈົ້ານາເຂົາຫາກໃຫ້ ສັນນັ້ນຈິງກະທຳ ຊອບແລ້ວ ອັນນຶ່ງເສນາຫາກຜິດແຫ້ ຕັດເຕັນຕາມໂທດ ຢ່າ ປ່ອຍເປົ່າ ຂັນນັ້ນໃສ່ເວັນ ຫັ້ນທ້ອນ ຜິແມ່ນຄົນທຸກແຫ້ ບໍ່ມີ ສັງເສັ້ຽໂທດ ນັ້ນນັ້ນ ຄວນທີ່ຂືນ ທູນເຈົ້າພຣະບອດເມືອງ ອັນນຶ່ງໃພຜູ້ມີຜິດແຫ້ ຂັບຄາຄໍຕັດໃສ່ມັນນັ້ນ ມັນຍັງບໍ່ຫຼາຍ ປ້ານ ທຳຊ້ຳເທື່ອສອງ ຄວນທີ່ຂ້າ ໃຫ້ມັນຕາຍນໍຣະບາດ ຢ່າໄດ້ເຫັນແກ່ເງິນຄ່າຈ້າງ ວາງໃຫ້ປ່ອຍໄປ ແຫ້ດາຍ ຄົນໃດ ຖືກຂັນໃໝແລ້ວ ຂັນແປງຂັນສົມນາທີ່ນຶ່ງ ແລ້ວເລົ່າຜິດດັ່ງ ນັ້ນ ເຖິງຊ້ຳຖ້ວນສອງ ມັນກໍມີໂທດແຫ້ ຂັບຄາຄໍຕັດໃສ່ ຫັ້ນ ທ້ອນ ກັບທັງນາເໜືອງຝາຍ ຖອດເອົາເສັ້ຽຊ້ຳ ອັນນຶ່ງອີງກະ ສັດເຈົ້າ ຈອມຫົວສອບສັ່ງ ຈິງແລ້ວ ພຣະກໍເອົາຕັ້ງໄວ້ ທັງ ຖ້າຍທົວແດນ ຈິງໃຫ້ພິຈານແຈ້ງ ຕອງຕາດູຖີ່ ແຫ້ດາຍ ຄວນໃຫ້ຫຼີງລ່ຳປ້ຽມ ພາຍຜ້ຽນຣີນຕອງ ຫັ້ນທ້ອນ ຄືດວ່າໃຫ້ ສເມີແຫ້ ໜັກເບົານັ້ນໃຫ້ເກີງ ກັບເມີ ລາງເລົ່າທຸກຍາກໄຮ້ ລາງນັ້ນມັ່ງມີ ແຫ້ດາຍ ອັນນຶ່ງຝູງຜິດແລ້ວ ໜັກເບົາເປັນ

ໂຫດ ກໍດີ ຄິດໃຫ້ຮູ້ ຄະນຶງແຈ້ງຈຶ່ງຄວນ ເຈົ້າເອີຍ ຄັນວ່າ ຄົນຜູ້ຮູ້ ປອງໃຫ້ທ່ານຈົບຫາຍ ດັ່ງນັ້ນ ໃຫ້ຄ່ອຍພິຈານດູ ຊູ່ ອັນແວນຜຽນ ຄັນຫາກຍັງສິງກາແທ້ ບໍ່ເປັນການຄັກແນ່ ໃຫ້ ຮີບຕອງສ່ອງແຈ້ງ ການລ້ຽວແຫ່ງຄົນ ຊອບແລ້ວ ອັນນຶ່ງຟູງ ໃດໄດ້ກ່າວຕ້ານ ມາຝາກຂອງດອນ. ກໍດີ ຄວນທີ່ປັດຕິຍານມີ ຂີດຂຽນໝາຍໄວ້ ຄັນຫາກເຖິງຜັດນັ້ນ ເລີຍນານມາຮອດ ຮັກ ສາເລີຍບໍ່ໄດ້ ເສັຽນັ້ນຢ່າຂແນງ ແທ້ດາຍ ອັນນຶ່ງຝາກຂອງໄວ້ ໃນເຮືອນດອມທ່ານ ກໍດີ ໄຟຫາກໃໝ້ ໂຈນຮ້າຍລັກເອົາ ມີ ເຫດເກີດດັ່ງນີ້ ຂອງເລົ້າພອຍເສັຽ ກັບທັງຂອງໃນເຮືອນ ກໍ ເລົ້າເສັຽນຳແທ້ ຫາກມີສັກຂີແຈ້ງ ທັງຫຼາຍຮູ້ເມື່ອ ດອມນັ້ນ ຄັນຫາກເປັນຈັ່ງຊັ້ນ ຢ່າເວົ້າວ່າອີສັງ ຫັ້ນທ້ອນ ເຫດທີ່ຂອງ ເຂົານັ້ນ ຂອງເຮົາສເນີດັ່ງ ກັບແລ້ວ ຂອງເຮົາເສັຽ ຂອງເຂົາ ກໍມອດມ້ວຍ ໃຜຊິໃຊ້ ໃຫ້ແກ່ກັນ ນັ້ນເດ ?

(+) ອັນນຶ່ງຖ້ອຍຄວາມເກີດ ທັນທີ່ທາງໃດ ກໍດີ ກິກປາຍມັນມີມາ ແກ່ທາງໃດແທ້ ຄວນຕັດຕົ້ນ ຮອນປາຍ ມ້ວນມອດ ໃຫ້ມັນແລ້ວບ່ອນເຄົ້າ ສຸມເຫງົ້າຊອບຄອງ ເຈົ້າ

(+) ທໝາຍຕົນກາໄວ້ນັ້ນຕົ້ນສະບັບມັນໄດ້ເສັຽໄປ ໒ ໃບ

ເອີຍ ອັນນີ້ເພິ່ນວ່າໄຟລຸກໃໝ້ ເກີດກ່ອນທາງໃດ ໃຫ້ພິຈາຣະ
ນາເກາ ບ່ອນເປັນກົກເຄົ້າ ຄັນວ່າເຫັນຍັງຕົ້ນ ໄຟເດີມບ່ອນ
ເກີດ ໃສນັ້ນ ໃຫ້ເອົານ້ຳມອດນັ້ນ ພົມລ້າງມອດເສັ້ຽ ອັນນຶ່ງ
ໃຜລັກໄຖເອົານາທ່ານແທ້ ທັງເລົ້າຍ້າຍຄັນນາ ເອົາເຂດ ກັບ
ທັງແດນໄຮ່ແທ້ ແດນບ້ານນອກເມືອງ ຄວນໃຫ້ຊັ່ງສິບໄຖນັ້ນ
ໜັກເບົານ້ອຍມາກ ທໍ່ໃດນັ້ນ ເອົາເງິນຜ່າຖ່ອງນັ້ນ ຂັບຕັ້ງໃສ່
ມັນ ຊອບແລ້ວ ຜູ້ໃດເຫັນນາທ່ານແທ້ ອັນບໍ່ທັນໄຖແຮກນັ້ນ
ມັນມີໃຈຄະນອງ ລວດໄປໄຖຫຼົ້ນ ຜິວ່ານາຜູ້ອື່ນແທ້ ບໍ່ຊອບ
ຄອງເມືອງ ນັກແລ ຄວນໃຫ້ແປງຂວັນນາ ເຫຼົ້າໝູເງິນເບັ້ຽ
ບໍ່ແມ່ນນາດຽວແທ້ ຢ່າໄປໄຖຂອງເພິ່ນ ນັ້ນເນີ ຕັ້ງຫາກຜິດ
ຮີດແທ້ ຢ່າໄດ້ລ່ວງກາຍ ແທ້ດາຍ ອັນວ່າດິນນາດິນສວນແທ້
ຫຽ້າປະປົນແປກ ກັບນັ້ນ ໃຫ້ມີຄວາມຊອບແທ້ ຖາມຖ້ອຍ
ເຊິງກັນ ນັ້ນເນີ ອັນນຶ່ງໃຫ້ຄ່ອຍຖາມຜູ້ຮູ້ ເຫັນກ່ອນແວນດີ
ຊອບແລ້ວ ຜິວ່າຍັງກຸມເຮັດ ໃຫ້ໃໝສາມຮ້ອຍ ຫາກວ່າພາ
ໂລພົ້ນ ໃຈງານມັກໂລບ ຄວນທີ່ຕັດໂທດແທ້ ຕາມຖ້ວນທີ່
ກະທຳ ເຈົ້າເອີຍ ໃຜຜູ້ໄປແຮກກ້າ ບໍ່ຮູ້ເຂດແດນນາ ດັ່ງນັ້ນ
ມີຄົນມາບອກໃຫ້ ມັນເລົ້າຟັງຄວາມ ເລີຍເລົ້າໄປໄຖນາ ຜູ້ອື່ນ

ເສັ້ງ ສັນນັ້ນ ເຂົາບໍ່ຍອມຄວາມແທ້ ໝາກສິບໄຖນາຊັ່ງ ດູ ຫ້ອນ ໜັກທໍ່ໃດກໍຜ່າຫັ້ນ ສອງບັ້ນທໍ່ກັນ ຄັນຜ່າແລ້ວ ສອງ ສ່ວນໂດຍສເໝີ ໃຫ້ແກ່ເຂົາສອງຄົນ ຊ່ອຍປັນກັນໃຊ້ ຜິວ່າບັງ ຖຽງແທ້ ໃຫ້ພິຈານຈິງຂນາດ ດັ່ງນັ້ນ ສອງສ່ວນໃຫ້ ຂາ ພ້ອມພ່ຳເສັ້ງ ຊອບແລ້ວ ອັນນຶ່ງນາທີໃກ້ ຫາກແຮກປັນກັນ ດັ່ງນັ້ນ ກໍຫາກຄວນ ໂທສາແກ່ກັນລາງແລ້ວ ເພາະເພື່ອ ຄວາມຫຼິງນີ້ ມັນມີໃນໂລກ ບໍ່ວ່າເຈົ້າແລະຂ້ອຍ ພອຍຮູ້ຮ່ອມ ຫຼິງ ເຈົ້າເອີຍ.

ບັດນີ້ຈັກກ່າວຕ້ານ ຈາເທົ່ງຜົວເມັຽ ກ່ອນແລ້ວ ຂາ ຈັກປະກັນເສັ້ງ ພາກເນົາໃນຫ້ອງ ຄັນວ່າສອງຂານັ້ນ ມີອັນ ຈະບິເບ່ງ ພໍຈະປັນສ່ວນໄດ້ ຂອງເຂົ້າສູ່ອັນ ເປັນຕົ້ນຊ້າງ ແລະມ້າ ຮົ້ວໄຮ່ນາສວນ ເຮືອນຊານທັງ ອິດກວຽນກົງລໍ້ ເງິນ ຄຳພ້ອມ ຂອງຊື້ກິນແລະຊົ້ນຸ່ງ ຂອງທີ່ຊື້ຈ່າຍນັ້ນ ລາງແລ້ວ ປ່າວ່າສັງ ແທ້ດາຍ ອັນນຶ່ງຂອງທີ່ຊາຍຫາໄດ້ ບ່ອນອື່ນນຳມາ ກໍດີ ກໍຫາກເປັນຂອງຍິງ ສິ່ງດຽວຈິງແທ້ ເຫດວ່າຍິງກໍເຖົ້າ ເສັ້ງດ້ວຍ ປີເດືອນດາຍດອກ ເໝືອນວ່າເຈັບປ່ວຍນັ້ນ ບໍ່ມີ ໄດ້ອືສັງ ແທ້ດາຍ ຜິວ່າຂາຫາກມີລູກນ້ອຍ ມາເກີດດອມກັນ

ດັ່ງນັ້ນ ຄວນທີປຸນປັນເປັນ ຜ່າສານສເນີໄວ້ ສອງໂກຖາກໃຫ້
ທາງບິງແວນຊອບ ຈິງແລ້ວ ສ່ວນນຶ່ງໄວ້ ຊາຍແທ້ຊອບຄວນ
ເຈົ້າເອີຍ ຜີວ່າສອງຂາພ້ອມ ເປີດໜ່າຍຊັງກັນ ກໍຈິງຕາມ
ຄອງເມືອງ ແຕ່ຫຼັງມາຕັ້ງ ຜີວ່າບໍ່ສົມພໍດີແທ້ ຜົວດີນັດຜູກ
ມັນນັ້ນ ຕັ້ງວ່າຄືງແຕກມ້າງ ໄປແທ້ເລືອດມີ ດັ່ງນັ້ນ ການ
ສ່ວນນີ້ ໜີ່ນປມາດລຸງຕາ ແທ້ດາຍ ກໍຫາກຄວນໃສໜີ ຄ່າ
ສິນເອົາຖ້ວນ ຄັນວ່າຂາກະທຳໃດໄດ້ ດອມກັນນ້ອຍມາກ ທີ່ໃດ
ນັ້ນ ຄວນມອບໃຫ້ ບີງນັ້ນຊູ່ອັນ ແທ້ແລ້ວ ຜີວ່າບີງຫຼີ້ນຊູ້
ມີສຈານຄິດຈາກ ຜົວນັ້ນ ໃຫ້ຊາຍເອົາຄ່າແທ້ ເສັຽສ້ຽງຢ່າໃຫ້
ຫຼໍ ແທ້ດາຍ ອັນວ່າຄ່າຫົວນັ້ນ ຜ່າຖ່ອງປັນກັນ ຖ່ອງນຶ່ງເປັນ
ຂອງຜົວ ມອບມັນເອົາໄວ້ ຖ່ອງນຶ່ງປັນໄປເບື້ອງ ບິດາພໍ່ແມ່
ມັນນັ້ນ ທຳດັ່ງນີ້ ດີແທ້ຊອບຄອງ ແທ້ແລ້ວ ເຫດວ່າພໍ່ແມ່
ນັ້ນ ໃພບໍ່ມີສອນ ແທ້ດາຍ ກໍຫາກເປັນແຕ່ຫົວໃຈມັນ ຖ່ອຍ
ບີງຄົນຮ້າຍ ອັນນຶ່ງຜົວເມັຽສ້າງ ເຮືອນກິນໂດຍຊອບ ດີນັ້ນ
ຜົວເລົ່າອາຍຸສັ້ນ ຕາຍແທ້ກ່ອນເມັຽ ເມັຽເລົ່າເປັນແມ່ໜ້າຍ
ຜົວຕາຍພັດພາກ ແສນທີ່ລຳບາກແທ້ ເປັນໜ້າເວທນາ ອັນ
ວ່າຂອງສິນສ້າງ ມັນມີນ້ອຍມາກ ທີ່ໃດນັ້ນ ຄວນມອບໃຫ້

ວາງໄວ້ແກ່ເມັຽ ແທ້ແລ້ວ ເມັຽຫາກນໍຣະບາດນັ້ນ ຕາຍກ່ອນ
ຜົວຕົນ ດັ່ງນັ້ນ ຂອງເຮືອນມີແນວໃດ ມອບຜົວເປັນເຈົ້າ ຄວນ
ວາງໃຫ້ ຜົວນັ້ນເປັນຜູ້ສືບ ປ່າກ່າວອ້າງ ປັນໃຫ້ແທ່ງໃພ ແທ້
ເນີ ຜິວ່າສອງເຂືອນັ້ນ ຕາຍໄປລົດຊົ່ວໄປນັ້ນ ຄັນວ່າຫາກມີ
ນາກນ້ອຍ ຄວນໃຫ້ລູກແທນ ຊອບແລ້ວ ຜິວ່າບໍ່ມີລູກເຕົ້າ
ເຊື້ອໜໍ່ບິງຊາຍ ດັ່ງນັ້ນ ອັນວ່າຂອງທັງມວນ ມອບລຸງຕາສ້ຽງ
ແຕ່ໃຫ້ລຸງຕາກ້ຳ ທາງບິງນັ້ນກ່ອນ ລຸງຕາບິງຫາກບໍ່ມີທ່ຽງ
ແທ້ ຈຶ່ງບໍ່ໃຫ້ຝ່າຍຊາຍ ນັ້ນເນີ ຜິວ່າຊາຍບໍ່ມີພົງເຊື້ອ ແນວ
ນາມແທນສືບ ກັນນັ້ນ ໃຫ້ປັນສາມສ່ວນແທ້ ແນວນັ້ນຊອບ
ຄອງ ເຈົ້າເອີຍ ສ່ວນນຶ່ງຖວາຍເມືອກ້ຳ ຈອມຫົວພູວະນາດ
ສ່ວນນຶ່ງໃຫ້ແກ່ເສນາທ້າວ ເອົາແທ້ຊອບຄອງ ອັນວ່າສ່ວນ
ນຶ່ງໃຫ້ ສັງໂຄເຄນແຈກ ໄປເນີ ບຸນຈຶ່ງມາຊ່ອຍຄ້ຳ ຂານັ້ນສູ່
ສວັນ ແທ້ແລ້ວ ອັນນຶ່ງສອງສະຫາຍປູກລູກເຕົ້າ ມາສູ່ສົນກັນ
ດັ່ງນັ້ນ ສອງຫາກພໍໃຈກັນ ຊູ່ທາງສອງກ້ຳ ວິວາຫາໃຫ້
ບຸດຕາເປັນຄູ່ ກັນນັ້ນ ຂອງບິງມີນາກນ້ອຍ ຊາຍກໍ່ໄດ້ທໍ່ກັນ
ພາຍລຸນນັ້ນ ສອງຂາໜີຈາກ ອອກຈາກເຮືອນພໍ່ແມ່ແທ້ ໄປ
ສ້າງຕ່າງເຮືອນ ດັ່ງນັ້ນ ບາດວ່າພາຍລຸນຊ້ຳ ສອງຂາເລີຍ

ທ່າງ ຂອງໃພແຕ່ກ່ອນນັ້ນ ໃຫ້ຄືນໄວ້ແກ່ມັນ ອັນວ່າຂອງຫາ
ໄດ້ ດອນກັນໃຫ້ຜ່າຄ່ອງ ເຫດວ່າຂາຫາກເປັນຜູ້ເຖົ້າ ເຮືອນ
ນັ້ນຊູ່ຄົນ ເຈົ້າເອີຍ ຜິວ່າມີລູກເຕົ້າ ໃຫ້ພິຈານດູກ່ອນ ຄືດໃຫ້
ຖ້ວນ ດີແທ້ຈິງແບ່ງປັນ ຊອບແລ້ວ ເຮັດໃຫ້ຖືກຮີດແທ້ ຄອງ
ແຕ່ປາງປະຖົມ ຫາກວ່າມີຍິງຊາຍ ທໍ່ກັນຈິງແທ້ ລູກຊາຍ
ໄວ້ ທາງຊາຍຄອງຊອບ ລູກຍິງນັ້ນ ຄວນໄວ້ຝ່າຍຍິງ ແທ້
ດາຍ ຜິວ່າຫຼາຍກວ່ານັ້ນ ໃຫ້ຜ່າຄ່ອງສັນດຽວ ຢ່າໃຫ້ທາງ
ໃດຫຼາຍ ທໍ່ກັນຄວນແທ້ ຜິວ່າເອົາກັນເທົ້າ ເຖິງຮະດູເຖົ້າແກ່
ໄປນັ້ນ ຜີຜົວຕາຍກ່ອນແທ້ ຂອງໄວ້ແກ່ເມັຽ ແທ້ດາຍ ຄັນ
ວ່າເມັຽຫາກຕາຍກ່ອນນັ້ນ ຜົວເລົ້າເລີຍນັງ ດັ່ງນັ້ນ ຂອງປູ່ໃນ
ຄົວເຮືອນ ມອບຜົວຕັ້ງສ້ຽງ ຄັນຂາຕາຍໝົດແທ້ ຄົວເຮືອນ
ໄວ້ແກ່ລູກ ຫັ້ນທ້ອນ ຜິບໍ່ມີລູກເຕົ້າ ແທນເຊື້ອສືບສະກຸນ ດັ່ງ
ນັ້ນ ໃຫ້ແບ່ງເບື້ອງ ຂອງທີ່ທັງມວນ ປັນເປັນສອງ ສ່ວນພໍ
ດີດ້າມ ໃຫ້ແກ່ສອງຝ່າຍເບື້ອງ ເຂົາເຈົ້າຜົວພົງ ຫັ້ນທ້ອນ
ຜີຫາກທາງຊາຍນັ້ນ ສູນພົງພາຍບາດ ໃຫ້ແກ່ເບື້ອງ ຍິງ
ສ້ຽງຊອບຄອງ ແທ້ແລ້ວ ອັນນຶ່ງພໍ່ແມ່ຂາຍລູກເຕົ້າ ໃຫ້ຂາດ
ເນື້ອຜົວ ດັ່ງນັ້ນ ເຖິງເມື່ອພາຍລຸນເລີຍ ເລົ່າເປັນຄຳຮ້າງ ອັນ

ວ່າຄ່າດອງນັ້ນ ໃຫ້ຂືນຊາຍດັ່ງເກົ່າ ນັ້ນເນີ ຂອງອັນຂາເຣັດ
ໄດ້ ຄວນໃຫ້ຜ່າສາມ ຊອບແລ້ວ ສອງສ່ວນໃຫ້ ໄປແຫ່ງທາງ
ຊາຍ ສ່ວນນຶ່ງຄວນວາງມັນ ຝ່າຍເມັຽຈິງແທ້ ຜິວ່າຍິງບໍ່ມີຮູ້
ສ້າງ ການເຮືອນກະທຳວຽກ ກໍດີ ກໍຫາກຄວນຜ່າໃຫ້ ສັນ
ນັ້ນຊອບຄອງ ແທ້ແລ້ວ ຖ້າວ່າຍິງຫາກມີລູກເຕົ້າ ໄວ້ທີເຮືອນ
ຜິວ ດັ່ງນັ້ນ ໃຫ້ແກ່ຜິວທັງມວນ ຊອບຄອງເນືອງຕັ້ງ ອັນນຶ່ງ
ເມັຽມານຳຜິວນັ້ນ ເຖິງບານເຖິງແກ່ ຄ່າດອງນັ້ນ ຄວນແທ້
ຜ່ອນລິງ ເຈົ້າເອີຍ ຄັນວ່າມີລູກແລ້ວ ຫຼດລິງຫ້າບາດ ຄວນ
ແລ້ວ ສາມປີຍັງໄປ່ມີລູກເຕົ້າ ລິງແທ້ທໍ່ກັນ ນັ້ນເນີ ອັນນຶ່ງ
ຂາສ້າງປ້າວ ເຖົ້າແກ່ເລີຍຕາຍ ກໍດີ ຂອງເຮືອນມີ ມອບເມັຽ
ໝິດສ້ຽງ ຄັນວ່າເມັຽຕາຍແທ້ ຜິວເລົ່າເລີຍຍັງ ດັ່ງນັ້ນ ຂອງ
ຄິວເຮືອນ ໃຫ້ແກ່ຜິວຈິງແທ້ ອັນນຶ່ງຊາຍໄປຫາຍິງແທ້ ຂອງ
ຂາໄດ້ຈ່າຍກິນນັ້ນ ກໍຈິງໃຫ້ຈື່ແຈ້ງ ຈຳໄວ້ຢ່າລືມ ຄັນຂາຢູ່ບໍ່
ໄດ້ ພອບຢ່າປະກັນ ດັ່ງນັ້ນ ທືນໃຜີ ໃຫ້ເຂົາຕິງສ້ຽງ ອັນ
ເຫຼືອນັ້ນ ປຸນເປັນສາມສ່ວນ ສ່ວນນຶ່ງນັ້ນ ປັນໃຫ້ແກ່ຊາຍ
ສອງສ່ວນໃຫ້ ໄວ້ຝ່າຍທາງຍິງ ຜິວ່າຍິງບໍ່ຮູ້ສ້າງ ການເຮືອນ
ເຮັດວຽກ ດັ່ງນັ້ນ ຄວນທີ່ຜ່າຖ່ອງແລ້ວ ເອົາໃຫ້ທໍ່ກັນ ເຈົ້າເອີຍ

ຄັນວ່າຊາຍບໍ່ຮູ້ສ້າງປ້າວ ກະທຳວຽກການເຮືອນ ກໍດີ ຂອງ
ທັງມວນ ແບ່ງໄປຕາມເອື້ອງ ປັນເປັນແທ້ ພໍປະມານສີ່ສ່ວນ
ສ່ວນນຶ່ງໃຫ້ ຊາຍນັ້ນຊອບຄອງ ສາມສ່ວນໃຫ້ ໄວ້ແກ່ທາງ
ຍິງ ຊອບແລ້ວ ອັນນຶ່ງຊາຍຫາກໄປສູ່ເບື້ອງ ຫີນແຫ່ງເຮືອນ
ຍິງ ເອົາຂອງເຜັ້ງ ຈ່າຍກິນໝົດສັ່ງ ແລ້ວເລົ້າພາກັບສ້າງ
ເຮືອນຊານແຫນສືບ ໄປນັ້ນ ພາຍຫຼັງເລີຍປ່າຮ້າງ ວາງຄົ້ນ
ເຊີງກັບ ດັ່ງນັ້ນ ຄັນວ່າຂອງຍິງແທ້ ມີປະມານໜ້ອຍມາກ
ທໍ່ໃດນັ້ນ ໃຫ້ໄລ່ຮື້ ເອົາສັ້ງຕ່າວຄືນ ອັນທີ່ເຫຼືອທືນນັ້ນ ປັນ
ເປັນສີ່ສ່ວນ ອັນວ່າສາມສ່ວນນັ້ນ ວາງໃຫ້ແກ່ຍິງ ສ່ວນເຫຼືອ
ນັ້ນ ມີປະມານສ່ວນນຶ່ງ ຄວນມອບໃຫ້ ຊາຍແທ້ຊອບຄອງ
ເຈົ້າເອີຍ ເຫດບໍ່ມີທືນສ້າງ ນຳເຜັ້ງຈັກສິ່ງ ມີແຕ່ໂຕລ້າ ໆ
ມາສ້າງຢູ່ນຳ ແທ້ດາຍ ຄັນວ່າຊາຍບໍ່ມີຮູ້ສ້າງ ການເຮືອນກະ
ທຳວຽກ ຂອງທີ່ຍິງຄິດນັ້ນ ຢ່າໃຫ້ແກ່ຊາຍ ແທ້ດາຍ ຄັນວ່າ
ຍິງບໍ່ຮູ້ສ້າງ ຍັງວຽກການເຮືອນ ຂອງທັງມວນ ຜ່າສາມປັນ
ໃຫ້ ສ່ວນນຶ່ງນັ້ນ ໄວ້ແກ່ທາງຊາຍ ສອງສ່ວນຄວນຍິງເອົາ
ຊອບຄອງຈິງແທ້ ອັນນຶ່ງຊາຍໄປສູ່ຍິງແທ້ ແຕ່ຍັງເລົ້າມີທືນ
ຍິງບໍ່ມີທືນສ້າງ ແຕ່ແຮງນັບສ້າງ ດັ່ງນັ້ນ ເຖິງເມື່ອຢູ່ບໍ່ໄດ້ ປະ

ກັນຮ້າງຢ່າ ຫືນຊາຍມີນາກນ້ອຍ ອືນໃຫ້ແກ່ຊາຍ ແທ້ດາຍ ຂອງອັນຂາເຮັດໄດ້ ຜ່າຖ່ອງປັນກັນ ຫັ້ນທ້ອນ ຜິຫາກຍິງບໍ່ຮູ້ສ້າງ ບ້ວງກການເຮືອນ ດັ່ງນັ້ນ ຂອງທັງມວນ ຜ່າສາມປັນໃຫ້ ສ່ວນນຶ່ງໄວ້ ໃຫ້ແກ່ທາງຍິງ ສອງສ່ວນຄວນຊາຍເອົາ ຊອບຄະດີດູແມ້ງ ອັນນຶ່ງຜົວເຮັດສ້າງ ເຮືອນກິນຕາມຍາກ ຍັງເລົາທຳຊອບແທ້ ເຮືອນປ້າວປູ່ເປັນ ດັ່ງນັ້ນ ເມັຽເລົາຖືກ ໜີ້ລ້ານ ໃນເມື່ອພາຍລຸນ ຄວນໃຫ້ຂາຜົວເມັຽ ພ້ຳພາກັນໃຊ້ ທໍ່ໃຫ້ຫຼິງດູທ້ອນ ຜົວເມັຽເພີ່ນຮ້າງຢ່າ ກັນນັ້ນ ໃຫ້ຊອບໄດ້ ໂດຍດ້ານດັ່ງປັນ ຊອບແລ້ວ.

ບັດນີ້ຈັກກ່າວເວົ້າ ພໍ່ແມ່ພອຍສອນ ກ່ອນແລ້ວ ຍາມເມື່ອຍັງເປັນຄົນ ພໍ່ແມ່ວາງຄວາມໃຫ້ ເພີ່ນຈັກວາງເວນໃຫ້ ຂອງເຮືອນອັນໃດແດ່ ໃຫ້ແກ່ໃຜແທ້ ໆ ເປັນຜູ້ຮູ້ຮັກສາ ອັນວ່າ ຝູງລູກເຕົ້າ ເຫຼົ່ນຫຼອດໃນເຮືອນ ທັງຍິງຊາຍ ຂ້ອຍຄົນພຽງພ້ອມ ເພີ່ນຫາກເຫັນດີແທ້ ຄົນໃດຍັງຊອບ ໃຈນັ້ນ ພໍ່ແມ່ຍັງສັ່ງໄວ້ ຄວນໃຫ້ແກ່ມັນ ຊອບແລ້ວ ເຫດວ່າພໍ່ແມ່ສ້າງ ມາແຕ່ພາຍຫຼັງ ນັບວ່າເປັນມູນມັງ ພໍ່ແມ່ພຽນຫາໄວ້ ເພີ່ນໄດ້ອົດສາທ້ອນ ຫອມມານານຍິ່ງ ເພີ່ນຫາກໃຫ້ໃຜແທ້ ຢ່າ

ນ້າງແທ່ງຄວາມ ແທ້ດ່າຍ ຄັນເພີ່ນບໍ່ສັ່ງໄວ້ ພອຍເລົ້າຕາຍ ໄປ ດັ່ງນັ້ນ ຄັນວ່າຂອງເຮືອນນີ້ ລູກເອົາຄວນແທ້ ຜິວ່າລູກ ຫຼານແທ້ ໃຜຍັງຄຸນລື້ນ ກັບນັ້ນ ຂອງມຸນມີມາກນ້ອຍ ຄວນ ໃຫ້ລື້ນເຂົາ ຊອບແລ້ວ ອັນນຶ່ງຂອງລູກຫາກໄດ້ດ້ວຍ ຄຸນສິງ ສັບໃດ ດັ່ງນັ້ນ ກໍບໍ່ຄວນເອົາໄປ ນັບເປັນມູນແທ້ ອັນນຶ່ງຂອງ ໃດແທ້ ໂຈນເອົາລັກລອບ ໄປນັ້ນ ພໍ່ແມ່ເອົາບໍ່ໄດ້ ລືມນ້ຽນ ນອດຕາຍ ລູກເລົ້າຄືດກອບກູ້ ໂຈດຈ່າວເອົາຄືນ ດັ່ງນັ້ນ ກໍບໍ່ ຄວນປັນໃຜ ໃຫ້ແກ່ມັນເອົາແທ້ ເພາດທີກັມມະສິດນັ້ນ ສູນ ເສັຽຈາກພໍ່ແມ່ ອັນນຶ່ງພໍ່ແມ່ຮັກໃຜໃຫ້ ຂອງໄວ້ແກ່ມັນ ຊອບ ແລ້ວ ປ່າແຈກໃຫ້ ຄັນອື່ນເອົາໄປ ແທ້ນີ ຄວນໃຫ້ເປັນຂອງ ມັນ ຈິງຖືກໃຈຜີດ້ຳ ຜິວ່າມັນປັນແທ້ ບໍ່ເປັນຄອງອັນຊອບ ຜິດ ຈາກຄຳສັ່ງເຈົ້າ ສອງເຖົ້າສ່ວນຂວາງ ແທ້ແລ້ວ ຜິວ່າລູກ ຫາກກູ້ ຂອງພໍ່ແມ່ເປັນທືນ ດັ່ງນັ້ນ ເລີຍບໍ່ມີທັນແທນ ພໍ່ ແມ່ຕາຍນໍຣະມ້ຽນ ບານຈັກເອົາຂອງເຖົ້າ ມູນມັງມາແຈກ ກັບນັ້ນ ພູດນຶ່ງຄາຄາດໄວ ມັນນັ້ນຈິງຄວນ ແທ້ແລ້ວ ອັນນຶ່ງ ລູກຫາກຊຸກເຊືອງໄວ້ ຂອງໄປ່ທັນປັນ ກັບນັ້ນ ບາດວ່າພາຍ ລຸນເຫັນ ໃຫ້ແບ່ງປຸນປັນຖ້ວນ ແຕ່ກໍຄວນປັນໃຫ້ ຕາມຄອງ

ອັນຊອບ ຢ່າໄດ້ໃສ່ໂທດຮ້າຍ ໃໝຊ້ຳບໍ່ຄວນ ແທ້ດາຍ ເຫດ
ວ່າພໍ່ແມ່ແທ້ ເຂົາຫາກອຳເອົາ ແທ້ແລ້ວ ບໍ່ຄວນເປັນໂທໃສ
ແກ່ມັນສັງແທ້ ຜີວ່າຫາກບອນດອມແທ້ ຄືນເຮືອນມີລູກ ດັ່ງ
ນັ້ນ ຄວນແຈກໃຫ້ ປະມານແທ້ສ່ວນດຽວ ຊອບແລ້ວ ອັນນຶ່ງ
ພໍ່ແມ່ຂໍທ່ານລ້ຽງ ເປັນລູກໃນເຮືອນ ກໍດີ ກໍຫາກຍັງຄວນປັນ
ທໍ່ເຂົາຝູງນັ້ນ ຄັນວ່າພໍ່ຕາຍແລ້ວ ນໍຣະບາດລີງຊົວ ໄປນັ້ນ
ແມ່ເລົາເອົາໃໝ່ຊ້ອນ ມາສ້າງສືບສິນ ໜ້ອຍບໍ່ຊ້າ ແມ່ພັດ
ເລົາຕາຍໄປ ດັ່ງນັ້ນ ຂອງເຮືອນເປັນຂອງຜົວ ຜູ້ລຸນຈົງແທ້ ບໍ
ວ່າລູກຍິກຄ້ອຍ ເອົາມູນຂອງແມ່ ມັນນັ້ນ ຄວນທີ່ຜ່າຄ່ອງໃຫ້
ສອງເບື້ອງທໍ່ກັນ ແທ້ດາຍ ແລ້ວເລົາໃຫ້ປູ່ຫ້ອງ ຂອງຢ່າພາ
ໜີ ນັ້ນເນີ ເຖິງເມື່ອພໍ່ລຸນວາຍ ໃຫ້ມັນເປັນເຈົ້າ ສ່ວນວ່າເງິນ
ຄຳແກ້ວ ຂອງແພງຜົວເກົ່າ ມັນນັ້ນ ຄວນໃຫ້ໄວ້ ພາຍເບື້ອງ
ລູກແມ້ງ ຊອບແລ້ວ ອັນນຶ່ງຍິງຫາກມີຜົວແລ້ວ ຜົວເລົາຕາຍ
ເສັ້ງ ດັ່ງນັ້ນ ພໍ່ແມ່ຈຶ່ງຂາຍມາ ສູ່ຜົວລຸນນັ້ນ ອັນວ່າລູກເກົ່າ
ນັ້ນ ເລີຍເລົາມາດອມ ດັ່ງນັ້ນ ແມ່ເລົາມີບຸດຕາ ເກີດລຸນຫຼາຍ
ໜ້າ ບາດວ່າພໍ່ແມ່ມ້ຽນ ນໍຣະບາດຕາຍໄປ ກໍດີ ຄືວເຮືອນ
ປັນ ລູກຂາສເມີແທ້ ສ່ວນວ່າລູກແມ້ງນັ້ນ ມັນມາດອມແມ່

ສັນນັ້ນ ກັບທັງລູກພໍ່ນ້າ ຂາເຈົ້າທໍ່ກັນ ແທ້ແລ້ວ ອັນນຶ່ງເມັຽ ບໍ່ມີລູກເຕົ້າ ແນວໜຶ່ງຊາຍ ຜົວເລົ້າໂຕນເຮືອນໄປ ສູ່ເມັຽ ພາຍໜ້າ ເລີຍເລົ້າມີລູກນ້ອຍ ບຸດຕາຜູ້ນຶ່ງ ພໍ່ກໍມໍຣະນາດ ນ້ຽນ ໄປແລ້ວນຶ່ງນອນ ແມ່ຜູ້ເຖົ້າ ລິດຊິ້ວເລີຍຕາຍ ມູນເຮືອນ ຄວນ ລູກມັນພາຍໜ້າ ເຮືອນແມ່ເຖົ້າ ຕາຍໄປມໍຣະນາດ ດັ່ງ ນັ້ນ ອັນວ່າມູນແມ່ນັ້ນ ຄວນໃຫ້ລູກແທງ ແທ້ແລ້ວ ຜິວ່າແມ່ ຫຼັງນັ້ນ ຍັງມີລູກສືບ ດັ່ງນັ້ນ ມູນເຮືອນເກົ່ານັ້ນ ຄວນໃຫ້ແກ່ ມັນ ຊອບແລ້ວ ລູກຜູ້ເມືອເຮືອນໜ້ານັ້ນ ເກີດເມື່ອພາຍຫຼັງ ດັ່ງນັ້ນ ກໍທໍ່ເມືອແທນມູນ ພໍ່ແມ່ມັນພາຍໜ້າ ອັນນຶ່ງຜົວໄປ ເອົາເມັຽແລ້ວ ຍັງມີລູກນຶ່ງ ກໍດີ ແລ້ວກໍພອຍເລົ້າໄດ້ ເມັຽ ນ້ອຍຕື່ມມາ ດັ່ງນັ້ນ ພໍ່ແມ່ທາງຍິງນັ້ນ ຂາຍມາໂດຍຊອບ ເລີຍມາໄດ້ລູກນ້ອຍ ພາຍພີ້ເກີດດອນ ດັ່ງນັ້ນ ບານເມື່ອພໍ່ ແມ່ນ້ຽນ ຕາຍໄປມໍຣະນຶ່ງ ເສັຽນັ້ນ ມູນເຮືອນໃຫ້ຜ່າຫ້າ ສເນີ ແທ້ແບ່ງປັນ ຊອບແລ້ວ ລູກເມັຽເຖົ້າ ໄດ້ສ່ວນສາມອັນ ລູກ ເມັຽປາຍສອງ- ສ່ວນຄວນວາງໄວ້ ລູກແມ່ຫຼວງແລແມ່ນ້ອຍ ໃຜແຄວນມີມາກ ຄວນທີ່ແບ່ງດັ່ງນັ້ນ ຕາມໜ້ອຍແລະຫຼາຍ ທັ້ນທ້ອນ ຫາກບໍ່ມີລູກແທ້ ເກີດຮ່ວມສັກຄິນ ດັ່ງນັ້ນ ອັນວ່າ

ຄືວເຮືອນຄວນ- ແມ່ຫຼວງຈິງແທ້ ຫາກວ່າທັງສອງນັ້ນ ໃຜ ຍັງມີລູກ ດັ່ງນັ້ນ ຄວນທີ່ຈັດແຕ່ງໃຫ້ ມູນໄວ້ແກ່ມັນ ຊອບແລ້ວ ຖ້າລູກແມ່ຫຼວງເປັນຊາຍແທ້ ບໍ່ຄວນປາກຈາເອົາ ແທ້ດາຍ ແຕ່ປ່າພາໜີໄປ- ຈາກຕະກູນອັນນັ້ນ.

ບັດນີ້ຈັກຈາທ້ອງ ເດີມຄອງຄວນກ່າວ ກ່ອນແລ້ວ ອັນວ່າບິງມີປູ່ແປດຈຳພວກແທ້ ໃຫ້ຟັງແຈ້ງຊູ່ຄົນ ແທ້ເນີ ບິງ ບຶ່ງໜີດບຸນອື່ພໍ່ແລ້ວ ແມ່ເລົ້າຮັກສາມາ ບິງບຶ່ງຍັງທັງສອງ ພໍ່ແມ່ມັນຮັກສາໄວ້ ບິງບຶ່ງຍັງມີອ້າຍ ປົກຄອງຮັກສາປູ່ ບິງ ບຶ່ງມີແຕ່ນ້ອງ ຊາຍວຸ້ນຕ່ອນຖຸນອນ ບິງບຶ່ງມີພີ່ນ້ອງ ຮັກສາ ມັນເອົາຢູ່ ດອມນັ້ນ ບິງບຶ່ງມີຊາດເຊື້ອ ຮັກສາໄວ້ບູ່ດອມ ບິງ ບຶ່ງບໍ່ມີພີ່ງເຊື້ອ ແນວຕົນພາຍນອກ ບິງບຶ່ງມີທໍ່ສະຫາທັມມີ ກະພໍ່າພ້ອມ ທັງຫ້າປູ່ຮັກສາ ຄືວ່າເຈົ້າຕົນປະເສີດ ພິກຊຸນີ ກໍດີ ສາມເນຣີ ພໍ່າເພງສິນແກ້ວ ກັບທັງນາງສິກຂາມານາ ເຈົ້າ ຈຳສິນບໍ່ໄດ້ບວດ ກໍດີ ຊື່ວ່າສະຫາທັມມີກະຊາດພ້ອມ ຈອມຊ້ອຍຫ້າປະການ ແທ້ແລ້ວ ບິງທັງແປດຈຳພວກນີ້ ໃຜ ຫາກລ່ວງນອນດອມ ດັ່ງນັ້ນ ຄວນທີ່ຈັດຂັບໃໜ ໃສ່ມັນຈິງ ແທ້ ຫາກແມ່ນຄອງເມືອງດັ້ງ ຂັບໃໜມັນມີຢູ່ ຈິງແລ້ວ ເບັ້ງ

ຫ້າໝື່ນປາຍຫ້າພັນເບັ້ງແທ້ ສັບນັ້ນຈີ່ງຄວນ ເຈົ້າເອີຍ ຜີວ່າ ຈັກຈາໃຫ້ ເປັນເງີນອັນກ່າວ ມານີ້ ມີປູ່ຮ້ອຍຫົກບາດເຟື້ອງ ຈີ່ງແທ້ຊອບຄອງ ແທ້ແລ້ວ ອັນວ່າໂທດກ່າວນີ້ ໃຫ້ໃໝແຕ່ ທາງຊາຍ ບໍ່ທ່ອນເປັນໂທສາ ແກ່ຍິງຝູງນັ້ນ.

ບັດນີ້ຈັກກ່າວຫ້ອງ ເມັຽສິບສອງຈຳພວກ ກ່ອນແລ້ວ ພໍໃຫ້ເປັນແວ່ນໄວ້ ເນື້ອໜ້າຮ່ຳເພິ່ງ ເຈົ້າເອີຍ ເມັຽນຶ່ງຊາຍໃດ ໄດ້ ໝາຍມາດໂອມເອົາ ມາເປັນເມັຽ ກ່ອນນອນຮຽງຊ້ອນ ກໍຫາກເຫັນດີດ້ວຍ ພີ່ງພັນຄະນາຍາດ ເມັຽນຶ່ງພຣະບາດເຈົ້າ ປົງໄວ້ອາດຍາ ເມັຽນຶ່ງຊາຍໄດ້ຊື້ ອ້າງວ່າເປັນເມັຽ ເມັຽນຶ່ງຂາ ເປັນກັນ ຫາກເອົາດາຍດູ້ ເມັຽນຶ່ງຊາຍໄດ້ເອົາຂອງໃຫ້ ຍິງ ກີນບໍຣິໂພດ ເມັຽນຶ່ງຊາຍໃຫ້ເຄື່ອງນຸ່ງແລ້ວ ເລີຍໄດ້ຢູ່ດອມ ເມັຽນຶ່ງພໍ່ແມ່ໃຫ້ ມີຈຸ່ມລີງຂັນ ໃຫ້ຂາເປັນຜົວເມັຽ ຢູ່ເພື່ອ ແຜງຝັ້ນ ເມັຽນຶ່ງຊາຍຫາກໃຫ້ກະໂຈນແກ້ວ ມາລາແມນນີ້ງ ເມັຽນຶ່ງຄີນເກີດກ້ຳ ໃນຫ້ອງລວດເອົາ ເມັຽນຶ່ງມາກີນຈ້າງ ໃນ ເຮືອນຮັກແກວ່ນ ເອົານັ້ນ ເມັຽນຶ່ງໄປເລືອກໄດ້ ມາແລ້ວວ່າເມັຽ ເມັຽນຶ່ງພໍ່ແມ່ເພີ່ນຖືກຕ້ອງ- ກັນວ່າເປັນເມັຽ ຕາມອາສັຍ ຢູ່ ກີນດອນດັ້ງ ຄອງຝູງນີ້ໃຜໄດ້ຂຶ້ນສູ່ຫ້ອງ ເມືອເສບຊວາ ໆ ດັ່ງ

ນັ້ນ ໃນທີ່ເຮືອນຂອງເຂົາ ຂ້າຕາຍລາງແລ້ວ ໃຜຜູ້ມີສຈານດັ່ງ
ດອນບິງປູງກ່າວ ມານີ້ ກໍຈັກເປັນໂທດຖ້ານ ນີສຈານແທ້ຊູ່
ຄືນ ຫັ້ນແລ້ວ ອັນວ່າໂທດໃໝແສນຫື່ນເບັ້ຽ ຕັດແຕ່ງຕາມ
ຄອງ ຜີແມ່ນເສນາຂຸນ ແຕ່ງການຕາງເຈົ້າ ຜິດຫຼາຍແທ້
ມີສຈານເມັຽທ່ານ ຂຶ້ນນັ່ງຖ້ານ ແຖມແທ້ກວ່າຫຼັງ ແທ້ແລ້ວ
ອັນນັ່ງໃຜລັກຊູ້ ເມັຽເຂົາໄປຟາກ ໄວ້ເຂດບ້ານ ແດນແທ້ທີ່ໃດ
ກໍຕາມ ແຕ່ຫາກມີຜູ້ຮູ້ ສັກຂີແຈ້ງແຈນ ຟັນຊາຍຕາຍເມັຽ
ເຈັບ ບາດມີຈິງແທ້ ກໍຈິງເພິ່ງໃຈແທ້ ທາງຜົວປ່າວ່າສັງ
ເຫັນ ເພື່ອວ່າໄດ້ ສັກຂີແທ້ທີ່ເມັຽ ຫັ້ນແລ້ວ ຖ້າບໍ່ມີສັກຂີ
ແທ້ ຟັນຊາຍນໍຣະບາດ ດັ່ງນັ້ນ ເມັຽບໍ່ເຈັບປວດແທ້ ສັກຂີ
ນັ້ນກໍບໍ່ມີ ຄວນທີ່ຕັດໂທດແທ້ ໃຫ້ແຫ່ງທາງຜົວ ເມັຽມັນ
ວາຈາສັງ ກໍປ່າຟັງຄຳຕ້ານ ເພາດວ່າເຫັນຕາຍແທ້ ກົວວາຍ
ນໍຣະບາດ ມັນກ່າວຕ້ານ ໃດນັ້ນປ່າຟັງ ແທ້ເນີ ດຽວວ່າກົວ
ຕາຍແທ້ ມັນເລີຍແກ້ງກ່າວ ໄປແລ້ວ ບາດວ່າຄາວໜ້ານັ້ນ
ຄືນຊິຫຽ້ານຂ້າກັນ ແທ້ແລ້ວ ຄວນທີ່ໃຫ້ຜູ້ຮູ້ ຕອງຕາຕັດຄື
ດູເນີ ປ່າໃຫ້ມີບ່ຽງເບື້ອງ ໃດແທ້ດັ່ງບອນ ຊອບແລ້ວ ກໍຈິງ
ເປັນທີ່ອ້າງ ເທວະເທບອິນພົມ ເຈົ້າເອີຍ ເປັນທີ່ບູແບງປູງ

ພ່ຳເພງພາຍຊ້ອຍ ເປັນທີ່ອັສຈັນລ້ຳ ໂລກາກິງໂລກ ໄປແລ້ວ ໄວ້ໃຫ້ເປັນແບບເບື້ອງ ຫຼານຫຼ້າສືບໄປ ເຈົ້າເອີຍ.

ຟັງເປີໄສຊະໂນຫ້ອງ ລາວໄທບ້ານບອກ ເຮົາເອີຍ ເມື່ອຈັກທຳກໍ່ສ້າງ ສວນຮົ້ວປູກຝັງ ດັ່ງນັ້ນ ມີໝູ່ພືຊໂພດ ພ້ອມ ແຕງເຜືອກຫົວມັນ ກໍດີ ກັບໝູ່ມັນເຜົາພິກ ຂ່າຂີງ ເຂືອແຄ້ງ ຫາກມີຄົນໃດແກ້ງ ລັກເອົາມອບທ່ານ ດັ່ງນັ້ນ ກໍ ຫາກເປັນໂທດແທ້ ຄອງເຖົ້າເລົ່າມາ ເຈົ້າເອີຍ ຫາກມີຄົນ ເຫັນແຈ້ງ ຄັກແນ່ສັກຂີ ຄວນທີ່ຕັດຂັນໃໝ ໃສ່ມັນພໍຮ້ອຍ ກັບທັງຂັນແປງນັ້ນ ມີເງິນຫ້າບາດ ຄວນແລ້ວ ບອກຈາກນັ້ນ ໝູເຫຼົ້າປ່ຳລີ ສ່ວນວ່າໃບມອບນັ້ນ ໃຫ້ມັນແທນຫ້າທໍ່ ກໍຈີງ ຄວນຊອບແທ້ ຄອງເຖົ້າແຕ່ຫຼັງ ແທ້ແລ້ວ ຢ່າໄດ້ຂືນເບ່ງ ຖ້ອຍ ລວງໂລບໂມຫາ ນັ້ນເນີ ໃຫ້ຄ່ອຍກອງຕາດູ ຮີດມີຄອງ ຕັ້ງ ແນ່ນວ່າເປັນເຈົ້າກວ້າງ ໃຫ້ມີໃຈອັນຊື່ ເປັນດັ່ງຫີນກ້ອນ ລ້ານ ລິນຕ້ອງປ່າໄຫວ ໃຫ້ໄດ້ເປັນທີ່ຈັ້ງ ໃນໂລກລືຊາ ຕລອດ ທັງໂລກາ ກ່າວມາບໍ່ບ້ອງ ບານເມືອຈຸດຕິມ້າງ ປັນຈະຂັນ ບັບບ່ອຍ ໄປນັ້ນ ກໍຈັກເມືອເກີດຫ້ອງ ເມືອງຟ້າຟາກສວັນ ພຸ້ນແລ້ວ ຈັກໄດ້ສຸກປູ່ລົ້ນ ຜາສາດວີມານຄຳ ບໍຣິວານຫຼາຍ

ປູ່ປາຍປັງເຜົ້າ ອັນນຶ່ງໃພບ່ຽງຄ້ອຍ ກະທຳນອກຄອງເນືອງ ດັ່ງນັ້ນ ກໍຈັກມີປາປັງ ບາບເວນວຽນໃຊ້ ຍາມເມື່ອຕາຍໄປ ແລ້ວ ອະເວຈີຈິມຈຸ່ມ ຈິງແລ້ວ ຖຳທຸກມີໝື່ນຊັ້ນ ໄຟໃໝ້ ເວທນາ ແທ້ແລ້ວ ອັນວ່າຝູງຫອກງ້າວ ກາຍເກີດເປັນໄຟ ພຍາບິນຖື ໄລ່ນຳແທງຊ້ຳ ອັນນີ້ຈາໃນຫ້ອງ ມະຫາທັມດວງ ປະເສີດ ຈິງແລ້ວ ຊັກເອົາຄຸນຕ່ອນດີ້ ຖນອມໄວ້ແທນຫຽນ ຕັ້ງຫາກໃນທັມແທ້ ເປັນຄອງຄວນຈື່ ເອົາດາຍ ຂໍແກ່ນັກປາດ ເຈົ້າ ຟັງທ້ອນຊູ່ຄົນ ແດ່ທ້ອນ ກັບທັງເຖົ້າແກ່ພ້ອມ ຝູງໝື່ນ ພຍາ ກໍ ດີ ແມ່ນວ່າຂຸນຣາຊາ ໃຫ້ຄ່ອຍຟັງດັງສ້ຽງ ຝູງໝູ່ ນາງສນົມເໜົ້າ ເທວີສາວບ່າວ ກໍ ດີ ທັງຜູ້ມີລູກເຕົ້າ ຟັງ ທ້ອນຊູ່ຄົນ ແທ້ເນີ ອັນນຶ່ງຝູງໝ້າຍຮ້າງ ນ້ອຍໜຸ່ມທາຣະກາ ກໍ ດີ ໃຫ້ຄ່ອຍພາກັນຟັງ ຢ່າມີຄວາມຄ້ານ ອັນນີ້ບູຮານເຖົ້າ ຂຸນບູຣົມສອນສັ່ງ ມາແລ້ວ ຕັ້ງເປັນກົດຣະບຽບໄວ້ ປະຖົມເຖົ້າ ສືບມາ ເຈົ້າເອີຍ.

ສຳຣະແລ້ວບໍຣິບູນຕາມຕົ້ນສະບັບ

ນະວັນທີ ໗ ມິຖຸນາ ໑໙໕໗

ອຸທົນ.ບຸບະບາວົງ